# ນິທານ

# ຈຳປາສີ່ຕົ້ນ

ຖອດເປັນຄຳເວົ້າທຳມະດາ

ໂດຍ: ພ. ພອງສະບາ



ເຫລັ້ມ I

# ຈຳປາສີ່ຕົ້ນ

ຖອດເປັນຄຳເລົ່າທຳມະດາ

ໂດຍ: ພ.ພວງສະບາ

## ພິມເທື່ອທີ I

## ເຫລັ້ມ 1

ສຳນັກພິມແລະຈຳໜ່າຍປຶ້ມແຫ່ງລັດ ສ.ປ.ປ.ລາວ
ວຽງຈັນ, 1995

ສະຫງວນລິຂະສິດ

ຮັບຜິດຊອບການພິມຈຳຫນ່າຍ ຈັນທີ ເດືອນສະຫວັນ

ຄະນະຈັດທຳ

- ບຸນຊູ ພັນທະວິໄຊ
- ຫລ້າຄຳ ເພັດຈຳພອນ
- ບຸນນອງ ໄຊຍະເສນ
- ພິມດີດ, ເຂົ້າຫນ້າ ນ.ວິລາວັນ, ສີສະຫວາດ
- ແຕ້ມຫນ້າປົກ ຄຳເພັດ

ອ.ພ 256 /ສພປ

ທ.ບ 889/ພທປ 210895

ພິມທີ່ ໂຮງພິມແຫ່ງລັດ

ຈຳນວນ 2.000 ຫົວ

ຂະຫນາດ 13 x 19 ຊມ

# ຄຳນຳ

ອີກເທື່ອໜຶ່ງ, ທາງສຳນັກພິມແລະຈຳໜ່າຍປຶ້ມແຫ່ງລັດ ກະຊວງ ຖະແຫລງຂ່າວແລະວັດທະນະທຳ ໄດ້ຈັດພິມປຶ້ມວັນນະຄະດີພື້ນເມືອງລາວທີ່ ພ. ພວງສະບາ ໄດ້ພະຍາຍາມຮຽບຮຽງຖອດຈາກຄຳກອນ (ຮ້ອຍກອງ) ມາເປັນຄຳເລົ່າທຳມະດາ (ຮ້ອຍແກ້ວ) ເພື່ອໃຫ້ແທດເໝາະກັບຜູ້ອ່ານ ຈະໄດ້ຈື່ບົດເລື່ອງໄດ້ດີກ່ວາການອ່ານຈາກບົດຄຳກອນ.

ວັນນະຄະດີພື້ນເມືອງທີ່ສຳນັກພິມແລະຈຳໜ່າຍປຶ້ມແຫ່ງລັດ ໄດ້ພິມອອກຈຳໜ່າຍເຜີຍແຜ່ຕໍ່ທ່ານຜູ້ອ່ານໃນເທື່ອນີ້ກໍຄືເລື່ອງຈຳປາສີ່ຕົ້ນຊຶ່ງເປັນວັນນະຄະດີລາວເລື່ອງໜຶ່ງທີ່ມະຫາຊົນມີຄວາມນິຍົມຊົມຊອບ, ແລະອີກປະການ ໜຶ່ງ ທາງສຳນັກພິມແລະຈຳໜ່າຍປຶ້ມແຫ່ງລັດກໍມີຈຸດປະສົງເພື່ອການອະນຸລັກ ປົກປັກຮັກສາມູນມໍລະດົກທາງດ້ານວັດທະນະທຳອັນດີງາມຂອງລາວເຮົາເອົາໄວ້ເພື່ອໃຫ້ຄົນຜູ້ເກີດໃໝ່ໃຫຍ່ລຸນ ໄດ້ອ່ານແລະນຳໄປສຶກສາຄົ້ນຄວ້າ. ນິ ທານເລື່ອງຈຳປາສີ່ຕົ້ນເປັນເລື່ອງຍາວຫລາຍຈຶ່ງບໍ່ສາມາດຫຍໍ້ເປັນເຫລັ້ມ ດຽວດັ່ງນັ້ນຈຶ່ງໄດ້ຈັດເປັນສອງເຫລັ້ມດ້ວຍກັນຄືເຫລັ້ມທີ I ແລະເຫລັ້ມ ທີ II.

ສຳນັກພິມແລະຈຳໜ່າຍປຶ້ມແຫ່ງລັດກະຊວງຖະແຫລງຂ່າວແລະວັດ ທະນະທຳ ຫວັງວ່າທ່ານຜູ້ອ່ານທັງຫລາຍຄົງຈະໃຫ້ການສະໜັບສະໜູນອຸ້ມ ຊູ

ເປັນຢ່າງດີ. ຫາກວ່າການຈັດພິມຫລືການຮຽບຮຽງມີການຂາດຕົກບົກພ່ອງປະການໃດ ກໍຂໍອະໄພມາພ້ອມນີ້, ຖ້າຫາກມີຄຳເຫັນປະການໃດກະລຸນາສົ່ງຄຳຄິດເຫັນໄປຍັງສຳນັກພິມແລະຈຳໜ່າຍປຶ້ມແຫ່ງລັດ ໂທລະສັບ 212473 212474, ຕູ້ ປ.ນ. 1300 ວຽງຈັນ ສ.ປ.ປ.ລາວ.

ວຽງຈັນ, ວັນທີ...............

ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ

# ຈາກຜູ້ຖອດເລື່ອງ.

ເລື່ອງຈຳປາສີ່ຕົ້ນ ແມ່ນວັນນະຄະດີພື້ນເມືອງຂອງລາວອີກເລື່ອງໜຶ່ງ ຊຶ່ງເປັນທີ່ນິຍົມຊົມຊອບຂອງມະຫາຊົນ ທັງດ້ວຍການນຳເອົາໜັງສືຜູກ ໄປອ່ານສູ່ກັນຟັງ ແລະດ້ວຍການເລົ່າປາກເປົ່າເທົ່າທີ່ຈື່ຈຳໄດ້.

ໃນເວລາຜ່ານມາ ເລື່ອງຈຳປາສີ່ຕົ້ນ ບໍ່ພຽງແຕ່ເປັນໜັງສືຜູກໃບ ລານເທົ່ານັ້ນ, ແຕ່ຍັງມີຜູ້ນຳມາຮຽບຮຽງຈັດພິມເປັນປຶ້ມຕື່ມອີກ, ຫາກວ່າການຈັດພິມຜ່ານມານັ້ນແມ່ນຈັດພິມຕາມແບບຮ້ອຍກອງ (ບົດກອນ) ຕາມຕົ້ນສະ ບັບເດີມ.

ສຳລັບການຈັດພິມເທື່ອນີ້ ຂ້າພະເຈົ້າໄດ້ພະຍາຍາມຖອດຈາກບົດ ຄຳກອນມາເປັນການເລົ່າເລື່ອງແບບ ຄຳເວົ້າທຳມະດາ ເພື່ອໃຫ້ຜູ້ອ່ານເຂົ້າໃຈງ່າຍ. ແຕ່ກໍຍັງມີບາງບ່ອນຂ້າພະເຈົ້າກໍໄດ້ຮັກສາບົດກອນເອົາໄວ້ ເພື່ອໃຫ້ຜູ້ອ່ານສາມາດກຳເນື້ອໃນຂອງເລື່ອງໄດ້ໜັກແໜ້ນ.

ການຖອດຈາກບົດກອນມາເປັນຄຳເວົ້າທຳມະດາໃນເທື່ອນີ້ ກໍ ຄືກັບຫລາຍໆເລື່ອງທີ່ຂ້າພະເຈົ້າເຄີຍໄດ້ຖອດມາແລ້ວນັ້ນຄື ໄດ້ພະຍາຍາມຮັກສາເຄົ້າມູນຂອງໂຄງເລື່ອງເອົາໄວ້ ແລະການຖອດກໍຖອດແບບຄັດຈ້ອນ ເອົາເນື້ອໃນຈິດໃຈຂອງເລື່ອງເປັນຫລັກ ບໍ່ແມ່ນຖອດແບບຄຳຕໍ່ຄຳແຕ່ຢ່າງ ໃດ

ດັ່ງນັ້ນ, ການຖອດຂອງຂ້າພະເຈົ້າອາດບໍ່ທັນສັງລວມໄດ້ເນື້ອໃນຢ່າງສົມ

ບູນແບບເທື່ອ, ແຕ່ເຊື່ອວ່າການຖອດທັງໝົດຈະຊ່ອຍໃຫ້ຜູ້ອ່ານສາມາດ ຮູ້ ແລະເຂົ້າໃຈເນື້ອໃນຈິດໃຈຂອງເລື່ອງ ໄດ້ດີກ່ວາການອ່ານຕາມຄຳກອນ.

ວຽງຈັນ, ວັນທີ 24 ມັງກອນ 1994

ດ້ວຍຄວາມຮັກແພງ

ພ. ພວງສະບາ

# ຫຍໍ້ເລື່ອງ

ຍັງມີເມືອງແຫ່ງຫນຶ່ງຊື່ວ່າ ເມືອງປັນຈາ ມີພະຍາປົກຄອງເມືອງຊື່ວ່າພະຍາຈຸນລະນີ ມີມະເຫສີຊື່ວ່າ ນາງອັກຄີ, ແລະມີອີກເມືອງຫນຶ່ງຊື່ວ່າ ເມືອງທານີຫລືຈັກຂິນ ມີພະຍາຈັກຂິນເປັນຜູ້ປົກຄອງ ພະອົງມີມະເຫສີຊື່ວ່າ ນາງຈັນທາ. ພະຍາຈັກຂິນປົກຄອງບ້ານເມືອງຮ່ວມກັບມະເຫສີເປັນເວລາ ຊ້ານານຈຶ່ງໄດ້ລູກສາວຜູ້ຫນຶ່ງທີ່ມີຮູບໂສມ ອັນສວຍງາມ ຊື່ວ່າ ນາງປັດທຸມມາຫລືປະທຸມມາຊຶ່ງເປັນຜູ້ດຽວກັນກັບນາງຄຳກອງ.

ໃນເວລາຕໍ່ມາ ໄດ້ມີພີຮຸງຍັກເບັນຜົວ ເມຍ ໄດ້ມາກິນຊາວເມືອງຈັກຂິນຈົນບໍ່ເຫລືອ, ເມື່ອເຫດການເປັນແນວນັ້ນພະຍາຈັກຂິນແລະມະເຫສີກໍ່ຮູ້ດີວ່າ ນີ້ຫນຶ່ງຕ້ອງຕາຍຍ້ອນຮຸງຄູ່ຜົວເມຍນີ້, ດັ່ງນັ້ນ, ຈຶ່ງຕັດສິນໃຈນຳເອົານາງ ປະທຸມມາເຊື່ອງເຂົ້າໄວ້ໃນກອງຫນ່ວຍຫນຶ່ງໃນພະລາຊະວັງ, ຕໍ່ມາຮຸງກໍມາກິນພະຍາຈັກຂິນກັບມະເຫສີຈົນເຫລືອແຕ່ກະດູກປະໄວ້ໃນທີ່ພາສາດ, ສ່ວນນາງປະທຸມມານັ້ນຍັງຢູ່ໃນກອງ.

ຕໍ່ມາພະຍາຈຸນລະນີຜູ້ປົກຄອງເມືອງປັນຈາຈຶ່ງໄດ້ອອກເດີນດົງເດີນ ປ່າຫາລ່າເນື້ອ, ຈຶ່ງໄດ້ໄປພໍ້ກວາງຄຳໂຕຫນຶ່ງຊຶ່ງແມ່ນເທບພະດາປອມມາເປັນກວາງຄຳ, ເມື່ອພະຍາຈຸນລະນີໄດ້ເຫັນກໍຢາກໄດ້ກວາງຄຳ, ດັ່ງນັ້ນຈຶ່ງ ໄດ້

ໄລ່ຕິດຕາມກວາງຄຳໄປເລື້ອຍໆ. ເວລາໄລ່ນັ້ນຄັນນ່ຳຈະຈັບ ໄດ້ກວາງຄຳ ກໍແລ່ນໄປຫນ້າແລວທຳທ່າເຮັດຂາຫັກແລ່ນຂະເປັກໆ ໄປ. ເມື່ອພະຍາຈຸນ ລະນີໄລ່ຕາມກໍ່ຫລົງປ່າຫລົງເສນາອາມາດ, ອັນນ້ອຍເທບພະດາບັນດົນໃຫ້ໄປພົບກັບນາງປະທຸມມາ. ໃນທີ່ສຸດພະຍາຈຸນລະນີກໍເຂົ້າໄປໃນເມືອງຈັກຂິນຈຶ່ງພົບວ່າເປັນເມືອງຮ້າງມີແຕ່ກະດູກຄົນ, ກະດູກສັດກອງເດຍລະດາດຢູ່, ເມື່ອເລາະເຂົ້າໄປໃນຫໍພາສາດຈຶ່ງເຫັນກອງໃຫຍ່ຫນ່ວຍຫນຶ່ງແຂນຢູ່ ຈຶ່ງເອົາມີໄປເຄາະກອງ, ນາງປະທຸມມາຄິດວ່າແມ່ນຮຽງຈະມາກິນຈຶ່ງອອກປາກ ບອກໃຫ້ກິນ, ພະຍາຈຸນລະນີຮູ້ວ່າໃນກອງມີຄົນຈຶ່ງເຈາະຫນ້າກອງເອົານາງ ປະທຸມມາອອກມາແລ້ວພາກັນກັບຄືນເມືອງປັນຈາ ອຸພິເສກນາງເປັນມະເຫສີ ຊຶ່ງມີຊື່ໃຫມ່ວ່ານາງຄຳກອງ.

ຕໍ່ມານາງຄຳກອງໄດ້ຖືພາມານ, ເມື່ອຈະປະສູດລູກນັ້ນນາງອັກຄີຜູ້ ເປັນເມຍໃຫຍ່ຈຶ່ງໃຊ້ໃຫ້ຄົນເອົາຫມານ້ອຍມາປ່ຽນກຸມມານທັງສີ. ສ່ວນກຸມ ມານທັງສີຊຶ່ງປະສູດຈາກທ້ອງນາງຄຳກອງນັ້ນນາງອັກຄີສັ່ງໃຫ້ເອົາໃສ່ໄຫ ໄຫລນ້ຳຖິ້ມ, ໄຫກຸມມານທັງສີໄຫລໄປຄ້າງຢູ່ທ່າຂອງຍ່າຈຳສວນຈຶ່ງນຳເອົາກຸມມານທັງສີໄປລ້ຽງໄວ້, ເມື່ອນາງອັກຄີຮູ້ຂ່າວຈຶ່ງສັ່ງໃຫ້ຄົນເອົາງວນໃສ່ເຂົ້າຕົ້ມມາເບື່ອກຸມມານທັງສີຈົນຕາຍ, ຍ່າຈຳສວນກັບຜົວ ໄດ້ເອົາກຸມມານໄປຝັງໄວ້ແຄມສວນຈຶ່ງ ເກີດເປັນຕົ້ນດອກຈຳປາທັງສີ, ນາງອັກຄີຮູ້ຂ່າວກໍສັ່ງໃຫ້ໄປຂຸດ ໄຫລນ້ຳຖິ້ມ.

ຕົ້ນຈຳປາທັງສີໄຫລໄປຄ້າງຢູ່ທ່າພະລືສີຕາໄຟຜູ້ມີລິດເດດຂະນະນັ້ນ ຈົວໄດ້ລົງມາຕັກນ້ຳໄດ້ເຫັນຕົ້ນຈຳປາຈຶ່ງເດັດເອົາດອກຫນຶ່ງເມື່ອຖວາຍພະລືສີຕາໄຟ. ຕໍ່ມາພະລືສີຕາໄຟຈຶ່ງໄດ້ໂຜດທ້າວທັງສີຄືນເປັນຄົນ ພ້ອມທັງ ຮຽນຄາຖາອາຄົມອັນສັກສິດໃຫ້ທ້າວທັງສີ ຈົນສາມາດຮອບດ້ານໂດຍສະເພາະ

ທ້າວເຜັດຊະລາດນ້ອງຊາຍຫລ້າຜູ້ມີຈຸດພິເສດຢູ່ທີ່ນີ້.

ຢູ່ນຳພະລືສີຕາໄຟ ຈຶ່ງໃຫ້ຍັກຫນ້າບານຂຶ້ນມາຈຶ່ງມີພະອິນກັບເພດເປັນຕາຜ້າຂາວມາບອກເລື່ອງບ້ານເມືອງຂອງພໍ່ແມ່ທ້າວທັງສີ່, ຈາກນັ້ນຈຶ່ງພາຂີສະເພົາກັບຄືນເມືອງປັນຈາແລະຕາມເສັ້ນທາງຜ່ານກໍໄດ້ຕໍ່ສູ້ກັບ ພະຍາເມືອງຕ່າງໆທັງໄດ້ເອົາເມຍມາຕາມທາງ ຊຶ່ງຍັງເຫລືອແຕ່ທ້າວເຜັດ ຊະລາດຜູ້ດຽວບໍ່ໄດ້ເອົາ ເພາະຕັ້ງໃຈຈະມາປົກຄອງເມືອງປັນຈາ, ແລະ ຈະຊ່ອຍເຫລືອແມ່ທີ່ພວມຕົກທຸກລຳບາກຍ້ອນຖືກນາງອັກຄີຕາເລື່ອງໃສ່ຈົນ ພະຍາຈຸນລະນີປົດລົງຈາກເປັນມະເຫສີໃຫ້ລົງມາລ້ຽງຫມູຫາບຈອກຫາບ ບອນດ້ວຍຄວາມທຸກຍາກລຳບາກເຫລືອທີ່ສຸດ. ເມື່ອທ້າວທັງສີ່ເດີນທາງມາ ເຖິງກໍໄດ້ລົງໂທດນາງອັກຄີຜູ້ໃຈບາບຄືນແລ້ວພະຍາຈຸນລະນີກໍຮັບເອົານາງ ຄຳກອງຂຶ້ນເປັນມະເຫສີຄືເກົ່າມາຫລັງ.

ຕໍ່ມາເມື່ອອ້າຍທັງສາມກັບຄືນເມືອງໃຜເມືອງລາວຫມົດແລ້ວ, ທ້າວເຜັດຊະລາດຈຶ່ງລາພໍ່ແມ່ອອກເດີນທາງໄປຊອກເອົາເມຍ ຈຶ່ງໄປໄດ້ກັບນາງປະທຸມມາໄກສອນຢູ່ນຳພະລືສີກາງປ່າ, ຕອນພາເມຍກັບຄືນເມືອງປັນຈານັ້ນຂະນະທີ່ພາເມຍພັກຢູ່ກາງປ່າແຫ່ງຫນຶ່ງເລີຍຖືກຍັກລັກເອົາເມຍໄປ, ທ້າວເຜັດຊະລາດອອກຕິດຕາມຫາເມຍໄປເຖິງເມືອງເຂົາຂົງຈຶ່ງໄດ້ນາງອັດສະ ມາລາແກ້ວມາເປັນເມຍຕື່ມອີກ. ທ້າວເຜັດຊະລາດກັບນາງປະທຸມມາໄກ ສອນໄດ້ລູກຊາຍຜູ້ຫນຶ່ງຊື່ວ່າທ້າວສຸວັນນະໄກສອນ. ເອົາກັບນາງອັດສະມາ ລາແກ້ວກໍໄດ້ລູກຊາຍຜູ້ຫນຶ່ງຊື່ວ່າທ້າວອັດສາລາດ.

ພາຍຫລັງທີ່ທ້າວເຜັດຊະລາດນຳຫາເມຍພົບແລ້ວກໍນຳລູກແລະເມຍ ກັບຄືນສູ່ເມືອງປັນຈາ. ສ່ວນວ່າທ້າວທັງສາມຜູ້ເປັນອ້າຍນັ້ນກໍໄດ້ລູກກັນຜູ້ລະຄົນເປັນຊາຍ ແຕ່ຊື່ລູກບໍ່ປະກົດເລີຍ. ເມື່ອທ້າວທັງສີ່ກັບສູ່ເມືອງປັນຈາ ຢ່າງ

ພ້ອມພຽງກັນແລ້ວກໍຍົກຂະບວນທັງພະຍາຈຸນລະນີແລະນາງຄຳກອງ ໄປຢາມເມືອງຈັກອິນຊຶ່ງເປັນເມືອງພໍ່ເຖົ້າແມ່ເຖົ້າ, ເມືອງປູ່ເມືອງຍ່າ. ສ່ວນ ທ້າວເພັດຊະລາດນັ້ນ ໄດ້ຢູ່ຄອງເມືອງຈັກອິນແທນພໍ່ເຖົ້າ, ທ້າວສຸວັນນະໄກ ສອນ ໄດ້ປົກຄອງເມືອງປັນຈາແທນປູ່, ທ້າວອັດສາລາດ ໄດ້ຄອງເມືອງເຂົາ ຂົງ ແທນທ້າວເພັດຊະລາດຜູ້ເປັນພໍ່, ສ່ວນວ່າທ້າວທັງສາມຜູ້ເປັນອ້າຍນັ້ນ ໄດ້ກັບຄືນ ໄປຄອງເມືອງຂອງໃຜຂອງລາວຕາມເດີມຄືທ້າວເຊດຖະລາດ ຄອງເມືອງສີງຫົນ, ທ້າວປິຕະລາດຄອງເມືອງໄອສອນແລະທ້າວສຸວັນນະ ລາດ ຄອງເມືອງຈຳປາ.

## 1. ກ່າວເຖິງເມືອງປັນຈາ

ຍັງມີເມືອງແຫ່ງໜຶ່ງຊື່ວ່າເມືອງປັນຈາ ເມືອງນີ້ມີພະຍາປົກຄອງ ໄພ່ຟ້າຂ້າແຜ່ນດິນຊື່ວ່າ ພະຍາຈຸນລະນີ ມີມະເຫສີ(ເມຍ)ຊື່ວ່ານາງອັກຄີ. ເມືອງປັນຈານີ້ເປັນເມືອງໃຫ່ຍທີ່ມີຄວາມສວຍງາມ ມີປາສາດຫໍໂຮງປັ້ງປາຍຢູ່ ທົ່ວທຸກແຫ່ງ, ມີກຳແພງລ້ອມທັງຊັ້ນໃນແລະຊັ້ນນອກ, ແຕ່ລະນີ້ເສນາອາມາດ ລາຊະບໍລິວານກໍພາກັນເຂົ້າເຝົ້າພະຍາຈຸນລະນີແລະມະເຫສີບໍ່ຂາດ. ເມືອງ ປັນຈາຍັງເປັນເມືອງທີ່ອຸດົມສົມບູນໄປດ້ວຍເຂົ້າຂອງເງິນຄຳຊ້າງມ້າງົວຄວາຍ.

ພະຍາຈຸນລະນີໄດ້ປົກຄອງບ້ານເມືອງດ້ວຍທົດສະພິລາຊະທຳສິບປະ ການຂອງພະລາຊາ, ປະຊາຊົນຊາວເມືອງໄພງກໍຍ້ອງຍໍຊົມເຊີຍບໍ່ໄດ້ມີ ຄວາມເດືອດຮ້ອນເຄືອງໃຈແນວໃດ ຍູ່ທ່າງປະກອບອາຊີບເຮັດໄຮ່ເຮັດນາ, ຊື່ສຽງຂອງເມືອງປັນຈາເປັນທີ່ເອກອ້າງກັນໄປທົ່ວເຖິງທຸກແຫ່ງຫົນ ແລະ ເປັນເມືອງທີ່ມີຄວາມສະຫງົບສຸກ ບໍ່ມີສັດຕູພົດທາງໃດມາຮົບກວນຮາວີໄດ້, ພະຍາຈຸນລະນີແລະມະເຫສີພ້ອມດ້ວຍປະຊາຊາວເມືອງໄດ້ຮັບແຕ່ຄວາມຜາ ສຸກສຳລານຕະຫລອດມາ.

ບັດນີ້ກ່າວເຖິງເມືອງໃຫ່ຍຊື່ວ່າທານີ ຫລືຈັກຂິນມີພະຍາຈັກຂິນເປັນຜູ້ ປົກຄອງມີມະເຫສີ ຊື່ວ່ານາງຈັນທາ, ເລົ່າກັນວ່າມະເຫສີຂອງພະຍາຈັກຂິນ ນີ້ເປັນຜູ້ມີຮູບໂສມຜົວພັນອັນງົດງາມ. ເມືອງໃຫ່ຍທານີຫລືວ່າເມືອງຂອງພະຍາ

ຈັກຂີນນັ້ນກໍບໍ່ດ້ອຍໜ້າໄປກ່ວາເມືອງປັນຈາຂອງພະຍາຈຸນລະນີແຕ່ຢ່າງໃດເລີຍ, ເມືອງຈັກຂີນນັ້ນມີອານາເຂດການປົກຄອງກ້ວາງໄກ ພະຍາຈັກຂີນກໍປົກຄອງຊາວເມືອງດ້ວຍຄຸນນະທຳອັນລ້ຳເລີດ ເຮັດໃຫ້ປະຊາຊົນຊາວເມືອງຢູ່ດີກິນດີ.

ເມືອງຈັກຂີນ ອຸດົມໄປດ້ວຍເຂົ້າຂອງເງິນຄຳຊ້າງມ້າງົວຄວາຍ, ເມືອງນັ້ນຮອດຄັ້ນເສດຖີແລະມີນັກປາດອາຈານ, ພວກພໍ່ຄ້າຕ່າງເມືອງກໍນຳເອົາສິນຄ້າເຂົ້າມາຂາຍແລກປ່ຽນກັນບໍ່ໄດ້ຂາດ, ທຸກຄ່ຳເຊົ້າວັນຄືນເສນາອາມາດກໍພາກັນເຂົ້າເຝົ້າພະອົງບໍ່ຂາດ ແລະເມືອງນັ້ນກໍບໍ່ເຄີຍເດືອດຮ້ອນສັບພະສິ່ງສິນໃດ ໄພງກໍ່ມີຄວາມສຸກຢູ່ຫ່າງປະກອບອາຊີບດ້ວຍການປູກຝັງແລະຄ້າຂາຍ.

ພະຍາຈັກຂີນ ພ້ອມດ້ວຍມະເຫສີໄດ້ປົກຄອງເມືອງມາເປັນເວລາຊ້ານານ, ພະອົງມີລູກສາວຜູ້ໜຶ່ງຊື່ວ່ານາງປະທຸມມາ ເປັນຜູ້ມີຮູບຮ່າງສວຍງາມພໍປານວ່າພະອິນຫລໍ່ພຸ້ນແຫລະ, ພະຍາຈັກຂີນຮັກແພງລູກຄືກັບແກ່ນຕາພະອົງ ຄວາມງາມຂອງນາງປະທຸມມາ ເປັນທີ່ກ່າວຂານກັນໄປທົ່ວເມືອງດົ່ງບົດກອນຂຽນວ່າ:

| | |
|---|---|
| ກໍຫາກລືຊາແທ້ | ທົງເມືອງເຊັງຊ່າ |
| ໂສມຮູບໜ້າ | ປານແຕ້ມແຕ່ພົມ |
| ດີງກົມສ້ວຍ | ທະນູທອງເຫລົາຫລໍ່ |
| ເປັນໜໍ່ເຊື້ອ | ຈັກຂີນເຈົ້າຍອດຍິງ ແທ້ແລ້ວ |

ພະຍາຈັກຂີນສັ່ງໃຫ້ສ້າງທີ່ປາສາດຫລັງໜຶ່ງຂຶ້ນ ເພື່ອໃຫ້ນາງໄດ້ຢູ່ ຄົນດຽວ. ວັນເດືອນປີຜ່ານໄປຈົນນາງປະທຸມມາມີອາຍຸໄດ້ 15 ປີ ເມື່ອ ນາງໃຫຍ່ຂຶ້ນມາຄວາມງາມຂອງນາງຍິ່ງຫາຜູ້ຍິງໃດມາປຽບບໍ່ໄດ້ເລີຍ, ນາງ ປະທຸມມາຢູ່ຫ່າງຄອງຄວາມສຸກຢູ່ໃນທີ່ປາສາດຕາມລຳພັງ.

ຕໍ່ມາໃນຄືນໜຶ່ງພະຍາຈັກອິນ ຜູ້ເປັນພໍ່ໄດ້ນອນຝັນເຫັນດວງຕາເວັນ ມືດມົວບໍ່ມີແສງສະຫວ່າງແລະຝັນເຫັນຝົນຕົກລົງມາຣ່ຳແຜ່ນດິນທ່າໃຫຍ່, ນ້ຳ ໄດ້ຖ້ວມທົ່ວເຕັມເມືອງຫໍປາສາດໄດ້ຫັກປົ້ນລົງຈົມຢູ່ໃນນ້ຳ, ຊາວເມືອງທັງເສນາອາມາດລາຊະມຸນຕີພາກັນລອຍໜີນ້ຳບໍ່ພົ້ນຕາຍກັນຈົມໜົດ ນັບທັງສັດສາວາສິ່ງບໍ່ມີຍັງເຫລືອຄ້າງຄາເມືອງ ຈັກຢ່າງຈັກແນວເລີຍ, ແລະຕົວຂອງພະ ອົງເອງກໍຕົກລົງໄປໃນນ້ຳຄືກັນ ໄສ້ຢູ່ຫ້ອງຟູ້ຂຶ້ນໄປຮອດອາກາດ.

ພ້ອມກັນນັ້ນກໍຍັງຝັນເຫັນວ່າຜູ້ມີບຸນມີສິນທຳອັນລ້ຳເລີດມາຈັບເອົາມືຂອງພະອົງດຶງຂຶ້ນໄວ້ ນ້ຳຈຶ່ງໄດ້ບົກແຫ້ງລົງ ແລ້ວແສງພະອາທິດກໍສາດສ່ອງມາ ໃສ່ຫໍປາສາດຂອງພະອົງ ແລະບໍລິເວນບ້ານເມືອງອຸ່ນແຫ່ງອຸ່ນພາຍແລ້ວພະອົງກໍສະດຸ້ງຕື່ນຈາກການນອນຝັນ. ສຽງໄກ່ຂັນສົ່ງຄອນດັງແຊວຂຶ້ນທົ່ວເມືອງພະອົງຈຶ່ງລຸກຂຶ້ນອາບນ້ຳແລ້ວກໍລຸບໄລ້ດ້ວຍເຄື່ອງອົບຂອງຫອມ.

ພໍແຈ້ງເປັນມື້ໃໝ່ມາເຖິງ ພະອົງຈຶ່ງສັ່ງໃຫ້ໜໍທວາຍປະຈຳລາຊະສຳນັກເຂົ້າເຝົ້າທັນທີ, ເມື່ອໜໍທວາຍເຂົ້າເຝົ້າແລ້ວພະອົງຈຶ່ງແກ້ຄຳຝັນໃຫ້ຟັງ ທັງສັ່ງໃຫ້ໜໍທວາຍໄດ້ອະທິບາຍລາງຝັນໃຫ້ຄົງຢາກຮູ້ວ່າມັນຊິດີແລະຮ້າຍ ປະການໃດ ໜໍທວາຍຈຶ່ງຟ້າວລົງເລກທວາຍເບິ່ງດັ່ງບົດກອນຂຽນວ່າ:

ແຕ່ນັ້ນໜໍທຳນາຍສ້ຳຕອງ      ກະດານຫີນຂຽນຂີດ
ລົງເລກໄວ້      ກົງແກ້ວລ່ຳດູ
ຕາມຄູເຖົ້າ      ອາຈານສອນສັ່ງ
ສຸນແປດຖ້ວນ      ເມືອງບ້ານຫລົ່ມຫລວງ
ເຂັດຂວາງເຂົ້າ      ເຕັງເມືອງເຄາະໃຫຍ່
ຈັກເສຍພະບາດໄທ້      ເມືອງບ້ານວອດວາຍ ແທ້ແລ້ວ

ເມື່ອໜໍທວາຍໄດ້ຫຸບເຫດການຕ່າງໆຕາມຕົວເລກທີ່ອອກມາແລ້ວ ກໍ ຈຶ່ງ

ໄດ້ຂາບທູນລາພະອົງກັບ ເມືອເຮືອນແຫ່ງຕົນ. ຝ່າຍພະຍາຈັກຂິນໄດ້ຮູ້ດີ ແນວນັ້ນ ກໍມີຄວາມໂສກເສົ້າຫງ່ອນເຫງົາຈຶ່ງສັ່ງໃຫ້ເສນາອາມາດລາຊະມູນ ຕິເຂົ້າເຝົ້າດ່ວນ. ເມື່ອເສນາອາມາດທັງຫລາຍເຂົ້າເຝົ້າພະອົງຈຶ່ງ ໄດ້ບອກໃຫ້ຮູ້ເຖິງລາງຝັນໃນຄືນກ່ອນ ແລະບອກວ່າ ໄດ້ໃຫ້ໝໍຫວາຍມາຫວາຍເບິ່ງແລ້ວບອກວ່າບ້ານເມືອງຂອງເຮົາຈະເກີດເຫດເຮັດໃຫ້ບ້ານເມືອງເກີດ ຫລົ່ມຫລວງ ເພາະວ່າ ເຄາະໃຫ່ຍເຂົ້າເມືອງບ້ານວຸ້ນວາຍ ຄົນແລະສັດຈະພາ ກັນຕາຍຂອດບ້ານຂອດເມືອງ, ພະອົງ ໄດ້ໄຕ່ຖາມວ່າ ຈະເຮັດແນວໃດຈຶ່ງ ຈະຫາຍເຄາະເຂັນອັນໃຫ່ຍນີ້ໄດ້.

ແຕ່ນັ້ນເສນາຜູ້ໃຫ່ຍ ຈຶ່ງຂາບທູນວ່າ ເລື່ອງນີ້ຕ້ອງມີຄວາມຈິງແທ້ ເພາະວ່າ: ໝໍຫວາຍຜູ້ນີ້ເຄີຍຫວາຍແມ່ນຢຳມາແລ້ວ, ແຕ່ວ່າ ເປັນແນວໃດຄືບ້ານເມືອງຈຶ່ງຊິເກີດເຫດຮ້າຍຄືແນວນັ້ນ ທັງໆທີ່ບ້ານເມືອງມີຄວາມອຸດົມສົມບູນບໍ່ອຶດບໍ່ຢາກ ແມ່ນວ່າຝົນບໍ່ຕົກຈັກສາມປີກໍຍັງບໍ່ຕາຍອຶດເຂົ້າດອກ. ອັນນີ້ກໍ ຍ້ອນບຸນປາລະມີຂອງພະອົງທີ່ຊົງປົກຄອງແຜ່ນດິນດ້ວຍທົດສະພິລາຊະທຳ. ແຕ່ ໝໍຫວາຍເປັນຫຍັງຈຶ່ງບອກວ່າບ້ານເມືອງເຮົາຈະຫລົ້ມຈົມຈິບຫາຍວາຍວອດຫລືວ່າເສິກຕ່າງດ້າວຊິມາເຂົ້າຍາດຊິງເຮົາບໍ? ຜ່ານມາກໍບໍ່ເຄີຍຄິດວ່າບ້ານ ອື່ນເມືອງໄກຊິມາຍາດມາຊິງແລະບຸກຄົນພາຍໃນຂອງເຮົາກໍບໍ່ມີໃຜດອກທີ່ຈະຄິດກະບົດຄິດລ້ຽວ.

ພະຍາຈັກຂິນ ໄດ້ບອກກັບຝູງເສນາອາມາດລາຊະມູນຕິ່ວ່າອັນຈະໃຫ້ເຮົາຄິດຢ້ານຄິດກົວຕໍ່ໝູ່ໂຈນຜູ້ຮ້າຍຫລືວ່າທົວ ເສິກຕ່າງບ້ານຕ່າງເມືອງນັ້ນເຮົາບໍ່ຢ້ານດອກ, ເຮົາຢ້ານແຕ່ວ່າບ້ານເມືອງ ໄພ່ຟ້າຂ້າແຜ່ນດິນຂອງເຮົາຈະ ມີເຄາະເຂັນເວນໄພຕາຍຮ່າກັນໝົດ. ດັ່ງນັ້ນຕໍ່ໄປນີ້ໃຫ້ພວກເຮົາພ້ອມກັນເຮັດບຸນທຳທານຢ່າໄດ້ຂາດ ເຖິງແມ່ນຈະຕາຍກໍບໍ່ກິນແຫນງແຄງໃຈ.

ພະຍາຈັກຂິນສັ່ງໃຫ້ໄປປຸກສາລາ ເພື່ອແຈກທານ ໄວ້ເຖິງທີແຫ່ງ ພ້ອມທັງ
ສັ່ງໃຫ້ຂົນເອົາເຂົ້າຂອງ ເງິນຄຳເສື້ອຜ້າອາພອນໄປໄວ້ໃນສາລາແລ້ວພະອົງ
ກໍອອກໄປແຈກທານໃຫ້ແກ່ຊາວ ເມືອງຜູ້ທຸກ ໄຮ້ຂິນໃຈດ້ວຍຕົວຂອງພະອົງເອງ
ນອກຈາກແຈກທານໃຫ້ຄົນແລ້ວພະອົງຍັງເອົາເຂົ້າ ເປືອກແຈກໃຫ້ກັບສັດຕ່າງ
ຕ່າງອີກເປັນປະຈຳທຸກມື້ ແລະໃນແຕ່ລະມື້ພວກຄົນທຸກໄຮ້ກໍພາກັນຫລຸ ຫລັ່ງ
ເຂົ້າສູ່ສາລາ ເພື່ອຮັບການແຈກທານຂອງພະຍາຈັກຂິນບໍ່ໄດ້ຂາດ.

## ໒. ກ່າວເຖິງຮຸ້ງຜົວເມຍຕົວໃຫຍ່.

ກ່າວເຖິງຮຸ້ງຕົວກ້າ ເຊິ່ງເປັນຊາດເຊື້ອພະຍາຮຸ້ງຍັກເບັນໄດ້ອາໄສ ຢູ່ເທິງຈອມດອຍຄີລີໄວຍະມາດ, ຮຸ້ງຜົວເມຍຄູ່ນີ້ມີແກ້ວວິເສດຕິດຢູ່ເທິງຫົວ ຜູ້ລະຫນ່ວຍ ແລະ ແກ້ວແຕ່ລະຫນ່ວຍມີລັດສະຫມີແສງອັນຮຸ່ງເຮືອງ ຫລືອງຫລື້ອມ, ຮຸ້ງຜົວເມຍຄູ່ນີ້ ເດີຍຢ້ານກົວຕໍ່ສິ່ງໃດໆທັງສິ້ນ ເພາະວ່າມັນມີແກ້ວຕິດຫົວຄົນລະຫນ່ວຍເພື່ອຄອຍປົກປ້ອງຕົວຂອງມັນ.

ຮຸ້ງຄູ່ຜົວເມຍນີ້ ກິນສັດນານາຊະນິດເປັນອາຫານຂອງມັນ ນັບແຕ່ສັດນ້ອຍເຖິງສັດໃຫຍ່ໆ ເທິງນານມາ ສັດກໍຫມົດບໍ່ມີແນວຊິກິນອີກແລ້ວ, ມັນໄດ້ພາ ກັນນອນອຶດຫິວແສບພຸງພວນທ້ອງ. ດັ່ງນັ້ນຮຸ້ງຕົວເປັນຜົວຈຶ່ງເວົ້າກັບຮຸ້ງຕົວ ເປັນເມຍວ່າ ຕໍ່ໄປນີ້ເຮົາຈະຊອກຫາກິນສັດຢູ່ໃສເປັນອາຫານ ເພາະສັດຕ່າງ ໆ ຢູ່ໃນເຂດນີ້ກໍຫມົດຊູ່ໂຕແລ້ວ.

ຮຸ້ງຜູ້ເປັນຜົວຍັງຈົ່ມນຳເມຍຕື່ມອີກວ່າ ເຮົາມີຫນ່ວຍແກ້ວປະເສີດ ແຕ່ຫາກເກີດມາເປັນສັດ ເປັນເວນເປັນກຳເຝົ້າແຕ່ແກ້ວຢູ່ບໍ່ຮູ້ສຸດຮູ້ສິ້ນຈັກເທື່ອປານໃດຈຶ່ງຊິໄດ້ເຫັນຜູ້ຊົງທຳລິດທິເດດ ແລ້ວຊິໄດ້ເອົາຫນ່ວຍແກ້ວ ຖວາຍແກ່ພະອົງ. ຮຸ້ງຕົວເມຍກໍເວົ້ານຳຜົວວ່າ ເຮົາກໍອຶດຫິວແທ້ ເພາະບໍ່ມີສັດຈະກິນເປັນອາຫານ ຫລືວ່າເຮົາຈະພາກັນບິນໄປຫາເມືອງຄົນມະນຸດຕ່າງລາງເທື່ອວ່າໄປພົບພໍ້ຜູ້ມີລິດທິເກັ່ງກ້າກວ່າເຮົາແລ້ວຈຶ່ງເອົາຫນ່ວຍແກ້ວຖວາຍ, ແລ້ວ

ພວກເຮົາຈຶ່ງພ້ອມກັນຕາຍໃຫ້ສວ່າງວອນສວ່າງກາ, ແຕ່ຖ້າວ່າພວກເຂົາ ບໍ່ມີລິດເດດແນວໃດເຫນືອກວ່າເຮົາແລ້ວ ເຮົາຕ້ອງກິນພວກເຂົາໃຫ້ຫມົດ.

ຄຳຄິດເຫັນຂອງຮຸ້ງຕົວເມຍເຮັດໃຫ້ຮຸ້ງຕົວຜົວ ເຫັນດີເຫັນພ້ອມທັງ ເວົ້າວ່າ ຖ້າເຮົາຍັງພາກັນອາໄສຢູ່ເທິງດອຍຄີລີໄວຍະວົດກໍ່ມີແຕ່ອຶດອາຫານທີ່ ນັ້ນ ຊິຕາຍກໍ່ຕາຍບໍ່ໄດ້ຄານຳແຕ່ແກ້ວຢູ່ເທິງຫົວນີ້ແຫລະ, ເມື່ອຜົວເມຍເຫັນດີເຫັນພ້ອມກັນແລ້ວ ກໍບິນມຸ່ງຫນ້າໄປສູ່ເມືອງຈັກຂິນຫລືເມືອງໃຫ່ຍທານບໍ່ດົນກໍ ພາກັນໄປເຖິງເຂດທ້ອງເມືອງບ້ານຍ່ານຄົນ.

ເມື່ອໄປເຫັນຄົນແລະສັດຕ່າງໆຢູ່ຕາມຫມູ່ບ້ານມັນຈຶ່ງພາກັນກິນແບບ ບໍ່ເລືອກ ຜູ້ບໍ່ຕາຍກໍ່ພາກັນແຕກຕື່ນເຂົ້າປ່າເຂົ້າພູເອົາຕົວລອດ, ມີບາງຄົນກໍ່ປົບຕາຍເຂົ້າມາຮອດຕົວເມືອງແລ້ວຈຶ່ງຂຶ້ນເຝົ້າແສນເມືອງແລ້ວບອກໃຫ້ ແສນເມືອງຮູ້ຖຶ່ງບົດກອນຂຽນວ່າ:

ບັດນີ້ມການຮ້ອນ　　ອິນຕາຍບັງເກີດ ຈິງແລ້ວ<br>
ຍັງມີຮຸ້ງໃຫ່ຍຮ້າຍ　　ບິນເຂົ້າສູ່ເມືອງ<br>
ມັນກໍກິນຄົນສ້ຽງ　　ບໍ່ເຫລືອຫລໍຍັງຢູ່<br>
ຕາຍມອດມ້ຽນ　　ແຖວບ້ານນອກເມືອງ ເຈົ້າເອີຍ

ຝ່າຍແສນເມືອງໄດ້ຍິນຄຳເຂົາກ່າວຖຶ່ງນັ້ນ ຈຶ່ງຟ້າວໄປຂາບທູນໃຫ້ພະຍາຈັກຂິນຮູ້ວ່າດຽວນີ້ເຂດຂວາງເຂົ້າແດນເມືອງບ້ານນອກ ບອກວ່າມີຮຸ້ງ ຜົວເມຍໂຕໃຫ່ຍບິນລ່ວງເຂົ້າເມືອງບ້ານແຫ່ງເຮົາ ມັນໄດ້ກິນຄົນຢູ່ແຖບ ເຂດນອກເມືອງເກືອບຈະຫມົດແລ້ວ. ຊາວບ້ານຊາວເມືອງທີ່ເຫລືອຕາຍກໍ່ພາ ກັນປົບຫນີປະບ້ານປະເຮືອນໄປທົ່ວທຸກແຫ່ງຫົນ.

ພະຍາຈັກຂິນໄດ້ຟັງຄຳກ່າວລາຍງານແນວນັ້ນກໍ່ມີຄວາມຄຶ່ງແຄ້ນໃນ ໃຈ ຈຶ່ງສັ່ງໃຫ້ຝູງເສນາອຳມາດມາປະຊຸມກັນເປັນການດ່ວນ, ພະອົງໄດ້ຖາມ ຝູງ

ເສນາອຳມາດວ່າ ພວກເຮົາຈະແກ້ໄຂແນວໃດດີ ອັນນີ້ມັນບໍ່ແມ່ນຫົວເສິກຄົນ ເຮົາ, ພວກເຮົາຈະລົບມັນດ້ວຍວິທີໃດ, ພວກເສນາອຳມາດນ້ອຍໃຫຍ່ຈຶ່ງຂາບທູນຕໍ່ພະອົງວ່າຂໍຂານອາສາຕາຍແທນພະອົງ, ທັງຂໍຮູ້ວ່າພິຍານຮຸງສົດ ໂດຍລະສານມັນຈະມາສູ້ກັບຄົນໄດ້ແນວໃດ ນີ້ແຕ່ຕາຍທັ້ນແຫລະ.

ເມື່ອພະຍາຈັກອິນໄດ້ຟັງດັ່ງນັ້ນກໍມີຄວາມປິຕິຍິນດີຕໍ່ເສນາອຳມາດ, ພະອົງໄດ້ມີຄຳສັ່ງໃຫ້ທຸກຄົນ ຫາງຫາກະກຽມທຸກສິ່ງທຸກຢ່າງ ເພື່ອຕໍ່ສູ້ກັບຮຸງ ໃນຕອນ໌. ຈາກນັ້ນເສນາອຳມາດຈຶ່ງລາພະອົງໄປສູ່ສະໜາມຫລວງແລ້ວ ແຈ້ງໃຫ້ຊາວເມືອງໄດ້ຮູ້ດັ່ງບົດກອນໜຶ່ງຂຽນວ່າ:

ແຕ່ນັ້ນໂຍທາທ້າວ        ຊາວເມືອງຕົບແຕ່ງ
ທຸກສ່ຳຂ້າ        ມາພ້ອມຊູ່ຊົນ
ເຂົ້າກໍນອງກັນເຂົ້າ        ເມືອງຫລວງຄັບຄັ່ງ
ໄຫລຫລັ່ງເຂົ້າ        ສະໜາມກ້ວາງນີ້ນັ້ນ
ກີຫາກຫລາຍເຫລືອລົ້ນ        ພົນຫລວງຫລາຍໝື່ນ
ຊ້າງແລະມ້າ        ດາພ້ອມຊູ່ອັນ ເຈົ້າເອີຍ

ເສນາອຳມາດຜູ້ໃຫຍ່ຈຶ່ງໄດ້ຢາຍອາວຸດໃຫ້ທຸກໆຄົນເມື່ອໄດ້ລຶກວານ ຍາມດຶກຈຶ່ງສັ່ງຄອງກຽມເຄື່ອນກຳລັງພົນໂດຍມີຂຸນຜູ້ໃຫຍ່ຂີ່ຊ້າງອອກໜ້າ, ຟັງສຽງເມືອງມັນໄປຕາມທາງເຄື່ອນທັບຂ້າມທົ່ງນາອັນກວ້າງໃຫຍ່ໄປສູ່ເຂດ ຂອບເມືອງແລ້ວກໍຢຸດພັກເຊົາຢູ່ທີ່ນັ້ນ, ພ້ອມກັນນັ້ນຜູ້ເປັນຫົວໜ້າແມ່ທັບກໍສັ່ງໃຫ້ຢາຍກຳລັງເປັນແຖວສູ້ຮົບເອົາໄວ້ ປືນທຸກກະບອກຢູ່ໃນທ່າກຽມຍິງໄດ້ທຸກ ເມື່ອຫົວໜ້າແມ່ທັບສັ່ງຕື່ມອີກວ່າ ຄັນຫາກຮຸງຜີວເນຍບິນມາສູ່ຈົ່ງຟັງສຽງສັ່ນຄ້ອງຕີກອງສັນຍານກ່ອນຈຶ່ງຄ່ອຍຍິງເດີ.

ບັດນີ້ກ່າວເຖິງຮຸງຜີວເນຍ ມັນກໍບິນມາເຫັນກຳລັງພົນຂອງພະຍາຈັກ ອິນ

ຫີຍາຍຢູ່ເຕັມໄປຫມົດ, ຮຸ້ງໂຕເປັນພົວຈຶ່ງເວົ້າກັບ ເມຍດ້ວຍຄວາມຊົມ ຊື່ນຍິນດີແລ້ວກໍ່ບິນລົງມາຫາຝູງເສນາອໍາມາດແລະກໍາລັງພົນທັງຫມົດ, ພວກກໍາ ລັງພົນກໍ່ພາກັນຕື່ນຕົກໃຈ ເພາະແນມເບິ່ງໂຕຮຸ້ງໃຫ່ຍປານວ່າຫນ່ວຍພູຕາ ແດງເຂັ້ມພໍປານໄຟກອງຮ້າ ປີກຂອງຮຸ້ງພືອອກບັງແສງຕາເວັນຈົນມືດມົວໄປ ຫມົດຜູ້ໃດກໍ່ພາກັນຢ້ານສັ່ນເຊັນ, ຝ່າຍແສນເມືອງແລະຂຸນຜູ້ໃຫ່ຍຈຶ່ງຟ້າວຕີ ຄ້ອງຕີກອງບອກສັນຍານພວກທະຫານຈຶ່ງຍິງປືນຍິງທະນູສຸມຂຶ້ນໃສ່ຮຸ້ງພົວ ເມຍທັນທີແຕ່ວ່າລູກປືນບໍ່ໄດ້ໄປໃກ້ໂຕຮຸ້ງພໍນ້ອຍເລີຍທັງນີ້ຍ້ອນວ່າຮຸ້ງພົວ ເມຍຄູ່ມີແກ້ວປະເສີດຢູ່ຫົວ.

ຮຸ້ງພົວ ເມຍໄດ້ຮ້ອງໃສ່ພົນຂອງພະຍາຈັກຂິນວ່າສູຊິມາເປັນເຫຍື່ອທ້ອງ ກູທັງຫມົດແລ້ວ, ກູຈະກິນເພື່ອຊອກຫາຜູ້ທີ່ມີລິດເດດ ຖ້າວ່າໃຜຫາກພ່າຍແພ້ ກູໄດ້ກູຈະເອົາແກ້ວປະເສີດນີ້ຖວາຍໃຫ້. ເວົ້າແລ້ວຮຸ້ງຄູ່ພົວ ເມຍກໍ່ເຈີດບິນ ລົງມາຈັບຈິກກິນຄົນຢ່າງບໍ່ເລືອກຫນ້າ. ດັ່ງນັ້ນພົນຫລວງຂອງພະຍາຈັກຂິນຈຶ່ງກົວຕາຍພາກັນແຕກໄປຊະຊຸຊະຊາຍບໍ່ໄດ້ສົນໃຈນໍາປືນ, ນໍາຫອກ, ນໍາດາບແຕ່ປະການໃດ ຜູ້ຊິ້ລຢູ່ນໍາພຸ່ມນໍາເພືອຍນໍາຫລັກນໍາຕໍ່ກໍ່ມີ, ສະຫລຸບແລ້ວພົນ ຫລວງແລະໄພ່ຟ້າປະຊາກອນຖືກຮຸ້ງພົວ ເມຍກິນເທື້ອນຕາຍໄປເຖິງເຄິ່ງຫນຶ່ງ, ກະດູກຄົນທີ່ຮຸ້ງຕາຍຖິ້ມໄວ້ສູງພຽງພູພຽງດອຍ, ຮຸ້ງຍັງໄດ້ເອີ້ນບອກຊາວ ເມືອງດັ່ງບົດກອນຂຽນວ່າ:

ຮຸ້ງຈຶ່ງປາກກ່າວຕ້ານ ເອີ້ນສັ່ງຊາວເມືອງ
ສູຈັກເປັນອາຫານ ແຫ່ງກູຫມົດສ້ຽງ
ຄົນວ່າເຈັດວັນແລ້ວ ກູຈັກຄືນມາໃຫ່ມ
ສູຈັກເຂົ້າສູ່ທ້ອງ ກູ້ນຊູ່ຄົນ ແທ້ແລ້ວ
ຄ້ອມວ່າມັນກ່າວແລ້ວ ເລີຍເລົ່າບິນຫນີ

ເຖິງຄືລີ ປ່າດອຍຄົງກວ້າງ
ມັນກໍຢູ່ສະບາຍແທ້ ເນົ້ານອນດອຍໃຫ່ຍ
ເພາະວ່າກິນອິ່ມທ້ອງ ບໍ່ມີຮ້ອນຮ່ອນໃດ ເຈົ້າເອີຍ

ກ່າວເຖິງເສນາອຳມາດທີ່ເຫລືອຕາຍຈາກປາກຣຽງຜີວເນຍ ໄດ້ພາ ກັນ ຟ້າວເຂົ້າສູ່ເມືອງແລ້ວຂຶ້ນຂາບທູນໃຫ້ພະຍາຈັກຂິນໄດ້ຮູ້, ເມື່ອພະອົງໄດ້ ຮູ້ ກໍມີຄວາມຄຶ່ງແຄ້ນໃນໃຈ, ທີ່ສູນເສຍເສນາອຳມາດພ້ອມພົນທະຫານແລະຊາວ ເມືອງໃນເທື່ອນີ້ ພະອົງເວົ້າວ່າ ອັນຫມໍ້ທວາຍໄດ້ທຳນາຍເອົາໄວ້ຈຶ່ງ ແມ່ນ ປານຕາເຫັນເອົາໂລດ ວ່າບ້ານເມືອງຂອງເຮົາຈະມີເຂັນຂ້ອງໃນ ເມືອງວິ ນາດ, ພະອົງໄດ້ເວົ້າດອນຊຸມຜູ້ເຖົ້າວ່າ ເຮົາພ້ອມ ໄພ່ພົນຊາວເມືອງຈະພາກັນ ຕາຍຂອດບ້ານຂອດເມືອງແທ້ໃດ ຈັກຊິມີໃຜມີຄວາມສາມາດສູ້ຣົບກັບ ມັນ ໄດ້, ໃຫ້ພວກທ່ານຕີຄ້ອງຮ້ອງປ່າວໄປທົ່ວທຸກມູມເມືອງປະກາດຫາຜູ້ເກັ່ງ ກ້າ ທີ່ຈະສູ້ຣົບກັບຣຽງໄດ້, ຖ້າໃຜຂານອາສາຮັບໄດ້ເຮົາຈະມອບບ້ານເວນ ເມືອງ ໃຫ້ຜູ້ນັ້ນໂລດ.

ເສນາອຳມາດເມື່ອໄດ້ຮັບຄຳສັ່ງແລ້ວກໍຂຶ້ນຂີ່ຊ້າງຕີຄ້ອງຮ້ອງປ່າວໄປ ທົ່ວ ເມືອງ, ແຕ່ບໍ່ປະກົດມີຜູ້ໃດອອກມາຂານອາສາ. ດັ່ງນັ້ນເສນາອຳມາດຈຶ່ງ ກັບ ມາຂາບທູນໃຫ້ພະອົງຮູ້ວ່າບໍ່ມີໃຜອີກແລ້ວ ຈະຂານອາສາສູ້ຣົບກັບຣຽງໄດ້, ຄາວ ນີ້ບ້ານເມືອງຄົງຈະມູດມອດເສຍແລ້ວພະອົງເອີຍ. ພະຍາຈັກຂິນໄດ້ຟັງດັ່ງນັ້ນ ກໍມີແຕ່ໂສກເສົ້າຫງ່ອມເຫງົານ້ຳຕາອາບແກ້ມ ເພາະເຖິງເຈັດວັນຣຽງກໍ ຈະ ກັບມາກິນອີກໃຫ່ມ ຄາວນີ້ຄົງຈະບໍ່ມີໃຜເຫລືອ, ອິດູຕົນປະທຸມມາລູກສາວຂອງ ເຮົາອາຍຸຫາກໍ 15 ປີງາມປານວ່ານາງຟ້າສະຫວັນ ຈະດັບສູນເຊື້ອຊາດວົງ ຕະກຸນໃນຄາວນີ້ແລ້ວ.

## 3. ເອົານາງປະທຸມມາເຊື່ອງໄວ້ໃນກອງ.

ພະຍາຈັກຂິນນັ້ນເຖິງພະອົງຈະຕາຍກໍ່ບໍ່ກິນແຫນງ, ແຕ່ພະອົງເປັນທຸກເປັນໂສກນຳແຕ່ນາງປະທຸມມາຜູ້ເປັນລູກສາວທີ່ນັ້ນ ຫວັງຈະໄດ້ເປັນຜູ້ສືບຫນໍ່ແຫນແນວຊ້ຳພັດຊິມາຖືກຮຽງກິນ. ດັ່ງນັ້ນພະອົງຈຶ່ງໄດ້ປຶກສາຫາລືກັບເສນາຜູ້ ໃຫຍ່ເພື່ອຫາທາງແກ້ໄຂໃຫ້ນາງປະທຸມມາໄດ້ມີຊີວິດຢູ່, ແຕ່ວ່າເສນາອຳມາດ ຜູ້ໃຫຍ່ນັ້ນຜູ້ໃດກໍບອກແຕ່ວ່າ ບໍ່ຊ່າງຈະຄິດແກ້ໄຂແນວໃດ ເພາະປັນຍານ້ອຍຄິດບໍ່ເຖິງ.

ດັ່ງນັ້ນພະຍາຈັກຂິນຈຶ່ງບອກຈຸດປະສົງຂອງພະອົງໃຫ້ພວກເສນາອຳມາດໄດ້ຮູ້ວ່າຈະເອົານາງປະທຸມມາໄປເຊື່ອງໄວ້ໃນກອງຫນ່ວຍໃຫຍ່ (ກອງເພນ) ແລ້ວອັດມ້ຽນໄວ້, ບາງເທື່ອມີຜູ້ທີ່ມີລິດເດດມາພໍ້ຈະໄດ້ເອົານາງຫນີໄປຈະບໍ່ໄດ້ເສຍເຊື້ອເສຍແນວຈັກຂິນເມືອງໃຫຍ່, ເສນາອຳມາດຕ່າງກໍພາກັນຍໍມືສາທຸເຫັນດີເຫັນພ້ອມນຳຄວາມຄິດຂອງພະອົງ.

ຫລັງຈາກນັ້ນພະອົງຈຶ່ງສັ່ງໃຫ້ສາວໃຊ້ໄປເຊີນເອົານາງປະທຸມມາພ້ອມທັງມະເຫສີ (ເມຍ) ມາເຂົ້າເຝົ້າໂດຍດ່ວນ, ຄັນເມື່ອສາວໃຊ້ໄປເຊີນແລ້ວ ມະເຫສີພ້ອມດ້ວຍນາງປະທຸມມາຈຶ່ງໄດ້ຟ້າວເຂົ້າເຝົ້າທັງທູນຖາມເຖິງ ຄວາມປະສົງຂອງພະອົງ, ພະຍາຈັກຂິນຈຶ່ງບອກກັບມະເຫສີວ່າ ບັດນີ້ອິນຕາຍ ຄົນເຖິງເມືອງເຄາະໃຫຍ່ ເອົາຈັກມຸດມອດມ້ຽນຕາຍສ້ຽງບໍ່ຫລໍເພາະວ່າມີ ຮຽງ

ໃຫ່ຍຜົວເມຍພັນໄດ້ມາກິນໄພ່ຟ້າປະຊາກອນຕາຍໄປຈົນຂ້ອນເມືອງແລ້ວ, ດັ່ງນັ້ນເຮົາຈະໄດ້ເອົານາງປະທຸມມາຜູ້ເປັນລູກໄປເຊື່ອງໄວ້ໃນກອງ.

ຝ່າຍມະເຫສີໄດ້ຟັງດັ່ງນັ້ນ ກໍໄດ້ແຕ່ຮ້ອງໄຫ້ນ້ຳຕາອາບແກ້ມທັງຈົ່ມ ວ່າເປັນເວນກຳໃດນໍມານຳໃຊ້ໃນຊາດນີ້, ຄົນຈະເອົານາງໄປໄວ້ໃນກອງແໜງວ່າພ້ອມກັນຕາຍດີກວ່າເພື່ອຈະໄດ້ໄປສູ່ເມືອງຟ້າຮ່ວມກັນ; ພະຍາຈັກຂິນ ໄດ້ເວົ້າກັບມະເຫສີວ່ານ້ອງເອີຍຢ່າໄດ້ຄິດຄືແນວນັ້ນເລີຍມັນຈະເສຍເຊື້ອເສຍແນວເມືອງເຮົາຖິ້ມຊື່ງ ເອົາໄປເຊື່ອງໄວ້ກອງນັ້ນບາງເທື່ອນາງອາດຈະ ບໍ່ຕາຍກໍເປັນໄດ້ດັ່ງບົດກອນຂຽນວ່າ:

| | |
|---|---|
| ພີ່ຈັກເອົານາງເຂົ້າ | ໃນກອງໜ່ວຍໃຫ່ຍ |
| ຝັງຝາກໄວ້ | ເທວະທ້າວຊູ່ພາຍ |
| ຫລອນວ່າຍັງມີແນວນາມເຊື້ອ | ເມືອງໄກດິນປະເທດ |
| ມາພົບວິເສດແກ້ວ | ເອົາດັ້ນດ່ວນໜີ ບໍ່ຮູ້. |

ສ່ວນນາງປະທຸມມານັ້ນ ເມື່ອໄດ້ຟັງຄຳບອກກ່າວຂອງພະຍາຈັກຂິນຜູ້ເປັນພໍ່ແລ້ວ ນາງເຖິງກັບເປັນລົມລົ້ມລົງທັງໄຫ້ທັງຈົ່ມວ່າ ເປັນແນວໃດນໍພໍ່ແມ່ຈິ່ງຈະຖິ້ມປະລະໄລລູກໃຫ້ເປັນກຳພ້າກຳພອຍຜູ້ດຽວ ເປັນແນວໃດກໍຊິຂໍຕາຍພ້ອມພໍ່ແມ່ ບໍ່ປະບໍ່ອາງໄປໄດ້. ຖ້າຫາກບໍ່ເຫັນໜ້າພໍ່ແມ່ແລະເສນາອຳມາດ ຕະຫລອດຮອດຊາວເມືອງແລ້ວລູກກໍບໍ່ຊ່າງຈະຢູ່ຜູ້ດຽວ ໄດ້ແໜງວ່າຕາຍດີ ກວ່ານາງປະທຸມມາຮ້ອງໄຫ້ດ້ວຍຄວາມນ້ອຍເນື້ອຕ່ຳໃຈຜູ້ເປັນແມ່ຈຶ່ງກອດ ເອົານາງມາອຸ້ມທັງນ້ຳຕາ ແລະເວົ້າກັບນາງວ່າແມ່ແລະພໍ່ພ້ອມທັງຊາວເມືອງຈະໄດ້ຕາຍໜີຈາກລູກໄປເສຍແລ້ວ ອົດທົນແຕ່ລູກຊິໄດ້ຢູ່ຜູ້ດຽວຖືວ່າເປັນ. ເວນກຳຂອງລູກ ທີ່ເກີດມາພົບພໍ້ກັບໂຊກຮ້າຍຄືແນວນີ້.

ນາງປະທຸມມາ ຍືນນິບພະຍາຈັກຂິນຜູ້ເປັນພໍ່ທັງບອກວ່າຈະຂໍຕາຍພ້ອມກັບ

ພໍ່ແມ່ ຄັນຫາກເອົາລູກໄປໄວ້ໃນກອງກໍບໍ່ຮູ້ຈະຢູ່ແນວໃດ, ຝ່າຍພະຍາຈັກ ຂິນ ຜູ້ເປັນພໍ່ຈຶ່ງໂອລົມກັບນາງວ່າ ເປັນແນວໃດລູກຈຶ່ງອົດສາອົດເຍື້ອນເອົາ ລູກ ເອີຍ ຢ່າໃຫ້ເສຍເຊື້ອແນວບ້ານເມືອງຂອງເຮົາ, ນາງປະທຸມມາ ໄດ້ຍິນ ຄຳ ພໍ່ເວົ້າພໍ່ໂລມຄືແນວນັ້ນກໍບໍ່ຊ່າງຈະວ່າແນວໃດ ໄດ້ແຕ່ຍໍມືນົບພໍ່ທັງພ່ອງ ຮ້ອງ ໄຫ້ເປັນຫນ້າອີດູລົງສານ.

ພະຍາຈັກຂິນສັ່ງໃຫ້ເສນາອຳມາດໄປຫາມກອງມາແລ້ວກໍສັ່ງໃຫ້ຫາເຄື່ອງ ກິນທຸກຢ່າງທັງຂອງຫວານຂອງສົ້ມແລະເຂົ້າຕົ້ມເພື່ອວ່າໃຫ້ນາງໄດ້ກິນເວລາ ຢູ່ໃນກອງ, ເມື່ອຈັດເອົາຂອງກິນໃສ່ໄວ້ໃນກອງຮຽບຮ້ອຍແລ້ວເສນາຜູ້ ໃຫຍ່ ຈຶ່ງຂຶ້ນຂາບທູນໃຫ້ພະຍາຈັກຂິນຮູ້, ພະອົງຈຶ່ງສັ່ງລູກດ້ວຍຄວາມອາໄລອາວອນ ດັ່ງບົດກອນຂຽນວ່າ:

ດູລາສິນງາມແກ້ວ　　　ສາຍໃຈລູກພໍ່ ແພງເອີຍ
ພໍ່ຈັກເຫັນຫນ້າເຈົ້າ　　　ແພງລ້ານເທື່ອດຽວ ນີ້ແລ້ວ
ໃຫ້ລູກອົດຢາກເຍື້ອນ　　　ລີ້ຢູ່ໂດມດຽວ ພໍ່ຖອນ
ສາຍໃຈເອີຍ　　　ຢູ່ດີເຍີ້ຍເຈົ້າ
ລູກຈຶ່ງເນົາໃນຫ້ອງ　　　ກອງຫລວງຫນ່ອຍໃຫຍ່
ພໍ່ຈັກຂັງເຈົ້າໄວ້　　　ແພງລ້ານຈື່ຈຳ ພໍ່ເນີ
ຫລອນວ່າບຸນຊູ້ປ້ອງ　　　ສິນພານຈັບຈ່ອງ
ອາດມີຜູ້ລິດເດດກ້າ　　　ເດີນດັ້ນດ່ອນມາ ບໍ່ຮູ້
ລູກຈຶ່ງບົວລະບັດເຈົ້າ　　　ເອົາຕີນຖວາຍມອບ
ໃຫ້ເພິ່ນພາດ່ອນດັ້ນ　　　ຫນີແທ້ຈາກເວນ ພໍ່ເນີ

ພະຍາຈັກຂິນທັງສັ່ງທັງໄຫ້, ສ່ວນນາງປະທຸມມານັ້ນທັງໄຫ້ທັງຍໍມືນົບ ພໍ່ ສ່ວນແມ່ໄດ້ແຕ່ໄຫ້ຈື່ມໄຫ້ວ່າເປັນທຸກເປັນໂສກນຳລູກຈົນໃຈຈະຂາດບໍ່ຮູ້ ວ່າ

ເປັນເວນເປັນກຳອັນໃດແຕ່ຊາດກ່ອນຈຶ່ງຕ້ອງໄດ້ຈຳພາກຈາກກັນ, ແມ່ ຈະໄດ້ເຫັນຫນ້າລູກແຕ່ດຽວນີ້ແຫລະ ຂໍໃຫ້ລູກຈົ່ງຢູ່ສຸກສຳລານ, ສ່ວນແມ່ແລະ ພໍ່ຈະໄດ້ຕາຍຍ້ອນຮຸ້ງໃຫ່ຍມາກິນລູກເອີຍ. ພວກເສນາອຳມາດຜູ້ໃດກໍພາກັນໄຫ້ນຳນາງປະທຸມມາ ທັງພ່ອງຄຶດເຖິງຄວາມຕາຍຂອງຕົນເອງກໍປານນັ້ນ.

ຕໍ່ມານາງປະທຸມມາກໍໄດ້ຍໍມືອຳລາພໍ່ແມ່ຕະຫລອດເຖິງວົງວານແລະເສນາອຳມາດແລ້ວກໍເຂົ້າໄປຢູ່ໃນກອງດ້ວຍສີຫນ້າອັນໂສກເສົ້າຫວ່ອມເຫງົາ. ເມື່ອນາງເຂົ້າໄປຢູ່ໃນກອງເປັນທີ່ຮຽບຮ້ອຍແລ້ວ ເສນາອຳມາດກໍ່ພ້ອມກັນ ອັດກອງເອົາໄວ້ຫລັງຈາກນັ້ນກໍພາກັນຫາມກອງຂຶ້ນໄປແຂວນໄວ້ເທິງທໍ່(ທໍ່ກອງ) ແລ້ວກໍແຕ່ງຂັນດອກໄມ້ໄຕ້ທູບໄຕ້ທຽນໃຫ້ພະຍາຈັກຂິນຜູ້ເປັນພໍ່ໄດ້ໄຫວ້ ວອນເຖິງເທບພະເຈົ້າອູ່ແຄນ ເພື່ອໃຫ້ມາເບິ່ງມາແຍງປົກປັກຮັກສານາງໃຫ້ ຕະຫລອດປອດໄພ, ຢ່າໃຫ້ເສຍເຊື້ອເສຍແນວບ້ານເມືອງຈິບຫາຍວາຍວອດ ໄປໄດ້, ຈາກນັ້ນເສນາອຳມາດທັງຫລາຍກໍພາກັນກັບເມືອສູ່ເຮືອນແຫ່ງຕົນ, ນັບແຕ່ວັນທີ່ນັ້ນມາເມືອງຈັກຂິນກໍຕົກຢູ່ໃນສະພາບເສົ້າຫມອງແຕ່ລະຄືນກໍ ນັ່ງຄອງຖ້າແຕ່ຄວາມຕາຍຈະມາຮອດ.

## 4. ກ່າວເຖິງຮຸງຜົວເມຍ.

ຮຸງຍັກເປັນຄູ່ຜົວເມຍທີ່ອາໄສຢູ່ທ້ອງທົ່ງໃຫຍ່ວົງກົດ ມັນກໍອົດອາຫານແສນພຸງພອນທ້ອງ, ພໍເມື່ອສືບກຳເນີດເຈັດວັນໜັ້ນ ໄດ້ສັ່ງໄວ້ກັບຊາວເມືອງຈັກອິນແລ້ວມັນກໍພາເມຍຂອງມັນບິນມາສູ່ເມືອງຈັກອິນທັນທີ, ພໍບິນມາຮອດກໍ ເຫັນຊາວເມືອງຢ່າງຫລວງຫລາຍພາຍມາກ ເຮັດໃຫ້ຮຸງຜົວເມຍມີຄວາມດີອົກ ດີໃຈຢ່າງໃຫຍ່ມັນຈຶ່ງຟ້າວພີປີກຂອງມັນບັງແສງຕາເວັນເອົາໄວ້ຈົນວ່າ ເມືອງຈັກອິນມືດມົວໄປໝົດ, ເມື່ອໄດ້ໂອກາດຮຸງຄູ່ຜົວເມຍກໍຟ້າວລົງມາກິນ ຊາວເມືອງເປັນອາຫານຈົນກະດູກກອງພຽງພູ, ຮຸງຄູ່ຜົວເມຍໄດ້ທຽວມາກິນ ຊາວເມືອງບໍ່ຂາດແຕ່ລະມື້ທັງໃນວຽງແລະນອກວຽງມັນກິນຈົນບໍ່ມີເຫລືອເລີຍ.

ມື້ໜຶ່ງຮຸງຄູ່ຜົວເມຍລົງມາກິນໃນຄຸ້ມຂ້ວງຂອງພະຍາຈັກອິນ, ມັນໄດ້ກິນເສນາອຳມາດນາງສະຫນົມກົມມະວັງຈົນຫມົດ ແມ່ນແຕ່ຊ້າງມ້າງົວຄວາຍຫລືສັດອື່ນໆຫມູ່ຢູ່ໃນເມືອງຈັກອິນມັນກິນບໍ່ເລືອກ. ຂະນະນັ້ນພະຍາຈັກອິນກັບມະເຫສີປະທັບຢູ່ໃນໂຮງຈຶ່ງແນມເຫັນຮຸງຄູ່ຜົວເມຍ ພະອົງຈຶ່ງເວົ້າຂຶ້ນວ່າມຶງ ຮີບຟ້າວມາກິນກູກັບມະເຫສີໄວໆ ຫອນກູນັ່ງຖ້າມຶງຢູ່ນີ້ແລ້ວ, ເສນາອຳມາດໄພ່ຟ້າປະຊາກອນຂອງກູມຶງກໍກິນຈົນຫມົດແລ້ວເດ ຍັງທໍ່ກູກັບມະເຫສີນີ້ແລ້ວມາ ກິນສາຮຸງເອີຍ ດັ່ງບົດກອນຂຽນໄວ້ວ່າ:

ຍັງແຕ່ລາຊາເຈົ້າ ກັບເທວີຫລຽນພ່າງ

ເມື່ອນັ້ນສອງກໍເນົານັ່ງຖ້າ　　ໂຮງກ້ວາງຢູ່ຄອຍ
ພະຈຶ່ງແລເຫັນຮຸງ　　ຜົວເມຍຕົວໃຫ່ຍ
ພະບາດໄຫ້　　ໃຈກ້າບໍ່ກົວ
ມຶງຈິ່ງມາກິນຖ້ອນ　　ຜີເບັນຮຸງໃຫ່ຍ
ກູຈັກຫານຫອດເນື້ອ　　ວາງໃຫ້ແກ່ມຶງ ແທ້ແລ້ວ

ຜີໄດ້ຍິນຄຳເອັ້ນຂອງພະຍາຈັກຂິນ ຮຸງຄູ່ຜົວເມຍຟ້າວບິນເຂົ້າໃສ່ພະ ຍາຈັກຂິນທັນທີມັນໄດ້ສັບກິນເນື້ອຂອງພະຍາຈັກຂິນແລະມະເຫສີຈົນເຫລືອແຕ່ກະດູກກ່ອນທີ່ຮຸງຄູ່ຜົວເມຍຈະບິນກັບຄືນທີ່ຢູ່ຂອງມັນ, ມັນຍັງໄດ້ເອົາກະດູກ ຂອງພະຍາຈັກຂິນແລະມະເຫສີມັດຮວມໄວ້ໃນຫີອັນຄອນ. ຈາກນັ້ນຮຸງຄູ່ຜົວເມຍກໍ ພາກັນບິນກັບຄືນສູ່ເຂົາຫລວງໄວຍຸມາດ ເພື່ອຮັກສາໜ່ວຍແກ້ວອິງລ້ຳໜໍ່ພຸດໂທເອົາໄວ້, ທັງສອງມັນຢູ່ຢ່າງສະບາຍເພາະໄດ້ກິນອີ່ມທ້ອງດີແລ້ວ.

ຍ້ອນກ່າວເຖິງນາງປັດທຸມມານັບແຕ່ໄດ້ເຂົ້າໄປຢູ່ໃນກອງໜ່ວຍໃຫ່ຍນາງກໍມີແຕ່ນ້ຳຕາອາບແກ້ມຢູ່ຜູ້ດຽວ ທັງພ່ອງຄຶດເຖິງພໍ່ແມ່ຍາດຕິພີ່ນ້ອງຕະຫລອດເສນາອຳມາດແລະໄພ່ຟ້າປະຊາກອນຊາວເມືອງຈັກຂິນດັ່ງບົດກອນຂຽນວ່າ:

ໂອນໍ ກູກໍຄືນດຽວໄຫ້　　ໃນກອງຫລາຍຄ່ຳ ຄືນແລ້ວ
ປານນີ້ ພໍ່ແມ່ລຶດຊື່ວ້ນຽນ　　ຕາຍຖິ້ມຈາກກູ ແລນໍ
ກັບທັງໂຍທາພ້ອມ　　ຊາວເມືອງຕາຍຈາກ ກູແລ້ວ
ກູຫາກດູກກ່ຳປົ້ງ　　ເມືອງບ້ານງຽບເຢັນ
ໂອນໍ ກຳກູແລ້ວ　　ເວນໃດດົງຈ່ອງ
ກູຊິຕາຍເປົ່າລ້າ　　ເນົາຢັ້ງຢູ່ກອງ ແລນໍ

ບາງເທື່ອນາງກໍຄິດຢາກກັ້ນໃຈຕາຍໃຫ້ແລ້ວ ເວນແລ້ວກຳ, ແຕ່ພັດຄຶດເຖິງຄຳທີ່ພໍ່ສັ່ງເອົາໄວ້, ດັ່ງນັ້ນນາງຈຶ່ງໄດ້ອົດກັ້ນເອົາໄວ້ທັງພ່ອງຍີ່ມືນິບໄຫ້ວອນ

ເຖິງພໍ່ແມ່ແລະ ເທວະດາຟ້າແຖນໃຫ້ມາຊ່ວຍຄຸ້ມຄອງ. ຄຳໄຫ້ວອນຂອງນາງ ໄດ້ຮ້ອນເຖິງ ເທວະດາອິນພົມຈຶ່ງ ໄດ້ຫລິງລົງມາ ເບິ່ງເຫັນນາງທົນທຸກທໍ ລະມານຢູ່ໃນກອງຜູ້ກຣວ.

## 5. ກ່າວເຖິງພະຍາຈຸນລະນີ.

ໃນເວລາຕໍ່ມາອັນວ່າເທບພະທ່ອນທ້າວທີ່ຢູ່ບົນສະຫວັນຈຶ່ງຫລຽວໄປເຫັນພະລາຊາອົງໜຶ່ງ ຊຶ່ງເປັນຜູ້ມີບຸນປາລະມີແກ່ກ້າ, ພະລາຊາພະອົງນັ້ນມີພະ ນາມ (ຊື່ ) ວ່າ ພະຍາຈຸນລະນີດັ່ງນັ້ນເທວະດາຈຶ່ງດົນບັນດານເຮັດໃຫ້ຮ່າງກາຍຂອງພະຍາຈຸນລະນີເກີດຮ້ອນໄໝ້ບໍ່ເປັນອັນຢູ່ອັນກິນ. ອາການດັ່ງກ່າວ ເຮັດໃຫ້ພະຍາຈຸນລະນີມີຄວາມສົງໄສເຫລືອເກີນເພາະວ່ານັບແຕ່ປົກຄອງ ບ້ານເມືອງມາເປັນເວລານານກໍບໍ່ເຄີຍເກີດມີອາການເຊັ່ນນີ້ເລີຍ. ດັ່ງນັ້ນພະ ອົງຈຶ່ງໄດ້ປຶກສາກັບມະເຫສີ ( ເມຍ ) ຊື່ວ່ານາງອັກຄີ, ພະອົງຖາມວ່າອັກຄີເອີຍເປັນຫຍັງເດຕົນໂຕຂອງອ້າຍມາຄືຮ້ອນດັ່ງໄຟນໍ້ເດ.

ນາງອັກຄີໄດ້ຟັງພະອົງເລົ່າອາການດັ່ງນັ້ນກໍບໍ່ຮູ້ຈະເຮັດແນວໃດ ຈຶ່ງ ສັ່ງໃຫ້ເສນາອຳມາດນາງສະໜົມກົມມະວັງພາກັນເຂົ້າມາພັດວີໃຫ້ພະອົງ, ແຕ່ວ່າພັດແນວໃດວີແນວໃດຮ່າງກາຍຂອງພະອົງກໍຍັງຮ້ອນຢູ່ຄືເກົ່າ. ສະນັ້ນ ພະອົງຈຶ່ງສັ່ງໃຫ້ເສນານຳເອົາໝໍໂຫນໝໍຫວາຍມາຫາດ່ວນ, ເມື່ອໝໍໂຫນ ໝໍຫວາຍມາເຝົ້າພະອົງຈຶ່ງໄດ້ເລົ່າອາການທີ່ເກີດຂຶ້ນສູ່ຟັງແລ້ວສັ່ງໃຫ້ຮີບພາກັນທຳນາຍທາຍທັກເບິ່ງວ່າມັນຈະດີຈະຮ້າຍຄືແນວໃດແທ້.

ຝ່າຍໝໍໂຫນໝໍຫວາຍໄດ້ຮູ້ຈຸດປະສົງຂອງພະອົງແລ້ວກໍຟ້າວຈັບສົມາ ລົງເລກທັນທີ, ເມື່ອໄດ້ຮູ້ຜົນຕາມເລກດວງຊະຕາແລ້ວ ຈຶ່ງຂາບທູນຕໍ່ພະອົງ ວ່າ

ຫາກເບິ່ງຕາມຖານເລກທີ່ອອກມານັ້ນກໍບໍ່ໄດ້ມີເຫດຮ້າຍແນວໃດຕໍ່ພະອົງ ເລີຍ ພຽງແຕ່ວ່າພະອົງເປັນພະຍາດອັນໜຶ່ງໃນພະອົງ, ພະຍາດນັ້ນຕ້ອງໄດ້ເດີນດົງທ່ຽວປ່າຈຶ່ງຈະສວ່າງຫາຍແລະຕໍ່ໄປກໍຈະມີໂຊກດັ່ງບົດກອນຂຽນວ່າ :

ທໍ່ວ່າພະບາດເຈົ້າ ມີໂລກໂລຄາ
ຄັນບໍ່ເດີນໄພຫນາ ກໍບໍ່ຫາຍຄຳຮ້ອນ
ຄວນທີ່ອົງເປັນເຈົ້າ ໄລເມືອງເສຍກ່ອນ
ຈຶ່ງຈະຫາຍໂສກຮ້ອນ ເມື່ອຫນ້າຢູ່ເຢັນ
ດຽວນີ້ຍັງຈັກມີເຂັນຕ້ອງ ໃນດົງຫນ້ອຍຫນຶ່ງ
ຕັ້ງແຕ່ນັ້ນ ເມື່ອຫນ້າໂຊກມີ
ຫາກຈັກໄດ້ລາບແທ້ ແວນປະເສີດເພີງໃຈ
ເຫັນຈັກເປັນແນວນານ ຫມໍ່ເມືອງໄກລ໋
ຫມໍຫວາຍແລ້ວ ບັງຄົມລາເລີກ
ເມືອສູ່ຫ້ອງ ເຮືອນຢ້າວແຫ່ງຕົນ ເຈົ້າເອີຍ

ເມື່ອພະຍາຈຸນລະນີໄດ້ຟັງການຂາບທູນຂອງຫມໍໂຫນຄືແນວນັ້ນແລ້ວ ພະອົງຈຶ່ງບອກໃຫ້ເສນາອຳມາດໄດ້ຮູ້ວ່າບັດນີ້ເຮົາພະອົງຈະໄດ້ໄປເຊີດເນື້ອໃນປ່າ ເພື່ອວ່າໃຫ້ຫາຍຄຳຮ້ອນທີ່ເກີດຂຶ້ນໃນຕົນຕົວຂອງເຮົາ, ໃຫ້ພວກສູ ທ່ານພາກັນຫ້າງຫາກະກຽມອາຫານການກິນປະດັບປະດາຊ້າງມ້າອັນເປັນພາ ຫະນະໃນການເດີນທາງ.

ຝ່າຍເສນາອຳມາດຜູ້ໃຫ່ຍເມື່ອໄດ້ຮັບຄຳສັ່ງແລ້ວກໍຟ້າວໄປແຈ້ງໃຫ້ທຸກ ໆ ຄົນຮູ້ເພື່ອຫ້າງຫາກະກຽມຕາມທີ່ພະອົງໄດ້ສັ່ງທຸກປະການ. ພາຍຫລັງທີ່ເສນາອຳມາດແລະຊາວເມືອງໄດ້ກະກຽມຮຽບຮ້ອຍແລ້ວກໍພາກັນມາໂຮມກັນຢູ່ ຮູ້ມຂອງພະຍາ ເພື່ອກຽມຕົວອອກເດີນດົງ ເດີນປ່າກັບພະຍາຈຸນລະນີ.

ເມື່ອເຖິງເວລາດີແລ້ວ ກ່ອນພະຍາຈຸນລະນີຈະອອກເມືອງຈຶ່ງໄດ້ສັ່ງລານາງອັກຄີຜູ້ເປັນມະເຫສີວ່າອັກຄີເອີຍບັດນີ້ອ້າຍຈັກໄດ້ອອກໄປທ່ຽວດົງ ທ່ຽວປ່າໃຫ້ນ້ອງຢູ່ຖ້າອ້າຍດ້ວຍຄວາມສຸກກາຍສະບາຍໃຈ, ນາງອັກຄີໄດ້ຟັງດັ່ງນັ້ນກໍຍິ້ມຂຶ້ນໃສ່ຫົວພ້ອມທັງອວຍໄຊໃຫ້ພອນແກ່ພະອົງວ່າຂໍໃຫ້ໄປດີມີໂຊກຊໍ ໃຫ້ຫາຍຄວາມໂສກຮ້ອນໃນເນື້ອຊື່ນບານນັ້ນຖ້ອນ.

ຫລັງຈາກສັ່ງລານາງອັກຄີແລ້ວ ພະຍາຈຸນລະນີກໍລົງຈາກຫໍພາສາດຂຶ້ນ ສູ່ຫລັງຊ້າງ ເດີນທາງໄປສູ່ປ່າ, ຂະບວນໄປທ່ຽວປ່າຂອງພະຍາຈຸນລະນີຄາວນັ້ນ ນັບວ່າເປັນຂະບວນທີ່ໃຫຍ່ໂຕມະໂຫຖານ ພັ່ງພ້ອມໂຍທາອຳມາດພ້ອມທັງຂະບວນຊ້າງແລະມ້າຢ່າງຄັບຄາຫນາແຫນ້ນ, ມີທັງກອງດຸລິຍາງເສບອອກຫນ້າ ເບື້ອງແຖວຂອງຂະບວນນັ້ນຍືດຍ້າຍປານນ້ຳຫລັ່ງໄຫລຂ້າມທົ່ງນາແລ້ວກໍໄປເຖິງປ່າໄມ້ດົງດອນອັນກ້ວາງໃຫຍ່ໄພສານ, ພະຍາຈຸນລະນີໄດ້ພາຂະບວນພັກເຊົາຢູ່ປ່າແຫ່ງໜຶ່ງ, ພວກເສນາອຳມາດຈຶ່ງໄດ້ພ້ອມກັນຕົບແຕ່ງທີ່ພັກເຊົາຖວາຍແກ່ພະອົງ.

ຢູ່ສະຖານທີ່ພັກເຊົາຊົ່ວຄາວນີ້ ເສນາອຳມາດຜູ້ໃດກໍມີຄວາມເບີກບານມ່ວນຊື່ນນຳທຳມະຊາດປ່າດົງພົງໄພ ທັງໄດ້ກິ່ນຫອມຂອງດອກໄມ້ນາງພັນ. ພໍຕົກຕອນແລງກໍກະກຽມຈັດຫາອາຫານການກິນຖວາຍແກ່ພະອົງ, ພວກເສນາ ອຳມາດທັງຫລາຍກໍພ້ອມກັນກິນແລງຢ່າງພ້ອມພຽງຮຽງຫນ້າ ຕົກຄ່ຳມາກ່ອນຈະພາກັນນອນພັກຜ່ອນກໍໄດ້ມີການມ່ວນຊື່ນກັນດ້ວຍການຂັບການລຳແລະ ການຫລິ້ນຕ່າງໆເຮັດໃຫ້ພະຍາຈຸນລະນີຫາຍຄວາມໂສກຮ້ອນໃນຕົວ.

ຕື່ນເຊົ້າມາພະອົງກໍໃຫ້ເສນາອຳມາດເຂົ້າເຝົ້າບົວລະບັດຕາມປົກກະຕິພະອົງໄດ້ບອກກັບເສນາອຳມາດແລະໂຍທາທັງຫລາຍວ່າ ມື້ນີ້ຈະໄດ້ໄປ ເຊີດເນື້ອໃນເຖື່ອນພົງໄພ ຂໍໃຫ້ເຕືອນກັນຫາງຫາກະກຽມເຄື່ອງມືເຊັ່ນ ຫອກ

ງ້າວ, ປືນແລະມ້າໂຕດີຄາດເຄື່ອງໄວ້ເນີ, ແຕ່ນັ້ນເສນາອຳມາດຈຶ່ງໄດ້ ພ້ອມກັນຫ້າງຫາກະກຽມເຄື່ອງມືໃນການເຊີດເນື້ອຕາມທີ່ພະອົງສັ່ງທຸກປະການ.

## 6. ພະຍາຈຸນລະນີຫລົງທາງ.

ພາຍຫລັງທີ່ເສນາອຳມາດ ໄດ້ກະກຽມເຄື່ອງມືເຄື່ອງໃຊ້ ໃນການອອກເດີນປ່າຫາເຊີດເນື້ອແລ້ວ ພະຍາຈຸນລະນີກໍພາເສນາອຳມາດເດີນທາງສູ່ປ່າ ດົງພົງໄພອັນກວ້າງໃຫຍ່ ເພື່ອຫາເຊີດເນື້ອຕາມທີ່ພະອົງ ໄດ້ຕັ້ງໃຈເອົາໄວ້.

ກ່າວເຖິງເທບພະດາອົງໜຶ່ງທີ່ຮັກສາພະອົງ ເທບພະດາອົງນີ້ ໄດ້ສຳແດງຕົນເປັນກວາງຄຳໂຕໜຶ່ງ ເຊິ່ງມີຮູບຮ່າງຄືກັນກັບກວາງແທ້ແຕ່ວ່າມີຕົນໂຕເປັນຕາໜ້າຮັກໜ້າແພງ. ຂະນະທີ່ພະຍາຈຸນລະນີນຳກຳລັງພົນອອກຊອກຫາສັດປ່າຢູ່ນັ້ນ ກວາງຄຳກໍໄດ້ແລ່ນຜ່າຂະບວນອອກໄປເບື້ອງໜ້າພໍ່ພະຍາ ຈຸນລະນີແນມເຫັນກໍຄຶດຢາກໄດ້ກວາງໂຕນັ້ນ, ອັນນີ້ເປັນຍ້ອນເທບພະດາດົນ ບັນດານໃຈຂອງພະອົງນັ້ນເອງ. ດັ່ງນັ້ນພະອົງຈຶ່ງສັ່ງໃຫ້ກຳລັງພົນທັງໝົດ ລ້ອມກວາງໂຕນັ້ນເອົາໄວ້ທັນທີ, ພວກເສນາອຳມາດແລະໂຍທາທັງຫລາຍຈຶ່ງລ້ອມແລະໄລ່ຕ້ອນກວາງເອົາໄວ້, ກວາງກໍທຳທ່າເຕັ້ນດ້ວຍຄວາມຢ້ານກົວ ແລ້ວແລ່ນເຂົ້າໄປໃກ້ບ່ອນພະຍາຈຸນລະນີຮູ້ເຫັນແນວນັ້ນກໍຟ້າວຈັບດາບພະຂັນໄຊຂຶ້ນຂີ່ມ້າ ໄລ່ຕິດຕາມກວາງຄຳທັນຝູງກຳລັງພົນທັງໝົດກໍຍົກຂະບວນຕິດ ຕາມພະອົງ ໄປຢ່າງສ່ວານສິນ, ແຕ່ພໍ່ພະຍາຈຸນລະນີກັບຂະບວນທັງໝົດ ໄລ່ຕິດຕາມໄປໃກ້ແລ້ວກວາງຄຳກໍຟ້າວແລ່ນໜີໄປ.

ພະຍາຈຸນລະນີ ໄດ້ອອກຄຳສັ່ງແກ່ກຳລັງພົນທັງໝົດວ່າຈົ່ງລ້ອມກວາງເອົາ

ໄວ້ໃຫ້ໄດ້ຖ້າທາກກວາງລອດອອກທາງໃດຈະມີໂທດ, ແຕ່ຖ້າທາກທາງໃດຈັບກວາງໄດ້ຈະມີລາງວັນເງິນຄຳມອບໃຫ້ພ້ອມທັງເສື້ອຜ້າອາພອນ. ດັ່ງນັ້ນພວກກຳລັງພົນຈຶ່ງພາກັນເອົາຜ້າແພຜູກຕໍ່ກັນຕາງເຊືອກຂຶງກັນເອົາໄວ້ແລ້ວກໍ ໄລ່ຕ້ອນກວາງຄຳໝາຍຈະເອົາຜ້າແພຜູກເອົາ ແຕ່ພໍໄປຂ່າວໃກ້ ກວາງ ກໍແລ່ນໜີໄປທາງພະຍາ. ດັ່ງນັ້ນພະຍາຈຸນລະນີຈຶ່ງເລັ່ງມ້າເຂົ້າໃສ່ກວາງໆ ກໍຟ້າວແລ່ນໄປໜ້າເລື້ອຍໆ ພວກເສນາອຳມາດພ້ອມພົນຫລວງກໍໂຫ່ໄລ່ ຕາມພະຍາ ແຕ່ກໍບໍ່ສາມາດຈະໄປທັນພະອົງໄດ້.

ສຳລັບພະຍາຈຸນລະນີນັ້ນກໍມິແຕ່ຄິດຢາກໄດ້ກວາງຄຳບໍ່ເລີກບໍ່ແລ້ວ ຈຶ່ງໄລ່ຕິດຕາມໄປ, ສ່ວນກວາງຄຳຮູ້ວ່າພະຍາຈຸນລະນີພວມໄລ່ຕິດຕາມກໍທຳທ່າເຮັດຂາຫັກແລ່ນລີລາກລີເລືອ ແຕ່ພໍຮູ້ວ່າພະຍາຈຸນລະນີເລັ່ງມ້າເຂົ້າມາໃກ້ກໍຟ້າວແລ່ນໜີຂາກໍບໍ່ຫັກບໍ່ຫານຫຍັງໝົດ ພະຍາຈຸນລະນີກໍເລັ່ງມ້າໄລ່ຕິດຕາມ ຕື່ມອີກ, ໄປຕາມໄປຈົນເຖິງດົງໃຫ່ຍອັນຢູ່ໄກແສນໄກ ຝູງເສນາອຳມາດກໍ ພັດພາກຈາກພະອົງໆໄປພຽງແຕ່ຜູ້ດຽວ. ຝ່າຍເສນາອຳມາດເມື່ອບໍ່ເຫັນພະ ອົງກໍພາກັນທ່ຽວຊອກຫາທັງຮ້ອງທັງກູ່ ແຕ່ກໍບໍ່ໄດ້ຍິນສຽງຂານຕອບຂອງພະອົງແຕ່ຢ່າງໃດ ເຫລືອແຮງທີ່ພາກັນຊອກແຕ່ກໍບໍ່ພົບພະອົງ.

ດັ່ງນັ້ນຂຸນພູໃຫ່ຍຈຶ່ງເວົ້າກັບເສນາອຳມາດແລະພົນຫລວງວ່າດຽວນີ້ ພວກເຮົາໄດ້ພັດພາກຈາກກັນກັບພະຍາເນືອງເສຍແລ້ວ ຍ້ອນກວາງຄຳໂຕດຽວຈົນເສຍໜ້າກະສັດປົກຄອງເມືອງ. ມາເຖິງຕອນນີ້ພວກເຮົາຈະເຮັດແນວໃດ ດີຄືໜຶ່ງແມ່ນພາກັນກັບຄືນເມືອເມືອງຂາບທູນໃຫ້ພະມະເຫສີໄດ້ຮູ້ແລະອັນ ທີສອງແມ່ນຢຸດພັກພົນຫລວງຄອງຖ້າພະອົງຢູ່ທີ່ນີ້ບາງເທື່ອພະອົງກັບມາ ບ່ອນເກົ່າ, ປະກົດວ່າຝູງເສນາອຳມາດຕະຫລອດພົນຫລວງທັງໝົດໄດ້ຕົກລົງ ກັນວ່າຕ້ອງກັບຄືນສູ່ເມືອງບາງເທື່ອພະອົງຈະກັບເຖິງເມືອງກ່ອນແລ້ວກໍເປັນໄດ້

ແຕ້ຖາຫາກວ່າກັບໄປຮອດເມືອງແລ້ວບໍ່ເຫັນພະອົງຈຶ່ງຂາບທູນໃຫ້ພະມະ ເທສີ້. ຫລັງຈາກນັ້ນຈຶ່ງແຕ່ງຕັ້ງກັນອອກຊອກຕິດຕາມຫາຕື່ມ.

ເມື່ອກັບເຖິງພະນະຄອນແລ້ວກໍບໍ່ພົບພະອົງແຕ່ປະການໃດ, ດັ່ງນັ້ນຂຸນ ຈຶ່ງຂຶ້ນຂາບທູນໃຫ້ພະມະເທສີ້. ໂດຍໄດ້ເລົ່າລາຍລະອຽດດັ່ງບົດກອນຕອນໜຶ່ງຂຽນວ່າ:

ບັດນີ້ເສຍທ່ອນທ້າວ    ພະບາດບຸນເຮືອງ
ພະກໍພາພົນຫລວງ    ໄລ່ກວາງດົງກວາງ
ພອຍເລົ່າຫລົງໄປແທ້    ທາງໃດບໍ່ຮູ້ແຫ່ງ
ຝູງຂ້ານຳຕໍ່ສິ້ນ    ໄປແລ້ວກໍເລົ່າຫລົງ
ອັນວ່າເດີນດາເຕົ້າ    ທິວທິ້ນເທດ
ຍັງມີກວາງແລ່ນເຕັ້ນ    ປົບເຂົ້າຜ່າພົນ
ກວາງນັ້ນຕົວງາມພ້ຽງ    ສະເໜີຄຳທັງແທ່ງ
ກໍຫາກດູຕ່າງແທ້    ກວາງນັ້ນຮູບງາມ
ອັນວ່າລາຊາເຈົ້າ    ເຫັນກວາງຕົວອາດ
ພະບາດຄຶດຢາກໄດ້    ກວາງນັ້ນຊອບພະໄທ
ພະຈຶ່ງຂຶ້ນຂີ່ມ້າ    ເລີຍໄລ່ກວາງຄຳ
ກວາງກໍປົບໄປມາ    ລອບວຽນວົງລ້ອມ
ຈັກວ່າຫລົງໄປແທ້    ທາງໃດບໍ່ຮູ້ຮ່ອມ
ຝູງຂ້າຫລົງຈາກເຈົ້າ    ບຸນກ້ວາງໜໍ່ເມືອງ ແທ້ແລ້ວ
ແຕ່ນັ້ນເທວີແກ້ວ    ໄດ້ຍິນຄຳຂຸນກ່າວ
ອົກວຸ້ຮ້ອນ    ປານໄໝ້ໝື່ນແປວ
ນາງຄານແກ້ວ    ເທວີຕົນອາດ

ຄິດຮອດເຈົ້າ ຫວງຮ້ອນເກືອນກະຫາຍ ເຈົ້າເອີຍ

ນາງອັກຄີ້ຜູ້ເປັນມະເຫສີໄດ້ຟັງດັ່ງນັ້ນຈຶ່ງເກີດມີຄວາມສົງໄສຈຶ່ງຖາມ ຄົນວ່າຄົນແມ່ນເສືອສິງຊ້າງໃນດົງດ້ຽວດາຍກິນນັ້ນ ຍັງຈັກມີຜູ້ຮູ້ເຫັນແຈ້ງ ເຫດນຳ ຢ້ານແຕ່ພວກສັດຫາກພາກັນຂ້າພະອົງຕາຍແລ້ວທຳທ່າມາລາຍງານປິດບັງອຳພາງ, ຄົນຊັ້ນຄົນເປັນພັນເປັນໝື່ນແຕ່ແທນແພນກົ້ງກໍຊິມີຜູ້ຮູ້ເຫັນທາງ ພະອົງໄປຢູ່ດອກຈັກຄົນ, ອັນນີ້ສູ່ຕັ້ງ ໄລເສຍຖຸນຈອມເມືອງພູວະນາດບໍ່ພາກັນເບິ່ງແຍງລະວັງຮັກສາພະອົງແຕ່ຢ່າງໃດເລີຍ.

ນາງອັກຄີ້ຜູ້ເປັນມະເຫສີ້ຮ້າຍເປັນຟືນເປັນໄຟຈຳໃຫ້ຂຸນທັງຫລາຍ ອອກເດີນປ່າຊອກຫາພະອົງໃຫ້ໄດ້, ຖ້າຫາກຊອກບໍ່ພົບພະອົງຄືສູ່ຂາດກູບໍ່ໄວ້ຊີວິດ ສູເລີຍ, ສ່ວນວ່າໝໍໂຫນກໍຊີຕັດຄໍເອົາຫົວມັນສຽບຫລັກ ເປັນຫຍັງມັນຈຶ່ງ ມາຕົວະໃຫ້ພະອົງອອກຈາກເມືອງ. ພວກຂຸນທັງຫລາຍໃພກໍຢ້ານຈຶ່ງພາກັນ ກົ້ມຂາບລົງໜີກັບໄປສູ່ເຮືອນຂອງຕົນ ແລ້ວຈຶ່ງເຕົ້າໂຮມກຳລັງອອກເດີນ ທາງໄປຊອກຫາພະອົງໃຫ້ແຕ່ຊອກຫາທາງໃດກໍບໍ່ພົບພະອົງເລີຍເຮັດໃຫ້ ເຂົາໂສກເສົ້າຫວ່ອນເຫງົາທຸກາງຄົນ.

## 7. ພະຍາຈຸນລະນີພົບນາງປະທຸມມາ.

ຍ້ອນກ່າວເຖິງພະຍາຈຸນລະນີ, ເມື່ອໄລ່ຕິດຕາມກວາງຄຳໄປໜ້າເລື້ອຍໆ ກໍເລີຍພັດພາກຈາກເສນາອຳມາດແລະໄພ່ພົນພະຫົນໂຍທາ ບໍ່ຮູ້ວ່າຕົກ ໄປເຂດໃດແດນໃດ, ຫລົງໄປທາງໃດມີແຕ່ປ່າໄມ້ພູຜາອັນກວ້າງໃຫຍ່ໄພສານ ໃນທີ່ສຸດກວາງຄຳໂຕນັ້ນກໍມະຫັບມະຫາຍໄປ.

ກວາງຄຳໄດ້ກັບເກີດເປັນເທບພະທ່ອນທ້າວຄອຍຮັກສາພະຍາຈຸນລະນີໄປທຸກອິລິຍະບົດ, ສ່ວນພະຍາຈຸນລະນີກໍໄດ້ແຕ່ຄຶດຮອດຫາເສນາອຳມາດໄພ່ ພົນໂຍທາຈັກຊິພັດພາກຈາກກັນໄປທາງໃດແນ່ກໍບໍ່ຮູ້ໄດ້, ພະອົງຄຶດຢາກກັບໄປຫາເມືອງຄືນກໍບໍ່ຮູ້ຈະໄປທາງໃດ ແນມໄປໃສມີແຕ່ປ່າແຕກົ່ງອັນຕຶບໜາ. ອັນວ່າກວາງຄຳທີ່ກັບເກີດເປັນເທບພະດາຮັກສາພະອົງນັ້ນເມື່ອຮູ້ວ່າພະອົງມີຄວາມຄຶດຮອດຄຶດເຖິງເສນາໄພ່ພົນ ກໍມາດົນບັນດານໃຫ້ພະອົງຫາຍໂສກເສົ້າແລ້ວກໍຈັກຈ່ອງນ້າວໃຫ້ພະອົງກັບມ້າເດີນທາງບຸປ່າຜ່າດົງໄປໜ້າເລື້ອຍໆຈົນກາຍພູຫລວງໜ່ວຍໃຫຍ່ເມື່ອແສງຕາເວັນລັບຂອບຟ້າ ພະອົງຈຶ່ງເຂົ້າໄປພັກນອນຢູ່ກ້ອງຮົ່ມໄຊໃຫຍ່, ເທວະດາ ຜູ້ຮັກສາພະອົງຈຶ່ງນິລະມິດອ່າງນ້ຳສຳລັບ ໃຫ້ພະອົງໄດ້ອາບໄດ້ກິນ, ພໍຕົກຕອນຄ່ຳຄືນມາຮອດເທວະດາກໍບໍ່ໄດ້ປະຄອຍ ຮັກສາຢູ່ຕະຫລອດ. ພະຍາຈຸນລະນີກໍປັດກວາດພື້ນດິນແລ້ວກໍນອນທັງພ່ອງຄຶດເຖິງທີ່ໂຮງພາສາດທີ່ພະອົງໄດ້ເຄີຍເນົານອນເຊິ່ງພັ່ງພ້ອມໄປດ້ວຍຄວາມ ເບີກ

ບານມ່ວນຊື່ນມີທັງມະເຫສີຢູ່ລຽງຂ້າງສາວສະຫນົມຫນຸ່ມນ້ອຍຂວາຊ້າຍແກ່ວງ ວິ, ບໍ່ດົນໄດ້ມານອນຄົນດຽວຢູ່ກາງດົງກາງປ່ານອນກໍນອນບໍ່ໄດ້ແຕ່ຄຶດ ເຖິງນາງອັກຄີ້ຜູ້ເປັນເທວີດັ່ງບົດກອນຂຽນວ່າ :

ໂອນໍ ອັນວ່າມະເຫສີແກ້ວ ເທວີແຝງພ່າງ ກູນັ້ນ
ປານນັ້ນນາງກໍເນົາຢູ່ຫ້ອງ ທີ່ແກ້ວສ່ວນຊິຄອຍ ແລນໍ
ບັດນີ້ເວນມາຕ້ອງ ໄກນາງຣານຫ່າງ
ພິກໍພັດພາກເຈົ້າ ໄກແກ້ວບໍ່ເຫັນ ແທ້ແລ້ວ

ພະຍາຈຸນລະນີນອນແນວໃດກໍບໍ່ຫລັບ, ບິດຫນຶ່ງຫູພັດໄດ້ຍິນສຽງສັດປ່ານາງຈະນິດຮ້ອງຢູ່ຕາມດົງຫລວງອັນກວ້າງໃຫ່ຍ, ຈົນເວລາຂ້ອນຄືນພະອົງ ຈຶ່ງເຊືອບຫລັບໄປຄາວຫນຶ່ງແລ້ວ ໄກ່ປ່າກໍສົ່ງສຽງຂັນຂຶ້ນສະນັ່ນດົງແສງອາລຸນວັນໃຫ່ມກໍໄດ້ມາ ເຖິງພະອົງຈຶ່ງລຸກສ່ວາຍຫນ້າແລ້ວກໍຂຶ້ນຂີ່ມ້າອອກເດີນທາງຕໍ່ໄປແນມເຫັນປ່າດົງພົງໄພອັນກວ້າງໄກຢູ່ທາງເບື້ອງຫນ້າພຸ້ນ, ບາງເທື່ອສາຍລົມກໍພັດຜ່ານໄປຕາມສາຍປ່າເຮັດໃຫ້ຕົ້ນໄມ້ໃບຫຍ້າເຫນັງຕິງໄປມາ. ພະຍາຈຸນລະນີບໍ່ໄດ້ສົນໃຈກັບຄວາມງາມຂອງທຳມະຊາດເຫລົ່ານັ້ນ ພະອົງຕີ້ມ້າ ແລ່ນກາຍໄປຂ້າງຫນ້າເລື້ອຍໆ ເພາະຂ້າງຫນ້ານັ້ນພະອົງແນມເຫັນດອຍຫລວງຂັ້ນຜາຊັນແສນງ່ອນ ພະທ່ອນທ້າວທັງມ້າແລ່ນໄປ.

ຕາມທາງຜ່ານພະຍາຈຸນລະນີໄດ້ກິ່ນອາຍອັນຫອມຫວນຂອງດອກໄມ້ປ່ານານາຊະນິດ ເປັນທີ່ຕິດອົກຕິດໃຈເອົາແທ້ເອົາວ່າ, ກິ່ນດອກໄມ້ປ່ານາໆຕຳ ດັງຍານໃດເຮັດໃຫ້ພະອົງຄຶດຮອດຫານາງອັກຄີ້ຜູ້ເປັນເມຍ ທັງພ່ອງຈື່ມຜູ້ດຽວວ່າໂອນໍປານນັ້ນ ອັກຄີ້ນ້ອຍ ກັນລະຍາເມຍນຶ່ງນາງກໍເນົາຢູ່ຫ້ອງປາງ ກ້ວາງພໍ່ຄອຍແລນໍ ທັງຈື່ມທັງພ່ອງຕີ້ມ້າແລ່ນໄປຫນ້າບໍ່ຢຸດບໍ່ຢ່ອນ ບາງເທື່ອກໍ ແນມເຫັນຜາແດງເປັນຊ່ອງຊໍ່ຄືດັ່ງດຽວກັບຍອດຜາສາດ ເຮັດໃຫ້ພະອົງຄຶດ ຮອດ

ເມຍແລະສະຫນົມຫນຸ່ມເຫນົ້າທີ່ຢູ່ເມືອງປານນັ້ນພວກເຂົາຄົງມີຄວາມ ຫ່ວມເຫງົາຫາ.

ພະຍາຈຸນລະນີພົ້ມາດັ້ນດອນດົ້ນປ່າໄປເປັນເວລາຫລາຍວັນ ກໍຈຶ່ງຕົກເຂົ້າໄປໃນເຂດເມືອງຄົນ, ພໍແຕ່ແນມເຫັນເຂດບ້ານຂອງຄົນພະອົງກໍຟ້າວຕີ ມ້າແລ່ນເຂົ້າໄປສັງເກດການເບິ່ງວ່າແມ່ນບ້ານໃດເມືອງໃດກັນແທ້, ແຕ່ ແລ້ວປະກົດວ່າເມືອງນັ້ນບໍ່ມີຄົນຈັກຄົນເລີຍມີແຕ່ກາແຕ່ແຮ້ງບິນສ່ວາຍສິນໄປ ມາແນມໄປເບິ່ງເຮືອນຫລັງໃດກໍບໍ່ມີຄົນຢູ່ເລີຍ ພະອົງຍ່າງສຳຫລວດເຂົ້າ ໄປໃນເມືອງເຫັນແຕ່ກອງກະດູກ. ພະຍາຈຸນລະນີໄດ້ເຫັນດັ່ງນັ້ນກໍຄິດໃນໃຈ ວ່າເມືອງນີ້ຈັກວ່າເປັນເຂັນຂອງປະການໃດຄົນຈຶ່ງຕາຍຫມຸດປະແຕ່ກະດູກໄວ້ເຕັມພື້ນດາດຂາວນັ້ນເດ, ນອກຈາກກະດູກຄົນແລ້ວຍັງມີກະດູກຝູງຫມູ່ຊ້າງ ມ້າງົວຄວາຍ ກອງເຕັມເມືອງ, ອັນນີ້ຫລືວ່າເກີດພາກຮ້າຍຜີຮ້າກິນຫມົດ ຫລືວ່າເຂົາຫາກກິນສັງເບື່ອເມົາຕາຍມ້ວຍ, ພະອົງເລາະໄປເຖິງຕະຫລາດກໍ ເຫັນແຕ່ເຄື່ອງຄ້າຂອງຂາຍຢາຍຢັ່ງຢູ່ ແຕ່ບໍ່ມີຄົນເຝົ້າຮັກສາ, ເລາະຕໍ່ໄປຕື່ມ ອີກກໍແນມເຫັນທີ່ພາສາດຮຸ່ງເຮືອງ ເຫລືອງເຫລື້ອມພະອົງຈຶ່ງເອົາຕົນເຂົ້າ ໄປໃນບໍລິເວນພາສາດ ກໍບໍ່ໄດ້ຍິນສຽງຄົນໄອຈາມຫຍັງຫມົດ, ໄດ້ເຫັນແຕ່ຫົວ ຄົນກອງຢູ່ເຕັມຕາມພາສາດ ພະອົງຈຶ່ງຂີ່ມ້າເຂົ້າໄປຈົນເຖິງທີ່ພາສາດແລ້ວກໍຂຶ້ນໄປຊອກເບິ່ງໃຫ້ສົມໃນໃຈທັງຄິດຮອດຫາເມືອງຂອງພະອົງກໍປານນັ້ນ, ພະອົງເລາະໄປຕາມຫ້ອງຕ່າງໆຈຶ່ງໄດ້ເຫັນກອງຫນ່ວຍຫນຶ່ງທ້ອຍຢູ່ໃນໂຮງ ພະອົງຈຶ່ງເອົາມືຕີກອງລອງເບິ່ງດັ່ງບົດກອນຂຽນວ່າ:

ພໍແຕ່ເຫັນກອງທ້ອຍ ໃນໂຮງຫນ່ວຍໃຫ່ຍ
ພະຈຶ່ງຢຽດຍ່ອງຢັ້ງ ມືຕ້ອງຕ່ອຍຕີ
ແຕ່ນັ້ນປະຊຸມມານ້ອຍ ໃນກອງຕ້ານປາກ

ມຶງຈຶ່ງມາກິນທ້ອນ ພິເບັນຣຽງໃຫ່ຍ
ກູຈັກຫານທອດເນື້ອ ວາງໃຫ້ແກ່ມຶງ ແທ້ແລ້ວ
ມຶງຈຶ່ງໄຂກິນທ້ອນ ຢ່ານານແວນຣີບ
ຕາງໃຫ້ດັບຊື່ວຊ້ຳ ນຳແກ້ວພໍ່ກູ ຫັ້ນຖ້ອນ

ຝ່າຍພະຍາຈຸນລະນີໄດ້ຍິນສຽງນາງປາກກໍຈຶ່ງຟ້າວເອົາງ້າວປາດ ຫນັງກອງອອກ ຈຶ່ງໄດ້ເຫັນນາງນ້ອຍກອງແພງງາມຍິ່ງ, ພະອົງຈຶ່ງຟ້າວໄຕ່ ຖາມຫາກົກປາຍສາຍເຫດວ່າ ເປັນຫຍັງນາງເອີຍເຈົ້າຈຶ່ງມານອນລີ້ຢູ່ໃນ ກອງຫນ່ວຍນີ້? ນາງປະທຸມມາຈຶ່ງບອກໃຫ້ພະອົງໄດ້ຮູ້ດັ່ງບົດກອນຂຽນວ່າ:

ແຕ່ນັ້ນປະທຸມມານ້ອຍ ນາງງາມຂານຕອບ
ນາງກໍບົນບອກແຈ້ງ ພາຍພ້ຽນຊູ່ປະການ
ປາງນັ້ນເປັນເຂັນຂ້ອນ ອິນຕາຍພັງເກີດ
ເປັນເຫດຮ້ອນ ພິຣຽງທ່ຽວກິນ ພະເຣີຍ
ອັນວ່າໃນເມືອງກໍວາງ ມັນກິນປັດຂອດ
ກໍບໍ່ມີຜູ້ເຫລືອຢູ່ຄ້າງ ເມືອງນີ້ເປົ່າແປນ ພະເຣີຍ
ຍັງແຕ່ຕົນດຽວຂ້ອຍ ໃນກອງລີ້ຢູ່ ນີ້ແລ້ວ
ພໍ່ແມ່ເອົາເຊື່ອງໄວ້ ຈຶ່ງຍັງຄ້າງບໍ່ຕາຍ
ແຕ່ວ່າພະພີເຈົ້າ ມາແຕ່ເມືອງໃດ
ເຈົ້າຈຶ່ງເດີນຈອນເຖິງ ທີເມືອງພາຍພີ້
ເຊີນພະຫນີໄປທ້ອນ ຢ່າດົນຊ້າຢູ່
ຢ້ານແຕ່ຣຽງໃຫ່ຍຮ້າຍ ເຫັນເຈົ້າຈັກກິນ ບໍ່ຢ່າແລ້ວ
ສັງຂີມາຕາຍຍ້ອນ ດອນຮຽນເສຍເປົ່າ
ເຊີນໃຫ້ພະພີເຈົ້າ ຫນີ້ຖອນຢ່ານານ ພີເອີຍ

ພະຍາຈຸນລະນີຈຶ່ງເວົ້າດອມນາງວ່າອ້າຍມາແຕ່ເມືອງປັນຈາ ເພື່ອຊິມາເອົານ້ອງໜີໄປໂດຍໄວ ເພາະພີເພດຮຸ້ງເອົານ້ອງຫລີກໄກພີມາແລ້ວ, ຂໍໃຫ້ນ້ອງຈຶ່ງຟ້າວອອກຈາກກອງລົງມາດຽວນີ້ ອ້າຍຈະເອົານ້ອງໜີຈາກໂພຍໄພໃນວັນນີ້, ນາງປະທຸມມາ ໄດ້ຟັງຄຳເວົ້າອັນມ່ວນຂອງພະອົງ ນາງຈຶ່ງປ່ອນໜ້າອອກຈາກກອງສ່ອງເບິ່ງຈຶ່ງໄດ້ເຫັນພະຍາຈຸນລະນີຢືນຢູ່ ນາງຈຶ່ງ ຟ້າວຄານບິນອອກຈາກກອງ ເມື່ອອອກຫວິດນາງກໍຍໍມືນົບພະຍາຈຸນລະນີທັງ ເວົ້າວ່າຂໍໃຫ້ພະອົງເອົາຂ້ານ້ອຍໜີໄປໄວໆທ້ອນ ຖ້າຫາກຢູ່ບ່ອນນີ້ດົນຈັກໜ້ອຍຜີຍັກຮຸ້ງຊິມາກິນ, ຝ່າຍພະຍາຈຸນລະນີເມື່ອໄດ້ຮູ້ດັ່ງນັ້ນຈຶ່ງຟ້າວໂອບເອົາ ນາງດ້ວຍຄວາມຖະໜອມຮັກ ເຮັດໃຫ້ນາງມີໃບໜ້າອັນຊື່ນບານຂຶ້ນ, ພະຍາ ຈຸນລະນີໄດ້ເວົ້າກັບນາງວ່າ ອ້າຍຈະເອົາຄຳກອງ ໄປເປັນຄູ່ ອ້າຍແມ່ນ ເຊື້ອໜໍ່ຟ້າ ເມືອງໃຫຍ່ນະຄອນຫລວງທີ່ພູນ, ຈັກເອົານາງເມືອເປັນເທວີ ຢູ່ໃນໂຮງປາງແກ້ວ ບ້ານເມືອງຂອງອ້າຍສະໜຸກສະບາຍບໍ່ມີໂພຍໄພແນວໃດ.

ພະຍາຈຸນລະນີຈຶ່ງເອົານາງຂຶ້ນຂີ່ມ້າແລ່ນອອກຈາກບໍລິເວນພະລາຊະ ວັງ ນາງປະທຸມມາແນມເບິ່ງຜາສາດດ້ວຍຄວາມອາໄລອາວອນ ທັງຄິດເຖິງພໍ່ແມ່ບໍ່ຮູ້ວ່າເປັນຕາຍຮ້າຍດີແນວໃດ, ຄວາມສະທ້ອນໃຈອັນນີ້ເຮັດໃຫ້ນາງນ້ຳ ຕາໄຫລອາບໜ້າ.

ພະຍາຈຸນລະນີໄດ້ພານາງເຂົ້າປ່າຜ່າດົງ ໄປໜ້າເລື້ອຍໆຈົນກາຍ ຂອບເຂດຂອງເມືອງຈັກຂິນ ແຕ່ທັງສອງກໍຍັງຂີ່ມ້າແລ່ນໄປບໍ່ຢຸດບໍ່ເຊົາ, ຂະນະ ທີ່ເດີນທາງຢູ່ນັ້ນພະຍາຈຸນລະນີກໍໄດ້ເວົ້າກັບນາງວ່າ ທີ່ຜາສາດລາຊະມົນທຽນຂອງອ້າຍກໍຄືດຽວກັບທີ່ຜາສາດລາຊະມົນທຽນຢູ່ໃນເມືອງຂອງນ້ອງນັ້ນແຫລວ ອ້າຍຈັກເອົານາງເມືອຢູ່ຫ້ອງທີ່ຄຳແສງພີ ຝູງພີ່ນ້ອງຊິ ເປັນໄທ້ຫ່ອງຫຽວ.

ຝ່າຍນາງຄຳກອງ (ປະທຸມມາ) ໄດ້ຍິນພະອົງເວົ້າແນວນັ້ນກໍມີຄວາມປິຕິຊົມ

ຊື່ນທັງຍິ້ມແຍ້ມແຈ່ມໃສ, ແຕ່ຈະນອໃດກໍຕາມພະຍາຈຸນລະນີກໍຍັງພານາງເດີນດົງດົ້ນປ່າໄປເລື້ອຍຈົນເຖິງທີ່ແຫ່ງໜຶ່ງຈຶ່ງໄດ້ພານາງພັກເຊົາຫລັບ ນອນ ໂດຍເອົາໃບໄມ້ເຮັດຕ່າງສາດປູນອນ, ແຕ່ທັງສອງກໍມີຄວາມສຸກໃຈຫາ ສິ່ງໃດປຽບປານບໍ່ໄດ້ ເພາະວ່າທັງສອງໄດ້ນອນຮ່ວມກັນ, ຂອນແຈ້ງສຽງໄກ່ປ່າຂັນສະນັ່ນດົງບໍ່ພໍ ດາວແສງອາລຸນວັນໃໝ່ກໍແຍ້ມຍາມອອກອາບໂລກທັງ ສອງຈຶ່ງລຸກສ່ວາຍໜ້າແລ້ວກໍພາກັນກິນເຂົ້າຮອງທ້ອງແລ້ວກໍອອກເດີນທາງຕໍ່ ໄປ ເທວະດາຜູ້ຄອຍປົກປັກຮັກສາຈຶ່ງໄດ້ຫຍໍ້ທາງໃຫ້ສັ້ນເຂົ້າ, ອັນນີ້ກໍເປັນຍ້ອນສົມພານຂອງພະອົງແລະນາງແຕ່ປາງກ່ອນ ຈຶ່ງບັນດົນໃຫ້ພະອົງເຂົ້າສູ່ເມືອງພະອົງເສີ່ງມ້າແລ່ນຜ່ານປ່າດົງພົງໄພມາເປັນເວລາຫລາຍວັນກໍຈຶ່ງມາເຖິງ ປ່າໃກ້ຕົວເມືອງ.

ພໍເຖິງເຂດເມືອງພວກເສນາອຳມາດແນມໄປເຫັນພະອົງຂີ່ມ້າຊ້ອນ ກັບນາງປະທຸມມາຫລືຄຳກອງຈຶ່ງຟ້າວແລ່ນໄປຕ້ອນ, ຝ່າຍພະຍາຈຸນລະນີ ເຫັນເສນາອຳມາດແລ່ນໄປຕ້ອນກໍຢຸດມ້າລໍຖ້າ. ເມື່ອພວກເສນາອຳມາດແລ່ນ ຫຸ້ມມາໃສ່ພະອົງແລ້ວ ກໍພາກັນຈົ່ມວ່າ ພວກຂ້ານ້ອຍຄິດວ່າພະອົງເສຍຊີວິດແລ້ວ ຫາທາງໃດກໍບໍ່ພົ້ນ ບັດນີ້ໄດ້ເຫັນໜ້າພະອົງພໍປານວ່າຕາຍແລ້ວເກີດໃໝ່. ພະອົງຫາກມີໂຊກພ້ອມໄດ້ເຫວີມາທຽມຜ່າງຕື່ມອີກ.

ພະຍາຈຸນລະນີໄດ້ກ່າວກັບເສນາອຳມາດວ່າເຮົາເອງໄດ້ພັດພາກຈາກເສນາອຳມາດຫລົງໄປໄກແສນໄກ ໄປກົກຮອດເມືອງໜຶ່ງແຕ່ວ່າໃນເມືອງນັ້ນຄົນຕາຍໝຸດໝອດ ເຮົາຈຶ່ງເອົາຍອດແກ້ວແພງໄວ້ທີ່ກອງ ເມື່ອເຮົາເຂົ້າໄປໃນ ຫໍຜາສາດແລະໄດ້ພົບນາງແລ້ວກໍຈຶ່ງຟ້າວພານາງໜີມາ. ແຕ່ດ້ວຍບຸນຄຸນຈຶ່ງ ມີເທວະດາມາຊ່ວຍຈຶ່ງໄດ້ມາຮອດບ້ານຮອດເມືອງເຮົາພໍ້, ບັນດາເສນາ ອຳມາດເມື່ອໄດ້ຮູ້ດັ່ງນັ້ນຕ່າງກໍມີຄວາມຊົມຊື່ນຍິນດີດອນພະອົງ.

ບໍ່ຊ້າພວກເສນາອຳມາດກໍເຕືອນກັນຕົກແຕ່ງຄາດຊ້າງ ຄານ້າແລ້ວກໍເຊີນທັງສອງຂຶ້ນເທິງຫລັງຊ້າງ, ຈາກນັ້ນກໍພາກັນແຫ່ແຫນແພນກັ້ງເຂົ້າສູ່ ເມືອງຂະບວນແຕ່ໄດ້ຂ້າມປ່າດົງພົງໄພຫລາຍຍ່ານຈຶ່ງເຂົ້າເຖິງເມືອງປັນຈາ ນະຄອນ. ພະຍາຈຸນລະນີແນມເຫັນເມືອງຂອງຕົນກໍມີຄວາມປິຕິຊົມຊື່ນຈຶ່ງ ບອກນາງປະທຸມມາຫລືວ່າ ຄຳກອງແນມເບິ່ງວິວທິວທັດອັນສວຍງາມຂອງ ເມືອງແລະຍອດຜາສາດທີ່ພະຍາຈຸນລະນີເຄີຍໄດ້ທິ້ງປະທັບ, ພໍຂະບວນເຂົ້າເຖິງຕົວເມືອງ ພວກຊາວເມືອງໃພ່ງກໍມາຮັບມາຕ້ອນທັງສະແດງຄວາມດີອົກດີໃຈ ທີ່ໄດ້ເຫັນພະອົງໄດ້ພູ້ຍິງທີ່ສວຍງາມມານຳ.

ນາງອັກຄີພູ້ເປັນເມຍກໍມາຮັບພະອົງດ້ວຍຄວາມປິຕິຍິນດີທີ່ໄດ້ພົບພະ ອົງເພາະນາງເຄີຍຄິດພູ້ດຽວວ່າຊາດນີ້ຄົງບໍ່ໄດ້ພົບພະອົງອີກ, ພະຍາຈຸນລະນີໄດ້ເລົ່າເຖິງເຫດການທີ່ເກີດຂຶ້ນວ່າ ກ່ອນທີ່ຈະຫລົງກັບເສນາອຳມາດນັ້ນ ຍ້ອນໄດ້ໄລ່ຕິດຕາມກວາງຄຳໄປ, ໃນທີ່ສຸດກໍຕົກໄປເຖິງເມືອງແຫ່ງໜຶ່ງ ເມືອງນີ້ມີພະຍັກຮຸງລົງມາກິນຊາວເມືອງຕາຍຫມົດ, ຍັງແຕ່ນາງຄຳກອງພູ້ດຽວເຊິ່ງ ພໍ່ແມ່ໄດ້ເອົາເຊື່ອງໄວ້ໃນກອງ ເມື່ອອ້າຍໄປເຫັນຈຶ່ງພານາງຫນີມາຈົນ ເຖິງເມືອງຂອງເຮົາພ.

ນາງອັກຄີກໍບອກວ່ານາງຢູ່ທາງເມືອງພໍ່ກໍຮ້ອງໄຫ້ຄິດເຖິງພະອົງບໍ່ ຂາດຄິດວ່າຈະບໍ່ໄດ້ພົບພະອົງອີກແລ້ວ ບັດນີ້ບຸນຫລາຍສາຍຍາວຈຶ່ງໄດ້ພົບກັບ ພະອົງ.

ຝ່າຍພະຍາຈຸນລະນີນັ້ນ ເມື່ອໄດ້ໂອ້ລົມກັບນາງອັກຄີແລະເສນາອຳ ມາດຕະຫລອດທັງຊາວເມືອງທີ່ມາຮັບມາຕ້ອນແລ້ວ, ຈາກນັ້ນພະອົງກໍສັ່ງໃຫ້ ເສນາອຳມາດພາກັນປຸກທີ່ປຸກໂຮງຂຶ້ນຫລັງໜຶ່ງ. ເພື່ອໃຫ້ເປັນທີ່ພັກອາໃສ ຂອງນາງຄຳກອງ. ພາຍຫລັງເສນາອຳມາດສ້າງທີ່ຜາສາດສຳເລັດເປັນທີ່ ຮຽບ

ຮ້ອຍແລ້ວ ຈຶ່ງຂາບທູນໃຫ້ພະຍາຈຸນລະນີໄດ້ຮູ້, ກ່ອນທີ່ຈະແຫ່ນາງຄຳກອງຂຶ້ນສູ່ທີ່ພາສາດນັ້ນ ພະອົງກໍໄດ້ສັ່ງໃຫ້ຈັດພິທີສົບງັນຢ່າງມ່ວນຊື່ນ ຈົນເຖິງເວລາລຶກງານຍາມດີ ຈຶ່ງໄດ້ແຫ່ແຫນແພນກົ້ງນາງຄຳກອງໄປສູ່ພາສາດຫລັງໃຫ່ມ ໂດຍມີນາງອັກຄີເມຍຫລວງນຳຫນ້າ ພາທາງທັງສອງປະດັບເອີ້ຍອງ ດ້ວຍເຄື່ອງສ້ອຍສັງວານອັນຈິບງາມ ເປັນທີ່ຕ້ອງຕາຕຳໃຈຂອງຜູ້ໄດ້ພົບເຫັນ ດັ່ງບົດກອນຂຽນວ່າ:

ອັນວ່າສາວສະຫນົມນ້ອຍ ພີພັນແຫນແຫ່
ເຖົ້າແກ່ພ້ອມ ແຫນເຈົ້າສູ່ໂຮງ
ອັນວ່າເທວີແກ້ວ ອັກຄີອອກກ່ອນ
ສອງແຈ່ມເຈົ້າ ນາງນ້ອຍຍ່າງຕາມ
ອິລະໃຫ່ມຫນ້າ ນາງນາດຄຳກອງ
ນາງກໍທົງສັງວານ ເຄື່ອງຄຳປະສົງຢ້ອງ
ດູງາມພ້ຽງ ສາວສະຫວັນວິມານເມກ
ອົງເອກເຈົ້າ ອັກຄີເຫຼົ້າກໍດັ່ງດຽວ ເຈົ້າເອີຍ

## 8. ນາງອັກຄີແລະນາງປະທຸມມາປາຖະໜາ ເອົາລູກມາເກີດ.

ນັບຕັ້ງແຕ່ພະຍາຈຸນລະນີໄດ້ນາງຄຳກອງຜູ້ມີຮູບຮ່າງອັນໂສພາມາເປັນມະເຫສີແລ້ວ ທຸກຄືນພະອົງຈະໄປຫາແຕ່ນາງຄຳກອງ ບໍ່ຄ່ອຍເອົາຫົວຊາຕໍ່ນາງອັກຄີເນຍຫລວງພໍປານໃດ, ເຖິງແມ່ນນາງຄຳກອງຈະໄດ້ຢູ່ສຸກສະບາຍ ຫາຍຈາກໂພຍໄພກໍຈິງ ແຕ່ນາງກໍຍັງຄຶດຮອດຫາພໍ່ແລະແມ່ຢູ່ສະເໝີ ນາງໄດ້ ໄຕ້ທູບທຽນບູຊາໄຫ້ວອນເຖິງຄຸນພໍ່ແມ່ ຈຶ່ງມາປົກປັກຮັກສາ, ເທົ້າທີ່ນາງ ໄດ້ລອດອອກຈາກປາກພິຮຸງໄດ້ມີຜູ້ພາໜີນັ້ນ ກໍເປັນດ້ວຍບຸນຄຸນຂອງພໍ່ແລະ ແມ່ເຫລືອນາງຈຶ່ງໄດ້ມາເປັນມະເຫສີແຫ່ງພະຍາເມືອງນີ້.

ນາງຄຳກອງບໍ່ພຽງແຕ່ມີຮູບງາມ, ນາງຍັງເປັນຜູ້ມັກກິນມັກທານທຸກ ເຊົ້າຄ່ຳນາງກໍຈະແຕ່ງທານເປັນປະຈຳຈົນຊາວເມືອງໄດ້ເອົາເປັນຕົວຢ່າງ ແລະເລື່ອງນີ້ກໍເຮັດໃຫ້ພະຍາຈຸນລະນີມີຄວາມປີ້ມປິຕິຍິນດີຕໍ່ນາງທີ່ຮູ້ຈັກກິນທານຢາດນ້ຳທຸກເຊົ້າຄ່ຳວັນຄືນ.

ນັບແຕ່ພະຍາຈຸນລະນີກັບມາສະເຫວີຍລາດບ້ານເມືອງກໍນັບເປັນເວລາດົນນານ, ເຖິງແມ່ນພະອົງຈະມີມະເຫສີຄືນາງອັກຄີ ແລະນາງຄຳກອງກໍຈິງ. ແຕ່ພະອົງກໍຍັງບໍ່ມີລູກຍິງລູກຊາຍໄວ້ສືບເຊື້ອແທນແນວເຄືອ, ພະອົງຄຶດແລ້ວ ຄຶດອີກເພາະພະອົງເອງກໍນັບມື້ຈະເຖົ້າແກ່ຊະລາການໄປເລື້ອຍໆແລະຄົນກໍຈະນິນທາວ່າບໍ່ດີບໍ່ມີຜູ້ສືບແທນ, ພະອົງຄຶດໄດ້ວ່າຄວນຈະໄຫ້ວອນເທວະດາ ອິນ

ພົນຈິດຊົ່ວ ແລະ ຄວນໃຫ້ມະເຫສີທັງສອງພາກັນຮັກສາສີນ 5 ບໍ່ໃຫ້ຂາດ.

ເມື່ອຄິດໄດ້ດັ່ງນັ້ນຈຶ່ງສັ່ງໃຫ້ນາງອັກຄີແລະນາງຄຳກອງເຂົ້າໄປເຝົ້າດ່ວນ ເມື່ອມະເຫສີທັງສອງເຂົ້າເຝົ້າພະອົງຈຶ່ງເວົ້າວ່າ ດູລາສອງສີເອີຍຄ່ອຍ ຟັງເປີເຈົ້າ ເຮົາກໍທົ່ງເມືອງສາງເນົານານຫລາຍຂວບມາແລ້ວ. ອ້າຍເອງ ຈົມຊ້ອນນາງທັງສອງແຕ່ກໍບໍ່ມີລູກເຕົ້າແນວເຊື້ອສືບແທນຄັນວ່າເຮົາຕາຍ ແລ້ວກໍບໍ່ມີຜູ້ໃດຈະປົກຄອງໄພ່ຟ້າປະຊາກອນ ຈຶ່ງຂໍໃຫ້ທັງສອງຈົ່ງພາກັນປາ ຖະໜາເອົາລູກມາເກີດດອມດັ່ງບົດກອນຂຽນວ່າ :

ໜູນນາງຈົ່ງຕັ້ງ ປາຖະໜາເອົາລູກ
ຢ່າໃຫ້ເສັຽຊາດເຊື້ອ ແນວທ້າວສືບເມືອງ ພີ້ຖອນ
ຫລອນວ່າບຸນເຄີຍໄດ້ ບຸດຕາຕົນປະເສີດ
ເກີດມາແໜນຊາດເຊື້ອ ພາຍໜ້າຮຸ່ງເຮືອງ ບໍ່ຮູ້

ພໍແຕ່ພະອົງບອກດັ່ງນັ້ນແລ້ວ, ນາງອັກຄີແລະນາງຄຳກອງກໍພາກັນຍິນສາທຸ ພ້ອມທັງຂາບລາລົງກັບຄືນສູ່ຜາສາດແຫ່ງຕົນ. ສ່ວນວ່ານາງອັກຄີເມື່ອເຖິງ ທີ່ຜາສາດແຫ່ງຕົນແລ້ວກໍຢູ່ຢ່າງສະບາຍ. ສຳລັບນາງຄຳກອງນັ້ນພໍກັບເຖິງທີ່ຜາສາດກໍສັ່ງໃຫ້ສາວສະໜົມຫາດອກໄມ້ທູບທຽນໃສ່ຂັນໄປໃຫ້, ພໍຕາເວັນຄ່ຳມືດ ນາງກໍເຂົ້າສູ່ຫ້ອງໄຕ້ທູບທຽນບູຊາພ້ອມທັງສຳມະທານຕັ້ງສັດຕະນັງເປັນ ທີ່ເພິ່ງ ແລະໄຫວ້ວອນເຖິງເທພາທຸກແຫ່ງຂໍໃຫ້ອິນທະລາດທ້າວຄວງຟ້າພໍ່ຄອຍ ດັ່ງບົດກອນຂຽນວ່າ :

ຂ້ານເປັນກຳພ້າ ພັດພາກເມືອງມາ
ບິດາທັງມານດາ ເຜົ່າພົງຕາຍສ້ຽງ
ຍັງແຕ່ຄົນດຽວຂ້າ ຄົນດຽວທຸກຍາກ
ບັດນີ້ຂ້າກໍຂໍລູກນ້ອຍ ແນວທ້າວເກີດດອມ ແດ່ຖອນ

ເມືອໄດ້ຮັບຄຳໄຫ້ວວອນຂອງນາງຄຳກອງແລ້ວ ພະອິນຈຶ່ງສັ່ງໃຫ້ເທ ພະບຸດ 4 ພີ່ນ້ອງກຽມຕົວລົງເກີດໂດຍບອກວ່າຜູ້ເປັນແມ່ຂອງພວກເຈົ້າທັງ 4 ຄອຍຖ້າຢູ່ເມືອງມະນຸດພຸ້ນ, ອັນວ່າເທພະບຸດ 4 ພີ່ນ້ອງໄດ້ຮັບຄຳສັ່ງດັ່ງ ນັ້ນ ກໍກຽມຕົວຈະລົງເກີດໃນໂລກມະນຸດ, ກ່ອນທີ່ຈະລົງມາທັງ 4 ໄດ້ທູນຂໍຕໍ່ ພະອິນວ່າພະອົງຜູ້ມີຫູທິບຕາແກ້ວ ຈຶ່ງໄດ້ຫລິງລ່ຳຢ້ຽມຝູງຂ້າຢ່າໄລພະ ເອີຍ ຝ່າຍພະອິນຈຶ່ງບອກວ່າຈະຄອຍຕິດຕາມ, ຈຶ່ງພ້ອມກັນລົງໄປເກີດເສຍ ເຖີນ ຄັນວ່າໝົດເວນຮ້ອນຝູງບາບເວລັງຫາກຈັກຍັງນຳຊູຮຸ່ງເຮືອງເມືອໜ້າດອກ ນາ.

ແຕ່ນັ້ນເທພະບຸດທັງສີ່ຈຶ່ງໄດ້ຈຸດຕິຈາກຊັ້ນຟ້າຟາວລົງສູ່ໂລກມະນຸດ, ທັງ 4 ພີ່ນ້ອງໄດ້ເວົ້ານຳກັນວ່າ ເຮົາຈຶ່ງເອົາຜ້າແພມັດພວກເຮົາຕິດກັນໄວ້ ຢ່າໃຫ້ໄດ້ພັດພາກຈາກກັນເລີຍ ແລະຂໍໃຫ້ໄດ້ໄປເກີດໃນທ້ອງແມ່ດຽວກັນ ແມ່ນວ່າທຸກຍາກລຳບາກແນວໃດກໍພ້ອມກັນທຸກພ້ອມກັນແກ້ໄຂ. ຈາກນັ້ນກໍພາກັນລົງສູ່ໂລກມະນຸດມຸ່ງໜ້າສູ່ບ່ອນທີ່ພວມມີການໄຕ້ທຽນໄຕ້ບູຊາຢູ່ນັ້ນ, ທັງ4 ລົງເຖິງເມືອງປັນຈາແລ້ວກໍແຍງສູ່ທີ່ພາສາດແນມເຫັນແສງທຽນໄຕ້ຮຸ່ງຢູ່ ກໍເຂົ້າໃຈໂລດວ່ານັ້ນຄື ຜູ້ທີ່ຈະເປັນແມ່ຂອງພວກຕົນ.

ກ່າວເຖິງນາງຄຳກອງເຊິ່ງພວມຫລັບນອນຢູ່ນັ້ນ ນາງໄດ້ຝັນວ່າ ພະລືສີເຈົ້າທົງຫຳວິເສດ ສະເດັດມາຫາມີຖືແກ້ວມະນີໂຊດດວງອາດ 4 ໜ່ວຍພ້ອມສີເຫລື້ອມຕ່າງກັນດັ່ງບົດກອນຂຽນວ່າ:

ລູກໜຶ່ງສີຂາວພ້ຽງ ດວງດາວສຸດທີ່ຍິ່ງ
ລູກ ໜຶ່ງສີຫລາກເຫລື້ອມ ດູເຂັ້ມສ່ອງໃສ
ລູກໜຶ່ງນັ້ນ ສີແດງປັດຂອດ
ລູກໜຶ່ງນັ້ນ ລາຍເຫລື້ອມຜ່ອງໃສ

ອັນວ່າລືສີເຈົ້າ ຕົນບຸນຍໍຍື່ນ
ເອົາໜ່ວຍແກ້ວ ຍໍໃຫ້ແກ່ນາງ
ຝັນວ່ານາງຄານໄດ້ ຍິນດີຊົມຊື່ນ
ນາງກໍໄດ້ໜ່ວຍແກ້ວ ຫອບໃສ່ໃນອົກ
ນາງຄານເລີຍ ລວດກືນກິນແກ້ວ
ພໍຄາວແລ້ວ ເລີຍຝັນໄປໃໝ່
ຝັນວ່າໄສ້ພູ້ທອງ ໄຫລມ້າງອອກມາ
ຝັນເຫັນສຸນັຂ ຮ້າຍ ໝາດຳຕົວຖ່ອຍ
ມັນກໍເລີຍຄາບແກ້ວ ທັງໄສ້ອອກໜີ
ຝັນວ່ານາງຄານນ້ອຍ ກົ້ງເກື້ອນຕິຫວງ
ອັນວ່ານາງຄານຕົກ ຈາກທີ່ປາງແກ້ວ
ເລີຍຈົມເຂົ້າ ທໍລະນີເນົາຢູ່
ມືດສີດ້ານ ບໍ່ມີຮູ້ແຫ່ງໃດ
ດູນານລ້ຳ ພໍຄາວອິດອ່ອນ
ນາງຈຶ່ງຝັນເຫັນອິນທ່ອນທ້າວ ໄປເຍືອງໄຕ້ສ່ອງຍານ
ແລ້ວຈຶ່ງຝັນເຫັນລືສີເຈົ້າ ຕົນບຸນຍອດຍິ່ງ
ມາຫອບອຸ້ມ ເອົາຂຶ້ນບ່ອນດີ
ຝັນວ່າທົງແທ່ນແກ້ວ ໃສ່ສ່ອງປາງທອງ
ຝູງໝູ່ສາວສະໜົມນຳ ນັ່ງເມືອງພໍລ້ານ

ພໍແຕ່ນາງຕື່ນຂຶ້ນກໍມີຄວາມຮູ້ສຶກຢ້ານກົວໃນລາງຝັນນາງຈຶ່ງຍໍມືໄຫວ້ ອິນພົມເທວະລາດ, ພໍແຈ້ງມານາງກໍຂຶ້ນໄປແກ້ ຄຳຝັນສູ່ພະຍາຈຸນລະນີຟັງ, ຝ່າຍພະຍາຈຸນລະນີໄດ້ຟັງດັ່ງນັ້ນກໍມີຄວາມຊົມຊື່ນຍິນດີແລະອວຍພອນໃຫ້ນາງມີອາ

ຍຸທນັ້ນຂວັນຍືນພະອົງບອກວ່າຝັນແນວນີ້ນາງຈະໄດ້ລູກນ້ອຍຜູ້ປະເສີດມາເກີດກັບອີກ ຄຳກອງເອີຍຈຶ່ງຈຳເລີນສິນແກ້ວ, ຖ້າຫາກນ້ອງເກີດລູກເປັນຜູ້ ຊາຍອ້າຍຈະມອບບ້ານເມືອງໃຫ້, ເມື່ອນາງຄຳກອງໄດ້ຍິນດັ່ງນັ້ນກໍມີຄວາມປີຕິຍິນດີຫາອັນປຽບບໍ່ໄດ້.

ຍ້ອນກ່າວເຖິງນາງອັກຄີຜູ້ເປັນເມຍຫລວງ, ນາງກໍຫາດອກໄມ້ທູບ ທຽນແຕ່ງເປັນຂັນ 5 ໄຫວ້ວອນເຖິງເທພາທຸກແຫ່ງຂໍໃຫ້ມາລ່ຳມາຫລິງ, ນາງໄດ້ອະທິຖານວ່າ ຂ້ານີ້ແມ່ນເປັນເອກມະເຫສີເປັນຫນໍ່ເຊື້ອແຫ່ງເມືອງນີ້ມາ ຊ້ານານ, ສ່ວນນາງຄຳກອງນັ້ນເປັນເມຍນ້ອຍ ຂໍໃຫ້ເທບພະເຈົ້າຈົ່ງຊ່ວຍຊູ ໃຫ້ໄດ້ຜູ້ມີລິດມີເດດມາເກີດດອມຜູ້ຂ້າແດ່ທ້ອນ, ສຳລັບນາງຄຳກອງນັ້ນຢ່າໃຫ້ໄດ້ລູກຊາຍຍິງມາເກີດນຳເດັດຂາດ ມັນຈັກເປັນອັນຕາຍໄພ່ເມືອງທັງຄ້າຍຫາກຂ້ານ້ອຍໄດ້ລູກຜູ້ປະເສີດມາເກີດນຳຈະເອົາງົວຄວາຍເບິກພະລີຄຸນ ເຈົ້າ (ເອົາງົວຄວາຍບູຊາເປັນການຕອບແທນຄຸນ) ຝູງເທພະເຈົ້າໄດ້ຍິນຄຳ ໄຫວ້ວອນຂອງນາງອັກຄີແລ້ວຕ່າງກໍຫົວຂວັນແລະກໍບໍ່ມີເທພະອົງໃດຈະມາ ເກີດດອມ, ທັງນີ້ເນື່ອງຈາກພະອິນສ່ອງຫລິງເຫັນວ່າ ນາງອັກຄີນີ້ນເປັນຄົນຍາບຈະເປັນຜູ້ບັງບຽດຫນໍ່ພຸດໂທໃນຕໍ່ຫນ້າ.

## 9. ນາງອັກຄີເອົາໜາມມາປ່ຽນສີກຸມມານ.

ເມື່ອນາງອັກຄີຮູ້ວ່າຕົນເອງບໍ່ສາມາດຈະມີລູກໄດ້ແລະຮູ້ວ່ານາງຄຳກອງ ພວມຖືພາ ນາງຈຶ່ງເຮັດໃຫ້ນາງອັກຄີເປັນຮ້ອນໆໜາວໆປານວ່າສ້ຽນສຽບໃຈເອົາໂລດ, ນາງອັກຄີຄຶດໃນໃຈວ່າ ຄາວນີ້ກູຈະເປັນຄົນຖ່ອຍຖ້ານໂຍໂສຊາດຕ່ຳເສຍແລ້ວ. ນາງຄຶດວ່າຈັກເຮັດແນວໃດໜໍຈຶ່ງຈະດີ ເພາະກົວວ່າຄວາມລັບຈະຖືກເປີດເຜີຍແລ້ວ ໂທດກຳຈະສະໜອງພາຍຫລັງ, ນາງຄຶດວ່າຈະໄປຊອກຈ້າງໝໍຢາມາຂ້າລູກໃນທ້ອງຂອງນາງຄຳກອງ.

ເມື່ອຄຶດໄດ້ດັ່ງນັ້ນ ນາງອັກຄີກໍນຳເອົາເງິນຄຳເຂົ້າຂອງເສື້ອຜ້າ ອາພອນ ແຈກຢາຍໃຫ້ບັນດາສາວສະໜົມທັງຫລາຍ, ພວກສາວສະໜົມກໍພາກັນດີໃຈທີ່ໄດ້ຮັບຂອງແຈກຂອງທານຈາກນາງອັກຄີ, ໃນເວລາຕໍ່ມານາງອັກຄີ ກໍຂຶ້ນໄປຫານາງຄຳກອງຢູ່ເທິງພະຜາສາດທຳທ່າສະແດງຄວາມປິຕິຍິນ ດີດອນນາງຄຳກອງທີ່ໄດ້ຖືພາຕາທ້ອງຈະໄດ້ລູກມາສືບເຊື້ອແທນແນວ, ທັງເວົ້າ ວ່ານ້ອງນີ້ກໍດີເອື້ອຍມີທີ່ແຫລະຈະໄດ້ເພິ່ງພາອາໄສເຊິ່ງກັນແລະກັນການທີ່ນ້ອງແລະເອື້ອຍໄດ້ມາຢູ່ຮ່ວມກັນນີ້ກໍຍ້ອນບຸນກຸສົນແຕ່ປາງກ່ອນນ້ອງເອີຍ. ສ່ວນລູກທີ່ຈະເກີດມານັ້ນນ້ອງກໍບໍ່ຕ້ອງຮ້ອນເລືອງຫຍັງໝົດເອື້ອຍຈະຮັບພາລະ ລ້ຽງດູເປັນຢ່າງດີ, ສຳລັບສາວສະໜົມຮັບໃຊ້ນັ້ນໂຮງເອື້ອຍກໍຄືໂຮງນ້ອງນັ້ນເອງ.

ສ່ວນນາງຄຳກອງເປັນຄົນສັດຊື່ຈຶ່ງເວົ້າວ່າດີແລ້ວເອື້ອຍເອີຍ, ນ້ອງນີ້ ກໍ

ເປັນກຳພ້າກຳພອຍພາກບ້ານພາກເມືອງ ອັນໃດຊິຈິບຊິດີຈຶ່ງສັ່ງສອນ ເອົາ ນ້ອງແນ່ເອື້ອຍເອີຍ, ຝ່າຍນາງອັກຄີຜູ້ໃຈບາບຈຶ່ງບອກສາວໃຊ້ຢູ່ໂຮງວ່າ ສູທັງຫລາຍຈຶ່ງພາກັນບົວລະບັດຄຳກອງນ້ອງຮັກຂອງກູໃຫ້ດີຢ່າໃຫ້ມີຄວາມທຸກຮ້ອນເດືອງໃຈອັນໃດ, ສູທັງຫລາຍຈຶ່ງພາກັນໄປຫາກູຢູ່ທີ່ຜາສາດຂອງກູ ເພື່ອວ່າກູຈະເອົາລາງວັນໃຫ້ສູ່ຄົນ.

ຕໍ່ມາຊຸມສາວໃຊ້ກໍພາກັນໄປຫານາງອັກຄີຢູ່ທີ່ຜາສາດ, ນາງອັກຄີຈຶ່ງ ໄດ້ມອບເຄື່ອງຂອງຕ່າງໆໃຫ້ນັບແຕ່ເສື້ອຜ້າອາພອນແລະເຄື່ອງປະດັບເອ້ ຢ້ອງ ແມ່ນແຕ່ສາວໃຊ້ປະຈຳຂອງນາງຄຳກອງ, ນາງອັກຄີກໍໄດ້ໃຫ້ວັດຖຸເຄື່ອງຂອງຄືກັນ, ຫລາຍມື້ຕໍ່ມານາງອັກຄີຈຶ່ງເວົ້າກັບພວກສາວໃຊ້ວ່າຖ້າຫາກພວກສູ ທັງຫລາຍຟັງຄວາມກູ, ກູຈັກຫາບເງິນຄຳໃຫ້ຕື່ມອັນເງິນຄຳກູນັ້ນມີບໍ່ອຶດບໍ່ຢາກ ຂໍແຕ່ສູຟັງຄວາມກູແມ່ນເອົາໃຫ້ໂລດ.

ເມື່ອສາວໃຊ້ພາກັນຮັບປາກແລ້ວ ນາງອັກຄີຈຶ່ງບອກຄວາມໃນໃຈສູ່ຟັງວ່ານາງເອງມີຄວາມບໍ່ພໍໃຈກັບນາງຄຳກອງ ນັບຕັ້ງແຕ່ມື້ນາງມາເປັນເມຍນ້ອຍຂອງພະຍາຈຸນລະນີ, ຜ່ານມາພະອົງກໍຮັກແຕ່ນາງຄຳກອງໝ່າຍຊົງ ເມຍຫລວງແລະອີກປະການໜຶ່ງນາງຄຳກອງກໍໄດ້ຖືພາເມື່ອລູກເກີດມາກໍຈະ ໄດ້ເປັນໃຫຍ່ເປັນໂຕ ເປັນຜູ້ສືບບ້ານແທນເມືອງ, ພະຍາຈຸນລະນີກໍແຮ່ງຈະ ຮັກນາງຄຳກອງຂຶ້ນຕື່ມ ເຮົາເອງຜູ້ເປັນເມຍຫລວງກໍຈະຕົກຕ່ຳຊ້າໄປ. ດັ່ງ ນັ້ນຂໍໃຫ້ທຸກຄົນຈົ່ງຊ່ອຍເຮົາໃນຄາວນີ້ ເຮົາຄິດຈະຂ້າລູກໃນທ້ອງຂອງນາງຄຳກອງໃຫ້ຕາຍເສຍ. ປາກົດວ່າສາວໃຊ້ທັງຫລາຍມີຄວາມຍິນດີດອມນາງອັກ ຄີເພາະວ່າເຂົາຫາກໄດ້ຄ່າຈ້າງລາງວັນຈຶ່ງລືມບາບເວນ.

ຝ່າຍນາງອັກຄີເມື່ອໄດ້ໂອກາດດີແນວນີ້ແລ້ວຈຶ່ງເວົ້າຄຳນ້ອຍນຳຊຸມ ສາວໃຊ້ວ່າ ເລື່ອງນີ້ຖືເປັນຄວາມລັບແທ້ໆເດີ. ຈາກນັ້ນນາງອັກຄີຈຶ່ງບອກຊຸມສາວ

ໃຊ້ວ່າໃຫ້ໄປຊອກເອົາລູກໝາເກີດໃຫມ່ນຳຊາວບ້ານມາໃຫ້ເຂົາຈະ ຂາຍທີ່ໃດກໍຈະຊື້ ແລະບອກເຈົ້າຂອງໝານອຳຊ່ວຍພ້ອມ. ເມື່ອໃດຮອດກຳນົດ 10 ເດືອນນາງຄຳກອງຈະເກີດລູກ ສູຈຶ່ງພ້ອມກັນໄປໂຮງນາງຄຳກອງແລະ ໃຫ້ຫາໄຫນ້ຳໃຫ່ຍມີຝາອັດໄປນຳພ້ອມ ເພື່ອວ່າກູຈະເອົາລູກຂອງນາງຄຳ ກອງເຂົ້າໃສ່ໄຫແລ້ວພວກສູຈຶ່ງຟ້າວເອົາໄປໄຫລລ່ອງນ້ຳທັນທີແລະພ້ອມດຽວກັນກໍຟ້າວເອົາລູກໝາມາປ່ອນແທນ, ກູເອງກໍຈະພະຍາຍາມເວົ້ານຳນາງຄຳກອງ ເພື່ອວ່າຈະໄດ້ເອົາຜ້າມັດຕານາງບໍ່ໃຫ້ເຫັນລູກທີ່ເກີດມາ.

ຍ້ອນກ່າວເຖິງນາງຄຳກອງ ນັບແຕ່ຖືພາມານມານີ້ນາງກໍບໍ່ໄດ້ເຈັບໄດ້ໄຂ້ອັນໃດ ຍ້ອນວ່າບຸນສົມພານຂອງກຸມມານທັງສີ່ທີ່ຢູ່ໃນທ້ອງຂອງນາງນັ້ນ ເອງເມື່ອຮອດກຳຫນົດ 10 ເດືອນນາງຄຳກອງກໍເຈັບປວດທ້ອງຈະປະສູດກຸມມານທັງສີ່, ດັ່ງນັ້ນພວກສາວໃຊ້ຈຶ່ງພາກັນໄປບອກນາງອັກຄີໃຫ້ຮູ້, ນາງອັກຄີ ຈຶ່ງຟ້າວໄປຫານາງຄຳກອງ.

ຝ່າຍນາງຄຳກອງແນມເຫັນນາງອັກຄີກໍດີໃຈເພາະບໍ່ໄດ້ຄິດວ່ານາງອັກ ຄີຈະຄິດຮ້າຍຕໍ່ນາງ, ນາງຄຳກອງຈຶ່ງເວົ້ານຳນາງອັກຄີດັ່ງບົດກອນຂຽນວ່າ:

ນາງກໍປາກກ່າວຕ້ານ　　ຈາຕໍ່ອັກຄີ
ອີແກ່ເທວີນາງ　　ແມ່ເມືອງເປັນເຈົ້າ
ປົວເອົາຂາ　　ຄືນພອຍປາງຍາກ
ຂ້ານພັດພາກບ້ານ　　ບໍ່ມີເຊື້ອຍ່າຍາຍ
ແຕ່ນັ້ນອັກຄີຜູ້　　ປາປັ້ງຄືນຖ່ອຍ
ເລີຍກ່າວຕ້ານ　　ຖະແຫລງຖ້ອຍມ່ວນຫູ
ດູລານ້ອງ　　ຄຳກອງສະເຫນີເນກ ພີ່ເອີຍ
ພີ່ບໍ່ລະວິເສດນ້ອງ　　ນາງແກ້ວທີ່ແພງ ພີ່ມາ

ເຈົ້ານັ້ນເນື້ອອຸ່ນກ້ຽງ ຍັງໜຸ່ມນານສາວ

ຍັງໄປ່ມິເຄີຍເຫັນ ເລືອດຍາງຈິງແທ້

ກົວຈັກມືວເນົາໜ້າ ຖືຕາມືວມິດ

ເຈົ້າຢ່າໄດ້ເພີຍແຜ່ນຜ້າ ເຫັນແໜ້ບໍ່ດີ ເຈົ້າເອີຍ

ເຈົ້າຈຶ່ງເອົາຜືນຜ້າ ຜັນຕາຫຸ້ມຕໍ່

ຜັນຕໍ່ຫຸ້ມ ຕາໄວ້ຢ່າໃຫ້ເຫັນ ນ້ອງເອີຍ

ວ່າແລ້ວນາງອັກຄີຈັບເອົາຜ້າມາຮຽນບັງຕາຂອງນາງຄຳກອງເອົາ ໄວ້ ຈາກນັ້ນຈຶ່ງບອກໃຫ້ສາວໃຊ້ກຽມໄຫໜ່ອຍໃຫ່ຍເອົາໄວ້. ພໍເມື່ອໄດ້ລືກ ງານຍານດີນາງຄຳກອງກໍປະສູດກຸມມານມີຜູ້ທຳອິດມາ ເປັນຊາຍພວກສາວໃຊ້ ກໍຟ້າວເອົາໃສ່ໄຫອັດແຈບ, ຕໍ່ມາກໍເກີດຜູ້ທີ 2-3ຊຶ່ງລ້ວນແຕ່ເປັນຊາຍຄື ກັນພວກສາວໃຊ້ກໍຟ້າວເອົາໃສ່ໃນໄຫ, ຍັງຢູ່ແຕ່ຜູ້ຫລ້ານກໍແຕ່ອອກນັ້ນເປັນ ຊາຍຄືກັນແຕ່ວ່າຜູ້ຫລ້ານັ້ນແຕ່ອອກນັ້ນທ້ອງກໍໃຫ້ສັນຍານແກ່ແມ່ດ້ວຍການໄອ, ຈາມສົ່ງສຽງຮ້ອງ ໄຫ້ເພື່ອບອກໃຫ້ແມ່ໄດ້ຮູ້ວ່າລູກທີ່ເກີດມາທັງສີ່ລ້ວນແຕ່ເປັນ ຄົນທັງໝົດ. ເມື່ອອອກຫວິດທ້ອງແມ່ພວກສາວໃຊ້ກໍເອົາໃສ່ໄຫອັດໄວ້ຄືກັນກັບ ຜູ້ເປັນອ້າຍທັງສາມ. ຝ່າຍນາງອັກຄີຈຶ່ງສັ່ງໃຫ້ເອົາໝາມາປ່ຽນທັນທີເມື່ອແຜນການສຳເລັດນາງອັກຄີກໍດີໃຈຢ່າງໃຫ່ຍ ຟ້າວສັ່ງໃຫ້ເອົາໄຫກຸມມານທັງສີ່ໄປໄຫລນ້ຳ.

ຕໍ່ມາພວກສາວໃຊ້ກໍເອົາໝານ້ອຍໃສ່ຂັນເງິນພ້ອມທັງເອົານ້ຳລູບໝາໃຫ້ປຽກຄາຍໆຄືກັບອອກມາໃຫ່ມໆແລ້ວຈຶ່ງຕີຖະແຫລງທ້ວງທັງຫລາຍນອນມີ ລູກຄົນອິຫຍັງມາ ເກີດເປັນໝາບໍ່ເຄີຍເຫັນຈັກເທື່ອທັງພ່ອງທ້ວງທັງພ່ອງທົວຂວັນ ບາງຄົນກໍຄາກນ້ຳລາຍຄາຍຂັ້ນະເທີ, ຈາກນັ້ນຈຶ່ງແກ້ຜ້າມັດຕານາງຄຳ ກອງອອກນາງຮູ້ສຶກຕົກໃຈຢ່າງໃຫ່ຍທີ່ບໍ່ເຫັນໜ້າລູກທີ່ເກີດມານາງໄດ້ແຕ່ຄຶດ ໃນ

ໃຈວ່າ ໂອນໍ ວັນນີ້ມັນແມ່ນເວນກຳນຳຈ່ອງກູແລ້ວ ປາກກໍປາກບໍ່ໄດ້ຄາແຄ້ນ ຄັ່ງໃຈ.

ຝ່າຍນາງອັກຄີຜູ້ໃຈບາບຈຶ່ງເວົ້ານຳນາງຄຳກອງດ້ວຍຄວາມອ່ອນ ຫວານ ວ່າ ດູລານາງຄຳກອງທີ່ຮັກຂອງເອື້ອຍ ອັນວ່າລູກຂອງເຈົ້າເກີດມາຊ່າງ ຜິດ ຊາດມະນຸດແທ້ດັ່ງບົດກອນຂຽນວ່າ :

ອັນວ່າບຸດຕານ້ອຍ ຄຳກອງອັນເກີດ ມານີ້
ສັງວ່າຜິດຊາດເຊື້ອ ຄົນແທ້ເກີດມາ ດັ່ງນີ້
ຫລືເຈົ້າໄປທ່ຽວຊ້ອນ ປູ່ນຮ່ວມເຮຽງຫມາ ນັ້ນລື
ສັ້ງວ່າບຸດຕານາງ ເກີດເປັນຫມານ້ອຍ
ແຕ່ນັ້ນຄຳກອງນ້ອຍ ຊົບລະທາກາງເຮືອນ
ນາງກໍປາກບໍ່ໄດ້ ມືໄລ້ລູບທອງ
ຄຳກອງນ້ອຍ ຄະນຶງໃຈຄິດຮ່ຳ
ອັນວ່າລູກອອກຈາກທ້ອງ ເໝືອນແທ້ດັ່ງຄົນ
ກູກໍຟັງສຽງໄຫ້ ໄອຈານຄັກແນ່
ຍາມເມື່ອອອກຈາກທ້ອງ ສຽງໄຫ້ແມ່ນຄົນ ແທ້ດາຍ
ຮ້ອຍຍ່ວາອັກຄີເຈົ້າ ພາໂລລ້ຽວໂລບ ຈຶງແລ້ວ
ນາງຈຶ່ງອົກວູ້ຮ້ອນ ປານຫນີ້ໃສ່ໄຟ ເຈົ້າເອີຍ

## 10. ສັ່ງໃຫ້ເອົານາງຄຳກອງ ໄປລ້ຽງໝູ.

ກ່າວເຖິງພະຍາຈຸນລະນີ ເມື່ອສາວໃຊ້ນຳເອົາໝາຂຶ້ນໄປຂາບທູນຕໍ່ພະອົງ ພະອົງກໍຮ້າຍເປັນຟືນເປັນໄຟ ສັ່ງໃຫ້ເອົາໄປຖິ້ມລົງນ້ຳທັນທີ, ພວກສາວໃຊ້ກໍຟ້າວປະຕິບັດຕາມ ຈົນໝານ້ອຍຕາຍຈົມນ້ຳໄປໝົດ. ຕໍ່ມາພະອົງກໍສັ່ງໃຫ້ ເສນາທັງຂຸນຫລວງຊູ່ຄົນຂຶ້ນເຝົ້າເປັນການດ່ວນ, ເມື່ອເສນາແລະຂຸນຫລວງ ຂຶ້ນເຝົ້າ ພະອົງຈຶ່ງເວົ້າຂຶ້ນດ້ວຍຄວາມເສຍໃຈວ່າພວກທ່ານທັງຫລາຍເອີຍ ບັດນີ້ເປັນເຫດຮ້ອນເມືອງບ້ານແຫ່ງເຮົາ ເພາະວ່າຄຳກອງນ້ອຍມະເຫສີ ນາງນາດທີ່ເຮົາຮັກດັ່ງແກ່ນຕານັ້ນ ໄດ້ເກີດລູກນ້ອຍເປັນໝາ ຮ້ອຍຢ່ານາງນີ້ເປັນກາລີຊິວອດວາຍເມືອງບ້ານ, ເຮົາຊິເຮັດແພເອົາໄຫລນ້ຳໝົດຫລືວ່າເຮົາຈັກຂັບໄລ່ນາງໜີຈາກເມືອງ? ບັນດາເສນາແລະຂຸນຫລວງຜູ້ໃຫຍ່ຈຶ່ງຂາບທູນ ຕໍ່ພະອົງວ່າ ນາງຫາກເປັນມະເຫສີຊ້ອນທຽນອົງພຸອະນາດ ຄັນຈັກຂັບນາງໜີໄປຕາມກຳຕາມເວນຫລືເອົາໃສ່ແພ ໄຫລລ່ອງນ້ຳກໍຄືດຽວກັນ ຢ້ານວ່າມີຊາຍໂຖງຜູ້ຊາວເມືອງຄຶດໂລບມັນຈັກໄປຂຶ້ນຊູ່ຊູ້ຊ້ອນຮ່ວມຮຽງແລ້ວເຂົາຈະ ເວົ້າອ້າງວ່າເຂົາໄດ້ນອນນຳເມຍພະຍາ ມັນຈະເປັນການເສຍກຽດສັກສີຂອງພະອົງ, ທາງທີ່ດີຄວນເຮັດໃຫ້ນາງຕົກຕ່ຳເອົາໄປເປັນຂ້ອຍຂ້າລ້ຽງໝູດີກວ່າພະອົງເອີຍ, ປະກົດວ່າທຸກໆຄົນເຫັນດີເປັນເອກະພາບກັນ.

ເມື່ອພະຍາຈຸນລະນີໄດ້ຟັງດັ່ງນັ້ນກໍຈຶ່ງສັ່ງໃຫ້ເພັດຊະຄາດພ້ອມທັງໝູ່ ໄທ

ຂັນໃຫ້ຮີບໄປນຳຕົວນາງຄຳກອງໄປມອບໃຫ້ຈ່າໝູຫລວງ, ພວກທີ່ໄປຊຸມ ຕົວຂອງນາງຄຳກອງກໍພາກັນດ່າປະຈານນາງຕ່າງໆນາໆວ່າ ນາງເອີຍ ເຂົາວ່າເຈົ້າເປັນຄົນຂວາງບ້ານຂວາງເມືອງ ເຈົ້າຈຶ່ງປົດເຄື່ອງປະດັບເອ້ຍອງ ທີ່ເປັນມະເຫສີດຽວນີ້ ກູຈັກເອົາມຶງໄປສົ່ງໃຫ້ຈ່າລ້ຽງໝູໃນມື້ນີ້.

ຝ່າຍນາງຄຳກອງໄດ້ຍິນສຽງເພັດຊະຄາດເວົ້າແນວນັ້ນ ນາງກໍຄຶດ ຄັ່ງແຄ້ນຢູ່ໃນໃຈ ນາງຈຶ່ງເວົ້າກັບພວກເພັດຊະຄາດວ່າ ເອີ...ປົດກໍປົດ ແລ້ວເຂົາກໍຟ້າວປົດເຄື່ອງນາງ ປັກປິ່ນທີວແຫວນທັງກາສາຄ່າຄຳແພງລ້ານກັບ ທັງຂັນໝາກພ້ອມຕະຫລອດຂັນໂທທັງໝອນລາຍເມື່ອແຣຄຳລົ້ວ ເຂົາກໍຖືກ້ຽງບໍ່ມີອັນໃດເຫລືອ. ນາງຄຳກອງໄດ້ແຕ່ຍໍມືນົບເຖິງເທພາເປັນ ທີ່ເພິ່ງຄຸນນາກນ້ຳທໍລະນີເຈົ້າໃຫ້ຊ່ວຍຊູ

ເພັດຊະຄາດໄດ້ຊຸມຕົວນາງລົງຈາກທີ່ຜາສາດ, ນາງໄດ້ແຕ່ຮ້ອງໄຫ້ຮ່ຳໄຮທັງພ່ອງຫອບສົ້ນຍ່າງລົງຈາກທີ່ຜາສາດໄປຫາຈ່າລ້ຽງໝູ, ເມື່ອໄປເຖິງເຂົາກໍໄດ້ມອບນາງໃຫ້ແກ່ຈ່າລ້ຽງໝູຫລວງດັ່ງບົດກອນຂຽນວ່າ:

ໃຫ້ເຈົ້າເອົານາງແກ້ວ　　　ຄຳກອງຫາບຈອກ

ທັງຫາບນ້ຳ　　　ນຳເຈົ້າຈ່າໝູ ນັ້ນຖອນ

ເມື່ອມອບນາງໃຫ້ຈ່າລ້ຽງໝູແລ້ວ ເຂົາກໍໄປຂາບທູນໃຫ້ພະຍາຈຸນລະນີພ້ອມທັງເຄື່ອງປະດັບເອ້ຍອງຂອງນາງຄຳກອງໄປມອບໃຫ້ພະອົງພ້ອມ, ສ່ວນວ່ານາງອັກຄີນັ້ນກໍມີຄວາມປິຕິຊົມຊື່ນໃນຜົນງານຂອງຕົນເປັນຢ່າງຍິ່ງ. ສ່ວນຄຳກອງນັ້ນຈ່າລ້ຽງໝູກໍບັງຄັບໃຫ້ນາງຫາບນ້ຳທັງຊ້ຳຫາບບອນ ນາງກໍຫຽວໄປຫາບນ້ຳຫາບບອນທຸກເຊົ້າທຸກແລງ ຈົນຄີງນາງບວບຊ້ຳໄປທົ່ວທັງຕົວ. ອີກອັນໜຶ່ງເກີດລູກໃໝ່ຍັງບໍ່ທັນໄດ້ນັ່ງໄຟຢູ່ກຳຊ້ຳ ນາງຄ່ອຍພະຍາຍາມ ອົດເຢື້ອນໄປທຸກເຊົ້າທຸກແລງເຂົາທັງດ່າທັງຕີນາງ ແຕ່ນາງກໍອົດແລ້ວອົດ ອີກ

ເພືອໃຊ້ເວນກຳແດ່ຄາວຫລັງ.

# 11. ກ່າວເຖິງກຸມມານທັງສີ່.

ກ່າວເຖິງກຸມມານທັງສີ່ຢູ່ໃນໄຫ, ນັບແຕ່ນຳໄປຖິ້ມໃສ່ນ້ຳກຸມມານທັງສີ່ກໍ່ ບໍ່ມີຄວາມເດືອດຮ້ອນສັບພະສິ່ງສັນໃດ ຍ້ອນວ່າພະຍາຄຸດແລະນາງທໍລະນີຊ່ວຍຄຸ້ມຄອງປົກປັກຮັກສາ. ໄຫໄດ້ໄຫລຂຶ້ນໄປເຖິງທ່າສວນດອກໄມ້ແຫ່ງໜຶ່ງແລ້ວ ໄຫກຸມມານທັງສີ່ກໍໄຫລວຽນໄປວຽນມາຢູ່ທ່ານ້ຳສວນດອກໄມ້ນັ້ນບໍ່ໄປ ທາງໃດ.

ກ່າວເຖິງໄອຍະກາເຖົ້າຜົວເມຍທັງຄູ່ ຮັກສາສວນດອກໄມ້ພະຍາເຈົ້າພໍ່ນານ ເພື່ອເປັນຜູ້ບົວລະບັດເບິ່ງແຍງສວນດອກໄມ້, ແຕ່ວ່າຜົວເມຍຄູ່ນີ້ບໍ່ ມີລູກນຳກັນຈັກຄົນເລີຍ, ມື້ນັ້ນຍ່າເຖົ້າຜູ້ເປັນເມຍລົງໄປຕັກນ້ຳມາຫົດດອກ ໄມ້ຈຶ່ງໄດ້ເຫັນໄຫເຈົ້າກຸມມານທັງສີ່ມາຢູ່ຄ້າງໃນຫົ້ນທ່າພຽງ ຍ່າເຖົ້າຈຶ່ງຊຸກໄຫນັ້ນໜີໄປບຶດໜຶ່ງຜັດໄຫລເຂົ້າມາຫາອີກ, ຍ່າແນມເບິ່ງສັງກໍປາກົດວ່າເປັນໜ່ວຍໄຫໃຫຍ່ມີເຊືອກຜູກໄວ້ແລ້ວ ຍ່າຊຸກໜີອອກໄປອີກຈົນເຖິງ 3 ເທື່ອໄຫນັ້ນກໍບໍ່ຍອມໜີໄປທາງໃດ, ຍ່າເຖົ້າຈຶ່ງຄິດປະຫລາດໃນໃຈ.

ດັ່ງນັ້ນຍ່າເຖົ້າຈຶ່ງຟ້າວກັບຄືນເມືອເຮືອນແລ້ວຈຶ່ງບອກຜົວວ່າ ມື້ນີ້ຂ້ອຍລົງໄປຕັກນ້ຳຕ່າງເກົ້າພາຍຫລັງເຖົ້າເອີຍ ດັ່ງບົດກອນຂຽນວ່າ:

ວັນນີ້ຂ້ອຍກໍລົງທ່ານ້ຳ　　ດູຕ່າງພາຍຫລັງ
ຈັກຊິເປັນປາປັ້ງ　　ດັ່ງລືເດເຈົ້າ

ຍັງມີໄຫໄຫລນ້ຳ ພັນທະນັງເຊືອກຈ່ອງ
ດູຮັດຫມັ້ນ ຮິງໄວ້ຢ່າງດີ
ຂ້ອຍຫໍໃສ່ຫີບແລ້ວ ພັດຊືມມາຄືເກົ່າ

ເຈົ້າຈຶ່ງໄປລ່ຳຖ້ອນຫລອນວ່າມີລາບລົ້ນ ຂອງເຂົ້າຢູ່ໃນ

ວ່າແລ້ວຜົວເມຍເຖົ້າກໍພາກັນຟ້າວຟົ່ງໄປທ່ານ້ຳພະລັນເປື້ອງບໍ່ນານ. ພໍໄປຮອດໄຫກໍໄຫລເຂົ້າມາຫາ ຜົວເມຍເຖົ້າຈຶ່ງພາກັນອຸ້ມເອົາໄຫນັ້ນ ມາເຮືອນແລ້ວກໍພາກັນໄຂອອກເບິ່ງ ຈຶ່ງເຫັນກຸມມານທັງສີ່ຢູ່ໃນໄຫ ຫລຽວເບິ່ງຜິວພາງໃສດັ່ງຄຳລຽນໄວ້, ສອງເຖົ້າມີຄວາມຍິນດີຊົມຊື່ນຈຶ່ງພາກັນອຸ້ມ ເອົາທ້າວອອກມາ ຍ່າເຖົ້າກໍຟ້າວຫາຜ້າມາປູແລ້ວກໍເອົາກຸມມານອອກມານອນໄວ້ ຫລຽວເບິ່ງຮູບຮ່າງຫນ້າຕາຜູ້ໃດກໍງາມ ປູ່ລູ້ບໍ່ຍລ້ອຍປານແຕ້ມແຕ່ງມາແຕ່ຊັ້ນຟ້າດາວະດຶງ.

ສອງເຖົ້າຜົວເມຍດີໃຈຢ່າງຍິ່ງຈຶ່ງຫານ້ຳມາປ້ອນກຸມມານທັງສີ່, ສອງເຖົ້າເວົ້າກັນວ່າອັນນ້ອຍຢ່າອິນສິ່ງໃຫ້ເຮົາແທ້ທຽງຈິງ ເພາະວ່າເຮົາບໍ່ມີ ລູກນ້ອຍພີ່ສືບແທນເຮືອນ ອິນຈຶ່ງກຸມາພາຍໂພດເຮົາຍາມໄຮ້ ຜູ້ເປັນເມຍເວົ້າວ່າ ເມື່ອເຮົາໄດ້ກຸມມານທັງສີ່ມາເປັນລູກແລ້ວ. ເຈົ້າຈຶ່ງໄປຫາຢາຮາກໄມ້ມາຕົ້ມໃຫ້ຂ້ອຍກິນເພື່ອວ່າຈະໄດ້ມີນ້ຳນົມລ້ຽງລູກ, ດຽວນຂ້ອຍຊິໄປຕັດເອົາລຳອ້ອຍມາບີບເອົານ້ຳກ່ອນ ເຈົ້າຈຶ່ງຮີບໄປຊອກຫາຮາກຢາ, ວ່າແລ້ວຜູ້ເປັນຜົວ ກໍຟ້າວລົງເຮືອນແບກສຽມເຂົ້າປ່າຫາຊອກຢາມາຕົ້ມໃຫ້ເມຍກິນ, ປະກົດວ່າ ຜູ້ເປັນຜົວຊອກໄດ້ຢາຫລາຍຊະນິດເອົາມາໃຫ້ເມຍ, ຍ່າເຖົ້າຄາງຫມໍ້ຕົ້ມທັນ ທີແຕ່ນັ້ນເທວະດາທີ່ຮັກສາກຸມມານທັງສີ່ຈຶ່ງໂຮຍຢາທິບລົງໃສ່ຫມໍ້ຕົ້ມນ້ຳຮາກຢາ ເມື່ອຍ່າເຖົ້າກິນລົງໄປຈຶ່ງເຮັດໃຫ້ນົມຕຶ່ງມີນ້ຳນົມເຕັມເຕົ້າອັນນີ້ກໍດ້ວຍບຸນສົມພານຂອງທ້າວທັງສີ່ນັ້ນເອງ.

ເມື່ອຍ່າເຖົ້າຈຳສວນມີນົມໃນເຕົ້ານົມແລ້ວ ກໍຍູ່ຫ່າງໃຫ້ກຸມມານທັງສີ່ ໄດ້ກິນຢ່າງອິ່ມຫນຳສຳລານ ແລະສອງເຖົ້າກໍມີຄວາມປີຕິຊົມຊື່ນປານວ່າ ໄດ້ຫມື່ນຕື້ຄຳເຂັ້ມໃສ່ມືທັງສອງ ໄດ້ພາກັນເອົາໃຈໃສ່ພຽນລ້ຽງກຸມມານທັງສີ່ ທຸກຄ່ຳເຊົ້າສອງເຖົ້າລ່ຳດູ, ຜູ້ເປັນຜົວ ໄດ້ໄປຊອກໄມ້ ໄຜ່ມາສານເຮັດອູ່ໃຫ້ກຸມ ມານທັງສີ່ໄດ້ນອນຢ່າງສະບາຍຍ້ອນວ່າທັງສອງເຖົ້າດີອົກດີໃຈເຝົ້າແຍງແຕ່ ກຸມມານທັງສີ່ບໍ່ໄດ້ໄປມາທາງໃດ. ຈຶ່ງລືມເກັບດອກໄມ້ໄປຖວາຍທັ່ງບິດາອນຂຽນວ່າ:

ອັນວ່າຕາຍາຍເຖົ້າ  ຍິນດີຊົມຊື່ນ
ທຸກຄ່ຳເຊົ້າ  ຖະຫນອມລ້ຽງບ່ອາງ
ຫລາຍວັນໄດ້  ຊິມເຊີຍຍິ່ມເປີດ ເປັນແລ້ວ
ເລີຍລືມເກັບດອກໄມ້  ຖວາຍໃຫ້ຍອດນາງ
ແຕ່ນັ້ນອັກຄີຜູ້  ມະເຫສີນາງນາດ
ນາງກໍໃຊ້ສ່ຳຂ້າ  ໄປຢ້ຽມເບິ່ງຍາຍ
ຈັກວ່າເຈັບປ່ວຍໄຂ້  ສັບພະສິ່ງສັນໃດ
ຄັນແມ່ນໄອຍະກາເຈັບ  ປ່ວຍທັງສອງເຖົ້າ
ສູຈິ່ງເອົາກັນເຂົ້າ  ໃນສວນເກັບດອກ
ເອົາດອກໄມ້  ມາແທ້ຢ່ານານ

ນາງອັກຄີເວົ້າວ່າແຕ່ກ່ອນມາຫລັງສອງເຖົ້າບໍ່ເຄີຍປະເຄີຍວາງຮອດຍາມແມ່ນເກັບມາຖວາຍໂລດ, ສູຈິ່ງໄປເບິ່ງດູເປັນແນວໃດກັນແທ້? ພວກທາສີ ໄປຮອດສວນ ໄດ້ເຫັນກຸມມານທັງສີ່ມີຮູບໂສມອັນສວຍງາມສະເຫມີກັນ ຈຶ່ງ ຖາມຍ່າເຖົ້າກັບຜົວວ່າ ຍ່າ ໄດ້ລູກນ້ອຍແຕ່ໃສມາລ້ຽງ ເປັນລູກຂອງຍ່າເອງຫລືວ່າຂໍເພິ່ນມາລ້ຽງ.

ສອງເຖົ້າຈຶ່ງບອກດ້ວຍຄວາມຊື່ບໍ່ຄິດວ່ານາງອັກຄີຜູ້ໃຈບາບຈະຄິດ ຮ້າຍຕໍ່ທັງສອງ ເວົ້າວ່ານີ້ຫນຶ່ງລືງ ໄປທ່ານໍ້າເຫັນ ໄຫໃຫ່ຍ ໄຫລວົນວຽນຢູ່ຈຶ່ງ ພາກັນເອົາຂຶ້ນມາ ໄຂ ເບິ່ງຈຶ່ງ ເຫັນກຸມມານທັງສີ່ຫົມຮູບ ໂສມພົວພັນອັນງາມໆສະ ເຫມີກັນນັ້ນຜູ້ໃດກໍພາກັນອຸ້ມກັນຈູບບໍ່ອີ່ມໃຈຈັກເທື່ອ.

ພໍຕາ ເວັນຕົກ ຍຄ່ຳສາວໃຊ້ຈຶ່ງພາກັນກັບຄືນສູ່ວັງໃນໃຈແຕ່ລະຄົນກໍຄິດ ອຸກຄິດອົ່ງຈັກຊິລາຍງານນາງອັກຄີແນວໃດດີ, ຖ້າຈະບອກຄວາມຊື່ແນ່ນອນ ນາງອັກຄີຕ້ອງຜິດປອງຂ້າກຸມມານທັງສີ່, ສ່ວນເລິກໃນຫົວໃຈຂອງສາວໃຊ້ຜູ້ໃດກໍ ມີຄວາມຮັກແພງອິດູສົງສານກຸມມານທັງສີ່.

ເມື່ອສາວໃຊ້ ໄດ້ລາຍງານເລື່ອງຕາຍາຍເຖົ້າຕາມຄວາມຈິງ ໂດຍໄດ້ເລົ່າແຕ່ຕົ້ນເທົ້າຮອດເຖິງປາຍ, ຝ່າຍນາງອັກຄີໄດ້ຮູ້ດັ່ງນັ້ນກໍມີຄວາມແຄ້ນເຄືອງຂຶ້ນເປັນຟືນເປັນໄຟ ທັງເວົ້າກັບສາວໃຊ້ວ່າ ເລື່ອງນີ້ສູເຈົ້າຈົ່ງຖືເປັນຄວາມລັບຢ່າໃຫ້ພົວຊອດເດັດຂາດ ຖ້າຫາກພະຍາຈຸນລະນີຮູ້ຈະມີເລື່ອງລາວຈື່ ເດີສ່ວນສາວໃຊ້ ໄດ້ຟັງດັ່ງນັ້ນກໍພາກັນຮັບປາກຮັບຄຳແລ້ວກໍລາ ເມືອສູ່ທີ່ຢູ່ຂອງຕົນ

## 12. ນາງອັກຄີເບື່ອກຸມມານທັງສີ່ຕາຍ.

ຝ່າຍນາງອັກຄີຜູ້ໃຈບາບ ເມື່ອໄດ້ຮູ້ດັ່ງນັ້ນຈຶ່ງສັ່ງໃຫ້ສາວໃຊ້ເຮັດເຂົ້າຕົ້ມໃສ້ງອນເພື່ອຈະເອົາໄປໃຫ້ກຸມມານທັງສີ່ກິນ. ຕໍ່ມານາງອັກຄີກໍເຂົ້າເຝົ້າ ພະຍາຈຸມລະນີເພື່ອຂໍອະນຸຍາດອອກໄປຊົມສວນຕາງໃຫ້ຫາຍຄຳໂສກຮ້ອນເຄືອງໃຈ, ພະຍາຈຸມລະນີຈຶ່ງໄດ້ອະນຸຍາດຕາມທີ່ນາງອັກຄີຮ້ອງຂໍ ທັງອວຍພອນໃຫ້ນາງຈຶ່ງຫາຍທຸກໂສກໃນໃຈ.

ມື້ລຸນມານາງອັກຄີຈຶ່ງສັ່ງໃຫ້ກຽມລາຊະລົດພ້ອມດ້ວຍກຳລັງສາວສະ ຫນົມເພື່ອຮ່ວມຂະບວນໄປຊົມສວນ, ກ່ອນຈະເຄື່ອນຂະບວນອອກໄປນາງອັກຄີ ສັ່ງແລ້ວສັ່ງອີກບໍ່ໃຫ້ລືມເຂົ້າຕົ້ມທີ່ເປັນຂອງຝາກທີ່ນາງຈະເອົາໄປຕ້ອນກຸມ ມານທັງສີ່ລູກຂອງຍ່າຈຳສວນ.

ຍ້ອນກ່າວເຖິງເຖົ້າຜົວເມຍຢູ່ສວນ ທັງສອງກໍພາກັນລ້ຽງດູກຸມມານທັງ ສີ່ດ້ວຍຄວາມຮັກສຸດຫົວໃຈ, ມື້ນັ້ນທັງສອງເວົ້າກັນວ່າດ້ຽວນລູກເຮົາກໍໃຫຍ່ ແມ່ນແລ້ວເຮົາຄວນເອົາເຂົ້າຂອງອັນມີຄ່າໄປແລກເອົາເສື້ອຜ້າອາພອນມາໃຫ້ລູກໄດ້ນຸ່ງໄດ້ຫົ່ມ ແລະເຄື່ອງຢູ່ຂອງກິນເຂົ້າຕົ້ມເຂົ້າຫນົມມາໃຫ້ລູກ. ທັງສອງເຖົ້າເຫັນດີເຫັນພ້ອມເປັນເອກະສັນກັນແລ້ວຈຶ່ງສັ່ງລູກທັງສີ່ດັ່ງບົດກອນ ຂຽນວ່າ:

ກໍຈຶ່ງສັ່ງລູກນ້ອຍ          ຊົມຈູບຈອມຂວັນ

ສາຍໃຈເອີຍ ຄ່ອຍຢູ່ດີເດີເຈົ້າ
ແມ້ຈັກເອົາຕີນເຂົ້າ ໃນເມືອງທາທ່ຽວ
ຊື້ເສື້ອຜ້າ ຂອງຕ້ອນຊູ່ອັນ ກ່ອນແລ້ວ
ອັນໜຶ່ງລູກຢ່າໄປທ່ານ້ຳ ວັງໃຫ່ຍຊຽງຄາ
ກົວຝູງສັດ ເງືອກງູຕົວຮ້າຍ
ເຈົ້າຈຶ່ງພາກັນເຝົ້າ ເຮືອນເຮົາຖ້າແມ່
ບາດແມ່ມາຮອດແລ້ວ ຊິພາເຈົ້າອາບສີ
ອັນໜຶ່ງຢ່າພາກັນໄປທ່ຽວດ້າວ ສວນອາດອຸດທິຍານ ແມ່ເນີ
ແຕ່ນັ້ນຝູງກຸມມານ ສີບາຈາຕ້ານ
ເຈົ້າຈຶ່ງໄປດີ້ຖອນ ປິຕາພໍ່ແມ່ ຂ້ອຍເອີຍ
ຢ່າໄດ້ໄປຢູ່ຊ້າ ນານລ້ຳລູກຊິຄອງ ແມ່ເອີຍ
ແຕ່ນັ້ນພໍ່ແມ່ເຈົ້າ ເລີຍຈູບຈອມຂວັນ
ສາຍໃຈເອີຍ ຢູ່ດີເດີເຈົ້າ
ພໍ່ແມ່ໄປຄາວນ້ອຍ ຕາເວັນງາຍກໍກັບຕ່າວ
ເຈົ້າຈຶ່ງເນົາຢູ່ຖ້າ ເຮືອນນ້ອຍແຫ່ງຕົນ ລູກເອີຍ

ສັ່ງລູກທັງສີ່ແລ້ວ, ສອງເຖົ້າກໍອອກເດີນທາງ ໄປສູ່ຫົວເມືອງແຕ່ວ່າທັງສອງ ໄດ້ເລາະໄປທາງແຄມຝັ່ງນ້ຳ. ສ່ວນຂະບວນຂອງນາງອັກຄີນັ້ນເຄື່ອນມາຕາມທາງທົ່ງ ຈຶ່ງບໍ່ໄດ້ພົບກັນ ອັນນີ້ເປັນເພາະເວນກຳນຳສະໜອງ. ຝ່າຍ ນາງອັກຄີເມື່ອມາຮອດສວນແລ້ວກໍຢຸດພັກຂະບວນ, ກຸມມານທັງສີໄດ້ເຫັນດັ່ງນັ້ນ ກໍພາກັນແລ່ນອອກຈາກເຮືອນມາເບິ່ງ, ນາງອັກຄີໄດ້ເຫັນກຸມມານທັງສີຈຶ່ງຖາມວ່າພໍ່ແມ່ຂອງພວກເຈົ້າບໍ່ຢູ່ເຮືອນພາກັນໄປທາງໃດ? ແຕ່ນັ້ນສີພີນ້ອງ ເລີຍປາກອໍແອພໍ່ແມ່ໄປໃນເມືອງທ່ຽວທາຂອງຕົນ.

ນາງອັກຄີຜູ້ໃຈບາບ ໄດ້ຟັງດັ່ງນັ້ນກໍມີຄວາມຊົມຊື່ນໃນໃຈຈຶ່ງເວົ້າວ່າ ດຽວນີ້ພໍ່ແມ່ຂອງສູເຈົ້າ ໄດ້ຝາກເຂົ້າຕົ້ມເຂົ້າໜົມມາບຳຫຼູນ ສູຈຶ່ງພາກັນກິນສາ, ພໍ່ແມ່ສູນັ້ນຕາເວັນຄ້າຍພຸ້ນແຫລະຈຶ່ງຈະກັບມາ. ກຸມມານທັງສີ່ຈຶ່ງຮັບເອົາ ເຂົ້າຕົ້ມເຂົ້າໜົມຈາກນາງອັກຄີມາກິນຫລັງຈາກກິນເຂົ້າຕົ້ມເຂົ້າໜົມໃສ່ ວ້ອນແລ້ວ ກໍເກີດອາການຮ້ອນທ້ອງຫິວນ້ຳ ຈຶ່ງພາກັນກິນນ້ຳທັງພ່ອງຮ້ອງໄຫ້ ຫາພໍ່ແລະແມ່ວ່າ ປານໃດເດພໍ່ແມ່ຈະກັບມາລູກຈະກອງກັນຕາຍຢູ່ເຮືອນວັນ ນີ້ກຸມມານທັງສີ່ຮ້ອງໄຫ້ທັງກິ້ງເກືອກ ໄປມາດ້ວຍຄວາມທຸລົນທຸລາຍເພາະ ພິດຂອງວ້ອນ ໃນທີ່ສຸດທັງສີ່ກໍພາກັນເສຍຊີວິດຢ່າງໜ້າ ເວທະນາສົງສານ. ສ່ວນນາງອັກຄີນັ້ນເມື່ອ ໄດ້ຂ້າກຸມມານທັງສີ່ສົມໃຈດຽດແລ້ວກໍຂີ້ນລົດກັບຄືນສູ່ທີ່ ພາສາດຢູ່ຢ່າງສະບາຍໃຈ.

# 13. ກຸມມານທັງສີ່ເກີດເປັນຕົ້ນຈຳປາ.

ກ່າວເຖິງໄອຍະກາເຖົ້າຜົວເມຍທີ່ໄປຊອກຊື້ເສື້ອຜ້າແລະຂອງຕ້ອນ ຢູ່ໃນເມືອງ, ເມື່ອຊື້ໄດ້ແລ້ວກໍຟ້າວພາກັນກັບທັນທີ, ທັງສອງລີບກັນມາຕາມທາງວ່າປານນີ້ລູກເຮົາຄືຊິພາກັນມາຄອຍຖ້າຕ້ອນແລ້ວນໍ, ພວກເຮົາບໍ່ຕ້ອງພັກເຊົານຳທາງມັນຊິເສຍເວລາຟ້າວເມືອຫາລູກຢູ່ເຮືອນພໍແຕ່ສອງເຖົ້າມາຮອດແຄມສວນກໍບໍ່ເຫັນລູກທັງສີ່ແລ່ນອອກມາຮັບມາຕ້ອນ, ແຕ່ກ່ອນນັ້ນໄປໃສມາກຸມມານທັງສີ່ຈະພາກັນອອກມາລັດຢູ່ປາກທາງເຂົ້າສວນໂລດ, ທັງສອງຈຶ່ງເກີດ ມີຄວາມສົງໄສໃນໃຈດັ່ງບົດກອນຂຽນວ່າ :

| | |
|---|---|
| ມື້ນີ້ບໍ່ໄດ້ຍິນສຽງນ້ອຍ | ກຸມມານທັງສີ່ |
| ແຕ່ກ່ອນນີ້ | ເຄີຍຕ້ອນລັດທາງ |
| ບັດນີ້ ມາເປັນປັ້ງ | ບໍ່ໄດ້ຍິນສຽງປາກ |
| ຫລືວ່າລູກຫາກອົດຢາກນ້ຳ | ຫິວໄຫ້ທອດນົມ ນັ້ນລື |
| ສອງຈາແລ້ວ | ພະລັນ ໄປໂດຍດ່ວນ |
| ເລີຍຮອດຫ້ອງ | ເຮືອນນ້ອຍບໍ່ນານ |
| ກໍຈຶ່ງເຫັນຍອດແກ້ວ | ທັງສີ່ກຸມມານ |
| ນອນລຽນກັນ | ຢູ່ເຮືອນເປັນຈ້ອຍ |
| ຄືນໜຶ່ງນອນຕາຍຄ້າງ | ຕີນຂັ້ນໄດ້ກົ້ວຂຸ່ນ |

ຄືນໜຶ່ງຕາຍຢູ່ຫ້ອງ　　　ເຊັຍນ້ອຍນອກປະຕູ

ສອງຄົນນັ້ນ　　　ຮຽງກັນຕາຍຢູ່

ໃນແທ່ງຫ້ອງ　　　ກາງເຮືອນນ້ອຍຫຼຸບຕອງ

ສອງເຖົ້າບໍ່ຄຶດວ່າລູກຂອງຕົນຕາຍ ຄຶດແຕ່ວ່າລູກຫິວນົມຢາກເຂົ້າ ນັ່ງຖ້າພໍ່ກັບແມ່ເລີຍລົ້ມນອນຄາຕີນຂັ້ນໄດ, ດັ່ງນັ້ນທັງສອງຈຶ່ງຟ້າວເຂົ້າໄປອູ້ມ ເອົາລູກຜູ້ນອນຢູ່ຕີນຂັ້ນໄດ ແຕ່ປາກົດວ່າຫາກໄດ້ຕາຍໄປແລ້ວ, ສອງເຖົ້າຈຶ່ງ ຕິ ຫ໋ວງກາງເກືອນ ຈຶ່ງອູ້ມຂຶ້ນເທິງເຮືອນພັດເຫັນອີກຜູ້ໜຶ່ງນອນຕາຍຢູ່ເຊຍ, ຜູ້ ຜົວຈຶ່ງອູ້ມເອົາກຸມມານທັງສີ່ໄປກອງລຽນກັນໄວ້ກາງເຮືອນ. ຈາກ ນັ້ນສອງເຖົ້າກໍພາກັນເປັນລົມສະຫລົບໄປແຕ່ຍາມໃດບໍ່ຮູ້.

ເມື່ອຟື້ນສະຕິຄືນມາໄດ້ທັງສອງເຖົ້າກໍໄດ້ແຕ່ພາກັນຮ້ອງໄຫ້ຮ່ຳໄຮອາ ໄລ ອາວອນ ເຖິງລູກທັງສີ່ທັງພ່ອງຈື່ມທຸກຈື່ມຍາກວ່າ ໄດ້ພຽນລ້ຽງກຸມມານທັງ ສີ່ ຈົນໃຫ່ຍຫວັງຈະໄດ້ເພິ່ງພາອາໄສ ແຕ່ແລ້ວກໍພາກັນຕາຍໜີຈາກຕາຍ່ໍ ມີ ບ່ອນແປ້ວເໝືອນແຫ້ດັ່ງນອນແມ່ດ. ເຖິງແມ່ນກຸມມານທັງສີ່ຈະຕາຍແລ້ວ ກໍ ຕາມແຕ່ສອງເຖົ້າກໍຍັງພາກັນດົມຈູບຢູ່ເພາະເບິ່ງຮູບຮ່າງພິວພັນແລ້ວຍັງ ປູ ລູ້ປ່ອຍລ່ອຍໜ້າຮັກໜ້າແພງຄືກັບວ່າຍັງມີຊີວິດຢູ່ນັ້ນເອງ.

ຄືນນັ້ນ ໄອຍະກາເຖົ້າຜົວເມຍທັງຄູ່ໄດ້ໄຟນັ່ງເຝົ້າສົບລູກຕະຫລອດຄືນຍາມ ໃດກໍພາກັນຄຶດແຕ່ວ່າລູກຈະຄືນມາເປັນຄົນອີກ. ພໍເຖິງຕອນເຊົ້າທັງສອງ ຈຶ່ງ ລົມກັນວ່າແນວໃດລູກຂອງເຮົາກໍບໍ່ຄືນອີກແລ້ວສ່ວນວ່າເສື້ອຜ້າອາພອນ ແລະ ຂອງຕ້ອນຫີ້ໄປຊື້ມານັ້ນລູກກໍບໍ່ທັນໄດ້ນຸ່ງໄດ້ກິນອັນໃດ, ບັດນີ້ເຮົາຈຶ່ງເອົາ ມາ ນຸ່ງມາຫົ່ມໃຫ້ລູກຂອງເຮົາສາເຖົ້າເອີຍ, ເວົ້າແລ້ວຜູ້ເປັນພິວກໍຟ້າວຈັດ ແຈງ ນຸ່ງຫົ່ມໃຫ້ກຸມມານທັງສີ່.

ທັງນຸ່ງຫົ່ມຜ້າໃຫ່ມໃຫ້ ທັງຈົ່ມໄປພ້ອມວ່າຄັນແມ່ນລູກຂອງເຮົາຍັງມີຊີ ວິດ

ຢູ່ຄືຊິພາກັນນຸ່ງຜ້າຜືນໃຫມ່ເວົ້າອອດໆແອດໆແລ້ວ ເລາະຫລິ້ນຕາມສວນ ດອກ
ໄມ້ດ້ວຍຄວາມເບີກບານມ່ວນຊື່ນ, ໃຜເດຊ່າງມາຂ້ານາ ເບື່ອລູກຄັນຊິຂ້າແທ້ງ
ກໍຈຶ່ງໄວ້ໃຫ້ຢູ່ນຳພໍ່ແມ່ຈັກຄົນກໍຍັງວ່າ ໄຄຢ່າເຖົ້າຜູ້ເປັນແມ່ເອົາເຂົ້າຫນົມ ໃສ່
ພາແລ້ວຕັ້ງໄວ້ຂ້າງສີບກຸມມານທັງສີ່ຈຶ່ງພາກັນຮ້ອງຂວັນກຸມມານດັ່ງບົດ ກອນ
ຂຽນວ່າ:

ສອງກໍເລີຍຮຽກຮ້ອງ ຂວັນອ່ອນກຸມມານ
ມາເຍີ ຂວັນກຸມມານ ລູກກູຈອມຊ້ອຍ
ບັດນີ້ ພໍ່ແມ່ຊື້ເຄື່ອງຕ້ອນ ຫລາຍສິ່ງນານາ
ໃຫ້ສູ່ກັບຄືນມາ ລູກກູຄືນພ້ອມ
ໂອນໍ ເຈົ້າຫາກມຸດມອດມ້ຽນ ພໍເອີ້ນແຕ່ຂວັນ
ເຈົ້າຫາກລົດຊົ່ວແລ້ວ ເມືອເກີດເມືອງສະຫວັນ
ອັນວ່າຂວັນກຸມມານ ຢ່າລືມສອງເຖົ້າ
ຄັນວ່າການພາຍຫນ້າ ຫລັງມາເກີດໃຫມ່
ເກີດທີ່ໃດຂໍໃຫ້ພໍ່ແມ່ສຸກຢູ່ຍ້ອນ ບຸນເຈົ້າເຫລືອນງຳ ນັ້ນຖ້ອນ

ສອງເຖົ້າພາກັນນັ່ງໄຫ້ເຝົ້າສົບລູກໄດ້ 3 ມື້ 3 ຄືນເຂົ້ານ້ຳກໍບໍ່ຍອມ ກິນ ສ່ວນວ່າສົບກຸມມານທັງສີ່ກໍໃຫ້ພອງຂຶ້ນ. ເມື່ອຮູ້ວ່າແນວໃດກໍບໍ່ມີທາງຄືນ ມາ ໄດ້ຈຶ່ງພ້ອມກັນເອົາກຸມມານທັງສີ່ໄປເຜົາຢູ່ແຄມຮົ້ວໃກ້ເຮືອນນັ້ນແຕ່ ນັ້ນ ສອງເຖົ້າກໍບໍ່ເປັນອັນກິນອັນ ນອນເພາະຂາດລູກທັງສີ່ໄປ ຍັງແຕ່ສອງເຖົ້າ ຜົວເມຍຈຶ່ງບໍ່ຊ່າງຢູ່ຊ່າງກິນ ຄິດຮອດແຕ່ລູກທີ່ຈາກໄປ. ຄືນຫນຶ່ງຢ່າ ເຖົ້າ ນອນຝັນເຫັນກຸມມານທັງສີ່ພາກັນແລ່ນຫລິ້ນ ພໍຕື່ນຂຶ້ນຢ່າກໍຮ້ອງໄຫ້ຮ່ຳໄຮຫາ

ຕື່ນເຊົ້າມື້ນັ້ນ ໄອຍະກາເຖົ້າຊວນກັນໄປເກັບດູກເພື່ອຊິກໍ່ທາດໄວ້ໃນ ສວນ ພໍໄດ້ລ່ຳໄດ້ແຍງຍາມຄິດຮອດຄິດເຖິງ, ເມື່ອສອງເຖົ້າໄປເບິ່ງບ່ອນກອງຟອນ

ປະກົດວ່າບໍ່ມີດູກຈັກດູກເລີຍ ເຫັນແຕ່ຕົ້ນຈຳປາສີ່ຕົ້ນເກີດຂຶ້ນບ່ອນກອງ ຟອນ ເປັນຕົ້ນດອກຈຳປາທີ່ມີຄວາມສວຍງາມດັ່ງບົດກອນຂຽນວ່າ:

ກໍຈຶ່ງຫລິງເຫັນຕົ້ນ　　ຈຳປາທັງສີ່
ເກີດອອກຕັ້ງ　　ແທນໄວ້ບ່ອນເຜົາ
ກໍຫາກດູງາມລົ້ນ　　ເປັນໃບຊອນກາຍ
ງ່າກ່ອງຄ້ອມ　　ໃບຊ້ອນຊື່ນງາມ
ເປັນດອກພ້ອມ　　ບານຈໍ່ຈູມຈີ
ໂຮຍງຫອມ　　ທົ່ວໃນສວນກວາງ
ແຕ່ນັ້ນຕາຍາຍເຖົ້າ　　ທັງສອງຊົມຊື່ນ
ອັ້ນນຫາກແມ່ນລູກອ່ອນນ້ອຍ　　ຮານັ້ນເກີດເປັນ ແທ້ແລ້ວ
ຮາຈຶ່ງຊົມດອກໄມ້　　ຕາງລູກບຸດຕາ
ຮາຈຶ່ງປູນດາດີ　　ແຕ່ງແປງປົວລ້ອມ
ຜົວຈຶ່ງໄປຫາໄມ້　　ມາພະລັນເຮວຮີບ
ສອງກໍແປງຮົ້ວລ້ອມ　　ປູນປ້ອງລູກຕົນ
ເມຍກໍໄປຕັກນ້ຳ　　ມາສ່ວາຍສົງສີ
ອັນວ່າດວງຈຳປາ　　ຊື່ນບານຫອມເຮົ້າ
ອັນວ່າມາລາຕົ້ນ　　ຈຳປາທັງສີ່
ເມື່ອລົມມາປົ່ນເປ້ອງ　　ກໍໄຫວຄ້ອມກ່ອງງາມ
ເຫມືອນດັ່ງມີຈິດຕັ້ງ　　ວິນຍານທັດທ່ຽງ
ເມື່ອພໍ່ແມ່ຫນີຈາກແລ້ວ　　ຈຳປານັ້ນບໍ່ຕີງ ແທ້ແລ້ວ

ໃອຍະກາເຖົ້າຜົວເມຍມີຄວາມປິຕິຍິນດີຫາອັນປຽບບໍ່ໄດ້ພາກັນພຽນ ຖະຫນອມບົວລະບັດຮັກສາຕົ້ນຈຳປາທັງສີ່ທຸກເຊົ້າຄ່ຳວັນຄືນ. ຕົ້ນຈຳປາທັງສີ່ ຕົ້ນ

ນົມສີສັນຕ່າງກັນ ຄືຕົ້ນທີໜຶ່ງນັ້ນຂາວຜ່ອງບໍລິສຸດ ຕົ້ນນີ້ເປັນຕົ້ນອາຍຫມູ່. ຕົ້ນໜຶ່ງນັ້ນເຫລືອງອ່ອນດຽງາມ ອັນນີ້ເປັນກຸມມານຜູ້ຖ້ວນສອງ, ຕົ້ນໜຶ່ງນັ້ນ ຜິວອ່ອນອັນສະໜິດ ອັນນີ້ແມ່ນກຸມມານຜູ້ຖ້ວນສາມ, ຕົ້ນໜຶ່ງນັ້ນຜິວພາງເຫລື້ອມ ພອຍມິນຄຳຄາດ ເໝືອນດັ່ງຄຳນິກຄະຊາດເຂັ້ມປຸນຕັ້ງຫລໍ່ຫລອມຕົ້ນນີ້ ເປັນຜູ້ຫລ້ານ້ອງນາດທັງສາມ. ຈຳປາທັງສີ່ຕົ້ນນີ້ລ້ວນແຕ່ມີກິ່ນອັນຫອມຫວນ ຍາມລົມພານພັດກິ່ນຫອມໄປທົ່ວທັງເມືອງ ຜູ້ທີ່ໄດ້ກິ່ນຍ່ອມມີຄວາມຊື່ນອົກຊື່ນໃຈ.

24/VII
ຮ້ານຈຳໜ່າຍ

# 14. ນາງອັກຄີສັ່ງເອົາຕົ້ນຈຳປາໄປໄຫລນ້ຳ.

ນາງອັກຄີຜູ້ໃຈບາບ ເມື່ອໄດ້ຂ້າກຸມມານທັງສີ່ຕາຍແລ້ວ ກໍຍັງຄິດຢູ່ໃນໃຈ ຕື່ມວ່າ ເປັນແນວໃດນໍ ໄອຍະກາເຖົ້າທັງສອງຄືມິດນິແທ້, ບັດນີ້ກູຈະແຕ່ງ ຄົນ ໄປຕິດຕາມເບິ່ງອີກກ່ອນນາ. ຄິດໄດ້ດັ່ງນັ້ນຈຶ່ງສັ່ງໃຫ້ທາສີໄປສູ່ສວນທັງ ບອກ ວ່າສູຈົ່ງໄປພິຈາລະນາ ເບິ່ງວ່າກຸມມານທັງສີ່ນັ້ນຕາຍແທ້ບໍ່ຫລືວ່າແນວໃດ ກັນ ແທ້.

ເມື່ອໄດ້ຮັບຄຳສັ່ງຂອງນາງອັກຄີແລ້ວ ພວກສາວໃຊ້ກໍພາກັນໄປສູ່ ສວນ ດອກໄມ້ບ່ອນຢ່າເຖົ້າເຝົ້າຮັກສາ. ພໍໄປເຖິງສວນຢ່າເຖົ້າຈຶ່ງຖາມວ່າ ພວກ ຫລານສາວທັງສີ່ມານີ້ມີວັດຖຸປະສົງແນວໃດນໍ? ພວກສາວໃຊ້ຈຶ່ງບອກວ່າ ພະ ມະເຫສີໃຊ້ຕູຂ້ານາ ເກັບດອກໄມ້ເພື່ອຖວາຍເພິ່ນ, ຢ່າຈຶ່ງບອກວ່າຈົ່ງພາ ກັນ ເກັບເອົາຕາມໃຈມັກ ດອກໄມ້ໃນສວນມີນັບຫລາຍນາງຊະນິດຫລາຍ ເອີຍ ແຕ່ຫ້າມບໍ່ໃຫ້ເກັບດອກໄມ້ຂອງຂ້ອຍລູກຄິງທີ່ນັ້ນ.

ດ້ວຍຄວາມສົງໄສສາວໃຊ້ຈຶ່ງຖາມສອງເຖົ້າວ່າເປັນຫຍັງຈຶ່ງວ່າດອກ ໄມ້ ເປັນລູກຄິງ? ສອງເຖົ້າຈຶ່ງໄດ້ເລົ່າຄວາມຈິງສູ່ຟັງ ເພາະບໍ່ຄິດວ່ານາງອັກ ຄີ ຈະມີຈິດໃຈອິດສາບັງບຽດຂ້າລູກຂອງຕົນ, ຢ່າເວົ້າວ່າລູກທັງສີ່ໄດ້ຕາຍ ແລ້ວ ນຳໄປເຜົາຈຶ່ງເກີດເປັນຕົ້ນຈຳປາທັງສີ່ຢ່າຈຶ່ງຮັກແພງປານວ່າແກ່ນຕາ ທັງ ສອງເບື້ອງ. ຂຸນສາວໃຊ້ໄດ້ຮູ້ດັ່ງນັ້ນຈຶ່ງທຳທ່າພາກັນເລາະເກັບດອກໄມ້ ໄປ

ໃກ້ງຕົ້ນຈຳປາທັງສີ່ປະກົດວ່າ ໄດ້ກິ່ນຫອມຂອງດອກຈຳປາເອົາແທ້ເອົາ ວ່າ ດັ່ງນັ້ນຈຶ່ງພາກັນຂໍຄືນລະດອກນຳຍ່າພໍ ໄດ້ປັກໃສ່ເກົ້າຜົມ, ຍ່າບອກວ່າໃຫ້ບໍ່ໄດ້ ເດັດຂາດສຳລັບດອກຈຳປາ ສ່ວນດອກອື່ນໆນັ້ນຢາກໄດ້ທີ່ໃດເອົາໂລດ.

ເມື່ອຂໍບໍ່ໄດ້ ຊຸມສາວໃຊ້ຈຶ່ງພາກັນກັບຄືນສູ່ວັງພ້ອມທັງນຳເອົາດອກ ໄມ້ ຈຳນວນໜຶ່ງຂຶ້ນຖວາຍ ແລ້ວກໍລາຍງານສະພາບການພາຍໃນສວນຕັ້ງແຕ່ຕົ້ນ ຈົນເຖິງປາຍ, ຝ່າຍນາງອັກຄີຜູ້ໃຈສາໂຫດ ໄດ້ຟັງດັ່ງນັ້ນກໍຍິ່ງຕື່ນຄວາມ ຄຽດ ແຄ້ນໜັກຂຶ້ນຈັກໃຊ້ດັ່ງບົດກອນຂຽນວ່າ:

ແຕ່ນັ້ນອັກຄີເຈົ້າ ປາປັງຄືນບາບ
ໃຈຫຍາບຊ້າ ປອງຂ້າໜໍ່ພຸດໂທ
ນາງກໍ່ຄຶດຮ່ຳແລ້ວ ມີຜ່າພະຫລຽງອີກ
ສັ່ງວ່າຕາຍເປັນຜີ ເກີດມີມາໄດ້
ອັ້ນນສາລະພິດແທ້ ຊິໂງຕອດພາຍລຸນ ແລນໍ
ກູຈັກປຸນໄປປອງ ຂ້າເສຍຈຶ່ງແທ້
ໃຫ້ມັນສູນເສຍສ້ຽງ ແນວນາມມຸດມອດ
ເຂາະຂອດຊຸດກົ່ນຖົ້ມ ໄຫລນ້ຳລ່ອງໜີ

ຄິດໄດ້ແລ້ວກໍຟ້າວເຂົ້າໄປຫາພະຍາຈຸນລະນີເພື່ອຂໍອະນຸຍາດອອກໄປທ່ຽວ ຊົມສວນອີກເປັນຄັ້ງທີສອງ, ຝ່າຍພະຍາຈຸນລະນີກໍໄດ້ອະນຸຍາດຕາມຄຳ ຮ້ອງ ຂໍຂອງນາງອັກຄີຕໍ່ມານາງອັກຄີຈຶ່ງສັ່ງໃຫ້ຫ້າງຫາກະກຽມຂະບວນ ໄປທ່ຽວຊົມ ສວນ.

ນີ້ລຸນມາຂະບວນແຫ່ນາງອັກຄີອອກໄປຊົມສວນກໍໄດ້ເຄື່ອນອອກຈາກ ຕົວ ເມືອງມີສາວສະໜົມກົມມະວັງແຫ່ແຫນແພນກັ້ງເຖິງ 300 ຄົນຟັງສຽງເສບ ດັ່ງກ້ອງລະງົມໄປທົ່ວ. ພໍຂະບວນໄປເຖິງນາງອັກຄີກໍອອກຄຳສັ່ງໃຫ້ຄົນ ໄປ

ຫາຍ່າເຖົ້າກັບຜົວ, ໂດຍໃຫ້ບອກວ່າເປັນຄຳສັ່ງຂອງນາງອັກຄີເອງໃຫ້ມາ ຂໍດອກຈຳປາທັງສີ່ຕົ້ນ, ເມື່ອຄົນໃຊ້ໄປເຖິງເຮືອນຍ່າຈຶ່ງບອກໃຫ້ຍ່າຮູ້ແຕ່ຍ່າປະຕິເສດວ່າໃຫ້ບໍ່ໄດ້ ຂໍໃຫ້ກັບໄປຂາບທູນພະມະເຫສີໃຫ້ຫານແນ່ເນີ. ດັ່ງນັ້ນຄົນໃຊ້ຈຶ່ງກັບໄປຂາບທູນຕໍ່ນາງອັກຄີນາງຈຶ່ງຮ້າຍເປັນຟືນເປັນໄຟທັງເວົ້າວ່າໄອຍະກາເຖົ້າທັງສອງເປັນພຽງຂ້າຄອຍພົວລະບັດຮັກສາສວນເທົ່ານັ້ນເປັນຫຍັງຈຶ່ງກ້າຂັດຂືນຄຳສັ່ງຂອງເຮົາ ເປັນຫຍັງຈຶ່ງຊິມີຂໍ້ອ້າງວ່າເອົາຕົ້ນຈຳປາເປັນລູກ ສູຈຶ່ງຮີບໄປຖອນເອົາຫມົດທັງດອກທັງຕົ້ນນັ້ນມາໃຫ້ດຽວນີ້, ຖ້າສອງເຖົ້າມັນຂັດຂວາງສູຈຶ່ງຈັບມັດຕີມັນໂລດ.

ພວກຄົນໃຊ້ທັງຊາຍທັງຍິງ ໄດ້ພ້າໄດ້ສຽມແລ້ວກໍພາກັນໄປຫາເຮືອນ ຍ່າພ້ອມທັງບອກວ່າມະເຫສີໃຫ້ມາປ້ຳເອົາຕົ້ນຈຳປາທັງສີ່ໄປຖວາຍເພິ່ນຖ້າ ວ່າທັງສອງຂັດຂືນຈະມີໂທດເຖິງຕາຍ, ເວົ້າແລ້ວເຂົາກໍພາກັນຟັ້ນເຂົ້າດຶງຕົ້ນຈຳປາຫມາຍຈະຖອນເອົາໄປແຕ່ດຶງແນວໃດກໍອິດລາງຄືນຢູ່ຈະເດັດເອົາດອກແຕ່ກໍເດັດບໍ່ຂາດ ຈຶ່ງພາກັນເອົາພ້າເອົາຂວານມາຟັນແຕ່ວ່າຟັນກໍບໍ່ເຂົ້າປານຟັນກ້ອນຫີນ ພ້າບ່ານຂວານເປ້ຫມົດເຮັດໃຫ້ພວກເຂົາງຶດງໍ້ອັດສະຈັນ, ເມື່ອ ຟັນບໍ່ໄດ້ເຂົາຈຶ່ງຊອກສຽມມາຂຸດແຕ່ກໍຂຸດບໍ່ເຂົ້າແຂງປານວ່າສັບກ້ອນຫີນ, ພວກເຂົາຫມົດປັນຍາຈະເອົາຈຶ່ງກັບໄປຂາບທູນນາງອັກຄີໃຫ້ຮູ້.

ນາງອັກຄີກໍໂກດໂກຫາຂຶ້ນພໍປານເອົານ້ຳມັນຖອກໃສ່ໄຟເອົາໂລດ, ຈຶ່ງອອກຄຳສັ່ງດ່ວນໃຫ້ໄປຈັບໂຕຍ່າເຖົ້າກັບຜົວມາດຽວນີ້. ພວກຄົນໃຊ້ຈຶ່ງໄປຈັບຜູກຍ່າເຖົ້າກັບຜົວລາກແກ່ມາໃຫ້ນາງອັກຄີ ເຂົາທັງແກ່ທັງຕີສອງເຖົ້າ ເຮັດໃຫ້ສອງເຖົ້າເຈັບປວດກາງເກືອກລີ້ເລືອໄປຕາມທາງ. ເມື່ອໄປຮອດນາງອັກຄີແລ້ວນາງຈຶ່ງຂູ່ເຖົ້າທັງສອງວ່າ ເຂືອນເຖົ້າແກ່ແລ້ວສັງບໍ່ຮູ້ຮອມຕາຍແຫນໍ້ຖ້າຂັດຂືນກູຈະຂ້າຕາຍຖີ້ມລ້າງຖ້າບໍ່ຢາກຕາຍໃຫ້ໄປເອົາຕົ້ນຈຳປາທັງສີ່ ມາ

ມອບໃຫ້ໝູດຽ້ວນ.

ດ້ວຍຄວາມຮັກຄວາມຫວງໃນຕົ້ນຈຳປາທັງສີ່ສອງເຖົ້າຈຶ່ງຍືມືນົບ ເພື່ອ ໃຫ້ນາງອັກຄີກຸນາ ໂພດພາຍຄົນໄຮ້ ເພາະຈຳປາທັງສີ່ນັ້ນສອງເຖົ້າຮັກແພງ ດັ່ງໜ່ວຍຕາ. ນາງອັກຄີຈຶ່ງສັ່ງໃຫ້ເຂົາຕີເຂົາຂ້ຽນເຖົ້າທັງສອງຈົນສະຫລົບ ໄປ ເພື່ອແລກເອົາຊີວິດໄວ້ ເຖົ້າທັງສອງຈຶ່ງຂໍຍອມວ່າຈະໄປເອົາຕົ້ນຈຳປາ ມາຖວາຍຈາກນັ້ນຈຶ່ງກັບ ໄປສູ່ເຮືອນທັງເຈັບທັງປວດຈາກຮອຍແສ້ທີ່ຖືກຂ້ຽນຕີ.

ກັບມາເຖິງເຮືອນແລ້ວທັງສອງຈຶ່ງເວົ້າກັບຕົ້ນຈຳປາທັງສີ່ວ່າ ເທື່ອນີ້ ມັນເປັນເວນກຳທີ່ລູກຈະຕ້ອງພັດພາກຈາກພໍ່ແມ່ ໄປອີກເທື່ອໜຶ່ງ. ຂໍໃຫ້ລູກຈົ່ງເຫັນແກ່ຊີວິດຂອງພໍ່ແລະແມ່, ດຽວນີ້ມະເຫສີເພິ່ນຕ້ອງການໃຫ້ເອົາລູກ ໄປມອບໃຫ້ເພິ່ນ. ວ່າແລ້ວຕົ້ນຈຳປາທັງສີ່ກໍຂຶ້ນມາຢອງຢູ່ຝາມືເຖົ້າທັງສອງ ຢ່າງງາຍດາຍ.

ຈາກນັ້ນຈຶ່ງນຳເອົາໄປມອບໃຫ້ແກ່ນາງອັກຄີຜູ້ໃຈໂຫດ ນາງຈຶ່ງສັ່ງ ໃຫ້ເຂົາເອົາເຊືອກຜູກຕິດກັນເອົາໄປໄຫລລ່ອງນ້ຳ. ນາງອັກຄີຍັງເວົ້າໃຫ້ ສອງເຖົ້າວ່າ ປະສາຕົ້ນຈຳປາເຈົ້າຍັງຊິຮັກແພງປານລູກປານເຕົ້າ, ຕົ້ນຈຳ ປາລ້າງປູກເອົາຍາມໃດກໍໄດ້ຊິໄປອຶດໄປຢາກອີຫຍັງ. ອັນສູເຈົ້າຫວງເຈົ້າ ແພງນີ້ ດີແລ້ວ ບໍ່ຖືກຕັດຄໍຍ້ອນກິນຈຳປາ.

ເມື່ອໄດ້ທຳລາຍຕົ້ນຈຳປາສົມໃຈແລ້ວ ນາງອັກຄີກໍພາຂະບວນກັບສູ່ພະນະຄອນຂຶ້ນສູ່ທີ່ຜາສາດຢູ່ຢ່າງສະບາຍໃຈ. ສ່ວນຢ່າເຖົ້າກັບຜົວນັ້ນຫລັງຈາກນາງອັກຄີກັບໄປແລ້ວ ກໍພາກັນຮ້ອງໄຫ້ໄປສູ່ທ່ານ້ຳຫວັງຈະໄດ້ເຫັນຈຳປາທັງ ສີ່ແຕ່ກໍຜິດຫວັງບໍ່ຮູ້ວ່າໄຫລໄປທາງໃຕ້ທາງເໜືອຫລືວ່າຈົມລົງວັງນ້ຳກໍບໍ່ຮູ້, ທັງສອງຈຶ່ງຍືມືໄຫວ້ວອນເຖິງພະອິນພະພົມຍົມມະນາຈົ່ງໄດ້ຊ່ວຍປົກປ້ອງຄຸ້ມຄອງຈຳປາທັງສີ່ ໃຫ້ຕະຫລອດປອດໄພ. ນັບແຕ່ຕົ້ນຈຳປາທັງສີ່ຈາກໄປສອງ ເຖົ້າ

ກິນແຕ່ຄວາມທຸກ ໂສກທ່ວມເທິງທຸກເຊົ້າຄ່ຳວັນຄືນ.

## 15. ພະລືສີໂຜດເອົາຈຳປາທັງສີໄປລ້ຽງ.

ກ່າວເຖິງກຸມມານທັງສີ (ຕົ້ນຈຳປາ) ພາຍຫລັງທີ່ນາງອັກຄີໃຈບາບສັ່ງ ມັດຖີ້ມລົງນ້ຳແລ້ວ. ພະຍາຄຸດພະຍານາກກໍໄດ້ອຸ້ມເອົາໄວ້ຈຶ່ງບໍ່ຈົມລົງພື້ນນ້ຳແລະເປັນກະແສລົມພັດຕົ້ນຈຳປາທັງສີໃຫ້ໄຫລຂຶ້ນຕາມລຳແມ່ນ້ຳຢ່າງວ່ອງໄວ, ຕົ້ນຈຳປາທັງສີໄຫລໄປໄກແລະເປັນເວລາເຫິງນານຫລາຍເດືອນຝູງນາກທີ່ຄອຍເຝົ້າຮັກສາ ຈຶ່ງສົ່ງຕົ້ນຈຳປາທັງສີໄປໃຫ້ພະລືສີ. ກໍຈຶ່ງໄປເຖິງແຫ່ງຫ້ອງຄີ ລີໄພຍະນາດ ກາຍຂອບຂັ້ນເມືອງບ້ານແຫ່ງຄົນ ກາຍເຂົາແກ້ວໄພສີນຍັກ ຢູ່ເມືອສູ່ເຈົ້າລືສີແກ້ວ ຍອດທຳດັ່ງບົດກອນຂຽນວ່າ :

ພະກໍຈຳສີນສ້າງ ພາວະນາທົງຢູ່
ລິດເດດເຈົ້າ ຍັງກ້າກ່ວາຜີ
ຊື່ວ່າລືສີເຈົ້າ ຕາໄຟວິເສດ
ລິດເດດເຈົ້າ ທະຍານລ້ຳລ່ວງບິນ
ເຈົ້າກໍເນົາໃນຫ້ອງ ໄພສີນແກ້ວກູ່
ເນົາຢູ່ຖ້ຳ ນານລ້ຳທ່ຽງຈີງ

ພະລືສີຕາໄຟອົງນີ້ ມີລູກສິດລູກຫາຢູ່ນຳ, ນີ້ຫນຶ່ງຈົວຜູ້ບົວລະບັດຮັກສາ ພະລືສີໄດ້ລົງໄປຕັກນ້ຳຢູ່ທ່າ ເພື່ອມາໃຫ້ພະລືສີໃຊ້ສອຍແລະຖືເປັນກິດຈະວັດ ປະຈຳວັນຂອງຈົວຕ້ອງປະຕິບັດ. ດັ່ງນັ້ນພະຍານາກແລະເທວະດາຈຶ່ງຊັກ ຈ່ອງ

ເອົາກຸມມານທັງສີ່ເຂົ້າໄປຫາພະລືສີ ໂດຍໄດ້ໄຫລເຂົ້າໄປສູ່ທ່ານ້ຳບ່ອນ ຈົວຈະລົງຕັກນັ້ນເອງ. ເມື່ອຈົວໄປຮອດທ່ານ້ຳຈຶ່ງເຫັນຈຳປາສີ່ຕົ້ນມີກິ່ນອັນ ຫອມຫວນ ທັງມີຜິວພັນອັນຜຸດຜ່ອງງາມຕາ ຈົວລົງໄປຊຸກຫນີແຕ່ກໍຍັງຄືນມາຄືເກົ່າຈົນເຖິງ 3 ເທື່ອ. ຈົວຈຶ່ງຢື້ມືເດັດເອົາດອກຫນຶ່ງ ປາກົດວ່າຫນຽວແທ້ຫນຽວວ່າຈົວດຶງແຮງແທ້ຈຶ່ງຫລຸດອອກດອກຫນຶ່ງ ແລະເຫັນເລືອດໄຫລອອກ ເປັນເລືອດຂອງຄົນ, ເມື່ອເຫັນຜິດສັງເກດຈົວຈຶ່ງຟ້າວຕັກເອົານ້ຳຫາບໃສ່ບ່າມື ຖືດອກຈຳປາກັບສູ່ສາລາທີ່ຢູ່ທັນທີ.

ເມື່ອຮອດຈົວກໍປົງຫາບນ້ຳນຽນມັດໃຫ້ເປັນລະບຽບ, ອັນວ່າດອກຈຳປາດອກນັ້ນກໍສົ່ງກິ່ນອັນຫອມຫວນ ໄປເຖິງບ່ອນນອນຂອງພະລືສີຕາໄຟ, ພະອົງ ຈຶ່ງເວົ້າວ່າຫອມສິ່ງນີ້ດູລ້ຳຕ່າງຫລັງແທ້ນໍ ຫອມສັງແທ້ລືມຕີເບື້ອງຫອບມານີ້ ຮົດຮ່ວງເຮົ້າຫອມເຫົ້າຫົວໄພນີ້. ແຕ່ນັ້ນເຖນຈຶ່ງກົ້ມຂາບໄຫວ້ພະລືສີວ່າຂ້ານ້ອຍລົງໄປທ່ານ້ຳເຫັນດອກຈຳປາເລີຍເດັດມາດອກດຽວຈິງແທ້ ຈົວເວົ້າວ່າກ່ອນຊິເດັດເອົາໄດ້ກໍລຳບາກທີ່ສຸດເພາະດອກມັນຫນຽວມັນແຫນ້ນແຫງ ເມື່ອ ເດັດໄດ້ແລ້ວປາກົດມີເລືອດໄຫລອອກມາເປັນສີແດງ. ດຽວນີ້ຕົ້ນຈຳປາຍັງຄ້າງ ຢູ່ທ່ານ້ຳນັ້ນຢູ່ ຂ້ານ້ອຍຊຸກຫນີແນວໃດກໍບໍ່ຍອມໄຫລຫນີ, ພະລືສີໄດ້ຟັງດັ່ງນັ້ນຈຶ່ງມືນຕາຂຶ້ນເບິ່ງໄຟຈຶ່ງລຸກໄຫມ້ດອກຈຳປາຈົນເຫລືອແຕ່ຝຸ່ນ.

ດ້ວຍເຫດນັ້ນພະລືສີຈຶ່ງພາວະນາຫລິງດູຈຶ່ງເຫັນແຈ້ງດ້ວຍຍານວ່າອັນ ນີ້ຮ້ອຍທີ່ໂພທິສັດເຈົ້າລົງມາໃຊ້ຊາດ, ພະຍາຄຸດພະຍານາກແລະເທພາສັ່ງ ມາໃຫ້ເຮົານຸ້ບຄືນ. ເມື່ອພະລືສີຕາໄຟຄິດດັ່ງນັ້ນແລ້ວ ຈຶ່ງສັ່ງໃຫ້ຈົວຮີບໄປ ນຳເອົາຕົ້ນຈຳປາມາໂດຍໄວ, ຈົວບໍ່ຊ້າຈຶ່ງໄປຫລຸບອຸ້ມເອົາຕົ້ນຈຳປາມາໃຫ້ ພະລືສີຕາມຄວາມປະສົງ.

ພະລືສີຕາໄຟຜູ້ມີລິດເດດອັນແກ່ກ້າ ຈຶ່ງບາຍເອົາຄົນທາລະບັດແລ້ວ ຢ່າງ

ເຂົ້າໄປໃກ້ຕົ້ນຈຳປາທັງສີ່ ພະລືສີຕາໄຟຮູ້ແກ່ໃຈວ່າແມ່ນໜໍ່ໂພທິສັດແທ້ຈິງ ດັ່ງນັ້ນຈຶ່ງມີນຕາຂຶ້ນເບິ່ງ ໄຟຈຶ່ງລຸກໄໝ້ຕົ້ນຈຳປາທັງສີ່ຈົນກາຍເປັນຝຸ່ນ, ຕໍ່ມາພະລືສີຕາໄຟຈຶ່ງເອົານ້ຳເຕົ້າແກ້ວທິດສິງຝຸ່ນ ໄຟພ້ອມທັງເສກຄາຖາດີເຂົ້າໃສ່ ຈຶ່ງກັບກາຍເກີດມາເປັນທ່ອນທ້າວກຸມມານທັງສີ່ຄືເກົ່າ ຊຶ່ງມີຮູບໂສມຜິວ ຜິວອັນສວຍງາມສະເໝີກັນ ຄວາມສູງຄວາມຕ່ຳໃຫຍ່ນ້ອຍພໍ່ງກັນທັງສີ່. ສຳລັບຜູ້ເປັນນ້ອງຫຼ້ານັ້ນຢາກງາມພິເສດກວ່າໝູ່ແນ່ ແລະມີນ້ອຊຂາດ ໄປເພາະຈົວປິດດອກຈຳປາໃນມື້ກ່ອນນັ້ນ, ເພື່ອໃຫ້ທ້າວມນອນມີຄືໝູ່ພະລືສີ ຈຶ່ງເອົາຂເພັງມາເສກຄາຖາຕົບອມີໃຫ້ເປັນບ້ອມພິເສດມີລິດເດດຊໃຫ້ຕາຍໃຫ້ເປັນໄດ້. ພ້ອມກັນນັ້ນພະລືສີກໍເອົາຝ້າຍມາຜູກແຂນທ້າວທັງສີ່ໃຫ້ມີອາຍຸໝັ້ນຍືນຍາວໃຫ້ສິ່ງຂຶດຊຽດຈັງໄຣສູນຫາຍໄປຈາກທ້າວທັງສີ່. ຈາກນັ້ນພະລືສີຈຶ່ງໃສ່ຊື່ໃຫ້ທ້າວທັງສີ່, ການໃຊ້ຊື່ແມ່ນອີງໃສ່ສີຂອງດອກຈຳປາທີ່ມີຄວາມແປກຕ່າງກັນດັ່ງບົດກອນຂຽນວ່າ:

ຄ້ອມວ່າພະກ່າວແລ້ວ ຫາຊື່ນາມມະກອນ
ບາກໍຊອນລອນລຽນ ນິບນີຍໄຫວ
ແຕ່ນັ້ນລືສີເຈົ້າ ຫານາມບຸດຕະລາດ
ຕາມຫົວຕົ້ນດອກໄມ້ ສີນັ້ນຕ່າງກັນ
ຜູ້ພີ່ນັ້ນ ຊື່ວ່າເຊດຖະກຸມມານ
ຕາມສີຂາວ ຊື່ນາມເປັນອ້າຍ
ຖັດມານັ້ນ ສີເຫຼືອງເນື້ອອ່ອນ
ຊື່ວ່າປິດຕະລາດນ້ອຍ ເປັນນ້ອງຖ້ວນສອງ
ຖັດມານັ້ນ ສີແດງເນື້ອອ່ອນ
ພະກິຫາຊື່ໃຫ້ ນາມຕົ້ນບໍ່ໃຫ້ເສຍ

ຊື່ວ່າສຸວັນນະກຸມມານທ້າວ    ໂສມງາມປານຫລໍ່
ຕາມຫນໍ່ເນື້ອ    ເປັນນ້ອງຖ້ອນສາມ
ອັນວ່າໂສມສະອາດເນື້ອ    ນ້ອງມາດຄືນລຸນ
ບຸນເຫລືອຫລາຍ    ເກີດມາພາຍຊ້ອຍ
ຊື່ວ່າເຜັດສະລາດນ້ອຍ    ນັນທະລາດກຸມມານ
ສົມພານມິ    ໂລກລືທັງຄ້າຍ
ຄັນວ່າທານາມເຈົ້າ    ກຸມມານທັງສີ່
ແລ້ວຈຶ່ງຢືນບອກໃຫ້    ຝູງທ້າວຊູ່ອັນ ເຈົ້າເອີຍ

ຕໍ່ມາພະລືສີຈຶ່ງນິລະມິດເຮືອນໃຫ້ທ້າວທັງສີ່ຢູ່ ມີທັງເຄື່ອງກິນທຸກຢ່າງ ຢູ ທ່າງທ້າວທັງສີ່ສະຫນຸກຢູ່ສະຫນຸກກິນແລະຮ່ຳຮຽນສາຕະສິນນຳພະລືສີຕາໄຟ ຈົນໄດ້ຄາຖາອາຄົມອັນມີລິດມີເດດສົບປະການຈະເຮັດຫຍັງທຳຫຍັງໄດ້ ດັ່ງໃຈນັກໃຈປາຖະຫນາ, ທ້າວທັງສີ່ໄດ້ຢູ່ເຝົ້າປົວລະບັດພະລືສີຕາໄຟເປັນ ໑໐ ລາຊ້ານານດ້ວຍຄວາມເຄົາລົບບູຊາ.

# 16. ພະອິນແປງເພດເປັນຕາຜ້າຂາວມາບອກ ເລື່ອງທ້າວທັງສີ.

ຢ້ອນກ່າວເຖິງນາງຄຳກອງຜູ້ເປັນແມ່ຂອງທ້າວທັງສີນາງກໍຕົກເປັນ ຂ້ອຍຂ້າເຂົາໃຊ້ທຸກວັນ ທຸກຄ່ຳເຊົ້ານາງກໍຕ້ອງຕັກນ້ຳຫາບຈອກຫາບບອນມາເກືອໝູ ຄັນນາງຊັກຊ້າໄປບໍ່ທັນເຂົາກໍຂ້ຽນກໍຕີ ທັງດ່າທັງປ້ອຍ ເປັນທີ່ໜ້າເວດທະນາສົງສານ. ທຸກຄ່ຳເຊົ້າວັນຄືນນາງກໍມີແຕ່ໄຫ້ນ້ຳຕາອາບແກ້ມຢູ່ພໍປານນັ້ນ ທັງພ້ອງຄິດເຖິງພໍ່ແມ່ທີ່ໄດ້ລ້ຽງມາພາໃຫ້ມີຄວາມສຸກກາຍສະບາຍໃຈ, ບັດນີ້ຕົກມາເປັນກຳພ້າແຖມຊ້ຳຕື່ມພອຍ ຄິດໄປຄິດມານາງກໍຢາກຕາຍໃຫ້ແລ້ວກຳແລ້ວເວນ.

ນາງຄຳກອງຄິດເຖິງອະດີດຄາວ ເມື່ອພະຍາຈຸນລະນີເອົານາງມາ ເປັນເມຍພາຢູ່ໃນທໍ່ຜາ ສາດລາຊະມຸນທຽນຈິນນາງຖືພາຄາທ້ອງ, ແຕ່ເວລາ ອອກລູກເຂົາພັດເອົາຜ້າມັດຕາໄວ້ ເມື່ອລູກເກີດມາກໍບໍ່ໄດ້ເຫັນໜ້າຈັກວ່າ ເຂົາເອົາໄປຂ້າໄປແກວງຢູ່ທາງໃດບໍ່ຮູ້, ນາງຄຳກອງ ໄດ້ແຕ່ຍົກມືໄຫວ້ວອນເຖິງ ພະອິນພະພົມໃຫ້ຊ່ວຍປົກປັກຮັກສາແລະ ເບິ່ງແຍງລູກໃຫ້ຖ້າຫາກຍັງມີຊີວິດຢູ່.

ຄຳໄຫວ້ວອນຂອງນາງ ໄດ້ຮ້ອນໄປເຖິງພະອິນຢູ່ບົນສະຫວັນ ພະອິນ ຈຶ່ງຫລຽວສ່ອງລົງມາໂລກເມືອງຄົນຈຶ່ງເຫັນນາງຄຳກອງພວມໄດ້ຮັບຄວາມທຸກລະກຳລຳບາກເຂົາໃຊ້ລ້ຽງໝູ, ພ້ອມດຽວກັນກໍເຫັນທັງໄອຍະການເຖົ້າຜົວ ເມຍທີ່ຢູ່ໃນສວນ ພວມມີຄວາມຄຶດຮອດຄຶດເຖິງຮ້ອງໄຫ້ຮ່ຳໄຮ ເຖິງທ້າວທັງສີແລະ

ໄດ້ຫລິງເຫັນທ້າວຫົງສີຊົງເປັນໜໍ່ໂພທິສັດພວມສູດຮຽນເວດມົນຄາຖາຢູ່ ນຳພະລືສີຕາໄຟ.

ດັ່ງນັ້ນຈຶ່ງສັ່ງໃຫ້ພະອິນລົງມາບອກຄວາມຈິງຊູ່ທ້າວຫົງສີໃຫ້ໄດ້ຮູ້ແລະ ນຳພາທ້າວຫົງສີຄືນເຂົ້າສູ່ເມືອງ, ອິນທິລາດທ້າວຈຶ່ງສະເດັດລົງມາເຖິງທີ່ຢູ່ຂອງພະລືສີຕາໄຟ ແລ້ວເຂົ້າໄປຫາທ້າວຫົງສີ ໂດຍໄດ້ແປງເພດເປັນຕາຜ້າຂາວມືຖືທຽນໄຕ້ເຂົ້າໄປຫາແລ້ວປຸກທ້າວຫົງສີລຸກຂຶ້ນ, ເມື່ອທ້າວຫົງສີລຸກຂຶ້ນນັ່ງ ກໍເຫັນແສງໄຟຮຸ່ງທົ່ວຫ້ອງ ເຫັນທັງຕາຜ້າຂາວນັ່ງຢູ່ ທ້າວຫົງສີຈຶ່ງຖາມ ວ່າເຈົ້າຜູ້ວິເສດທ່ານຢູ່ແຫ່ງໃດໜີຈຶ່ງໄດ້ມາຫາຜູ້ຂ້າໃນຍາມເດິກດື່ນທ່ຽງ ຄືນດີແນວນ໌?

ພະອິນທີ່ແປງເປັນຕາຜ້າຂາວຈຶ່ງຕອບທ້າວວ່າພໍ່ນີ້ຢູ່ດ່ານດ້າວອົງ ເຂດເມືອງໄກແຕ່ມີຈິດໃຈຄິດນຳຜູ້ທ້າວ ຈຶ່ງໄດ້ປຸ້ນດາຫາງສະເພົາທອງ ເລີຍລ່ອງມາຈອດຢັ້ງສະເພົາແກ້ວທ່າເມືອງ, ພໍ່ຈຶ່ງມາບອກເຈົ້ານ້ອຍຍອ່ອນກຸມມານໃຫ້ຮູ້ຕົ້ນສາຍປາຍເຫດທັງໝົດທີ່ເປັນມາ ອັນວ່ານາມຊາດເຊື້ອຂອງ ທ້າວຫົງສີນັ້ນແມ່ນເຊື້ອສາຍຂອງພະລືສີແຕ່ປະການໃດ, ພວກຫລານຫົງສີແມ່ນ ເຊື້ອສາຍຂອງເມືອງປັນຈາດັ່ງບົດກອນຂຽນວ່າ :

ພໍ່ຈັກເລົ່າແຕ່ເຄົ້າ        ທ້າວເກີດມີມາ
ຫລານຈຶ່ງພາກັນຟັງ        ຈື່ຈຳເອົາໄວ້
ຍັງມີເມືອງໃຫ່ຍກວ້າງ        ຮຽກຊື່ປັນຈາ
ລາຊາທົງ        ສືບເມືອງສົມສ້າງ
ຊື່ວ່າພະຍາຈຸນລະນີທ້າວ        ປິຕາເປັນພໍ່ ເພື່ອແລ້ວ
ອັນວ່າແມ່ເອກຕົ້ນ        ຮຽກຊື່ອັກຄີ
ເປັນເທວີ        ເອກໂທນຄົນເຄົ້າ

ອັນວ່າມານດາເຈົ້າ　　ບາບຸນທັງສີ
ຮຽງຮ່ວມຊ້ອນ　　ເປັນນ້ອຍປີດປາຍ
ເດີນແຕ່ເຕົ້າ　　ເຊື້ອເຜົ່າຕາຍາຍ ເຈົ້ານັ້ນ
ຢູ່ໃນເມືອງຈັກຂິນ　　ໂຍດຍາວໄກລ້ຳ
ອັນວ່າລາຊາທ້າວ　　ທົ່ງເມືອງທົດສະລາດ
ຝູງໄພ່ນ້ອຍ　　ຍໍຍ້ອງທົ່ວແດນ
ພະກໍມີລູກນ້ອຍ　　ແກ້ວແກ່ນກັນລະຍາ
ຊື່ວ່ານາງປະທຸມມາ　　ຮູບງາມປານແຕ້ມ
ແຕ່ວ່າເວລາກ້ຳ　　ກຳເຖິງເມືອງນອດ
ຮຸງໃຫ່ຍ້ຮາຍ　　ກິນສ້ຽງບໍ່ຫລໍ
ຍັງແຕ່ປະທຸມມາແກ້ວ　　ກັນລະຍານາງນາດ
ພະບາດຊຸກເຊື່ອງໄວ້　　ເຫລືອແທ້ພູດຮວ
ພະກໍເອົານາງເຂົ້າ　　ໃນກອງອັດແຈບ
ຝັງຝາກໄວ້　　ເຫວະຫ້າວທົ່ວແດນ ແທ້ນາ

ຕາຜ້າຂາວເລົ່າຕໍ່ໄປວ່າ ເມື່ອເອົານາງປະທຸມມາໃສ່ໄວ້ໃນກອງແລ້ວ ພໍ່ແມ່ກໍຖືກຮຸ້ງກິນຕາຍໝົດ ເມືອງຈັກຂິນເປົ່າແປນເປັນຮ້າງ. ຕໍ່ມາພະຍາ ຈຸນລະນີ້ຜູ້ຄອງເມືອງປັນຈາໄດ້ນຳພົນອອກປ່າຈຶ່ງໄປພົບກວາງຄຳຈຶ່ງຄິດຢາກ ໄດ້ກວາງຄຳເລີຍພາພົນທັງຫລາຍໄລ່ຕິດຕາມກວາງ, ໃນທີ່ສຸດພະຍາຈຸນລະນີ ກໍຫລົງພັດພາກຈາກໝູ່ເສນາອຳມາດຈຶ່ງໄດ້ໄປເຖິງເມືອງຈັກຂິນ, ຈຶ່ງໄດ້ນາງປະທຸມມາຢູ່ໃນກອງມາເປັນເມຍແລ້ວປ່ຽນຊື່ມາເປັນນາງຄຳກອງ.

ເວລາລ່ວງມາກໍຈຶ່ງໄດ້ປະສູດກຸມມານທັງສີ ແຕ່ວ່ານາງອັກຄີ້ຜູ້ໃຈບາບຄິດຂ້າກຸມມານທັງສີ ມັນຈຶ່ງໃຫ້ຄ່າຈ້າງລາງວັນແກ່ເສນາອາມາດທຸກຄົນ ເປັນ

ການປິດປາກ, ເມື່ອກຸມມານທັງສີ່ຈະປະສູດນັ້ນນາງອັກຄີໄດ້ເອົາຜ້າມັດ ຕາໄວ້ແລ້ວເອົາໝາມາປ່ຽນ, ສ່ວນກຸມມານທັງສີ່ເຂົາໄດ້ເອົາໃສ່ໃນໄຫເອົາໄປໄຫລລ່ອງນ້ຳ; ຫລັງຈາກນັ້ນເຂົາຈຶ່ງເອົາໝາຂຶ້ນໄປຂາບທູນໃຫ້ພະຍາຈຸນລະນີຣູ, ພະອົງຈຶ່ງຮ້າຍດ່ານາງຄຳກອງແລ້ວປົດຖານະຈາກເປັນມະເຫສີລົງ ມາເປັນຂ້ອຍຂ້າລ້ຽງໝູຢູ່ນຳຈ່າໝູຫລວງ, ດຽວນີ້ແມ່ຂອງທ້າວທັງສີ່ພວມໄດ້ຮັບຄວາມທຸກລະກຳລຳບາກແສນສາຫັດ.

ຕາຜ້າຂາວເລົ່າຕໍ່ວ່າ ສ່ວນກຸມມານທັງສີ່ທີ່ຢູ່ໃນໄຫນັ້ນຍ້ອນພະຍາຄຸດ ພະຍານາກຊ່ອຍຈຶ່ງບໍ່ຈົມ, ແລ້ວໄຫກໍໄຫລໄປຄ້າງຢູ່ທ່ານ້ຳບ່ອນໄອຍະກາເຖົ້າຜົວເມຍທັງຄູ່ ທີ່ຢູ່ຮັກສາສວນດອກໄມ້ສອງເຖົ້າໄດ້ເອົາກຸມມານທັງສີ່ໄປ ລ້ຽງເປັນລູກຈົນໃຫຍ່, ຕໍ່ມານາງອັກຄີຣູ້ຈຶ່ງເອົາເຂົ້າຕົ້ມເຂົ້າໜົມໃສ່ງວນ ເບື່ອກຸມມານທັງສີ່ຈົນຕາຍ, ເມື່ອຍ່າເຖົ້າກັບຜົວໄດ້ເຜົາສົບເຈົ້າທັງສີ່ຈຶ່ງເກີດເປັນຕົ້ນດອກຈຳປາ, ຢູ່ມານາງອັກຄີໃຈບາບຮູ້ເລື່ອງຈຶ່ງສັ່ງໃຫ້ເອົາຕົ້ນຈຳປາໄຫລນ້ຳເສຍ. ດ້ວຍວ່າພະຍາຄຸດພະຍານາກແລະອິນພົມໄດ້ຊູຊ່ອຍຈຶ່ງເຮັດໃຫ້ ຕົ້ນຈຳປາໄຫລມາຄ້າງຢູ່ທ່ານ້ຳຂອງພະລືສີຕາໄຟແລ້ວພະລືສີຜູ້ມີລິດເດດແກ່ ກ້າຈຶ່ງໄດ້ຊຸບໂຜດເອົາທ້າວທັງສີ່ຄືນມາ, ຕາຜ້າຂາວບອກວ່າດຽວນີ້ຈະມາ ຮັບເອົາທ້າວທັງສີ່ຄືນເມືອເມືອງຫາແມ່ດັ່ງບົດກອນຂຽນວ່າ :

ບັດນີ້ຈັກເອົາສີ່ທ້າວ ໄປສົ່ງເຖິງເມືອງ
ເພື່ອວ່າມານດາບາ ເວດທະນາຍົມຍ້ອຍ
ເມື່ອນັ້ນສີ່ພີ່ນ້ອງ ໄດ້ຍິນຂ່າວກິຍາ
ອົນລະຫາໄຫລ ຫລົ່ງລົງຍົມຍ້ອຍ
ກໍຈຶ່ງພາກັນໄຫ້ ພານມະນາຄືນປະເສີດ
ຟູ້ຂ້າເກີດຊາດນີ້ ແສນຊ້ຳຍາກກໍ່ໃຈ

ບັດນີ້ພະພໍ່ເຈົ້າ ມາໂຜດກຸມາ
ຝູງຂ້າເອົາເປັນປິຕາ ຮ່ວມສະເພົານຳເຈົ້າ
ທີ່ວ່າຄຸນໂນເຈົ້າ ພະລືສີມມາກ
ພະກໍລ້ຽງຍາກແທ້ ສອນໃຫ້ສາຕະສິນ
ຝູງຂ້າຂໍເມືອລາເຈົ້າ ພະລືສີເສຍກ່ອນ
ຄັນວ່າພະພໍ່ໃຫ້ ໄປແທ້ບໍ່ຂືນ
ຂໍໃຫ້ປິຕາເຈົ້າ ກຸມາເຍື້ອນໂຜດ
ອັນວ່າວັນຮຸ່ງເຊົ້າ ຊິເຫັນຮູ້ຮ່າງຄວາມ ພໍ່ເອີຍ

ຈາກນັ້ນພະອິນທີແປງເປັນຕາຜ້າຂາວຈຶ່ງສັ່ງລາທ້າວທັງສີກັບຄືນສູ່ສະເພົາ ທັງໄດ້ສັ່ງຕື່ມວ່າມື້ອື່ນເຊົ້າໃຫ້ໄປຫາພໍ່ຢູ່ສະເພົາ. ກຸມມານທັງສີຈຶ່ງຍໍມືນົບ ຮັບເອົາຄຳສັ່ງຂອງພໍ່ຜ້າຂາວ, ຝ່າຍຕາຜ້າຂາວກັບມາເຖິງແຄມທ່າກໍໄດ້ນິລະມິດສະເພົາໃຫ່ຍຂື້ນ ພ້ອມອາຫານການກິນແລະເຄື່ອງໃຊ້ສອຍຕ່າງໆມີຄົບບໍລິບູນ ແລ້ວຈຶ່ງນຳສະເພົາໄປຈອດຄອຍຖ້າທ້າວທັງສີຢູ່ກາງນ້ຳ.

## 17. ທ້າວທັງສີ່ລາຈາກພະລືສີ.

ພາຍຫລັງຕາຜ້າຂາວກັບໄປແລ້ວ, ທ້າວທັງສີ່ກໍໄດ້ປຶກສາກັນວ່າ ທ່ານ ຜູ້ນັ້ນຕ້ອງແມ່ນພະອິນທີ່ມາຈາກສວງສະຫວັນຈຶ່ງສາມາດຮູ້ໄດ້ຊາດກຳເນີດ ຂອງພວກເຮົາ, ແຕ່ແນວໃດກໍ່ຕາມທັງສີ່ເວົ້າວ່າຕື່ນເຊົ້ານີ້ເຮົາຕ້ອງໄປທ່ານກໍ່ເສຍກ່ອນເພື່ອສັງເກດເບິ່ງວ່າມີສະເພົາແທ້ບໍ? ພໍຕື່ນເຊົ້າທັງສີ່ກໍໄປສູ່ທ່ານກໍ່ຈຶ່ງໄດ້ເຫັນສະເພົາລຳໃຫຍ່ຈອດຢູ່ກາງວັງ ເຮັດໃຫ້ທັງສີ່ມີຄວາມອັດສະຈັນໃນ ໃຈເປັນຢ່າງຍິ່ງ.

ດັ່ງນັ້ນ, ທັງສີ່ຈຶ່ງຟ້າວກັບຄືນມາຫາພະລືສີ ແລ້ວເຂົ້າໄປໄຫວ້ພະລືສີຕາໄຟຜູ້ເປັນພໍ່ ໂດຍໄດ້ຂໍອະນຸຍາດຈາກພະລືສີເພື່ອເດີນທາງຮ່ວມກັບຕາຜ້າ ຂາວເຈົ້າຂອງສະເພົາ, ທັງສີ່ບອກກັບພະລືສີວ່າພວກຕົນຂໍໄປກັບສະເພົາລຳ ນີ້ເພື່ອກັບຄືນສູ່ບ້ານເກີດເມືອງນອນຫລອນວ່າບຸນມີຄົງຈະໄດ້ພົບພໍ່ແມ່ຂອງພວກຕົນຈຶ່ງຂໍໃຫ້ພະລືສີເຈົ້າອິດູກຸນາ ໂຜດພາຍອະນຸຍາດໃຫ້ຕາມຄຳອ້ອນວອນ ທຸກປະການແນ່ທ້ອນ.

ພະລືສີຈຶ່ງບອກວ່າ ເລື່ອງນີ້ຕົນເອງບໍ່ຂັດຂືນແຕ່ປະການໃດໝົດ, ແຕ່ ວ່າ ສາຍນ້ຳຈາກນີ້ໄປເຖິງເມືອງປັນຈານັ້ນໄກແສນໄກ ມີທັງພິສາງເສືອກັນດານ ຍັກໃຫຍ່ຕັ້ງດ່ານໄວ້ຫລາຍຊັ້ນໂຍດຍາວ, ສະນັ້ນຕ້ອງມີລິດເດດກ້າແຂງຈຶ່ງຈະ ຜ່ານໄປສູ່ເມືອງປັນຈາໄດ້, ພວກລູກມາຢູ່ນຳພໍ່ກໍດົນແລ້ວ ພໍ່ເອງກໍໄດ້ສິດສອນ

ສາຕະສິນໃຫ້ຫລາຍແລ້ວ ຖ້າຈະພາກັນກັບຄືນສູ່ເມືອງແຫ່ງພໍ່ຈະສິດເດດ ກ້າທະນູໃຫ້ແກ່ບາ ໃຫ້ລູກຮຽນເອົາໄວ້ສອນສືບສັບພະສິ່ງ.

ກ່ອນຈະສອນສາຕະສິນອັນສຸດທ້າຍໃຫ້ພະລືສີໄດ້ບອກທ້າວທັງສີໃຫ້ໄປ ຂໍເຍື້ອນເວລານຳພໍ່ຜາຂາວເສຍກ່ອນແລ້ວຈຶ່ງຫາດອກໄມ້ເຜິ້ງທຽນມາຫາ ພໍ່ ທ້າວທັງສີໄປບອກແກ່ຄົນທ່ານນັ້ນແລ້ວກໍຍິ່ງມີລະນຶກເຖິງບຸນຄຸນຂອງພະລືສີແລ້ວ ກໍ່ເສກຄາຖາເປົ່າໃສ່ນ້ຳໆຈຶ່ງເປັນແຜ່ນແຂງກະດ້າງ ທ້າວທັງສີຈຶ່ງໄຕ່ໜ້ານ້ຳອອກໄປສູ່ສະເພົາ, ຝ່າຍອິນຕາຜາຂາວໄດ້ເຫັນກໍເອີ້ນເອົາທ້າວທັງສີຂຶ້ນສູ່ສະເພົາດ້ວຍຄວາມຮັກແພງ ແລະຖາມວ່າເປັນແນວໃດລູກໄດ້ລາພະລືສີແລ້ວບໍ? ທັງສີຕອບວ່າ ໄດ້ລາແລ້ວພໍ່ພະລືສີກໍບໍ່ຫ້າມຫຍັງ, ແຕ່ເພິ່ນສັ່ງໃຫ້ມາຂໍໂຈະການເດີນທາງນຳພໍ່ຜາຂາວໄວ້ກ່ອນມື້ໜ້າຄ່ອຍເດີນທາງ ເພາະວ່າພວກລູກທັງສີ ຍັງຈະໄດ້ຫາດອກໄມ້ທູບທຽນໄປຂາບຄາລະວະພໍ່ພະລືສີກ່ອນແລ້ວພະລືສີຈັ່ງຊິວາງສິນສອນດາບດີດວງກ້າກັບທັງຕະບອງເພັດ. ຝ່າຍຕາຜາຂາວຈຶ່ງບອກວ່າ ຍິນດີລໍຖ້າບໍ່ຟ້າວບໍ່ຟັ່ງຫຍັງຫມົດຍິນດີຖ້າທ້າວໄດ້, ກ່ອນທ້າວທັງສີຈະລາກັບຄືນຫາພະລືສີ, ຕາຜາຂາວຈຶ່ງສັ່ງໃຫ້ຄົນໃຊ້ນຳເຄື່ອງກິນຕ່າງໆມາໃຫ້ທ້າວທັງສີ ກິນຢ່າງອີ່ມຫນຳສຳລານ, ເມື່ອກິນອາຫານອີ່ມແລ້ວປະກົດວ່າຮູບໂສມແຕ່ລະຄົນຍິ່ງງາມຂຶ້ນກວ່າເກົ່າ ເພາະໄດ້ກິນອາຫານທິບຂອງພະອິນປຸງແຕ່ງ.

ກ່າວເຖິງພະລືສີ, ມື້ນັ້ນພະອົງໄດ້ນັ່ງພາວະນາທຳຈິດຫລິງເຫັນວ່າອິນ ນັ້ນຫາກແມ່ນອິນຕາເຈົ້າເຫວາລົງມາຫມາຍຈະເອົາທ້ອນທ້າວຄືນເຂົ້າສູ່ ເມືອງ ດັ່ງນັ້ນພະລືສີຈຶ່ງອອກຈາກຫ້ອງພາວະນາມານັ່ງຢູ່ສາລາ ເພື່ອຄອຍຖ້າທ້າວທັງສີ. ຕໍ່ມາທ້າວທັງສີຈຶ່ງພາກັນຍໍຂັນດອກໄມ້ທູບທຽນເຂົ້າໄປຂາບໄຫວ້ຕໍ່ພະລືສີ ທ້າວທັງສີໄດ້ຍົກຕີນພະລືສີໃສ່ຫົວ ພະລືສີໄດ້ບອກທ້າວທັງສີວ່າພວກລູກ ແມ່ນເຊື້ອກະສັດ ບັດນີ້ພະອິນໄດ້ລົງຊິດຊ່ອຍເຈົ້າແລ້ວ, ອັນວ່າຕາຜາຂາວນາຍສະ

ເພົານັ້ນກໍຫາກແມ່ນອິນຕາຕົນອາດຈິງແລ້ວ ເພື່ອພາທ້າວທັງສີ່ຄົນສູ່ ເມືອງ ເພາະວ່າດຽວນີ້ແມ່ຂອງເຈົ້າພວມຕົກທຸກລຳບາກແສນສາຫັດດັ່ງບົດກອນຂຽນ ວ່າ:

ບັດນີ້ອິນຕາເຈົ້າ ຊິເອົາບາໄປສິ່ງພໍ່
ເຈົ້າຈັກໄດ້ພາບແພ້ ລິດທີກາໂລກລື
ແຕ່ລູກມາຢູ່ນີ້ ໄດ້ຂວບຫລາຍປີ
ພໍ່ຍັງບໍ່ທັນໄດ້ວາງຂອງດີ ໃສ່ມືພາທ້າວ
ອັນວ່າອາຄົມພ້ອມ ຂອງດີທຸກສິ່ງ
ອັນວ່າຂອງນີ້ງແກ້ວ ຮຽນແລ້ວຊູ່ອັນ
ບັດນີ້ລູກຈັກຄືນເມືອຫ້ອງ ເມືອງຫລັງບ້ານເກົ່າ
ພໍ່ຈັກວາງໃຫ້ເຈົ້າ ທະນູແກ້ວດາບດີ ລູກເອີຍ

ຈາກນັ້ນ, ພະລືສີຈຶ່ງສັ່ງໃຫ້ລູກສິດເອົາທະນູສິນດາບດີດວງກ້າພ້ອມທັງ ຕະ ບອງເຜັດອອກມາແລ້ວຈຶ່ງມອບໃຫ້ທ້າວທັງສີດີພະຂັນດວງແກ້ວປັນໃຫ້ຊູ່ ຄົນ ອັນວ່າທະນູສິນທັງດາບຍີ່ຍົ້ນໃຫ້ສາມທ້າວພີ່ຊາຍ ພ້ອມທັງບອກວ່າທະນູ ສິນ ແກ້ວດວງດີອັນຍິ່ງລິດເດດກ້າຈຶ່ງແຫ່ມມານ ຄັນຈັກຍິງໃຫ້ເປັນກະດານ ໜີ້ ໃຫ້ຍັ້ງໂກບໄວ້ຟູງຂ້າໄພພົນ ແມ່ນຈັກຍິງເປັນນ້ຳເປັນໄຟເຜົາແຜ່ນຄົນ ຈັກ ຍິງໃສ່ຜາໃຫ້ຍກວາງທະລາຍມ້າງມຸ່ນກະຈາຍ ແມ່ນແຕ່ຈະໃຊ້ໄປວຽກ ງານ ແນວໃດກໍໄດ້ ເພາະວ່າສອນນີ້ສາມາດປາກຕ້ານຈາລະຈາໄດ້ດັ່ງຄົນ, ຍິງ ໄປ ແລ້ວຄືນມາຂອງເກົ່າ ຄັນວ່າຍິງໃສ່ນ້ຳກໍຂາດເປັນວັງ ຍິງໃສ່ປ່າໄມ້ງກໍ ຫັກ ມຸ່ນທະລາຍ ສັດປ່າກໍຈະຕາຍໝົດ ຄັນວ່າຍິງໄປມະຫາສະໝຸດຄູຄນາກທໍລະ ນີກໍແຕກຕື່ນ, ອັນວ່າເສືອເສືອພ້ອມກັນດານຍັກໃຫ້ຍແນວໃດກໍບໍ່ຕ້ອງຢ້ານຕ້ອງ ກົວ ກັບທັງພະຂັນຫລັ້ນແກ້ວຂອງດີດວງດາບລິດຜາບແພ້ມານຮ້າຍອ່ອນໂຍນ

ວ່າແຕ່ຍໍແກ່ວງເບື້ອງດວງຕາບພະອົນແສງຜິສາງທັງກັນດານຂາດຄໍຕາຍພ້ອມ

ສ່ວນເຜີດຊະລາດທ້າວນັນທະລາດກຸມມານ (ຜູ້ນ້ອງຫລ້າ) ສິມພານມິ ກົວ 3 ອົງອ້າຍ ເພາະນັ້ນີ້ວິເສດຖ້າຕ້ອງການສິ່ງໃດໃຊ້ນ້ອມື້ຊົ່ເອົາໂລດຖ້າຊົ່ໃສ່ແມ່ນຈົ້າທຳເຂີນຂາດເປັນວັງ ຊົ່ໃສ່ຫີນຜາພູມຸ່ນທະລາຍກະຈາຍຟົ້ງ ຖ້າຊົ່ໃສ່ສັດທີ່ຕາຍແລ້ວກໍສາມາດເກີດຄືນມາໄດ້ດັ່ງເກົ່າ ແມ່ນແຕ່ຄົນທີ່ຕາຍໄປໄດ້ຫລາຍປີຍັງແຕ່ກະດູກກໍຊົ່ຄືນມາໄດ້, ພ້ອມນັ້ນພະລືສີຍັງມອບຕະບອງເພັດແລະ ດາບແກ້ວລິດທີ່ກ້າກ່ວາຜີໃຫ້ຕື່ມອີກ. ຕໍ່ມາພະລືສີກໍເອົານ້ຳເຕົ້າແກ້ວຫົດສົງໃຫ້ທ້າວທັງສີ່ເພື່ອໃຫ້ລິດເດດກ້າທັງຄ້າຍໂລກລື.

ກ່ອນອຳລາຄາຈາກພໍ່ພະລືສີໄປທັງສີ່ກໍໄດ້ພາກັນປັດກວາດອາສົມບົດສາລາບ່ອນທີ່ພະລືສີຢູ່, ຄືນນັ້ນທ້າວທັງສີ່ພາກັນຈື່ມອາໄລອາວອນເຖິງພະລືສີ ແລະ ອາສົມບົດສາທີ່ເຄີຍໄດ້ຢູ່ອາໃສມາເປັນເວລາດົນນານ, ຕື່ນເຊົ້າມາກໍພາ ກັນຕົກນ້ຳພັດວັງຽງແລ້ວກໍເຂົ້າໄປລາພະລືສີດັ່ງບົດກອນຂຽນວ່າ :

ບັດນີ້ຂ້າຈັກລາຈາກເຈົ້າ ອົງພໍ່ລືສີ
ຂ້າຈັກເອົາຕົນໜີ ຈາກອົງເປັນເຈົ້າ
ເອົາຕົນເຂົ້າ ສະເພົາເດີນດັ້ນດຸ່ງ
ຂໍໃຫ້ພະພໍ່ເຈົ້າ ເນົາຫ້ອງຢູ່ກະເສີມ
ຂ້າຈັກຄືນສູ່ກ້ຳ ບ້ານເກີດເມືອງຕົນ
ຂໍຈົ່ງທົງທຳສຸກ ຢູ່ຍືນຍາວຫມັ້ນ
ພະຈົ່ງເນົາໃນຫ້ອງ ຄູຫາແກ້ວກູ່
ພະຈົ່ງເນົາຢູ່ສ້າງ ສິນຊ້ອຍສຳລານ ພໍ່ເອີຍ

ຝ່າຍພະລືສີກໍອວຍພອນໃຫ້ທ້າວທັງສີ່ໄປດີມີໄຊຊະນະຜານແພ້ຂ້າເສິກ ສັດຕູໃຫ້ໄດ້ໄປເຖິງບ້ານເກີດເມືອງນອນຂອງຕົນດ້ວຍຄວາມສະຫວັດດີພາ ປະ

ການ, ຖ້າວ່າມີສິ່ງໃດຫຍຸ້ງຍາກສັບສົນໃຫ້ພາກັນໄຫວ້ວອນລະນຶກເຖິງບຸນ ຄຸນຂອງພໍ່ເມີ. ສ່ວນວ່ານາຍສະເພົານັ້ນຫາກແມ່ນພະອິນຕາເທວະລາດໃຫ້ ລູກເຄົາລົບຢຳແຢງຕໍ່ເພິ່ນ.

ຈາກນັ້ນທ້າວທັງສີ່ຈຶ່ງພາກັນສັ່ງລາທີ່ຢູ່ອາໃສພ້ອມທັງພູມສະຖານເທພາ ຜູ້ຮັກສາຂົງເຂດ ຕະຫລອດຮອດສວນດອກໄມ້ແລະຈົວ ຖຸນທີ່ເຄີຍໄດ້ຢູ່ຮ່ວມກັນ ເມື່ອສັ່ງລາທຸກສິ່ງທຸກຢ່າງແລ້ວ ຈຶ່ງອອກເດີນທາງສູ່ສະເພົາ. ມາຮອດສະເພົາ ຕາຜ້າຂາວກໍໃຫ້ການຮັບຕ້ອນເຂົ້າສູ່ສະເພົາຖືເປັນລູກດ້ວຍຄວາມຮັກ ແພງ ທ້າວທັງສີ່ຢູ່ໃນສະເພົາກໍບໍ່ມີຄວາມເດືອດຮ້ອນເຄືອງໃຈແຕ່ປະການໃດ.

# 18. ສະເພົານຳທ້າວທັງສີ່ອອກ ເດີນທາງຜ່ານເມືອງຍັກ.

ຕາຜ້າຂາວນາຍສະເພົາໄດ້ເວົ້າດອນທ້າວທັງສີ່ວ່າ ວັນນີ້ໄຊຍະໂຊກ ແທ້ຄວນຍ້າຍເບີກສະເພົາ, ທັງສີ່ຈຶ່ງຍິ້ມີນິ ທັງບອກວ່າ ຍິນດີຫຼາຍປະການ, ດັ່ງ ນັ້ນອິນທິລາດທ້າວ (ຕາຜ້າຂາວ) ຈຶ່ງເບີກສະເພົາອອກເດີນທາງດັ່ງບົດກອນຂຽນວ່າ:

ແຕ່ນັ້ນອິນທິລາດທ້າວ ເລີຍເບີກສະເພົາທອງ
ດີແຕ່ລົມພານພັດ ປົ່ນກະໂດງເລີຍຍ້າຍ
ສະເພົາຜັນຜ້າຍ ຕາມລົມເລີຍແລ່ນ
ຫລິງດູນ້ຳຟາດຟັ້ງ ສະເພົາຍ້າຍລ່ວງໄປ
ຫລິງດູມັດສາບ້ອນ ກາງວັງກິນເຫຍື່ອ
ປາສະນ່ອຍພ້ອນ ອານົນຫລົ້ນທີ່ວັງ.

ເພື່ອເປັນການທົດລອງວິຊາທ້າວ ເພັດຊະລາດພູ່ນ້ອງຫລ້າຈຶ່ງມີນວມິພິເສດ ຈຶ່ງເອົານີ້ຊໃສ່ຝູງປາແລ້ວບອກໃຫ້ປາຕາຍ, ປະກົດວ່າປາແລະແຂ້ເງືອກ ງູ ທັງຫລາຍພາກັນຕາຍຟູອ່ານຂຶ້ນ ຕາຜ້າຂາວເຫັນດັ່ງນັ້ນຈຶ່ງກ່າວຫ້າມ ທ້າວ ເອົາໄວ້ຢ້ານວ່າຈະມີບາບກຳນຳສະຫນອງ. ດັ່ງນັ້ນຈຶ່ງບອກທ້າວເພັດຊະລາດ ຊີ້ໃຫ້ປາແລະແຂ້ເງືອກງູມີຊີວິດຄືນມາ ທ້າວກໍໄດ້ປະຕິບັດຕາມທຸກຢ່າງ, ສະ ເພົາໄດ້ເບີກໄປຕາມກະແສລົມໄປເລື້ອຍໆ ຕໍ່ມາສະເພົາກໍໄປຮອດເມືອງຍັກ

ຕາຜ້າຂາວຈຶ່ງບອກທ້າວທັງສີ່ວ່າທີ່ນີ້ແມ່ນເຂດແດນເມືອງຍັກແລ້ວ ມັນໄດ້ຕັ້ນ ຢ່ານນ້ຳໄວ້ຫລາຍຢ່ານ ຊື່ວ່າຄົນທຳມະດາສາມັນບໍ່ສາມາດຈະຜ່ານດ່ານ ມັນໄປໄດ້ລູກເອີຍ, ດັ່ງນັ້ນເຮົາຈຶ່ງບັງສະເພົາໄວ້ຈົນກາຍເມືອງຍັກຈຶ່ງຈອດ ສະເພົາໄວ້ ບໍ່ດັ່ງນັ້ນຢ້ານຈະເກີດສົງຄາມກັນ. ແຕ່ທ້າວທັງສີ່ບອກວ່າບໍ່ເຄີຍ ຄິດຢ້ານກົວຍັກແຕ່ປະການໃດທັງສິ້ນ.

ບັດນີ້ກ່າວເຖິງສິງຫິນເຈົ້າພະຍາຫລວງຍັກໃຫຍ່ມັນກໍທົງສືບສ້າງ ເມືອງກວ້າງສຳລານ ອັນວ່າເສນາພ້ອມກັນດາບຍັກໃຫຍ່ທັງໄພ່ຟ້າມີພ້ອມ. ມາກຫລາຍ, ອານາເຂດຂອງເມືອງຍັກສິງຫິນນີ້ກວ້າງຂວາງ, ທຸກເຊົ້າຄ່ຳວັນ ຄືນຝູງຍັກທີ່ເປັນບໍລິວານກໍຄອຍເຝົ້າຮັກສາພະຍາຍັກສິງຫິນບໍ່ເວັ້ນ. ພະຍາຍັກສິງຫິນມີລູກສາວຜູ້ໜຶ່ງຊື່ວ່ານາງຄັນທະມາລາແກ້ວ ງາມປານພະອິນຫລໍ່ ພະພໍ່ເຈົ້າແພງໄວ້ເກືອງຕາ. ແຕ່ນາງເປັນມະນຸດບໍ່ກິນດິບກິນແດງນຳພວກຍັກ, ພໍ່ໄດ້ສ້າງຫໍຜາສາດໃຫ້ນາງຢູ່ເປັນພິເສດໂດຍມີບັນດາຍັກເປັນຂ້າຊ່ວງໃຊ້ຢູ່ນຳນັບເປັນຮ້ອຍ.

ຢ້ອນກ່າວເຖິງສະເພົາຕາຜ້າຂາວກັບທ້າວທັງສີ່ ສະເພົາໄດ້ລ່ອງເຂົ້າໄປເຖິງເຂດແດນຍັກ, ປະກົດວ່າຍັກທີ່ເປັນບໍລິວານໄດ້ຢູ່ຕ້ອນຕາມດ່ານຕ່າງໆຈຶ່ງເຂົາໄດ້ປຸກສາລາໄວ້ແຄມຕາຝັ່ງເພື່ອຄອຍຕິດຕາມຄົນພາຍນອກຈະລ່ອງກາຍເຂົ້າມາ. ການເວນຍາມແມ່ນຮັດກັນຕະຫລອດທັງເວັນທັງຄືນ, ໂດຍ ສະເພາະຍາມກາງຄືນແມ່ນໄດ້ຕີກອງຍາມບໍ່ຂາດ. ແຕ່ຕາຜ້າຂາວໄດ້ບັງສະເພົາເອົາໄວ້ພວກຍັກທີ່ຍາມຕາມດ່ານຈຶ່ງບໍ່ມີໃຜຮູ້ໄດ້ ສະເພົາຈຶ່ງກາຍເຂົ້າ ໄປຈົນເຖິງເມືອງແລະຈອດຢູ່ແຄມທ່ານ້ຳ.

ຈາກນັ້ນ ຕາຜ້າຂາວຈຶ່ງບອກໃຫ້ທ້າວທັງສີ່ຮູ້ວ່າບັດນີ້ມາເຖິງເມືອງ ຍັກແລ້ວ, ແລະຍັກໂຕນີ້ມັນມີລິດເດດແກ່ກ້າມັນຈະເຕົ້າໂຮມກຳລັງມາສູ້ຮົບ ກັບ

ເຮົາແລ້ວ, ຝ່າຍທ້າວທັງສີ່ໄດ້ຟັງດັ່ງນັ້ນ ກໍມີຄວາມປິຕິຍິນດີທັ່ວບອກກັບພໍ່ ພ້າຕາຂາວວ່າ ບັດນີ້ເຮົາຈະໄດ້ສະຫນຸກຫລີ້ນຊິງຊີ້ນຍັກໃຫ່ຍປານໄດ້ຊິມ ສ່ວນດອກໄມ້ດີເນື້ອຊື່ນໃຈແລນໍ.

ຕໍ່ມາຝ່າຍບໍລິວານຍັກແນມເຫັນສະເພົາຈອດຢູ່ກາງນ້ຳ ເຂົາຈຶ່ງພາກັນຕື່ນຫ້ວງແລ້ວຟ້າວຂຶ້ນລາຍງານໃຫ້ພະຍາຍັກສິງຫິນຮູ້ທັນທີວ່າບັດນີ້ມີເຫດຮ້ອນບັງເກີດກາງເມືອງ ມີສະເພົາມາຈອດກາງວັງນ້ຳ, ຕາມທີ່ໄດ້ສັງເກດເບິ່ງ ສະເພົາລຳນີ້ຕ່າງຫມູ່ເພາະມີເຮືອນແກ້ວຫົວທ້າຍແປກອັນ ມີທັງທຸງແດງພ້ອມ ຂາວເຫລືອງ ເດັຍລະດາດພະອົງເອີຍ. ເມື່ອຍັກສິງຫິນໄດ້ຟັງແນວນັ້ນຈຶ່ງຂຶ້ນສູ່ ຫໍຄອຍສັງເກດເບິ່ງດ້ວຍຕາຕົນເອງຈຶ່ງໄດ້ເຫັນສະເພົາດັ່ງກ່າວ. ເຮັດໃຫ້ ຍັກສິງຫິນຮ້າຍຂຶ້ນເປັນຟືນເປັນໄຟດັ່ງບົດກອນຂຽນວ່າ:

ແຕ່ນັ້ນສິງຫິນຜູ້ ກັນດານຍັກໃຫ່ຍ
ຮູ້ຂ່າວຂັ້ ຂຸນຕ້ານຂູ່ປະການ
ກໍຈຶ່ງເຮວຮີບຍ້າຍ ຂຶ້ນສູ່ຫໍຄອຍ
ກໍຈຶ່ງເຫັນສະເພົາ ຈອດເຊົາວັງນ້ຳ
ເລີຍຄືນເຂົ້າ ຫາໂຮງຄຽດສັ່ນ
ໃຜຜູ້ອົງອາດອ້າງ ລິດທີ້ກ້າກ່ວາກູ
ອັນວ່າເມືອງກູກ້ວາງ ດູໄກຫລາຍໂຍດ
ກູຫາກຕັ້ງດ່ານໄວ້ ຮັກສາແທ້ຊູ່ພາຍ
ສັງວ່າມາະ ອວດອ້າງ ລ່ວງດ່ານກາຍມາ ດັ່ງນີ້
ສູ່ຮີບໄປໃສເບື່ອງ ເບິ່ງດູສະເພົານັ້ນ
ຄັນວ່າຫົວເສິກຫລີ້ ຄືມານ້ອຍຫນຶ່ງ
ຄັນວ່າເປັນລູກຄ້າ ສັງມາກັ້ງຮົ່ມແດງ ດັ່ງນີ້.

ຍັກສີງທົນຈຶ່ງສັ່ງໃຫ້ເສນາອາມາດໄປສັງເກດເບິ່ງສະເພົາລຳນີ້ ດ່ວນຂຸນ ຮັບໃຊ້ຂອງມັນ ໄດ້ແປງຕົວເປັນນົກກະຈອກບິນໄປຈັບຢູ່ປ່ອງຢ້ຽມຂອງສະເພົາ ຈຶ່ງສັງເກດເຫັນຫມົດທຸກຢ່າງພາຍໃນສະເພົາແລ້ວກໍ່ຟ້າວບິນກັບຄືນ. ຝ່າຍພະ ອິນທີເປັນຕາຜ້າຂາວ ໄດ້ຮູ້ຈຶ່ງບອກກັບທ້າວທັງສີ່ວ່າດຽວນີ້ຍັກມັນ ໄດ້ແຕ່ງ ໃຫ້ ເສນາຂອງມັນມາຈອບເບິ່ງພວກເຮົາແລ້ວ, ນົກກະຈອກທີ່ຈັບຢູ່ປ່ອງ ຢ້ຽມ ຫວ່າງກີ້ນີ້ແມ່ນລູກນ້ອງຂອງມັນປອມໂຕມາ, ທ້າວທັງສີໄດ້ຍິນດັ່ງນັ້ນກໍພາ ກັນ ຫົວສະອຶກສະອ້ອຍທັງເວົ້າວ່າ ເສຍດາຍທີ່ພໍ່ບໍ່ບອກໃຫ້ຮູ້, ຄັນພວກລູກຮູ້ຈະເສກ ມົນມັດມັນເອົາໄວ້. ພໍ່ພະອິນ(ຕາຜ້າຂາວ)ຈຶ່ງບອກວ່າຕໍ່ໄປນີ້ໄປໃຫ້ພາ ກັນ ຊອມເບິ່ງຈັກຫນ້ອຍມັນຊິແຕ່ງເປັນຄົນມາຫາ ເພາະມັນບໍ່ຮູ້ວ່າພວກລູກມີ ລິດ ເດດກ້າມັນຈະແຕ່ງເຄື່ອງຕ້ອນມາໃຫ້ແລະມັນຈະຂີ່ເຮືອມາບອກພວກລູກ ຈຶ່ງ ເສກມົນດີວິເສດມັດມັນເອົາໄວ້ໂລດ.

ຢ້ອນກ່າວເຖິງເສນາຂອງຍັກທີ່ປອມໂຕເປັນນົກກະຈອກ, ເມື່ອກັບ ເມືອ ເຖິງກໍ່ຂຶ້ນລາຍງານສະພາບການຕໍ່ຍັກສີງທົນທັນທີ ມັນບອກວ່າຢູ່ໃນສະ ເພົາ ມີກຸມມານນ້ອຍງສີ່ຄົນ ກັບຕາຜ້າຂາວ ແຕ່ວ່າກຸມມານທັງສີ່ນັ້ນເປັນຄົນ ງາມ ສະເຫມີກັນທັງສີ່. ຝ່າຍພະຍາຍັກສີງທົນ ໄດ້ຟັງດັ່ງນັ້ນພໍປານເອົານ້ຳມັນ ຖອກ ໃສ່ໄຟເພາະວ່າໃຈວູ້ຮ້ອນປານໄຫ້ມຫມື່ນກອງ, ຈຶ່ງບອກກັບເສນາວ່າດີ ແລ້ວ ອາຫານມັນມາສູ່ປາກ ເຮົາເອງກໍ່ບໍ່ໄດ້ກິນມະນຸດມາດົນແລ້ວດັ່ງບົດກອນຂຽນ ວ່າ:

| | |
|---|---|
| ສູຈິ່ງ ໄປພູກຄອງ | ມາໃສ່ພາວາຍ |
| ກູຈັກບາຍເອົາຂາ | ສິກກິນຕາວຫນ້ຽວ |
| ແຕ່ນັ້ນຂຸນມານຜູ້ | ເສນາຍັກໃຫຍ່ |
| ກົ້ມຂາບໄຫວ້ | ທູນເຈົ້າບໍ່ນານ |

ຂ້າຂໍອັນອາສາແທ້ ໄປກຸມມັດພູກ ມາແລ້ວ
ຂໍໃຫ້ພະບາດເຈົ້າ ກູນາຂ້າ ໂພດພາຍ ແດ່ທ້ອນ

ຍັກສິງຫີນສົ່ງສຽງຫົວຂຶ້ນດ້ວຍຄວາມເບີກບານໃຈທັງເວົ້າວ່າ ໄປເທາະຣີບໄປຈັບເອົາມາໃສ່ຄາບເຂົ້າງາຍມື້ນີ້ໃຫ້ເອົາແຕ່ທ້າວທັງສີ່ມາກ່ອນຕອນສວາຍ ສວາຍຈຶ່ງໄປຈັບເອົາອິຕາຜ້າຂາວມາຕື່ມອີກ. ຝ່າຍເສນາຈຶ່ງຟ້າວກົ້ມຂາບລາລົງ ພໍເຖິງທ່ານ້ຳມັນກໍເສກມົນເປົ່າ ເປັນເຮືອທັງພ່ອງເສກເປັນພາພານ ຄຳລຽນໄວ້ຕາມເຮືອ ມີຂອງກິນນາໆຊະນິດເຊັ່ນໝາກກົມ, ໝາກມ່ວງ, ໝາກແຕງ, ສ່ວນວ່າຕົວຂອງເຂົາກໍປອມແປງເປັນຊາຍໜຸ່ມແລ້ວຟ້າວພາຍ ເຮືອອອກໄປຫາສະເພົາທັນທີ, ເຂົາຄິດວ່າ ເມື່ອທ້າວທັງສີ່ຮັບເອົາເຄື່ອງກິນນັ້ນແລ້ວເຄື່ອງກິນກໍຈະກາຍເປັນເຊືອກເປັນບ້ວງຜູກມັດເອົາຕົວຂອງທ້າວທັງສີ່.

ແຕ່ວ່າພະອິນຕາຜ້າຂາວ ໄດ້ຮູ້ກ່ອນຈຶ່ງບອກທ້າວທັງສີ່ວ່າດຽວນີ້ຍັກມັນພວມນຳເອົາຂອງກິນມາຖວາຍເພື່ອໃຫ້ຂອງກິນໄດ້ຜູກມັດເອົາທ້າວທັງສີ່. ແຕ່ ວ່າໜ້າທີ່ຮັບຜິດຊອບຕໍ່ເລື່ອງທີ່ຈະເກີດຂຶ້ນເທື່ອນີ້ ແມ່ນທ້າວຜູ້ເປັນອ້າຍກົກ ຄືທ້າວເຊດຖະລາດເປັນຜູ້ຮັບພາລະແກ້ໄຂ ຖ້າຫາກວ່າມັນເຫລືອວິໄສແທ້ ຈຶ່ງໃຫ້ນ້ອງເຂົ້າຊ່ວຍ, ຝ່າຍທ້າວເຊດຖະລາດໄດ້ຮັບມອບໝາຍຄືແນວນັ້ນຈຶ່ງຈັບເອົາດາບມາກຽມໄວ້ກັບຕົນເພື່ອຮັບມືກັບສັດຕູ, ທ້າວໄດ້ໄປນັ່ງສັງເກດການຢູ່ແຄມສະເພົາ, ບຶດໜຶ່ງເຮືອຍັກກໍມາຮອດມັນຈຶ່ງອອກປາກຖາມທ້າວວ່າ ທ້າວມາແຕ່ບ້ານໃດເມືອງໃດດຽວນີ້ພະຍາເມືອງສັ່ງໃຫ້ມາຖາມເບິ່ງ ທັງສັ່ງ ໃຫ້ເອົາຂອງຝາກຂອງຕ້ອນມາໃຫ້ ເພາະປະເພນີເມືອງນີ້ຖ້າຫາກມີສະເພົາມາເຊົາຍາມໃດແມ່ນຕ້ອງໄດ້ນຳເອົາເຄື່ອງຝາກຂອງຕ້ອນມາສົ່ງໃຫ້.

ທ້າວເຊດຖະລາດຈຶ່ງບອກວ່າ ເຮົາມາຈາກເມືອງໃຫຍ່ປັນຈາ ພາ ກັນເດີນສະເພົາມາທ່ຽວດູເມືອງບ້ານບັດນີ້ຈັກເດີນເມືອເມືອງເກົ່າຈຶ່ງໄດ້ນຳສະ

ເພົາມາຈອດຊື່ວຄາວແລ້ວກໍຈະໄປຕໍ່ ທ້າວເສດຖະລາດບອກວ່າຂອບໃຈລຸງຫລາຍໆຫລານບໍ່ເຄີຍກິນສົ້ມກິນຫວານຈັກເທື່ອ ໃຫ້ລຸງເອົາຂອງຝາກນັ້ນ ຄືນເມືອຖວາຍທ່ານພະຍາເມືອງສາລຸງເອີຍ, ພວກເສນາຍັກທີ່ປອມໂຕມາ ຈຶ່ງເວົ້າວ່າ ອັນນີ້ແມ່ນຂອງຝາກທ່ານພະຍາຄັນຊິໃຫ້ເອົາກັບຄືນເມືອເພິ່ນກໍຊິລົງໂທດ, ຂໍໃຫ້ຫລານຈົ່ງຮັບເອົາໄວ້ ເມື່ອພວກຂ້າພະເຈົ້າກັບໄປແລ້ວ ຊິເອົາໂຍນຖິ້ມກໍຕາມໃຈແຕ່ຂໍໃຫ້ຮັບເອົາໄວ້ກ່ອນ.

ທ້າວເຊດຖະລາດຈຶ່ງບອກເປັນຄຳເດັດຂາດວ່າຮີບເອົາຫນີໄປຮ້ວມເຮົາບໍ່ເຄີຍກິນສົ້ມຂອງຫວານຕ່າງປະເທດ ຄັນວ່າວິເສດແທ້ຊິເອົາງ້າວແລກເອົາເວົ້າແລ້ວທ້າວກໍເສກຄາຖາຍືມືລະນຶກເຖິງບຸນຄຸນຂອງພໍ່ພະລືສີ ເລີຍ ເຊິ່ງເປັນບ້ວງພັນທະນັງຄ້ອງຄໍຜີມັດຜູກທ້າວທະຍານຂຶ້ນສູ່ບິນຈັບໄດ້ຂຸນມານ ຍັກໃຫຍ່ເຊືອກຜູກຫົວຄໍໄວ້ຈຶ່ງຈາດັ່ງບົດກອນຂຽນວ່າ :

ດູລາເຖົ້າ ຂຸນມານຍັກໃຫຍ່
ມຶງຈັກມາຍົວະເຍົ້າ ກູທ້າວຜູກເອົາ ວ່າລື
ສິ້ນໃດແທ້ ຕົວກູໄດ້ຜູກ ມຶງແລ້ວ
ມຶງນັ້ນມາໂວ່ແທ້ ຊິຕາຍຊໍ້າຊາກຕາວ ແລນໍ
ທ້າວກໍຈັບຫົວຂຶ້ນ ຂຸນມານເອີ້ນປ່າວ
ບອກຂ່າວໃຫ້ ເຂົ້າຮູ້ທົ່ວເມືອງ
ແລ້ວຈຶ່ງບາຍດາບແກ້ວ ຕັດຂາດຄໍຜີ
ຕົກລົງໃນນະທີ ເລືອດແດງໄຫລນ້ຳ
ແຕ່ນັ້ນຂຸນທານຜູ້ ເສນາຍັກໃຫຍ່
ມັນກໍເອົາຫົວຕິດຕໍ່ໄດ້ ຄືນເຂົ້າຄອບນາຍ

ສ່ວນຍັກສິງທົ່ນໄດ້ຮູ້ດັ່ງນັ້ນຈຶ່ງຮ້າຍຂຶ້ນພໍປານພາສາດຊິພັງເອົາກຳ ປັ້ນທຸບ

ຫມອນດ້ວຍຄວາມຄຽດຄຸງໃຈສັ່ງວ່າມະນຸດນ້ອຍໆອ້າງອວດມີລິດ ນຶ່ງຊິ ເປັນຜົງທຸລີ້ນແຫລະ, ວ່າແລ້ວຍັກສິງຫິນກໍສັ່ງໃຫ້ລະດົມພົນເປັນການໃຫ່ຍລ້ອມໄຫ່ລ້ອງກອງທັບເມືອງ ເຕີນປ່າວພ້ອມທຸກສ່ຳຫລາຍພະຍາ ນວນກັນມາ ຈົ່ງເມືອງເຫລືອລົ້ນສີນໆພ້ອມຊາວພີເຕົ້າຫມູ່ ລິດເດດກ້າ ມີແທ້ຊູ່ຕົວ.

ບັນດາຜີທັງຫລາຍເຫລົ່າຕ່າງກໍສະແດງລິດເດດຂອງຕົນບາງພ່ອງເຮັດໃຫ້ເກີດມີຫົວສີ່ຫົວແຂນ 8 ແຂນ ແຕ່ລະແຂນມີກຳງ້າວກຳຕະບອງ, ນອກນັ້ນຍັງສະແດງແປງເພດເປັນເສືອລາງ ເທື່ອທີເປັນຊ້າງຕົວເປັນຍັກໃຫຍ່ກໍ່ຮັບຂານອາສາຕາງພະຍາສິງຫິນເພື່ອຕໍ່ສູ້ກັບທ້າວທັງສີ່. ພວກມັນເວົ້າຂົ້ໂມ້ວ່າພໍ ປານມະນຸດນ້ອຍມາໃນສະເພົາລຳດຽວມັນບໍ່ມີທາງສູ້ໄດ້ດອກເຮົາຊິ່ເສກມົນ ໃຫ້ເປັນໄຟເຜົາມະນຸດນ້ອຍຕາຍຢ່າງອະນາດຫລືບໍ່ດັ່ງນັ້ນກໍຊິໄປມັດພູກເອົາ ຕົວຂອງມັນມາປອກຫລົ້ນເຮັດໃຫ້ມັນຂວັນຫນີບໍ່ຜ່າຍ.

ຝ່າຍພະຍາຍັກສິງຫິນໄດ້ຍິນດັ່ງນັ້ນກໍມີຄວາມປິຕິຊົມຊື່ນທັງສັ່ງວ່າສູ່ຈົ່ງ ໄປມັດເອົາຕົວມັນມາໝົ້ນໂລດ, ພວກເສນາຂອງຍັກສິງຫິນຮັບປາກວ່າຈະສົ່ງກຳລັງໄປແຕ່ພຽງຮ້ອຍຫນຶ່ງກໍເຫລືອກິນແລ້ວ, ເວົ້າແລ້ວພວກມັນກໍພາກັນລາພະຍາຍັກສິງຫິນເພື່ອອອກປະຕິບັດຫນ້າທີ່ດ້ວຍຄວາມອວດສຳຫາວຂອງພວກເຂົາ.

ກ່າວເຖິງຕາຜ້າຂາວໃນສະເພົາພະກໍຫລິງເຫັນວ່າພວກຍັກພວມຈະຍົກກຳລັງມາ, ຕາຜ້າຂາວຈຶ່ງບອກທ້າວເຊດຖະລາດໃຫ້ກຽມຕົວຮັບມືສູ້ຮົບກັບ ເຂົາທັງກ່າວໃຫ້ກຳລັງໃຈແກ່ທ້າວວ່າ ການສູ້ຮົບຄັ້ງນີ້ບໍ່ຕ້ອງຢ້ານກົວຫຍັງ ຫມົດເດັດຂາດລູກຕ້ອງມີໄຊຊະນະພາບແພ້ຫມູ່ມານທັງຫລາຍ. ດັ່ງນັ້ນທ້າວເຊດຖະລາດຈຶ່ງຍົມືໄຫວ້ພໍ່ພະອິນຕາຜ້າຂາວແລະລະນຶກເຖິງບຸນຄຸນຂອງພໍ່ພະລືສີແລ້ວກໍເຫາະຂຶ້ນສູ່ເທິງອາກາດສູງພຽງປາຍຕານເພື່ອລໍຮັບການສູ້ຮົບກັບພວກ ຍັກທັງຫລາຍ. ບໍ່ດົນກຳລັງຂອງຍັກກໍມາເຖິງ ເມື່ອເຂົາເຫັນທ້າວເຫາະຂຶ້ນຢູ່ເທິງ

ອາກາດເຂົາຈຶ່ງພາກັນສະແດງລິດເດດຕ່າງໆທັງພ່ອງເອີ້ນຖາມທ້າວວ່າ ມຶງມາແຕ່ບ້ານໃດເມືອງໃດເປັນຫຍັງມຶງຈຶ່ງເດີນສະເພົາເຂົ້າມາໃນເຂດແດ່ານມາຊ່າງຊອກຫາຄວາມຕາຍແທ້? ທ້າວເຊດຖະລາດຕອບເຂົາວ່າກູເດີນທາງມາກໍເພື່ອຢາກເຫັນຫລາຍບ້ານຫລາຍເມືອງ ສູຢ່າມາທ້າຣົບທ້າສູ້ກັບກູ ຖ້ອນກູບໍ່ຢາກຈ່ອງເວນຈ່ອງກຳກັບໃຜໝົດ ກູມີຈຸດປະສົງແຕ່ຈະຄືນເມືອງທ້ອງປັນຈາເມືອງໃຫ່ຍທີ່ນັ້ນ ສູຢ່າມາກ່ຽວໃຫ້ກູຫ້າມຈຶ່ງຟັງ.

ບັນດາຍັກທັງຫລາຍໄດ້ຍິນທ້າວເວົ້າແນວນັ້ນ ກໍບໍ່ຟັງຟ້າຟັງ ໄຟຫຍັງພາກັນໂດດເຂົ້າໃສ່ທ້າວທັນທີໂລດທ້າວຈຶ່ງໃຊ້ງາວຕັດຄໍຍັກຂາດສະບັ້ນເລືອດ ແດງສັບທິບ, ແຕ່ຝູງຍັກກໍບາຍເອົາຫົວມາຕໍ່ຄືນໄດ້ຄືເກົ່າການສູ້ຣົບກັນໄດ້ພະ ເຊີນດ້ວຍຄືນດາບຄືນງາວທັງເວດມົນຄາຖາ, ເຖິງແມ່ນຍັກຈະເອົາຫົວມາຕໍ່ ຄືນປານໃດກໍຕາມ ທ້າວເຊດຖະລາດກໍຟັນຂາດເປັນບັ້ນເປັນທ່ອນຕົກລົງສູ່ ແມ່ນ້ຳຈິນໄຂ່ວທີບ.

ຝ່າຍຍັກສິງຫີນໄດ້ຂຶ້ນທີ່ຄອຍສ່ອງເບິ່ງເຫັນຝູງກຳລັງພົນຂອງຕົນຖືກ ຂ້າຕາຍຈຶ່ງໂກດເຄືອງຮ້ອງສຽງດັງສັບພາສາດທັງເອົາຕີນທີບໂຮງດ້ວຍ ຄວາມຄຽດແຄ້ນ ຈຶ່ງສັ່ງໃຫ້ຍັກກຳລັງພົນອອກໄປສົມທົບຕື່ມ ທັງບອກວ່າໃຫ້ນາງສະເພົ້າຖົມດຽວນີ້, ກູຈັກຂ້າຊາຍນ້ອຍນຸ່ນທະລາຍ ມັນເປັນຫຍັງມາບັງອາດ ຍິ່ມເຫັງນ້ຳໃຈກູຄືແນວນີ້, ດັ່ງນັ້ນຂຸນຫລວງຟ້າເກື່ອນແລະຟ້າແຜດພ້ອມຟ້າ ແດດແດນເພີ້ງນຳພົນອອກໄປສົມທົບຕໍ່ສູ້. ເມື່ອໄປເຖິງພວກເຂົາກໍສະແດງລິດ ນານາປະການທັງກັບເພດເປັນເງືອກເປັນງູສາລະພັດແຕ່ຊິເຮັດແລ້ວກໍທະ ຍານຂຶ້ນໄປຕໍ່ສູ້ກັບທ້າວເຊດຖະລາດ.

ຕໍ່ມາຍັກສິງຫີນກໍອອກຈາກທໍ່ພາສາດຊຶ່ງມີບໍລິວານແວດລ້ອມມີຣີ້ນກົ້ງພໍແປດແດງຂຽວ ສະແດງເປັນ 7 ຫົວມີເຄື່ອງປະດັບເອີຍ້ອງນັ່ງຢູ່ເທິງຫລັງ ຊ້າງ

ສູງພຽງປາຍຕານ ຊ້າງກໍມີຫົວ ສີ່ຫົວ ມີຫໍພາສາດຕັ້ງຢູ່ເທິງຫລັງຊ້າງ, ທັງ ນັ້ນ ເພື່ອເປັນການສະແດງລິດເດດຊູ່ໃຫ້ທ້າວ ເຊດຖະລາດຢ້ານກົວອີກອັນໜຶ່ງ ກໍ່ ເພື່ອເປັນກຳລັງໜູນໃຫ້ແກ່ໜ່ວຍສູ້ຮົບຂອງມັນ, ພວກນັກຮົບຍັກ ໄດ້ພາ ກັນ ເຫາະຂຶ້ນສູ່ອາກາດຈົນມືດຟ້າມົວດິນຫລຽວຫາໃສກໍ່ບໍ່ເຫັນ, ດັ່ງນັ້ນທ້າວ ເຊດ ຖະລາດຈຶ່ງຍົກສອນຂຶ້ນຍິງໄປເບື້ອງບົນເຮັດໃຫ້ເກີດມີແສງສະຫວ່າງ ຮຸ່ງ ເຮືອງ ໄປທົ່ວແລ້ວສອນກໍກັບເຂົ້າສູ່ແຫລ່ງຂອງເກົ່າ. ທ້າວບໍ່ຢ້ານກົວພວກ ກຳ ລັງຂອງຍັກສິງຫົນເລີຍ, ທ້າວກໍກຳກົ່ງນ້າວທະນູອາດດວງດີທັງສອນສີແນບອີງ ທຽມເນື້ອ. ຈາກນັ້ນທ້າວກໍເຫາະຂຶ້ນສູ່ອາກາດເພື່ອກຽມການຕໍ່ສູ້, ປະກົດ ວ່າ ພົນຫລວງຂອງຍັກ ໄດ້ຮຸມເຂົ້າໃສ່ທ້າວອາວຸດຮົບມີທຸກຕົວ ສາລະພັດແຕ່ ເຂົາ ຈະສະແດງແຝງລິດ ເປັນຄົນ, ເປັນຍັກ, ເປັນສັດ. ທ້າວກໍໃຊ້ທະນູໃຊ້ສອນຍິງ ໃສ່ຝູງຍັກຕາຍລະເນລະນາດ, ແຕ່ຍັກກໍບໍ່ຍອມງ່າຍໆມັນຈັບເອົາຫົວມາຕໍ່ ຄືນ ແລ້ວກໍຮຸມເຂົ້າສູ້ກັບທ້າວຢ່າງມືດຟ້າມົວດິນ, ແຕ່ອາວຸດຂອງພວກຍັກບໍ່ ໄດ້ ຖືກ ທ້າວ ເຊດຖະລາດເລີຍ.

ຝ່າຍຍັກສິງຫົນ ເຫັນພົນຂອງມັນຕາຍຫລາຍ ມັນຈຶ່ງເສກມົນເປົ່າເອົາຄືນ ມາແລ້ວກໍສູ້ຮົບກັນຕໍ່ໄປ. ຄາວນັ້ນທ້າວ ໄດ້ລະນຶກເຖິງບຸນຄຸນຂອງພໍ່ພະລືສີ ແລ້ວ ຈຶ່ງຍິງສອນອອກໄປປະກົດວ່າຍັກຕາຍຫລາຍກວ່າເກົ່າ. ຍັກສິງຫົນຈຶ່ງ ໄດ້ອອກ ສູ້ຮົບດ້ວຍຕົວຂອງມັນເອງ, ຍັກສິງຫົນຍິງສອນໃຫ້ເກີດເປັນໄຟໄໝ້ເຂົ້າ ໄປ ຫາທ້າວ, ທ້າວຈຶ່ງຍິງສອນຂຶ້ນເທິງອາກາດກາຍເປັນຝົນຫ່າໃຫຍ່ຕົກລົງ ມາ ມອດໄຟ, ຍັກສິງຫົນເຫັນແນວນັ້ນຈຶ່ງຍິງສອນໃຫ້ເກີດເປັນຝົນຫອກດາບ ແຕ່ ທ້າວ ເຊດຖະລາດໄດ້ເສກມົນເປົ່າໜີໝົດ ເຮັດໃຫ້ຍັກສິງຫົນແຄ້ນເຄືອງຈຶ່ງ ກຳດາບທະຍານເຂົ້າໄປຫາທ້າວ, ພວກເສນາຂອງມັນກໍໂຖ່ເຂົ້າໃສ່ທ້າວຄືກັນ ທ້າວ ເຊດຖະລາດຈຶ່ງໃຊ້ດາບຕັດຄໍພວກຍັກຕາຍກອງກັນເດຍລະດາດ ຍັງ

ເຫລືອແຕ່ຍັກສິງຫີນຕົນດຽວແຕ່ມັນກໍ່ສູ້ຢ່າງບໍ່ຢ້ານກົວທ້າວແຕ່ປະການ ໃດ ມັນໃຊ້ທັງຄ້ອນຕະບອງໃຊ້ທັງດາບທັງສອນຍິງໃສ່ແຕ່ກໍບໍ່ໄດ້ຜົນ ຈົນມັນ ອິດ ອ່ອນໂຮຍແຮງ, ດັ່ງນັ້ນມັນຈຶ່ງເສກມົນເປົ່າເອົາລູກນ້ອງຄືນມາອີກ ເພື່ອຮ່ວມ ສູ້ຮົບກັບທ້າວຕໍ່ໄປ, ສ່ວນທ້າວເຊດຖະລາດກໍສູ້ຢ່າງອົງອາດກ້າຫານ.

## 19. ພະຍາຍັກສິງຫົນມອບລູກສາວໃຫ້ເປັນເມຍ ຂອງທ້າວ ເຊດຖະລາດ.

ພະຍາອິນຜູ້ປອມ. ເປັນຕາຜ້າຂາວນ່າຍສະເພົາຫລິງເຫັນວ່າທ້າວ ເສືາ ຄັ້ງນີ້ຈະຍຶດເຍື້ອຍາວນານຈົນເກີນໄປແລະອີກອັນໜຶ່ງທ້າວ ເຊດຖະລາດສູ້ຮົບກິນດຽວກໍອິດອ່ອນພໍສົມຄວນ, ດັ່ງນັ້ນ, ພະອິນຈຶ່ງບອກໃຫ້ທ້າວ ເພັດຊະລາດ ຜູ້ທີ່ເປັນນ້ອງຫລ້າ ໄດ້ຊ່ອຍອ້າຍສູ້ຮົບໃຫ້ມັນແລ້ວ ເພື່ອບໍ່ໃຫ້ຊັກຊ້າເສຍເວລາໃນການຈະເດີນທາງຕໍ່ໄປ.

ເມື່ອທ້າວ ໄດ້ຮັບຄຳສັ່ງຈາກພໍ່ພະອິນແລ້ວກໍທະຍານຂຶ້ນສູ່ອາກາດໄປ ຢືນຮຽງກັບທ້າວ ເຊດຖະລາດຜູ້ເປັນອ້າຍທ້າວ ເພັດຊະລາດ ໄດ້ລະນຶກເຖິງພໍ່ພະລືສີດາ ໄພແລ້ວ ກໍຍົກນິ້ວຊີ້ ໄປໃສ່ຝູງກຳລັງຂອງຍັກພ້ອມທັງກ່າວຂຶ້ນວ່າ" ສູຈຶ່ງພາກັນຕາຍດຽວນີ້" ດັ່ງບົດກອນຂຽນວ່າ:

ບາກີຍັມື້ຊ　　　　ວາຈາກອຍກ່າວ
ສູຈຶ່ງຕາຍພອດມ້ຽນ　　　　ລົງພື້ນຊູ່ຕົວ
ຕາຍແລ້ວໃຫ້ກະດ້າງ　　　　ຢ່າຕີງຍ່າງໄປມາ ໄດ້ດີ
ທັງຫົວຕີນແຂນຂາ　　　　ຢ່າຕີງໂຕໄດ້
ຂົ້ນວ່າຕົກລົງນ້ຳ　　　　ຕີນມັນໃຫ້ຈົມຢູ່
ຕົວໃຫ້ຈົມຢູ່ນ້ຳ　　　　ຟູຂຶ້ນແຕ່ຫົວ
ພໍແຕ່ທ້າວຍົກຊີ້　　　　ແນໃສ່ຝູງຜີ

| | |
|---|---|
| ເລີຍເສົ່າມໍລະນາຕາຍ | ເກື່ອນກອງນອງລົ້ນ |
| ລາງຕົວຕົກລົງນໍ້າ | ຫົວຟູ້ຮອງຢູ່ |
| ເພາະວ່າຕົວກະດ້າງ | ລອຍຂຶ້ນບໍ່ເປັນ |
| ບາງພ່ອງຕົກລົງກິ້ງ | ກາງດິນກິ້ງຢູ່ |
| ຕົວຫາກຕາຍກະດ້າງ | ຫົວນັ້ນບໍ່ຕາຍ |
| ອັນວ່າສິງຫົນເຈົ້າ | ວາງຕົວຈົມຈຸ່ມ |
| ໃນແມ່ນໍ້າ | ເລີຍຮ້ອງກ່າວຍອມ |

ບັ້ນຮົບຄັ້ງນີ້ຝູງຜີຍັກພາກັນຕາຍອະເນກນອງ ຫລືອລົ້ນຟັງສຽງເຂົາ ຮ້ອງຄວນຄ້າງຈົນດັງຄັບຫີບ, ຫລັງຈາກນັ້ນສອງອ້າຍນ້ອງກໍພາກັນລົງມາຫາ ສະເພົາແລ້ວນັ່ງເບິ່ງຊຸມພວກຍັກດັ້ນຕາຍຈົມຢູ່ຕາມແມ່ນໍ້າ, ທ້າວເຊດຖະ ລາດຮ້ອງ ໄປໃສ່ວ່າ ໃສວ່າສູຈະມາພູກເອົາຕົວກູຮົບມາທະແມ. ຝ່າຍພະຍາຍັກສິງຫົນ ໄດ້ແຕ່ອ້ອນວອນໃຫ້ທ້າວ ໄດ້ກະລຸນາໂຜດຜາຍຊີວິດຊີວາເອົາ ໄວ້ເປັນຂ້ອຍຊ່ວງໃຊ້ທັງຂໍຍອມມອບບ້ານເມືອງໃຫ້ທ້າວຄອບຄອງ, ດັ່ງນັ້ນພໍ່ຜ້າຂາວ ຈຶ່ງບອກທ້າວໃຫ້ໂຜດເຂົາຄືນມາຢ່າທໍລະມານເຂົາດົນຫລາຍ.

ຕໍ່ມາທ້າວເພັດຊະລາດຈຶ່ງຍົກນິ້ວມືຊີ້ບອກໃຫ້ເຂົາຄືນມາ. ພວກຍັກ ໃຫຍ່ນ້ອຍລວມທັງຍັກສິງຫົນກໍຟູຂຶ້ນແລ້ວກໍພາກັນລອຍເຂົ້າຫາຝັ່ງມານັ່ງຍໍມືກົ້ມຂາບທ້າວ, ສ່ວນຍັກສິງຫົນກໍເຊັ່ນດຽວຂໍມອບບ້ານເວນເມືອງໃຫ້ຢູ່ປົກຄອງພ້ອມລູກສາວຊື່ວ່າ ຄັນທະມາລາກໍຂໍມອບໃຫ້ເປັນເມຍຂອງທ້າວ, ແຕ່ທ້າວເຊດຖະລາດບອກວ່າໃຫ້ທ່ານກັບຄືນສູ່ບ້ານເມືອງທີ່ໂຮງກ່ອນ, ແລ້ວຈຶ່ງຖາມນາງເບິ່ງ ວ່ານາງພໍໃຈຫລືບໍ່ ສ່ວນເຮົາເອງບໍ່ມີຄວາມຂັດຂ້ອງແນວໃດ, ຢ້ານແຕ່ນາງ ທີ່ນັ້ນແຫລະຊິບໍ່ມັກ ເພາະວ່າບໍ່ແມ່ນແນວນາມຜີ, ເຮົາແມ່ນແນວນາມມະນຸດ.

ພະຍາຍັກສິງຫົນກັບເຖິງທີ່ຜາສາດກໍສັ່ງໃຫ້ໄປນຳນາງຄັນທະມາລາ ລູກ

ສາວມາຫາດ່ວນ, ພະຍາຍັກສິງຫົນຈຶ່ງເວົ້າດອນນາງວ່າ ດຽວນີ້ມະນຸດນ້ອຍ ຊາຍງາມໂສມສະອາດລິດເດດກ້າສິນພານລົ້ນລື່ນເຮົາການສູ້ຮົບຄັ້ງນີ້ ເອງ ເກືອບເອົາຊີວິດບໍ່ລອດ, ກຳລັງຂອງເຮົາລົ້ມຕາຍນັບບໍ່ໄຫ່ວ ຄືດັ່ງຕາລູກ ເຫັນນັ້ນແລ້ວ. ຝ່າຍນາງຄັນທະມາລາ ໄດ້ຟັງດັ່ງນັ້ນກໍກ່າວສະແດງຄວາມເຫັນ ໃຈຕໍ່ພໍ່ວ່າ ລູກເອງຄິດວ່າພໍ່ພ້ອມ ໄພ່ພົນຈະຕາຍຈາກບ້ານເມືອງລູກກໍເປັນຮົນ ໆ ຮ້ອນໆຕື້ຫວງກາງເກື່ອນ ກັບທັງພະແມ່ເຈົ້າຫົວ ໄຫ້ຢູ່ໂຮງພໍ່ເອີຍ, ບັດນີ້ຖືວ່າບຸນຫລາຍສາຍຍາວທີ່ພໍ່ແມ່ ໄພ່ພົນຕະຫລອດປອດໄພ.

ດັ່ງນັ້ນພະຍາສິງຫົນຈຶ່ງເວົ້າກັບນາງວ່າດຽວນີ້ພໍ່ຈະມອບລູກໃຫ້ເປັນ ເມຍຂອງທ້າວ ເພື່ອສືບບ້ານແປງເມືອງ ເພາະວ່າພໍ່ເອງກໍເຖົ້າຊະລາແລ້ວ, ພໍ່ຈຶ່ງຕັດສິນໃຈມອບບ້ານເວນເມືອງໃຫ້ທ້າວ ຄອບຄອງລູກຊິວ່າແນວໃດ?ແຕ່ນັ້ນນາງຄັນທະມາລາຈຶ່ງສະແດງຄວາມປິຕິຊົມຊື່ນ ຍົກຍີ້ມນວທູນໄຫ້ວພໍ່ຕົນ ທັງບອກວ່າລູກບໍ່ຂັດຂືນຄວາມປະສົງຂອງພໍ່ແນວໃດເລີຍ, ຝ່າຍພະຍາຍັກສິງ ຫົນຜູ້ເປັນພໍ່ໄດ້ຍິນຄຳຕອບຂອງລູກກໍມີຄວາມຊົມຊື່ນຍິນດີຫາອັນປຽບບໍ່ໄດ້, ດັ່ງນັ້ນຈຶ່ງສັ່ງໃຫ້ເສນາອາມາດທັງຫລາຍກະກຽມທ້າງຫາປະດັບປະດາ ເພາະ ວ່າມື້ອື່ນເຈົ້າຊິເຊີນທ້າວເຂົ້ານັ່ງເມືອງ, ສ່ວນນາງຄັນທະມາລາເອງກໍດີອົກດີໃຈຄິດວ່າແມ່ນນຶ່ງແມ່ນແນນທີ່ສະຫວັນ ປັ້ນແຕ່ງມາໃຫ້ເປັນຄູ່ຜົວເມຍ.

ກ່າວເຖິງກຸມມານທ້າວໂສມງາມແນນຫລໍ່ຫລັງຈາກເລວກັບ ຍັກຊະນະແລ້ວກໍພາກັນຊື່ນຊົມຍິນດີໃນດ້ານສີລະປະ ຍຸດຂອງຕົນ, ທ້າວເຊດຖະລາດເວົ້າ ວ່າສິງຄາມຄັ້ງນີ້ຫນັກຫນ່ວງສົມຄວນ ແຕ່ກໍ່ມ່ວນມີດີ, ຖ້າຫາກວ່າທ້າວເຜັດ ຊະລາດບໍ່ຊ່ອຍປານນີ້ສິງຄາມກໍຍັງຈະບໍ່ທັນສິ້ນສຸດເທື່ອ, ອັນນີ້ຍອນວ່າລິດ ເດດຂອງນ້ອງຊາຍຫລ້າ ນັ້ນກ້າແຂງຝູງພີຍັກທັງຫລາຍຈຶ່ງອ່ອນຍອມ. ພໍແຕ່ ຕາເວັນຄ່ຳມືດທັງສີກໍພາກັນເຂົ້ານອນຢູ່ສະເພົາຢ່າງສະບາຍ ແລະອຸປະຖາກຮັກ

ສາພະອິນຕາຜ້າຂາວ ເໝືອນກັບວ່າພໍ່ຜູ້ໃຫ້ກຳເນີດ.

ຕື່ນເຊົ້າມາ ຕາຜ້າຂາວຈຶ່ງບອກວ່າມື້ນີ້ພະຍາຍັກສິງຫີນໄດ້ແຕ່ງ ເຄື່ອງພ້ອມດາຖ້ວນຊູ່ອັນ ຈັກຊິມາແຫ່, ນ້ອຍໄປນັ່ງທິງ ເມືອງພໍ່ແລ້ວຈຶ່ງໃຫ້ທ້າວ ເຊດຖະລາດເປັນຜູ້ຄອງສ້າງຕາມຮີດຄອງປະ ເພນີບູຮານໝາຍຄວາມວ່າໃຫ້ທ້າວ ເຊດຖະລາດສ້າງ ເມືອງນັ້ນປອງ, ດັ່ງນັ້ນທ້າວທັງສີ່ຈຶ່ງຍິນີນິບຮັບເອົາ ຄຳບອກກ່າວຂອງພໍ່ຜ້າຂາວ.

ບັດນີ້ກ່າວ ເຖິງຍັກສິງຫີນໄດ້ຫ້າງຫາກະກຽມປະດັບປະດາ ເມືອງທັງ ສິ່ງໃຫ້ລູກສາວແຕ່ງຕົວປະດັບ ເອ້ຍ້ອງແລ້ວກໍແຫ່ນາງອອກຈາກໂຮງ ໄປມອບ ໃຫ້ທ້າວ ເຊດຖະລາດດັ່ງບົດກອນຂ້ຽນວ່າ:

ແຕ່ນັ້ນສິງຫີນທ້າວ ກົມດານຍັກໃຫ່ຍ
ຄ້ອນໄຕ້ຄອງ ເຕີນພ້ອມຊູ່ພາຍ
ປູກກ້ວຍລ້ອຍ ເດຍລະດາດເປັນແຖວ
ທຸງໄຊຢາຍ ແຕ່ໂຮງເຖິງນ້ຳ
ເສດຕະສັດຕັ້ງ ເປັນຖັນແຖວຖີ
ມີຄົບຖ້ວນ ປະດາຍ້ອງຖືມຖານ
ເພດານກັ້ງ ພາຍຍົນນຸງເມກ
ທໍໂສດນ້ຳ ຮາງລິນແກ້ວນາກຄຳ
ແລ້ວຈຶ່ງບອກນາດນ້ອຍ ຕົກແຕ່ງແປງຕົວ
ປັກປິ່ນທັງກະຈອນຫູ ຄູ່ແຫວນປະດັບມ້າວ
ເສນາທ້າວ ທັງຫລາຍນ້ອຍໃຫ່ຍ
ແຫນແຫ່ໄຫ້ ນາງແກ້ວອອກໂຮງ

ຂະບວນແຫ່ນາງຄົມທະມາລາ ປະກອບໄປດວ້ຍພໍ່ແມ່ເຖົ້າແກ່ແລະນິ ການ

ເສບດ້ວຍດົນເພີ້ນພາດ ໄປຕາມທາງເພື່ອເອົານາງ ໄປມອບໃຫ້ທ້າວ.

ຝ່າຍພະອິນຕາຜ້າຂາວຈຶ່ງນິລະມິດເປັນສຳນັກທີ່ໂຮງຄອຍຮັບຕ້ອນຂະບວນແຕ່ເຈົ້າສາວ, ຈາກນັ້ນພະອິນຕາຜ້າຂາວຈຶ່ງບອກໃຫ້ທ້າວເຊດຖະລາດ ໄປນັ່ງຖ້າຢູ່ເທິງຕຽງ, ຝ່າຍຍັກສິງຫົນນຳຂະບວນມາກໍແນມເຫັນທີ່ໂຮງອັນສວຍງາມເກີດຂຶ້ນຢູ່ກາງນ້ຳ ແລະມີຂົວ ໄຕ່ທ່າຍໄວ້ແຕ່ໂຮງກາງນ້ຳຈົນເຖິງແຄມ ຝັ່ງ ເຮັດໃຫ້ຝູງຍັກທັງຫລາຍເກີດງຶດງໍ້ອັດສະຈັນທັງເມືອງ. ເມື່ອແຫ່ນາງ ໄປຮອດແລ້ວກໍໄດ້ຈັດພິທີສູ່ຂວັນຕາມຮີດຄອງປະເພນີ ແລະທຳການທົດສົງ ທ້າວແລະນາງພ້ອມທັງມອບບ້ານເວນເມືອງໃຫ້ຄອບຄອງ.

ເມື່ອທ້າວແລະນາງ ໄດ້ເປັນຄູ່ຜົວເມຍກັນແລ້ວ ນາງຄັນທະມາລາກໍໄດ້ຖາມເຖິງປະຫວັດຄວາມເປັນມາຂອງທ້າວວ່າມາຈາກເຊື້ອສາຍລາຍລ່ອງທາງໃດ ຫລືວ່າແມ່ນພະອິນພະພົມກັບ ເພດລົງມາ, ດັ່ງນັ້ນທ້າວຈຶ່ງ ໄດ້ເລົ່າຄວາມຫລັງສູ່ນາງຟັງ ເຮັດໃຫ້ນາງເກີດມີຄວາມອີດູສົງສານທັງສະທ້ອນໃຈໃນຄວາມ ລຳບາກຂອງທ້າວຈົນນາງນ້ຳຕາອາບແກ້ມຍອມຊີວິດອັນລຳບາກຂອງທ້າວ.

ທ້າວເຊດຖະລາດ ໄດ້ຢູ່ຮ່ວມນາງເປັນເວລາດົນພໍສົມຄວນ, ມື້ໜຶ່ງ ທ້າວ ໄດ້ບອກນາງວ່າຈະ ໄດ້ອອກເດີນທາງ ໄປສູ່ເມືອງປັນຈາ ເພາະຍັງຄຶດຮອດຫາແມ່ຢູ່ບໍ່ເລີກບໍ່ແລ້ວ, ໄປຄາວນີ້ຈະຟ້າວ ໄປຟ້າວກັບ ຂໍໃຫ້ນ້ອງຈົ່ງປົກຄອງບ້ານເມືອງຮ່ວມກັບພໍ່ຖ້າອ້າຍ, ຝ່າຍນາງຄັນທະມາລາກໍບໍ່ ໄດ້ຂັດຂືນແນວໃດມີ ແຕ່ຮ້ອງຂໍໃຫ້ທ້າວ ໄປແລ້ວຈົ່ງຮີບຟ້າວກັບມາຫາ.

ຫລັງຈາກບອກນາງແລ້ວ ທ້າວຈຶ່ງສັ່ງໃຫ້ເສນາອາມາດ ຫ້າງຫາກະກຽມສະເພົາລຳໃຫ່ຍທ້າວບອກວ່າຈະເອົາເສນາ ໄປນຳຈຳນວນໜຶ່ງ. ຕໍ່ມາທ້າວກໍ ໄດ້ເຂົ້າອຳລາພະຍາສິງຫົນຜູ້ເປັນພໍ່ເຖົ້າພ້ອມທັງມອບບ້ານເວນເມືອງຄືນໃຫ້ ແລະສັ່ງລາບັນດາເສນາອາມາດທັງຫລາຍໃຫ້ພາກັນຢູ່ປົກປັກຮັກສາ ບ້ານ

ເມືອງ.

ກ່ອນອອກເດີນທາງທ້າວ ໄດ້ສັ່ງລານາງຄັນທະມາລາຜູ້ເປັນເມຍດັ່ງ ບົດກອນຂຽນວ່າ:

ບາຈຶ່ງບາຍແຂນນ້ອງ ຈາລະຈາເອີ້ນສັ່ງ
ຄ່ອຍຢູ່ດີເປີເມຍມ່ອມອ້າຍ ພາຍພັ້ນນອງຢ່າເຫງົາ
ພີຈັກໄດ້ຈາກເຕົ້າ ເຫີນຫ່າງຮານຊົມ
ແຕ່ນັ້ນນາງຄານເລີຍ ກ່າວຈາສຽງຈ້ອຍ
ຄ່ອຍໄປດີເປີຜົວຂວັນຂ້ອຍ ບຸນເຮືອງຜູ້ປະເສີດ
ຈຶ່ງໃຫ້ປະເສີດເຈົ້າ ຄືນເຂົ້າສູ່ເມືອງ ພະເອີຍ
ຄ້ອມສັ່ງແລ້ວ ລົງຈາກຫໍປາງ
ນາງຄານຊົບລະຫາໄຫລ ຫລັ່ງລົງນຳທ້າວ
ແຕ່ນັ້ນບາຄານເຂົ້າ ສະເພົາທອງລຳໃຫຍ່
ອັນວ່າສາມແກ່ນໄທ້ ອົງນ້ອງຢູ່ຄອງ ເຈົ້າເຮີຍ

# 20. ຍັກໂກຕິຍະລາດມອບລູກສາວໃຫ້ເປັນເມຍທ້າວປິຕະລາດ.

ເມື່ອໄດ້ເວລາດີແລ້ວ ສະເພົາກໍອອກຈາກທ່າມຸ່ງໜ້າໄປເລື້ອຍໆຈົນກາຍເຂດແດນຂອງເມືອງພະຍາສິງຫົນແລ້ວສະເພົາກໍເຂົ້າສູ່ເຂດເມືອງຂອງ ພະຍາຍັກໜຶ່ງຊື່ວ່າ ໂກຕິຍະລາດເປັນຍັກໜຶ່ງມີອິດທິລິດອັນເກັ່ງກ້າ. ທຸກເຊົ້າຄ່ຳວັນຄືນມີບັນດາສະໜົມຍັກຄອຍບົວລະບັດເປັນຈຳນວນຫລວງຫລາຍພາຍ ມາກ ພະຍາຍັກໂກຕິຍະລາດມີລູກສາວຄົນໜຶ່ງຊຶ່ງເກີດໃນດອກໄມ້ຢູ່ໃນສວນ ເປັນຜູ້ມີຮູບໂສມພົວພັນອັນສວຍງາມມີຊື່ວ່າ ບຸດສະມາລາ ອາຍຸ 15 ປີ ແຕ່ນາງມີຮູບຮ່າງຜິວພັນເປັນແນວນາມມະນຸດ ແປກຕ່າງຈາກເຊື້ອຊາດແນວນາມຍັກ ພະຍາຍັກໂກຕິຍະລາດຮັກນາງເໝືອນດັ່ງແກ່ນຕາດັ່ງນັ້ນພະຍາໂກຕິຍະລາດຈຶ່ງສ້າງຫໍຜາສາດໃຫ້ນາງຢູ່ຕ່າງຫາກມີນາງສະໜົມເຝົ້າບົວລະບັດເປັນປະຈຳ, ນາງບໍ່ໄດ້ເດືອດຮ້ອນເຄືອງໃຈໃນອັນໃດໝົດ.

ຍ້ອນກ່າວເຖິງກຸມມານທັງສີ່ທີ່ເດີນສະເພົາມາກັບຕາຜ້າຂາວ, ພໍມາ ເຖິງປະຕູດ່ານຂອງຍັກຈຶ່ງຮວາຍມົນບັງແລ້ວນຳສະເພົາຂ້າມຜ່ານກາຍໄປໄດ້ ຈົນເຖິງທ່າຂອງຕົວເມືອງຫລວງຂອງພະຍາຍັກໂກຕິຍະລາດ ແລ້ວຈຶ່ງຈອດ ສະເພົາຢູ່ກາງແມ່ນ້ຳ. ບັນດາຍັກຊາວເມືອງ ໄດ້ເຫັນສະເພົາກໍພາກັນແຕກ ຕື່ນທັງເວົ້າກັນວ່າເປັນຫຍັງສະເພົາລຳນີ້ຈຶ່ງຜ່ານດ່ານເຂົ້າມາເຖິງເມືອງ ໄດ້ດັ່ງບິດກອນຂຽນວ່າ:

ແຕ່ນັ້ນຊາວເມືອງກໍ່ ກັນດານຫ້ອງຕື່ນ
ສັງວ່າສະເພົາລ່ວງເຂົ້າ ມາໄດ້ຢ່າງໃດ
ຄັນວ່າຫືວເສິກແທ້ ກໍມາພຽງໜ້ອຍໜຶ່ງ
ຄັນວ່າແມ່ນພໍ່ຄ້າ ສະເພົານັ້ນຫາກບໍ່ດີ
ໃຜບໍ່ຫ່ອນຫລົງມາແທ້ ທາງສະເພົາເດີນຮອດ
ເຮົາຫາກຕົ້ນດ່ານໄວ້ ຫລາຍລົ້ນດ່ານເມືອງ
ສັງວ່າມີສະເພົາເຂົ້າ ເຖິງເມືອງບໍ່ບອກຂ່າວ
ໃຜຜູ້ອົງອາດອ້າງ ລິດທິກ້າລ່ວງມາ ນໍ້ເດ
ຫລິງດູສະເພົາເຫລື້ອມ ມີແສງແກ້ວສ່ອງ
ມີທັງຮື່ມເກິ່ງກົ້ງ ຫົວທ້າຍແປດດວງ
ມີທັງປາຄືຂາວກາງ ເຫລືອງຂຽວພໍແປດ
ອັນວ່າຫລັງຄາແດດຕ້ອງ ສະເພົາແກ້ວຮຸ່ງເຮືອງ ເຈົ້າເອີຍ

ເມື່ອພວກຊາວເມືອງພາກັນຕື່ນຫ້ອງ ກໍເລີຍໄດ້ຍິນຊອດໄປເຖິງຫູຂອງພະຍາຍັກໂກຕິຍະລາດ ມັນກໍຮ້າຍຂຶ້ນເປັນຟືນ ເປັນໄຟທັງເວົ້າວ່າ ມັນແມ່ນໃຜມາອວດອ້າງລິດທິກ້າຂີ່ມຫູ ສັງວ່າບັງສະເພົາເຂົ້າເຖິງເມືອງບໍ່ບອກກູນໍ, ສູຈົ່ງໄປສັງເກດການດູດຽວນີ້ ຄັນເປັນຄືນແມ່ນເຄີຍມາເປັນເຫຍື່ອທ້ອງ ເຮົາຫລາຍເທື່ອແລ້ວ.

ພວກຍັກທີ່ເປັນເສນາຈຶ່ງແປງເພດແລ້ວຂີ່ເຮືອນ້ອຍອອກໄປຫາ, ເມື່ອ ໄປຮອດມັນກໍຖາມໄຖ່ໄຕ່ຄວາມວ່າ ດູລາທ່ານຜູ້ເດີນສະເພົາມາຮອດ ທ່ານ ມາແຕ່ທາງໃດຊິໄປທາງໃດກັນແທ້. ຫລືວ່າມາຫາຊອກຊື້ຊອກຂາຍອັນໃດ. ຕາຜ້າຂາວຈຶ່ງບອກໃຫ້ທ້າວປິຕະລາດຜູ້ຖ້ວນສອງໃຫ້ໄປເຈລະຈາກັບເຂົາເພາະວ່າການເທື່ອນີ້ແມ່ນໜ້າທີ່ຂອງເຈົ້າແລ້ວລູກເອີຍ, ດັ່ງນັ້ນທ້າວປິຕະລາດຈຶ່ງ ໄດ້

ບອກກັບພວກຍັກວ່າເຮົາມາແຕ່ເມືອງປັນຈາພຸ້ນ ບໍ່ມີສິນຄ້າຫຍັງມາຊື້ມາຂາຍດອກ ມີແຕ່ຫຼຽວສະເພົາ ໄປເລາະເບິ່ງບ້ານເມືອງຕ່າງໆທີ່ນັ້ນແຫລະ, ຈາກນັ້ນກໍຈະກັບຄືນໄປສູ່ເມືອງປັນຈາຂອງເກົ່າກະວ່າມື້ອື່ນເຈົ້າຊິອອກເດີນ ທາງຕໍ່ໄປ.

ເມື່ອຖາມໄດ້ຄວາມແລ້ວ ເຂົາກໍກັບຄືນໄປລາຍງານໃຫ້ພະຍາຍັກໂກ ຕິຍະລາດຮູ້ວ່າ ເມື່ອໄປເບິ່ງໃກ້ໆກໍເຫັນມີສະເພົາສອງລຳທີ່ສວຍງາມ ແລະເຫັນມີຜູ້ຊາຍນ້ອຍຄົນໜຶ່ງມີຮູບໂສມອັນງາມໆອາຍຸປະມານ 10 ປີ ເປັນແນວນາມມະນຸດ ມັນບອກວ່າມາຈອດພັກຊົ່ວຄາວມື້ອື່ນເຈົ້າຊິອອກເດີນ ທາງຕໍ່ໄປ. ພະຍາຍັກໂກຕິຍະລາດ ໄດ້ຟັງກໍຮ້າຍຂຶ້ນຢ່າງໃຫຍ່ທັງເວົ້າວ່າມັນ ເປັນຫຍັງຈຶ່ງລັກລ່ວງດ່ານເຂົ້າມາເມືອງຂອງກູ ມັນບໍ່ຢ້ານບໍ່ກົວກູຫວະ, ອັນມະນຸດນີ້ເຂົາເຄີຍພາກັນມາໃຫ້ກູກິນເປັນເຫຍື່ອມາແລ້ວ. ຫລືວ່າເຂົາຊິມາສູ້ສົງຄາມກັບກູລອງເບິ່ງຊັ້ນບໍ່ມີແຕ່ເປັນເຫຍື່ອທ້ອງກູນີ້ບໍ່ສົງ; ວ່າແລ້ວພະຍາຍັກໂກຕິຍະລາດກໍອອກຄຳສັ່ງຢ່າງເດັດຂາດ ໃຫ້ທຫານກຳລັງອອກໄປຈັບເອົາຕົວຂອງມະນຸດພ້ອມດ້ວຍສະເພົາສອງລຳມາໃຫ້ໄດ້ດຽວນີ້, ດັ່ງນັ້ນກຳລັງຂອງຍັກຈຶ່ງເຕົ້າໂຮມກັນຢ່າງມືດຟ້າມົວດິນຫມາຍຈະຈັບເອົາທ້າວພ້ອມດ້ວຍສະເພົາ.

ບັດນີ້ກ່າວເຖິງຕາພ້າຂາວເຈົ້າອິນຕາຕີນພໍ່ເມື່ອ ໄດ້ຮູ້ສະພາບຄືແນວນັ້ນຈຶ່ງບອກທ້າວປີຕະລາດຜູ້ຖ້ວນສອງວ່າ ສົງຄາມນີ້ແມ່ນພາລະໜ້າທີ່ຂອງເຈົ້າຈະຕ້ອງເປັນຜູ້ລອງເດດສີລະສິນ, ດຽວນີ້ພວກມານໄດ້ຈັດກຳລັງໄພ່ພົນອອກ ມາລ້ອມແລ້ວ ເຈົ້າໄປທົດລອງຕໍ່ສູ້ກັບພວກມານລອງເບິ່ງ ຖ້າຫາກວ່າລິດ ເດດຂອງເຈົ້າຍັງອ່ອນນ້ອຍຊິບອກໃຫ້ນ້ອງຊາຍໄປຊ່ວຍດອກ. ແນວໃດກໍຕາມເຈົ້າບໍ່ຕ້ອງຢ້ານບໍ່ຕ້ອງກົວເຂົາດອກ ເຈົ້າຈັກມີໄຊຊະນະແນ່ນອນ.

ດັ່ງນັ້ນ, ທ້າວຈຶ່ງໄດ້ປະຕິບັດຕາມຄຳບອກຂອງພໍ່ພະອິນ (ພໍ່ຜ້າຂາວ) ທ້າວ

ຈຶ່ງເຄົາດາຕົກແຕ່ງກຳດາບກ້າຫານໄວ້ແທບຕົວ ແລ້ວກໍຍໍມືນົບຕໍ່ພະອິນ ທັງຍໍມືລະນຶກເຖິງບຸນຄຸນຂອງພະລືສີຕາໄຟ, ຈາກນັ້ນກໍອອກຈາກສະເພົາມາ ນັ່ງຄອຍເບິ່ງ ປະກົດວ່າຝູງກຳລັງຂອງພະຍາຍັກໂກຕິຍະລາດຫລຸຫລັ່ງທັ່ງເທ ກັນມາແບບມືດຟ້າມົວດິນ, ທ້າວປີຕະລາດບໍ່ລໍຊ້າຈຶ່ງທະຍານຂຶ້ນສູ່ຝັ່ງທັນທີ. ພວກ ບໍລິວານພະຍາຍັກແນມເຫັນກໍພາກັນຫຸ້ມອ້ອມທ້າວ ໄວ້ຫວັງຈະຈັບເອົາທ້າວຢ່າງງ່າຍດາຍຕາມທີເຂົາຄິດ. ທ້າວຈຶ່ງຖອດດາບອອກຕໍ່ສູ້ກັບພວກເຂົາດັ່ງບົດກອນຂຽນວ່າ:

ແຕ່ນັ້ນຫຸນເຮືອງທ້າວ ໂສມງາມນ້ອຍອ່ອນ
ຖອດດາບກ້າ ດວງແກ້ວຜ່າຜະຫລຽງ
ຫົວມານກາງ ຕົກລົງເດຍລະດາດ
ມັນກໍບາຍຫົວຕິດຕໍ່ໄດ້ ເລີຍເຂົ້າຫໍ່ຍາ
ແຕ່ນັ້ນຍາຫອນເປື້ອງ ທະນູສິນດວງອາດ
ສຽງສັ່ນກ້ອງ ທະລັງພື້ນແຜ່ນດິນ
ສອນຕ້ຳຕອງ ພິມານຕາຍມອດ
ເດຍລະດາດລົ້ນ ສອນແກ້ວສຽບແທງ
ມານຕາຍລົ້ນ ໃນດິນອິນໄຂ່ວ
ຊຸນໃຕ່ຍລົ້ນ ຕາຍແໜ້ນາກມາຍ

ຕໍ່ມາທ້າວ ໄດ້ຢຸດພັກເມື່ອຍຢູ່ສາລາກາງເມືອງ, ຝ່າຍພໍ່ພ້າຂາວພະອິນ ໄດ້ຫລິງເຫັນວ່າລິດເດດຂອງທ້າວແມ່ນເໜືອກວ່າພວກເຂົາຫລາຍເທົ່າຈຶ່ນພວກເຂົາເກງກົວ. ໃນເວລາຕໍ່ມາຫົວໜ້າຂອງພວກຍັກຈຶ່ງເຂົ້າໄປລາຍງານຕໍ່ພະຍາຍັກໂກຕິຍະລາດວ່າ ພວກຕົນໄດ້ນຳກຳລັງອອກສູ້ຮົບແລະປິດລ້ອມທຸກບ່ອນ ແຕ່ວ່າຊາຍຄຽວນ້ອຍລິດທິແຮງແຂງຂື່ນບັດນີ້ເສຍໄພ່ຟ້າພົນລົ້ນມາກມາຍພະ

ເອີຍດຽວນີ້ຂ້າກໍຍັງບໍ່ທັນໄດ້ເປົ່າເອົາເຂົາຄືນມາເທື່ອ.

ເມື່ອພະຍາຍັກໂກຕິຍະລາດໄດ້ຮັບຟັງການລາຍງານດັ່ງນັ້ນກໍຮ້າຍ ອຶດຮ້າຍຍິ່ງຂຶ້ນເປັນຟືນເປັນໄຟທັງເວົ້າວ່າພໍ່ປານມະນຸດຕົວນ້ອຍໆສູ້ຊິຢ້ານຊິກົວມັນແນວໃດຕັ້ງແຕ່ລາຊະສີ,ຊ້າງພໍ່ພັນຕົວໃຫຍ່ ກູຍັງຈັບໂຮບໄດ້ກິນຊິ້ນບາດດຽວອັນນີ້ພຽງແຕ່ມະນຸດນ້ອຍໆພອຍພາກຫລິ້ງມາກູຊິກິນມັນໃສ່ຄາບແລງອັນນີ້.ວ່າແລ້ວມັນກໍອອກຄຳສັ່ງໃຫ້ຂຸນມານຂອງມັນກັບຄືນໄປຕໍ່ສູ້ອີກເປັນຄັ້ງທີສອງລອງເບິ່ງ.ແຕ່ຂຸນມານຜູ້ໃຫຍ່ສະເໜີວ່າໄປກໍໄປແຕ່ຂໍໃຫ້ພະອົງຈົ່ງຕິດຕາມ ເບິ່ງຢ່າງໃກ້ຊິດ ຖ້າຫາກຝ່າຍຂ້າສູ້ບໍ່ໄດ້ອີກ ພະອົງຈົ່ງເຂົ້າຊ່ວຍເຫລືອ,ດັ່ງ ນັ້ນພະຍາຍັກໂກຕິຍະລາດຈຶ່ງສັ່ງວ່າໄປເກນເອົາກຳລັງພົນໄປຕື່ມອີກ.

ຫລັງຈາກເຕົ້າໂຮມກຳລັງພົນເປັນທີ່ຮຽບຮ້ອຍແລ້ວກໍອອກໄປຕໍ່ສູ້ເມື່ອພວກຍັກທັງຫລາຍແນມເຫັນທ້າວນັ່ງຢູ່ສາລາຢ່າງສະບາຍ ຈຶ່ງຕິ້ວອ້ອມທ້າວເອົາໄວ້,ແຕ່ວ່າທ້າວບໍ່ສະທົກສະທ້ານຢ້ານກົວຫຍັງໝົດ.ທ້າວຈຶ່ງເສກມົນ ເປົ່າເປັນງູຊວງໃຫຍ່ໆຈຶ່ງຢໍ່ຂົ້ນຂົບຕອດທັງເອົາຫາງຟາດກ່ຽວຕົວຝູງຍັກ.ຝ່າຍຍັກກໍເສກມົນເປັນຮຸ້ງໄລ່ກິນໝູ່ງູຊວງຈົນໝົດ,ທ້າວຈຶ່ງເສກເປັນແມ່ ນ້ຳໄຫລຖ້ວມໝູ່ມານເບິ່ງເຂົາພາກັນຟູ່ອ່ານຄັບທິບ,ດັ່ງນັ້ນເຂົາຈຶ່ງເສກມົນໃຫ້ເປັນລົມພັດແມ່ນ້ຳໃຫ້ແຫ້ງເສຍໝົດ,ທ້າວຈຶ່ງເສກມົນເປົ່າໃຫ້ເກີດເປັນຝົນຫອກຝົນງ້າວຕົກລົງໃສ່ພວກເຂົາ,ມານຈຶ່ງເສກມົນເປັນແຜ່ນຫີນກັ້ງເອົາໄວ້ພ້ອມທັງນຳພົນເຂົ້າຫາບາຫຸກແຫ່ງຍັກທີ່ເປັນຫົວໜ້າໂດດເຂົ້າໃສ່ທ້າວທ້າວຈຶ່ງຈັບດາບຟັນຄໍຍັກຂາດແຕ່ມັນກໍຈັບເອົາມາຕໍ່ຄືນແລ້ວຕໍ່ສູ້ກັບທ້າວຕໍ່ໄປບໍ່ຢຸດບໍ່ຢ່ອນ,ການສູ້ຮົບດຳເນີນໄປເຖິງທ່ຽງມື້ຈຶ່ງມີການຢຸດພັກເມື່ອຍເອົາແຮງ.

ຝ່າຍພໍ່ພະອິນ(ຕາຜ້າຂາວ) ຫລິງເຫັນທ້າວພັກເຊົາເອົາແຮງຈຶ່ງເຂົ້າໃຈແຈ້ງໃນເຫດການຄັ້ງນີ້,ດັ່ງນັ້ນ ຈຶ່ງບອກໃຫ້ທ້າວເພັດຊະລາດນ້ອງຜູ້ຫລ້າໃຫ້

ໄປຊ່ອຍອ້າຍ, ຄັນຊິປະໃຫ້ແຕ່ທ້າວປິຕະລາດສູ້ຮົບຜູ້ດຽວຢ້ານມັນຊິຊ້າ ເຕີ ທາງ. ເມື່ອທ້າວ ເພັດຊະລາດ ໄດ້ຮັບຄຳບອກກ່າວຈາກພໍ່ພະອິນແລ້ວທ້າວ ກໍ ບາຍດາບກ້າຫຼຽມເນື້ອດ່ວນທະຍານ ເລີຍລ່ວງລ້ຳເຖິງທີ່ສາລາຮຽງ ບາ ດານພີ່ຊາຍອີງອ້າຍ. ທ້າວໄດ້ເວົ້າກັບອ້າຍວ່າ ເລື່ອງນີ້ອ້າຍຢ່າອີ່ແອ້ ກັບ ເຂົາມັນຊິເສຍເວລາເດີນທາງຂອງພວກເຮົາ, ຜູ້ເປັນອ້າຍຈຶ່ງບອກວ່າບໍ່ໄດ້ ອີ້ແອ້ນຳເຂົາດອກ ແຕ່ວ່າການສູ້ຮົບກັບພວກເຂົາກໍຫາກມ່ວນໄປອີກ ແນວ ໜຶ່ງ. ບັດນີ້ນ້ອງໄດ້ມາຊ່ວຍອ້າຍກໍດີແລ້ວ ເພາະວ່າອ້າຍເອງຈະໄດ້ ພັກ ຜ່ອນເຊົາແຮງຈັກໜ່າງ.

ພໍແຕ່ເວົ້າກັນແລ້ວ, ຍັກກໍມືດຟ້າມືດດິນເຂົ້າມາໃສ່ເຂົາ ໂຍນໂງ່ນຫີນເຂົ້າ ໃສ່ທ້າວທັງສອງ ແຕ່ທ້າວ ເພັດຊະລາດເປົ່າມົນກັ້ງໄວ້ແລ້ວຫີນກໍກັບໄປຕັງ ຕົວພວກເຂົາເອງ, ຕໍ່ມາທ້າວ ເພັດຊະລາດຈຶ່ງຊີ້ນິ້ວບອກໃຫ້ເຂົາຕາຍຈົນໝົດ ຈາກນັ້ນຈຶ່ງຊີ້ໃຫ້ຄືນມາຜູ້ໜຶ່ງ ເພື່ອໃຫ້ກັບ ໄປລາຍງານຕໍ່ພະຍາຍັກໂກຕິ ຍະ ລາດ, ຫຼັງຈາກນັ້ນທ້າວ ເພັດຊະລາດຈຶ່ງກັບຄືນໄປສູ່ສະເພົາ ປະໃຫ້ ທ້າວ ປິຕະລາດຜູ້ເປັນອ້າຍນັ່ງຖ້າຟັງຂ່າວຢູ່ໃນສາລາ.

ບັດນີ້ກ່າວເຖິງຍັກຕົວທີ່ຄືນໄປນັ້ນ ມັນກໍຟ້າວເຂົ້າລາຍງານຕໍ່ພະຍາ ຍັກ ໂກຕິຍະລາດໃຫ້ຮູ້ຊູ່ປະການດັ່ງບົດກອນຂຽນວ່າ:

ບັດນີ້ເສຍຂຸນກ້າ　　　ໂຍທາຜູ້ໃຫຍ່
ທັງໝູ່ເສເນດພ້ອມ　　　ຕາຍສ້ຽງບໍ່ຫຼີ
ກັບທັງໂຍທາພ້ອມ　　　ມໍລະນາຕາຍຊຸ່ມ
ພິນໝື່ນຕື້　　　ຕາຍສ້ຽງບໍ່ຫຼີ
ແຕ່ນັ້ນລາຊາເຈົ້າ　　　ໂກສອນລ້ອຍຄັ້ງ (ບາງບ່ອນ ວ່າ ໄອສອນ)

ກໍທໍ່ເສຍໄພ້ຂາ ເມືອງບ້ານຫລິ່ມຫລວງ
ພະຍາຍັກເຈົ້າ ເສົ້າໂສກໂສກາ
ກໍຫາກເສຍເສນາ ໄພ່ໄທໝົດສ້ຽງ
ມິແຕ່ຕົນກູຫ້າວ ຄົນດຽວນິ່ງຢູ່ ເປັນລີ
ຄົນກູໄປຕໍ່ຕ້ອງ ຄົນນັ້ນກໍບໍ່ມີ ດົງນີ້
ອັນໜຶ່ງຂຸນຫານຫ້າວ ຂຸນຫລວງຍັກໃຫ່ຍ ກູນັ້ນ
ກໍຫາກລິດເລີດລ້ຳ ຍັງລົ້ມທ່າວຕາຍ ແທ້ນາ

ພະຍາຍັກໂກຕິຍະລາດຄິດຊັ່ງຊາກກຳລັງຫານໃສ່ກັບທ້າວແລ້ວຈຶ່ງຮູ້ ວ່າທ້າວແມ່ນເປັນຜູ້ມີລິດເດດກ້າລື່ນຫລາຍທົບ. ດັ່ງນັ້ນຈຶ່ງຖາມຍັກຜູ້ມາ ລາຍງານວ່າ ດຽວນີ້ທ້າວພັກຢູ່ໃສ? ຍັກຜູ້ມາລາຍງານຈຶ່ງບອກວ່າດຽວນີ້ ທ້າວຍັງພັກຢູ່ທີ່ສາລາກາງເມືອງຜູ້ດຽວບໍ່ມີລິວານໃດໆໝົດ, ພະຍາຍັກຈຶ່ງຖາມຕື່ມວ່າຄົນຂັ້ນໝູ່ພວກຢູ່ໃນສະເພົາບໍ່ມີ? ຍັກຜູ້ມາລາຍງານຕອບວ່າຜູ້ ຂ້າແນມເບິ່ງໃນສະເພົານັ້ນບໍ່ເຫັນຈັກຊິມີໜ້ອຍມີຫລາຍປານໃດກໍບໍ່ຮູ້.

ເມື່ອພະຍາຍັກໂກຕິຍະລາດໄດ້ຟັງດັ່ງນັ້ນ ກໍຈຶ່ງສັ່ງໃຫ້ມີຫຽນເງິນ ຫຽນຄຳໃສ່ຂັນພານແກ້ວ, ຈາກນັ້ນຍັກໂກຕິຍະລາດຈຶ່ງແປງເພດເປັນມະນຸດ ນຳພົນໂຍທາທັງຫລາຍຍົກຂັນຫຽນເງິນຫຽນຄຳໄປຂໍອ່ອນຍອມຕໍ່ທ້າວປົດຕະລາດຢູ່ທີ່ສາລາກາງເມືອງ, ຍັກກ່າວວ່າຂໍໃຫ້ທ່ານຈົ່ງໂຜດພາຍໄດ້ຊີວິດອິນຊີ ແກ່ຂ້າເຖີ້ນ, ຂ້າຈັກຍົກເມືອງໃຫ້ທ້າວເປັນຜູ້ປົກຄອງອັນແຕ່ຂອງໃນຫີນ ທອງເມືອງຫລວງ 12 ໂຍດວາງມອບໃຫ້ບາທ້າວຄອບຄອງ, ອີກອັນໜຶ່ງສີມມາລານ້ອຍ(ບາງບ່ອນວ່າຄົນທະມາລາ) ບຸດຕີມີສະອາດກໍຈະຍົກໃຫ້ ເປັນເມຍຂອງທ້າວ.

ຝ່າຍທ້າວປົດຕະລາດຈຶ່ງບອກວ່າຄົນຫາກແມ່ນຍິນຍອມມອບໃຫ້ເຮົາກໍ ບໍ່

ຂັດຂືນຫຍັງ, ສ່ວນໄພ່ພົນເສນາອາມາດຂອງທ່ານທີ່ຕາຍໄປນັ້ນ ເຮົາກໍ ຈະໂພດຄືນມາໃຫ້ຫມົດ, ພະຍາຍັກຈຶ່ງກ່າວສະແດງຄວາມຮູ້ບຸນຄຸນຂໍໃຫ້ທ້າວຈຶ່ງໂພດເອົາຄືນມາໃຫ້ແນ່ຖອນ, ດັ່ງນັ້ນທ້າວຈຶ່ງລະນຶກເຖິງພໍ່ພະອິນ (ພໍ່ຜ້າຂາວ) ຝ່າຍພໍ່ພະອິນກໍຫລິ່ງເຫັນບັນຫາດັ່ງກ່າວຈຶ່ງບອກໃຫ້ທ້າວເພັດຊະລາດ ຈຶ່ງເອົານິ້ວມືຊີ້ໄພ່ພົນທີ່ຕາຍນັ້ນຄືນມາໃຫ້ຫມົດ ຢ້ານວ່າມັນຊິເສຍເວລາ ເດີນທາງໄປຫນ້າ. ທ້າວເພັດຊະລາດຈຶ່ງໄດ້ຊີ້ເອົາພວກທີ່ຕາຍໄປນັ້ນຄືນມາຕາມຄຳບອກຂອງພໍ່ພະອິນ, ພວກທີ່ຕາຍໄປແລ້ວເມື່ອກັບມີຊີວິດຄືນມາກໍມີຄວາມປິຕິຊົມຊື່ນຫາອັນປຽບບໍ່ໄດ້ຕ່າງກໍກົ້ມຂາບຫນ່ຽວວອນໃຫ້ທ້າວຈຶ່ງຢູ່ປົກ ຄອງບ້ານເມືອງທີ່ຊຶ່ງພວກເຂົາພ້ອມທີ່ຈະຄອຍປົວລະບັດຮັບໃຊ້, ໂດຍສະ ເພາະແມ່ນພະຍາຍັກໂກຕິຍະລາດນັ້ນທັງເວົ້າທັງສັ່ນວ່າຂໍຮັບເອົາທ້າວເປັນຄື ດັ່ງລູກຄືງປົກຄອງບ້ານເມືອງແທນ.

ຈາກນັ້ນ, ພະຍາຍັກໂກຕິຍະລາດຈຶ່ງສັ່ງໃຫ້ເສນາກຽມລົດຄຳເພື່ອວ່າຈະໄດ້ແຫ່ທ້າວເຂົ້າສູ່ເມືອງ, ທັງສັ່ງໃຫ້ຈຳນວນຫມື່ນຮົບໄປບອກທາງຝ່າຍໂຮງຫລວງໃຫ້ທາງຫາກະກຽມພາຂວັນໄວ້ ແລ້ວໃຫ້ເຊີນເອົານາງຄັນທະມາລາອອກມາສູ່ຫ້ອງຮຽງທ້າວຢູ່ແຝງ. ເມື່ອນາງຄັນທະມາລາປະດັບປະດາ ເອ້ຢ້ອງດ້ວຍເຄື່ອງປະດັບປະດາຕ່າງໆເປັນທີ່ຮຽບຮ້ອຍແລ້ວ, ຈຶ່ງເລີ່ມຂະບວນແຫ່ທ້າວເຂົ້າສູ່ໂຮງ ຂະບວນແຫ່ປະກອບໄປດ້ວຍຄົ້ງດົນຕີພິນພາດສຽງ ລະງົມໄປທົ່ວນະຄອນ, ເມື່ອທ້າວເຂົ້າສູ່ຫ້ອງແລະນັ່ງຢູ່ຂ້າງພາຂວັນແລ້ວຕໍ່ ມານາງຄັນທະມາລາກໍອອກມານັ່ງຮຽງກັບທ້າວ. ເມື່ອໄດ້ລືກງານຍາມດີ ຫມໍພອນຈຶ່ງຖວາຍພອນໄຊຍະໂຊກ ທຸກສິ່ງແລ້ວຖອຍພ້ຽນເລີກລາ.

ນັບແຕ່ທ້າວປິຕະລາດໄດ້ນາງຄັນທະມາລາມາເປັນເມຍແລະຢູ່ຮ່ວມ ກັນ. ເປັນເວລາຫລາຍວັນແລ້ວ ທ້າວຍັງຄຶດຮອດຫາແມ່ບໍ່ເລີກບໍ່ແລ້ວ ດັ່ງ ນັ້ນ

ທ້າວຈຶ່ງໄດ້ເວົ້ານຳນາງວ່າ ອ້າຍຈັກຂໍໄປຢາມແມ່ກ່ອນຂໍໃຫ້ນ້ອງຈົ່ງ ຖ້າອ້າຍຢູ່ເມືອງເຮົານີ້, ເມື່ອໃດອ້າຍໄດ້ພົບແມ່ແລ້ວກໍຈະຟ້າວກັບມາຫານ້ອງ ຝ່າຍນາງຄັນທະມາລາກໍບອກວ່າບໍ່ມີຄວາມຂັດຂ້ອງແນວໃດ ໃຫ້ຮີບໄປ ຮີບກັບມາຫາຈະຢູ່ຖ້າ. ຈາກນັ້ນທ້າວຈຶ່ງໄປລາພໍ່ເຖົ້າທາງຝ່າຍພໍ່ເຖົ້າກໍບໍ່ຂັດຂືນ ແນວໃດ ພຽງແຕ່ໃຫ້ຟ້າວໄປຟ້າວມາ ເພື່ອປົກຄອງບ້ານເມືອງ, ສຳລັບເມຍຂອງທ້າວນັ້ນຈະເອົາໄປນຳກໍບໍ່ຂັດຂືນ, ທ້າວບອກວ່າບໍ່ເອົາໄປເພາະ ການເດີນທາງແມ່ນໄປທາງນ້ຳກົວຈະເກີດພາຍຸຮ້າຍຕາມທາງ.

ຕໍ່ມາພະຍາຍັກໂກຕິຍະລາດຈຶ່ງສັ່ງໃຫ້ຂຸນຜູ້ໃຫ່ຍຂອງເຂົານິລະມິດ ເປັນສະເພົາຂຶ້ນຫນຶ່ງລຳ ພ້ອມທັງມອບເສນາອາມາດໃຫ້ຮ້ອຍຫນຶ່ງ ເພື່ອໃຫ້ທ້າວໄດ້ຊ່ວງໃຊ້ໃນຂະນະເດີນທາງ, ເມື່ອໄດ້ເວລາດີມີໂຊກແລ້ວ ສະເພົາ ຂອງທ້າວກໍອອກເດີນທາງຕໍ່ໄປ.

## 21. ພະຍາຈຳປາມອບລູກສາວ
## ໃຫ້ແກ່ທ້າວສຸວັນນະລາດ.

ຫລັງຈາກທ້າວປິຕະລາດໄດ້ສັ່ງລາເມຍແລະພໍ່ເຖົ້າພ້ອມດ້ວຍເສນາ ອາມາດເປັນທີ່ຮຽບຮ້ອຍແລ້ວ ຈຶ່ງນຳສະເພົາອອກເດີນທາງຕໍ່ໄປ, ສະເພົາ ທັງ 3 ລຳໄດ້ມຸ່ງໜ້າໄປສູ່ເມືອງຈຳປາແລະສະເພົາໄດ້ເຖິງທ່າເມືອງຈຳປາໃນຕອນເຊົ້າໂດຍແມ່ນພະອິນພໍ່ຜ້າຂາວນິມິດບັງຕາພວກເຝົ້າດ່ານບໍ່ໃຫ້ເຫັນ ສະເພົາທັງ 3 ລຳ. ຂະນະທີ່ສະເພົາໄປເຖິງແລະຈອດຢູ່ທ່າເມືອງຈຳປາ ນັ້ນພວກຊາວເມືອງພວມພາກັນຕື່ນຈາກນອນຈຶ່ງໄດ້ເຫັນສະເພົາຈອດຢູ່ທ່າເມືອງ ໃຜງກໍພາກັນຕື່ນຫ້ອງເປັນແຊວງວ່າແມ່ນສະເພົາມາແຕ່ທາງໃດຈຶ່ງລ່ວງດ່ານເຂົ້າມາຮອດທ່າເມືອງໄດ້.

ເມື່ອເຫັນດັ່ງນັ້ນຂຸນຈຶ່ງຂຶ້ນໄປຂາບທູນໃຫ້ພະຍາເມືອງຈຳປາຮູ້ວ່າດຽວນີ້ໄດ້ມີສະເພົາລັກລອບເຂົ້າມາຈອດຢູ່ທ່ານ້ຳເຄິ່ງເມືອງ ຈັກຊິມາດີມາຮ້າຍແນວໃດກໍບໍ່ຮູ້ ມີນຳກັນທັງໝົດ 3 ລຳ, ອັນແຕ່ສະເພົາໃນເຂດແດນ ແຫ່ງເມືອງຈຳປາເອົານັ້ນບໍ່ມີລຳໃດຈະປຽບປານໄດ້ ແມນເບິ່ງເຫລື້ອມສະເໜີດັ່ງຄຳທັງແທ່ງ. ຝ່າຍພະຍາເມືອງຈຳປາຈຶ່ງເວົ້າວ່າເຂົ້າມາແຕ່ທາງໃດກັນ ແທ້ດີບໍ່ແຈ້ງລ່ວງໜ້າໃຫ້ຮູ້, ອັນໜຶ່ງພວກຢູ່ຝ່າຍດ່ານເປັນຫຍັງບໍ່ກວດ .ກາ ປ່ອຍໃຫ້ເຂົ້າມາງ່າຍແທ້;ຂຸນເມືອງບອກວ່າຄົນໃນເມືອງຈຳປານັ້ນບໍ່ມີໃຜຮູ້ດອກພະອົງເອີຍ.

ຝ່າຍພະຍາເມືອງຈຳປາຈຶ່ງກ່າວວ່າເລື່ອງນີ້ຕ້ອງແຕ່ງຄົນໄປເບິ່ງຈຶ່ງຈະຮູ້ລາຍລະອຽດໄດ້, ຖ້າແມ່ນຄົນດີແທ້ເດີນສະເພົາຂ້າມລ່ວງບໍ່ມີຜູ້ໃດຮູ້ໃຫ້ ທ່ານເກນກຳລັງພົນໄປລ້ອມຈັບເອົາໂລດ, ຖ້າຫາກມັນບໍ່ຍິນຍອມໃຫ້ເອົາປືນ ໃຫ່ຍຍິງໃສ່ໂລດ, ດັ່ງນັ້ນແສນເມືອງແລະຂຸນເມືອງຈຶ່ງຈັດຕັ້ງກອງກຳລັງຮັກສາຕົວເມືອງເລາະຕາມແຄມຝັ່ງເອົາໄວ້, ອີກຈຳນວນໜຶ່ງກໍພາກັນຂີ່ເຮືອເຂົ້າລ້ອມສະເພົາເອົາໄວ້, ປືນໃຫ່ຍຖືກນຳໄປຕັ້ງຢາຍໄວ້ຕາມຈຸດຕ່າງໆກຽມພ້ອມ ທຸກເວລາທີ່ຈະບຸກເຂົ້າໃສ່ສະເພົາທັງ3 ລຳທີ່ຈອດຢູ່ກາງແມ່ນ້ຳ.

ບັດນີ້ກ່າວເຖິງ ພໍ່ພ້າຂາວ (ພະອິນ) ຕົນປະເສີດ ພະອົງໄດ້ບອກໃຫ້ທ້າວສຸວັນນະລາດກຸມມານໄດ້ກຽມຕົວ ເພາະຖ້ຽວນີ້ແມ່ນໜ້າທີ່ຂອງທ້າວສຸວັນ. ນະລາດຈະຕ້ອງເປັນຜູ້ຮັບມືແລະແກ້ໄຂບັນຫາທີ່ຈະເກີດຂຶ້ນເພາະວ່າດຽວນີ້ ກຳລັງຂອງສັດຕູໄດ້ປິດລ້ອມເອົາໝົດແລ້ວ ໃຫ້ເຈົ້າອອກໄປຕໍ່ສູ້ກັບເຂົາ ລອງເບິ່ງລູກເອີຍ. ທ້າວສຸວັນນະລາດໄດ້ຮັບຄຳບອກຈາກພໍ່ພ້າຂາວແລ້ວກໍ ກຽມຕົວຈັບເອົາສອນແລະດາບແລ້ວກໍຍົກມືໄຫວ້ພໍ່ພະອິນ (ຕາພ້າຂາວ) ຝ່າຍພໍ່ ພ້າຂາວກໍໄດ້ອວຍໄຊໃຫ້ທ້າວຈຶ່ງໄດ້ຮັບໄຊຊະນະສົມດັ່ງປາຖະໜາ.

ຕໍ່ມາທ້າວສຸວັນນະລາດກໍອອກມາຢືນຄອຍຢູ່ສະເພົາຢ່າງບໍ່ຢ້ານກົວ ຫຍັງໝົດ. ຝ່າຍແສນເມືອງທີ່ນຳກຳລັງລ້ອມສະເພົາເອົາໄວ້ ເມື່ອພວກເຂົາພາຍເຮືອເຂົ້າໄປໃກ້ສະເພົາຈຶ່ງແນມເຫັນທ້າວເປັນຜູ້ມີຮູບໂສມພົວພັນອັນງາມ ໆ ເຂົາຈຶ່ງຖາມທ້າວວ່າດູລາຊາຍຜູ້ນ້ອຍເຈົ້າຊື່ແນວໃດ ເຈົ້າມາແຕ່ໃສຊິ ໄປໃສ ເປັນຫຍັງຈຶ່ງພາງານມາລ່ວງຄອງເມືອງບ້ານ ຖ້າເຈົ້າແມ່ນຄົນແທ້ໆຄັນຊິເດີນສະເພົາເຂົ້າເມືອງກໍຕ້ອງແຈ້ງໃຫ້ຮູ້ ອັນນີ້ເປັນຫຍັງຈຶ່ງລັກລອບ ເຂົ້າມາຫວັງຈະສ້າງເລື່ອງສ້າງລາວ, ເຈົ້າຈຶ່ງໄປຂາບໄຫວ້ເພື່ອຂໍຂະມາລາໂທດຕໍ່ພະຍາເມືອງດຽວນີ້ບາງເທື່ອທ່ານອີດູສົງສານອາດຊິໂຜດຜາຍຊີວິດອິນ ຊິ

ຂອງເຈົ້າ. ແຕ່ທ້າວ ໄດ້ຕອບພວກເຂົາໂດຍດັ່ງບົດກອນຂຽນວ່າ:

ເຮົານີ້ມາແຕ່ກ້ຳ ເມືອງໃຫຍ່ປັນຈາ
ເດີນສະເພົາມາ ທ່ຽວຊົມເມືອງບ້ານ
ບັດນີ້ ເຮົາຈັກຄືນໄປຫ້ອງ ປັນຈາ ເມືອງເກົ່າ
ພໍແຕ່ມາແວ່ຢັ້ງ ຄາວນ້ອຍຊິລ່ວງ ໄປ
ເຮົາບໍ່ໄດ້ໝາຍມາໝັ້ນ ທຳການເສິກໃຫຍ່
ບໍ່ໄດ້ມາຜ່າມ້າງ ຊີງຂ້າໄພ່ພົນ
ອັນໃຫ້ໄປວອນໄຫ້ວ ຈອມເມືອງໂດຍອາດ
ມີແຕ່ສອນດາບງ້າວ ຊິໄປໄຫວ້ທ່ານພະຍາ ນັ້ນແລ້ວ
ຄ້ອນວ່າທ້າວກ່າວແລ້ວ ລະນຶກຣອດພໍ່ລືສີ
ບາກໍຣວຍອາຄົມ ອ່ານມົນນິ້ຊາ
ກໍຈຶ່ງຜັນຜະຫຍອງຂຶ້ນ ພາຍບິນເຫາະລ່ວງ ໄປແລ້ວ
ເລີຍເລົ່າເຖິງແຫ່ງຫ້ອງ ເມືອງກ້ວາງລວດລົງ ເຈົ້າເອີຍ

ເມື່ອພວກກຳລັງຂອງຊາວ ເມືອງ ເຫັນທ້າວ ເຂົາຈຶ່ງບຸ້ນເຂົ້າໃສ່ບໍ່ຈັກຫອກຈັກງ້າວຈັກປືນທັງຟັນທັງຍິງ ສຸມໃສ່ທ້າວແຕ່ອາວຸດເຫລົ່ານັ້ນບໍ່ໄດ້ໃກ້ທ້າວແມ່ນແຕ່ໜ້ອຍດຽວ. ທ້າວ ໄດ້ຍໍດາບງ້າວຄືນ ໄຊຟັນປ່າຍແສງດາບຕ້ອງທີ່ວຟົ້ງຂາດສະເດັນ. ແຕ່ກຳລັງຂອງຊາວເມືອງຈຳປາກໍຍັງບຸ້ນເຂົ້າໃສ່ໝາຍຈະຈັບ ຕົວທ້າວໃຫ້ໄດ້. ແຕ່ຖືກທ້າວຕໍ່ສູ້ຄືນພາກັນລົ້ມລະເນລະນາດບາງຄົນກໍຊີກີປົວ ໄປຕຳກັນເອົາ ເອງລົ້ມທາງຂວ້າທາງຫວາຍຕະພິດຕະພື, ພ້ອມກັນນັ້ນທ້າວກໍ ໃຊ້ສອນຍິງໃສ່ຣັດໃຫ້ພວກເຂົາລົ້ມຕາຍຢ່າງມາກມາຍ, ສອນນັ້ນຍິງ ໄປແລ້ວ ກໍກັບມາຫາທ້າວຄືເກົ່າ ທ້າວຍິງຊ້ຳອີກສຽງສະໜັ່ນຫວັ່ນ ໄຫວພໍປານແຜ່ນ ດິນແຜ່ນຟ້າຈະແຕກເປັນປ່ຽງໆ ລູກສອນໄດ້ທຳລາຍຊີວິດຊັບສິນຂອງຊາວ ເມືອງ

ຈົນມຸ່ນຫມົດຍັງແຕ່ບໍລິເວນເປັນວັງຂອງພະຍາເມືອງຈຳປາທີ່ນັ້ນ ທີ່ລູກ ສອນບໍ່ໄປທຳລາຍ.

ຕໍ່ມາທ້າວຈຶ່ງຂຶ້ນໄປນັ່ງຢູ່ເທິງສາລາກາງເມືອງແລ້ວແນມເບິ່ງກຳລັງ ພົນພ້ອມທັງໄພ່ຟ້າປະຊາກອນຂອງເມືອງຈຳປາພາກັນຕາຍເດຍລະດາດ, ຍັງເຫລືອແຕ່ພຽງແສນເມືອງຜູ້ດຽວ ມັນຈຶ່ງຟ້າວໄປຂາບທູນໃຫ້ພະຍາເມືອງຈຳປາຮູ້ວ່າ ມັນໄດ້ນຳກຳລັງໄປຕໍ່ສູ້ຄາວນີ້ແມ່ນປະລາໄຊ ໄພ່ຟ້າປະຊາກອນຕາຍຫມົດບໍ່ສາມາດຈະສູ້ຕໍ່ໄປໄດ້ອີກແລ້ວ.

ຝ່າຍພະຍາເມືອງຈຳປາໄດ້ຮັບຟັງດັ່ງນັ້ນ ກໍຍິ່ງມີຄວາມເສົ້າໂສກເສຍໃຈທັງຄຶດທັງແຄ້ນແຫນ້ນໃຈຫາອັນປຽບບໍ່ໄດ້ພະອົງຈຶ່ງວ່າ ຈັກແມ່ນຄົນຫລື ວ່າແມ່ນຜີສາງເສືອໂຂໂນຍັກໃຫ່ຍ ມາເປ່ນມ້າງເມືອງບ້ານອຶ່ມເຫັງນີ້ເດ. ພະອົງຄຶດວ່າຈັ່ງໃດກໍບໍ່ມີທາງຈະສູ້ໄດ້ເດັດຂາດ, ດັ່ງນັ້ນຈຶ່ງຖາມແສນເມືອງວ່າດຽວນີ້ທ້າວຢູ່ໃສ ເຮົາຈັກໄປຂໍອ່ອນຂໍຍອມທ້າວແຕ່ໂດຍດີ ເພື່ອໃຫ້ທ້າວໄດ້ ໂຜດຜາຍຊີວິດຊາວ, ແສນເມືອງຈຶ່ງຂາບທູນໃຫ້ຮູ້ວ່າດຽວນີ້ທ້າວພັກຢູ່ສາລາ ກາງເມືອງຂອງເຮົານີ້ເອງ.

ຕໍ່ມາແສນເມືອງຈຶ່ງສັ່ງໃຫ້ເສນາອາມາດຊຸມທີ່ລອດຕາຍໄດ້ພາກັນຕົກແຕ່ງດອກໄມ້ເຜິ້ງທຽນຊຶ່ງມີທັງທຽນເງິນທຽນຄຳໄດ້ຮ້ອຍຄູ່. ເມື່ອຕົກແຕ່ງເປັນທີ່ຮຽບຮ້ອຍແລ້ວຈຶ່ງເຊີນພະຍາເມືອງຈຳປາລົງຈາກຫໍພາສາດເປັນຜູ້ນຳຫນ້າ ພາທາງເຄື່ອນຂະບວນໄປຫາທ້າວທີ່ສາລາກາງເມືອງ ເພື່ອຂໍອ່ອນຂໍ ຍອມ ເມື່ອຂະບວນໄປເຖິງສາລາທີ່ພັກຂອງທ້າວແລ້ວໄພ່ງກໍສະອອນໃນຄວາມ ຈົບງາມອັນຫນ້າຮັກຫນ້າອີດູຂອງທ້າວຊຶ່ງຍັງຫນຸ່ມນ້ອຍແຕ່ຫາກວ່າມີລິດເດດ ທີ່ເກັ່ງກ້າສາມາດ, ເມື່ອໄປເຖິງພະຍາເມືອງຈຳປາກໍພາໄພ່ພົນໂຍທາຍໍຂັນ ຂໍກົ້ມຂາບໄຫ້ວດັ່ງບິດກອນຂຽນວ່າ:

ໂອນໍ ເຈົ້າກໍຍັງໜຸ່ມນ້ອຍ          ປະມານແຕ່ເຈັດປີ
ເຈົ້າກໍມີລິດທິແຮງ          ເກືອງພິນພາຍຟ້າ
ພະກໍໄປເຖິງທ້າວ          ກຸມມານນ້ອຍອ່ອນ
ພະກໍກົ້ມຂາບໄຫວ້          ຂັນແກ້ວຂາບທູນ
ບັດນີ້ຂ້າກໍຜິດເສຍແລ້ວ          ຂໍຍອມທັງໂທດ
ຂໍໃຫ້ໂຜດຂ້າໄວ້          ຄາວນີ້ດູ ແດ່ຖ້ອນ
ຂ້າຂໍຍອມເປັນຂ້າ          ຈອມໄຕເຈົ້າອ່ອນ
ພໍ່ຈັກຖວາຍເມືອງທ່ອນທ້າວ          ກຸມມານນ້ອຍແຕ່ງແປງ
ອັນໜຶ່ງ ສຸວັນນະກຸມມານ້ອຍ          ບຸດຕິລູກນຶ່ງ
ພໍ່ຈັກຖວາຍແກ່ເຈົ້າ          ເປັນເທົ້ານຶ່ງຂອັນ ພໍ່ແລ້ວ

ເວົ້າແລ້ວພະຍາເມືອງຈໍາປາກໍຍໍຂັນດອກໄມ້ທູບທຽນເຂົ້າໄປກົ້ມ ຂາບຖວາຍແກ່ທ້າວ, ດັ່ງນັ້ນທ້າວຈຶ່ງໄດ້ເວົ້າກັບດອມພະຍາເມືອງຈໍາປາ ດ້ວຍຄວາມນິ້ມນວນອ່ອນຫວານດັ່ງບົດກອນຂຽນວ່າ:

ແຕ່ນັ້ນທ້າວອ່ວາຍໜ້າ          ຈາຕໍ່ພະຍາເມືອງ
ພາຍຄໍາຄວນ          ຕໍ່ພະອົງເມືອງເຈົ້າ
ບັດນີ້ຂ້າຈັກ .ວາງຊິວັງໃຫ້          ລາຊາພະບາດ
ກັບທັງເສນດພ້ອມ          ວາງໄວ້ຊູ່ຄົນ ເຈົ້າເອີຍ
ອັນວ່າເມືອງຫລວງເຈົ້າ          ຖວາຍພະອົງສັນເກົ່າ
ໃຫ້ແກ່ພູວະນາດເຈົ້າ          ທັງສ້າງສິບເມືອງ ນັ້ນຖ້ອນ
ຂ້ອຍກໍຍັງໜຸ່ມນ້ອຍ          ບໍ່ຮູ້ແຕ່ງຄອງເມືອງ
ຖວາຍແກ່ລາຊາພະ          ຢູ່ກະເສີມສັນສ້າງ
ອັນວ່າຄົນຕາຍລົ້ນ          ເສນາທັງໄພ່

ຂ້າຈັກຈັດແຈ່ງໃຫ້ ຄືນແທ້ຊູ່ຄົນ ເຈົ້າເອີຍ

ຝ່າຍພະຍາເມືອງຈຳປາ ໄດ້ຍິນດັ່ງນັ້ນກໍແສນທີ່ມີຄວາມເບີກບານໃນໃຈຫາອັນປຽບບໍ່ໄດ້ ທັງກ່າວຂອບໃຈທ້າວທີ່ໄດ້ມີຈິດເມດຕາໂຜດພາຍ. ຕໍ່ມາ ທ້າວຈຶ່ງບອກໃຫ້ສອນໄປຍັງສະເພົາລຳໃຫຍ່ເພື່ອບອກໃຫ້ແກ່ຕາຜ້າຂາວ (ພໍ່ພະອິນ) ໄດ້ສັ່ງໃຫ້ທ້າວເພັດຊະລາດ ນ້ອງຊາຍຫລ້າມາຫາດ່ວນ, ເວົ້າແລ້ວກໍຍິງ ລູກສອນອອກໄປທັນທີ. ລູກສອນໄປເຖິງກໍເລົ່າສະພາບສູ່ພໍ່ຜ້າຂາວຟັງແລ້ວກໍ ກັບຄືນມາຫາທ້າວດັ່ງເກົ່າ.

ສ່ວນພໍ່ຜ້າຂາວ ເມື່ອໄດ້ຮູ້ທຸກສິ່ງທຸກຢ່າງຈາກດວງສອນແລ້ວກໍຍັງ ຫລິງດ້ວຍຕາທິບຂອງພະອົງເອງຕື່ມອີກຈຶ່ງ ເຫັນຊາວເມືອງຈຳປາກອງກັນ ຕາຍເດຍລະດາດຢູ່, ດັ່ງນັ້ນພໍ່ຜ້າຂາວຈຶ່ງບອກໃຫ້ເພັດຊະລາດຮີບຟ້າວ ໄປຊ່ວຍ ກູ້ເອົາຊີວິດອິນຊີຂອງຊາວເມືອງຄືນມາໂດຍໄວ ຢ່າໃຫ້ເສົາທາງຍ້ອນມັນ ຊິເສຍເວລາ. ທ້າວເພັດຊະລາດຈຶ່ງຟ້າວ ໄປຫາອ້າຍແລ້ວເອົານ້ຳມົນຊຸບອກ ໃຫ້ພວກທີ່ຕາຍໄປແລ້ວນັ້ນຄືນມາຫມົດທຸກຄົນ, ຈາກນັ້ນທ້າວຈຶ່ງຄອຍອ້າຍກັບ ຄືນສູ່ສະເພົາຫາພໍ່ຜ້າຂາວ.

ຫລັງຈາກນັ້ນ, ພະຍາເມືອງຈຳປາຈຶ່ງກ່າວມອບບ້ານເວນເມືອງພ້ອມ ທັງໄພ່ຟ້າປະຊາກອນໃຫ້ທ້າວປົກຄອງ, ພະອົງກ່າວວ່າ ວຽກງານການປົກ ຄອງອັນໃດທ້າວບໍ່ຮູ້ບໍ່ເປັນພະອົງກໍຍັງອາສາຈະເຮັດຕາງ, ແຕ່ວ່າວຽກເສິກ ສົງຄາມນັ້ນຖ້າເກີດມີແມ່ນມອບໃຫ້ທ້າວແກ້ໄຂຜູດຽວ. ທ້າວສຸວັນນະລາດຈຶ່ງຕອບວ່າ ທຸກສິ່ງທຸກຢ່າງທີ່ພະອົງມອບໃຫ້ນັ້ນກໍຍິນດີບໍ່ຂັດບໍ່ຂືນ ແຕ່ຫາກວ່າ ວຽກງານທາງຫນ້າຍັງມີອີກຫລາຍອັນເພາະວ່າໄດ້ພັດພາກຈາກແມ່ຜູ້ບັງເກີດເກົ້າມານານແສນນານຈຳເປັນຕ້ອງໄດ້ຄືນເມືອເມືອງເກົ່າເສຍກ່ອນ, ສະນັ້ນ ຈຶ່ງຂໍໃຫ້ພະອົງສືບຕໍ່ປົກຄອງບ້ານເມືອງຕໍ່ໄປ.

ຕໍ່ມາພະຍາເມືອງຈຳປາຈຶ່ງສັ່ງໃຫ້ເສນາຕົກແຕ່ງພິທີການຮັບເອົາ ທ້າວແລະສັ່ງໃຫ້ໄປນຳນາງສຸວັນນະທຸມມາລູກສາວມາດ່ວນເພື່ອວ່າຈະໄດ້ຫົດ ສົງໃຫ້ທ້າວແລະນາງເປັນຄູ່ຜົວເມຍກັນແລ້ວສືບຕໍ່ປົກຄອງບ້ານເມືອງຮ່ວມ ກັນຕໍ່ໄປ. ດັ່ງນັ້ນແສນເມືອງຈຶ່ງສັ່ງໃຫ້ເຂົາ ແປງຫີນກໍ້ລິນຄຳກອນນາກຮື່ມທົ່ງກັ້ງຂວາຊ້າຍແປດອັນ ມີທັງທຸງໄຊແລະເສດຕະສັດ ທັງປູກຕົ້ນກ້ວຍຕົ້ນອ້ອຍຢາຍເປັນແຖວຖັນອັນຈົບງາມ. ຝ່າຍນາງສຸວັນນະທຸມມາ ເມື່ອໄດ້ຮູ້ຈຸດປະສົງຈາກເສນາທີ່ໄປບອກນາງຈຶ່ງປະດັບປະດາເອ້ຍ້ອງມ້າວໃສ່ແຂນແຫວນໃສ່ກ້ອຍ ມີທັງສ້ອຍສັງວານເປັນທີ່ສວຍງາມ, ຈາກນັ້ນກໍໄປຫາພໍ່ໂດຍມີບໍລິວານແຫ່ ແຫນແພນກັ້ງ.

ເມື່ອໄປເຖິງແລ້ວທັງທ້າວແລະນາງຕ່າງກໍແນມເບິ່ງກັນດ້ວຍຈິດໃຈ ຮັກຫອມຖະໜອມຮັກ, ຕໍ່ມາໄດ້ເວລາດີແລ້ວແສນເມືອງຈຶ່ງຂາບທູນໃຫ້ພະ ຍາເມືອງຈຳປາເຊີນທ້າວເຂົ້າສູ່ພິທີ. ທ້າວຈຶ່ງຍ່າງອອກໜ້າໂດຍມີນາງສຸວັນນະທຸມມາຕິດຕາມພົ້ງພ້ອມໄປດ້ວຍຂະບວນແຫ່ເຂົ້າສູ່ພະລາຊະວັງ ແລ້ວກໍ ຫົດສົງທ້າວແລະນາງຕາມຈາຣີດປະເພນີ ທ່າມກາງສຽງເສບຂອງໜ່ວຍມະໂຫລີຕ່າງໆໝໍພອນກໍກ່າວຖວາຍພອນໃຫ້ແກ່ທ້າວແລະນາງຈຶ່ງເປັນອັນສຳ ເລັດພິທີ.

ນັບແຕ່ທ້າວໄດ້ເປັນຄູ່ຜົວເມຍກັບນາງສຸວັນນະທຸມມາ, ກໍເປັນເວລາ ໄດ້ຫລາຍວັນແລ້ວ, ແຕ່ທ້າວກໍຍັງບໍ່ລືມຄວາມຄິດຮອດຫາແມ່. ດັ່ງນັ້ນທ້າວຈຶ່ງ ໄດ້ເວົ້ານຳນາງວ່າ. ນ້ອງເອີຍບັດນີ້ອ້າຍຈຳເປັນຈະໄດ້ຈາກນ້ອງເດີນທາງ ໄປຫາແມ່ກ່ອນແລ້ວ ຂໍໃຫ້ນ້ອງຈົ່ງຢູ່ຖ້າອ້າຍຊານຊາກັບມາ, ອ້າຍໄປກໍບໍ່ດົນດອກເມື່ອໄດ້ພົບແມ່ແລ້ວກໍຈະກັບມາຫານ້ອງໂລດ. ນາງສຸວັນນະທຸມມາຈຶ່ງບອກວ່າອ້າຍຈະໄປນ້ອງກໍບໍ່ຂັດຂ້ອງຫຍັງ ແຕ່ວ່ານ້ອງຂໍຕິດຕາມໄປນຳອ້າຍສ່ວນ ວ່າ

ເມືອງເຮົານີ້ໃຫ້ພໍ່ເປັນຜູ້ປົກຄອງຖ້າ, ທ້າວ ໄດ້ເວົ້ານຳນາງວ່າເລື່ອງຈະ ໄປນຳອ້າຍນັ້ນນ້ອງບໍ່ຄວນເວົ້າເພາະວ່າບ້ານເມືອງຂອງເຮົາກໍມີຖ້ານ້ອງໜີໄປກໍຈະເຮັດໃຫ້ບ້ານເມືອງເສົ້າໝອງ, ດັ່ງນັ້ນໃຫ້ຢູ່ປົກຄອງ ໄພ່ພົນຮ່ວມກັບພໍ່ຖ້າອ້າຍ, ແລະການເດີນທາງກໍມີໄລຍະທາງ ໄກແສນ ໄກຈຶ່ງບໍ່ສົມຄວນທີ່ນ້ອງ ຈະຮ່ວມໄປກັບອ້າຍ.

ຕໍ່ມາທ້າວ ໄດ້ເຂົ້າອຳລາພະຍາເມືອງຈຳປາຜູ້ເປັນພໍ່ເຖົ້າ, ຝ່າຍພະ ຍາເມືອງຈຳປາກໍບໍ່ ໄດ້ຂັດຂືນແນວໃດມີແຕ່ບອກວ່າເມື່ອ ໄປເຖິງບ້ານເກົ່າເມືອງເດີມ ໄດ້ພົບແມ່ແລ້ວໃຫ້ພາວກັບຄືນມາ, ສ່ວນວ່ານາງສຸວັນນະທຸມມານັ້ນ ຈະເອົາ ໄປນຳກໍຕາມໃຈບໍ່ຂັດຂືນຫຍັງ. ທ້າວ ໄດ້ຕອບວ່ານາງສຸວັນນະທຸມມາ ນັ້ນໃຫ້ຢູ່ຜົກຄອງບ້ານເມືອງດອນພໍ່ຢູ່ນີ້ ຄັນຊິເອົາ ໄປນຳກໍເນື່ອງຈາກ ໄລຍະທາງໄກຫລາຍ.

ເມື່ອ ໄດ້ຮູ້ຈຸດປະສົງຄືແນວນັ້ນ ພະຍາເມືອງຈຳປາຈຶ່ງສັ່ງໃຫ້ເສນາ ອາມາດຕົກແຕ່ງຫາງທາສະເພົາສຳລັບທ້າວໜຶ່ງລຳ ພ້ອມທັງມອບຄົນຮັບໃຊ້ໃຫ້ຕິດຕາມ ໄປໃນສະເພົາຈຳນວນຮ້ອຍໜຶ່ງ, ເມື່ອ ໄດ້ເວລາແລ້ວທ້າວກໍເອີ້ນສັ່ງນາງສຸວັນນະທຸມມາດ້ວຍອາ ໄລອາວອນກ່ອນຈະຈາກນາງ ເຂົ້າສູ່ສະເພົາຝ່າຍນາງສຸວັນນະທຸມມາກໍອວຍພອນໃຫ້ເດີນທາງ ໄປດີມີໂຊກທ່າມກາງຄາບນ້ຳຕາແຫ່ງຄວາມຄຶດຮອດຄຶດເຖິງ.

## 22. ພະອິນ (ພໍ່ຝ້າຂາວ) ລາຈາກ ກຸມມານທັງສີ່ຄືນສູ່ສະຫວັນ.

ເມື່ອທ້າວສຸວັນນະລາດເຂົ້າສູ່ສະເພົາແລ້ວ ພະອິນ (ພໍ່ຝ້າຂາວ) ກໍ ສັ່ງໃຫ້ເຄື່ອນສະເພົາອອກຈາກທ່າມຸ່ງຫນ້າ ໄປສູ່ເຂດແດນແຫ່ງເມືອງປັນຈາຊຶ່ງເປັນເມືອງທີ່ພໍ່ແລະແມ່ຂອງທ້າວຢູ່. ເມື່ອພໍ່ພະອິນສັ່ງແລ້ວທ້າວທັງສີ່ກໍເສກມົນເປົ່າເປັນລົມພັດຍູ້ເອົາສະເພົາທັງສີ່ລຳໃຫ້ເຄື່ອນຍ້າຍໄປຕາມແມ່ນ້ຳຖັ່ງບົດ ກອນຂຽນວ່າ:

| | |
|---|---|
| ເຈົ້າກໍຮວາຍມົນແກ້ວ | ເປັນລົມເບື້ອງເປົ່າ |
| ພັດແມ່ນ້ຳ | ສະເພົາເບື້ອງປົ່ນເປືອງ |
| ຍາບໆຍ້າຍ | ສະເພົາແລ່ນຕາມລົມ |
| ຊາວເມືອງເຂົາ | ຄ່ອຍແລນຳທ້າວ |
| ຫລິງເຫັນລົມພານອູ້ມ | ຄຸງຄາແປທົ່ງ |
| ຟອງຟາດຝັ່ງ | ສະເພົາຍ້າຍແລ່ນໄປ |
| ພໍຄາວແລ້ວ | ສະເພົາທອງທັງສີ່ |
| ລັບແມ່ນ້ຳ | ໄປຫນ້າບໍ່ເຫັນ ແທ້ດາຍ |

ທ້າວທັງສີ່ໄດ້ພາກັນນັ່ງຢູ່ໃນສະເພົາດ້ວຍຄວາມສະຫນຸກສະບາຍ, ຕາມທາງຜ່ານຍຸທ່າງຊົມພາບວິວທິວທັດຂອງທຳມະຊາດອັນສວຍງາມທັງພ່ອງ ຊົມຫມູ່ປານ້ອຍໃຫ່ຍຢູ່ຕາມແມ່ນ້ຳ, ແນມໄປເບື້ອງຫນ້ານັ້ນເຫັນແຕ່ສາຍແມ່ນ້ຳອັນ

ກ້ວາງໃຫ່ຍຍາວ ໄຫລສຸດຊື່ວສາຍຕາມີໝູ່ເມກທີ່ຫຸ້ມມຸງໄວ້ບໍ່ເຫັນບ້ານ ເມືອງ
ຫຍັງໝົດ.

ນັບເປັນເວລາຫລາຍວັນຫລາຍ ຄືນທີ່ສະເພົາໄດ້ແລ່ນໄປຕາມໜ້າ ນ້ຳ ກໍຈຶ່ງກາຍເຂດແດນແຫ່ງເມືອງຈຳປາ ເຂົ້າສູ່ຊາຍແດນປາຍດ່ານຂອງ ເຂດ ເມືອງປັນຈາ. ດັ່ງນັ້ນ ພະອິນ (ພໍ່ຜ້າຂາວ) ຈຶ່ງໄດ້ເວົ້າດອມທ້າວທັງສີ່ ວ່າ ດູລາລູກຮັກພໍ່ເອີຍ ພໍ່ຂໍບອກໃຫ້ເຈົ້າທັງສີ່ຈົ່ງຈື່ຈຳເອົາໄວ້ ດຽວນີ້ເຮົາ ໄດ້ ກາຍເຂດເມືອງຈຳປາມາແລ້ວ ທີ່ນີ້ເປັນເຂດເມືອງປັນຈາຊຶ່ງເປັນເມືອງ ພໍ່ ຂອງທ້າວທັງສີ່, ອັນວ່າສິ່ງຕາມນັ້ນໄດ້ໝົດໄປແລ້ວ ເພາະວ່າເຂດນີ້ເປັນບ້ານ ເກີດເມືອງນອນ, ຂອງເຈົ້າທັງສີ່ນັ້ນເອງ. ດຽວນີ້ພໍ່ຂອງທ້າວທັງສີ່ພວມ ປົກ ຄອງເມືອງປັນຈາ ສ່ວນວ່າແມ່ຂອງເຈົ້າທັງສີ່ນັ້ນດຽວນີ້ແມ່ນຕົກທຸກລຳ ບາກ ເຫລືອທີ່ສຸດ ແລະ ໄອຍະກາເຖົ້າພິວເມຍທັງຊ້ຳຍັງຢູ່ສວນແຄມຝັ່ງແມ່ນ້ຳແຫ່ງ ນີ້ຕາມເດີມ, ບ່ອນທີ່ສະເພົາພວມເຖິງນີ້ແມ່ນເຂດແດນປາຍດ່ານຂອງ ເມືອງ ປັນຈາ.

ພໍ່ພະອິນກ່າວວ່າດຽວນີ້ພໍ່ມາສົ່ງທ້າວທັງສີ່ຮອດແຕ່ພຽງທີ່ນີ້, ບັດນີ້ພໍ່ຈະ ກັບ ຄືນສູ່ເມືອງດາວວະດຶງຂອງເກົ່າກ່ອນແລ້ວ. ເມື່ອທ້າວ ທັງສີ່ໄດ້ຍິນຄຳ ເວົ້າ ຂອງພໍ່ພະອິນກໍມີຄວາມຄ້ອຍຄຶ່ງພ້ອມກັບເວົ້າວ່າຄັນພໍ່ກັບ ໄປເຖິງຊັ້ນດາວ ວະ ດຶງແລ້ວກໍຂໍໃຫ້ຫລິງລ່ຳຢ້ຽມພວກລູກຢ່າປະຢ່າວາງ. ພະອິນຍັງສັ່ງຕື່ມອີກ ວ່າ ຖ້າສະເພົາແລ່ນໄປໃຫ້ພະຍາຍາມຫລຽວເບິ່ງຝັ່ງນ້ຳເອົາໄວ້ຫາກຈັກເຫັນໄອ ຍະກາເຖົ້າພິວເມຍທຸກຍາກຢູ່ໃນສວນ ຊຶ່ງເຖົ້າທັງສອງນີ້ເປັນພໍ່ແມ່ລ້ຽງຂອງ ທ້າວຈຶ່ງໃຫ່ຍມາ, ແຕ່ທ້າວທັງສີ່ກໍຍັງເວົ້າຄວາມເກົ່າວ່າພໍ່ພະອິນຢ່າປະຢ່າ ໄລ ພວກລູກ, ດຽວນີ້ກໍຍັງເດີນທາງບໍ່ທັນເຖິງແມ່ຊ້ຳຈັກຊີດີຊີຮ້າຍປະການໃດກໍບໍ່ຮູ້ ຝ່າຍພໍ່ພະອິນກໍໄດ້ແຕ່ແນະນຳໃຫ້ທ້າວທັງສີ່ຈົ່ງຄ່ອຍເດີນທາງໄປໃຫ້ຮອດ ໃຫ້

ເຖິງດັ່ງບົດກອນຂຽນວ່າ :

ເມື່ອນັ້ນອິນທິລາດເຈົ້າ    ຕ້ານຕອບບາສານ
ດູລາ ໂສມງາມເອີຍ    ຄ່ອຍເນີອເປີເຈົ້າ
ບັດນີ້ພໍ່ກໍແນມນຳເຈົ້າ    ກຸມມານຝູງອ່ອນ
ກໍຫາກຫມົດເຂດຮ້ອນ    ຫາຍສຽງສ່ວາງໂພຍ ພໍ່ແລ້ວ
ລູກຈຶ່ງນຳສະເພົາເຂົ້າ    ໄປເມືອງຫາພໍ່ ບາຖ້ອນ
ຕັ້ງແຕ່ນີ້ໄປຂ້າງຫນ້າ    ການຮ້າຍບໍ່ມີ ພໍ່ແລ້ວ
ບັດນີ້ ພໍ່ຈັກລາບາທ້າວ    ກຸມມານທັງສີ
ອັນວ່າຝູງຫນໍ່ແກ້ວ    ບຸນກ້ວາງຄ່ອຍຢູ່ດີ ແດ່ຖ້ອນ
ແຕ່ນັ້ນທ້າວ ກໍຂໍພອນແກ້ວ    ດອມພະອິນອົງພໍ່
ຫລອນວ່າໄປຂ້າງຫນ້າ    ໄພຮ້າຍສ່ອງບໍ່ເຫັນ ພໍ່ເອີຍ

ຝ່າຍພະອິນຈຶ່ງອວຍພອນໃຫ້ແກ່ທ້າວທັງສີ່ ພ້ອມທັງບອກວ່າເມື່ອໄປ ເຖິງພໍ່ແລ້ວມີຫຍັງເກີດຂຶ້ນກໍສຸດແທ້ແຕ່ລິດເດດຂອງລູກແຕ່ລະຄົນຊ່ອຍກັນແກ້ ໄຂ ສ່ວນວ່າວັດຖຸສິ່ງຂອງໃນສະເພົາທັງຫມົດນີ້ພໍ່ຂໍມອບໃຫ້ເສດຖະລາດທ້າວຕາມໃຈ້ທ່ອງທຽວພໍ່ຖ້ອນ, ສັ່ງແລ້ວພະອິນກໍເຫາະຂຶ້ນສູ່ອາກາດ ຝ່ອງໆຜາຍ ຜາຍລຳລ່ວງບິນ ກໍຈຶ່ງໄປເຖິງວິໄຊຍົນຜາສາດ ຈຶ່ງເຂົ້າສູ່ຫ້ອງວິມານແກ້ວຢູ່ ສະບາຍ ມີນາງສະຫວັນຄອຍພັດວີຈຳນວນສາມຫມື່ນນາງ.

# ໒໓. ສີ່ກຸມມານໄດ້ພົບກັບຍ່າຈຳສອນ.

ພາຍຫລັງທີ່ພໍ່ພະອິນໄດ້ກັບຄືນສູ່ເມືອງສະຫວັນແລ້ວກໍຍັງແຕ່ສີ່ພີ່ນ້ອງຢູ່ ໃນສະເພົາ. ດັ່ງນັ້ນທ້າວເສດຖະລາດຜູ້ເປັນອ້າຍກົກຈຶ່ງເວົ້າກັບນ້ອງທັງສາມວ່າ ພວກເຮົາຈຶ່ງນຳສະເພົາອອກເດີນທາງຕໍ່ໄປ, ຄັນເຮົາຊິພາກັນເຊົາຢູ່ນີ້ ດີນຍ້ານວ່າແມ່ຂອງພວກເຮົາຈະອຶດໂຫຍໂຮຍແຮງຫລາຍ, ເວົ້າແລ້ວທ້າວກໍ ລະນຶກຮອດບຸນຄຸນຂອງພະລືສີຕາໄຟ ພ້ອມທັງຍົກມືນົບໃສ່ຫົວແລ້ວເສກມົນເປົ່າໃສ່ສະເພົາໃຫ້ອອກເດີນທາງຕໍ່ໄປ. ສະເພົາໄດ້ກາຍໝູ່ບ້ານຕ່າງໆຕາມ ລຽບສອງຝັ່ງແມ່ນ້ຳ ແຕ່ຫາກບໍ່ມີຜູ້ໃດສາມາດແນມເຫັນສະເພົາໄດ້, ທ້າວທັງສີ່ ຍູທ່າງນັ່ງຊົມຄວາມງາມຂອງທຳມະຊາດລຽບສອງຝັ່ງແມ່ນ້ຳ, ໄດ້ເຫັນທັງ ຄົນເຮັດຮົ້ວເຮັດສວນອັນມີສວນໝາກສວນພ້າວແລະສວນອ້ອຍຕະຫລອດ ໝາກໄມ້ທັງສົ້ມແລະຫວານ, ບາງເທື່ອກໍເຫັນເຮືອຂອງພວກພໍ່ຄ້າທ່ອງທ່ຽວໄປ ມາໃນນ່ານນ້ຳແຫ່ງນີ້.

ສະເພົາແລ່ນໄປໜ້າເລື້ອຍໆ ຕໍ່ມາຈຶ່ງແນມເຫັນສວນດອກໄມ້, ຊຶ່ງມີດອກໄມ້ນາໆຊະນິດພວມຈູມພວມບານເດຍລະດາດຢູ່. ດັ່ງນັ້ນທ້າວເສດຖະລາດຈຶ່ງລະນຶກຮອດບຸນຄຸນຂອງພະລືສີແລ້ວຈຶ່ງເສກມົນເຮັດໃຫ້ສະເພົາຢຸດຢູ່ກາງ ນ້ຳທັນທີ, ເພັດຊະລາດຈຶ່ງເວົ້າວ່າທີ່ນີ້ອາດແມ່ນສວນຂອງຍ່າຖ້າຜູ້ເປັນແມ່ລ້ຽງຂອງພວກເຮົາຢູ່ທີ່ນີ້ກໍອາດເປັນໄດ້, ນ້ອງຈະຂໍໄປເບິ່ງດ້ວຍຕົນເອງລາງເທື່ອ

ເຫັນແມ້ລຽງ ເນົາສ້າງຢູ່ສວນອ້າຍເອີຍ. ຄັນຫາກໄດ້ພົບແຫ້ນ້ອງຈັກນຳ ເອົາສອງເຖົ້ານາ ສູ່ສະເພົາຂອງເຮົາ, ທ້າວເຊດຖະລາດຈຶ່ງເວົ້າວ່າດີແລ້ວ ໃຫ້ນ້ອງໄປເບິ່ງດຽວນ໌ໂລດ ຄັນນ້ອງໄດ້ພົບເຖົ້າພົວເມຍທັງຄູ່ໃຫ້ຮີບນຳມາສູ່ສະເພົາໄວ. ຕໍ່ມາເພັດຊະລາດຈຶ່ງເຫາະອອກຈາກສະເພົາ ໄປສູ່ຝັ່ງນ້ຳແລ້ວຈຶ່ງຍ່າງເລາະໄປຕາມແຄມຝັ່ງນ້ຳ ຈຶ່ງໄດ້ພົບຍ່າເຖົ້າລົງມາຕັກນ້ຳຢູ່ທ່າພວມຈະກັບຄືນເມືອເຮືອນ, ດັ່ງນັ້ນທ້າວຈຶ່ງໄດ້ໄຕ່ຖາມຍ່າເຖົ້າດັ່ງບົດກອນຂຽນວ່າ:

| | |
|---|---|
| ດູລາຍາຍຍ່າເຖົ້າ | ແກ່ຫງ່ອມພົມຂາວ |
| ທັງຫນັງຍານ | ຮ່ຽວແຮງພໍຮາຍ |
| ອັນວ່າຫລານຊາຍເຈົ້າ | ຫລານຍິງບໍ່ມີ |
| ສິ່ງວ່າມາຫາບນ້ຳ | ຍາມເຖົ້າແກ່ຊະລາ ນໍເດ |
| ແຕ່ນັ້ນໄອຍະກາເຖົ້າ | ຂານຂາບຸນມາກ |
| ປາກກ່າວຕ້ານ | ຈານ້ອຍຍອດຊາຍ |
| ຫລານເອີຍຍ່ານີ້ອີບາກແທ້ | ມີແຕ່ພົວເມຍ |
| ຢູ່ຮັກສາສວນຫລວງ | ພໍ່ານານຈິງແທ້ |
| ແຕ່ນັ້ນ ບາຄານນ້ອຍ | ຄະນິງໃຈຄຶດຮ່ຳ |
| ຍັງສິ່ງໃສ່ແລ້ວ | ຄຳເວົ້າຍ່າຍາຍ |
| ທ້າວຈຶ່ງປາກກ່າວຕ້ານ | ຈາຕໍ່ໄອຍະກາ |
| ພາຍຄຳຈາ | ອ່ອນຫວານຈີ້ຈ້ອຍ |
| ຫລານຂໍເອົາຍັງນ້ຳ | ນຳຍາຍເມືອສິ່ງ |
| ເພາະສິ່ງສານຍ່າເຖົ້າ | ຊະລາລ້າອ່ອນແຮງ |
| ແຕ່ນັ້ນ ຍາຍຈຶ່ງຍົກຫາບນ້ຳ | ໃຫ້ອ່ອນກຸມມານ |
| ບາຄານເລີຍ | ຮັບເອົານຳເຖົ້າ |

ແລ້ວຈຶ່ງເອົາຕີນຍ້າຍ — ຕາມທາງຄືນສູ່ ເຮືອນນັ້ນ
ຍາຍຍ່າເຖົ້າ — ເຫັນທ້າວຮູບງາມ
ກໍຈຶ່ງຄຶດຮຸ່ງຮູ້ — ເຖິງສິກຸມມານ
ມິຕອິກ — ເນດນອງຍິມຍ້ອຍ
ບາຄານທ້າວ — ເລີຍຖາມຕີນຍ່າ
ອັນວ່າຍ່າແຈ່ມເຈົ້າ — ມາໄຫ້ເຫດໃດ ນໍ້ເດ

ດັ່ງນັ້ນ, ຍ່າຈຶ່ງ ໄດ້ເລົ່າຄວາມຈິງ ສູ່ທ້າວຟັງວ່າ ເທົ້າທີ່ຍ່າໄຫ້ນັ້ນເພາະ ຄິດຮອດຄາວຫລັງ ເວທະນາບໍ່ແລ້ວ, ຄັ້ງນັ້ນຍ່າ ໄດ້ລູກນ້ອຍສີ່ຄົນມາລ້ຽງພໍ ໃຫ່ຍມາເລີຍພາກັນເສຍຊີວິດຫມົດທັງສີ່ຄົນ ແລ້ວກັບ ເກີດເປັນຕົ້ນດອກຈຳປາ ແຕ່ຖືກເຂົາຂຸດກົ່ນເອົາ ໄປຖົມລົງນ້ຳຫມົດ. ເມື່ອທ້າວ ໄດ້ຟັງດັ່ງນັ້ນຈຶ່ງ ເຊື່ອໃນໃຈວ່າ ອັນນຕົ້ງຫາກແມ່ນຍ່າຈຳສອນຫລ້ຽງເຮົາມາແທ້, ພໍຄິດ ໄດ້ແນວນັ້ນ ທ້າວຈຶ່ງໂຍນຫາບນ້ຳຖົ້ມຕໍ່ຫນ້າຍ່າເຖົ້າຈຳສອນ, ຍ່າໄດ້ເຫັນດັ່ງນັ້ນກໍຕົກໃຈ ເຮັດຫນ້າຫລ່າ ທັງຖາມທ້າວວ່າເປັນຫຍັງຈຶ່ງເຮັດແນວນໍ້? ທ້າວ ໄດ້ຕອບຍ່າ ວ່າຂໍໃຫ້ຍ່າຟ້າວ ເມືອເຮືອນຂອງຍ່າດຽວນໍ້.

ພໍແຕ່ເມືອ ເຖິງເຮືອນຜູ້ເປັນຜົວຈຶ່ງຖາມວ່າແມ່ເຖົ້າເອີຍເຈົ້າ ໄປໄດ້ຫລານຊາຍນ້ອຍນໍ້ມາແຕ່ທາງ ໃດເດນໍ? ຍ່າຈຶ່ງບອກວ່າຂ້ອຍລົງ ໄປຕັກນ້ຳເລີຍພົບທ້າວແລ້ວທ້າວກໍມາຂໍຫາບນ້ຳໃຫ້ຂ້ອຍ, ແຕ່ທ້າວຫາບບໍ່ ໄດ້ພໍຄາວກໍໂຍນ ຫາບນ້ຳຖົ້ມ ຈັກວ່າທ້າວມາແຕ່ທາງ ໃດບຸ ໃຫ້ເຈົ້າລອງຖາມທ້າວ ເບິ່ງດູ. ຕໍ່ມາທ້າວກໍຂຶ້ນເມືອ ເທິງ ເຮືອນພ້ອມທັງ ຍົກມື ໄຫວ້ພໍ່ເຖົ້າຈຳສອນແລ້ວຈຶ່ງ ເວົ້າວ່າພໍ່ແລະແມ່ເອີຍ ເຮົານໍ້ຫາກເປັນລູກເຈົ້າສອງ ເຖົ້າລ້ຽງມາແທ້ດາຍຂໍໃຫ້ພໍ່ກັບແມ່ຈຶ່ງຂຶ້ນຢ່ອງຢູ່ຝ່າມື ຂວງລູກຈະພາພໍ່ແມ່ ໄປສູ່ສະເພົາດຽວນໍ້.

ຝ່າຍຍ່າເຖົ້າກັບຜົວ ໄດ້ຍິນດັ່ງນັ້ນຈຶ່ງຖາມວ່າເຮັດແນວໃດລູກຈະເອົາ ແມ່

ກັບພໍ່ໄປໄດ້ ແມ່ເຫັນລູກຍັງນ້ອຍໆຢູ່, ທ້າວໄດ້ຍິນດັ່ງນັ້ນຈຶ່ງຍົກມືດ່າໄປ ຫາ ແລ້ວກັບເກີດເປັນຕຽງດຳຮັບເອົາສອງເຖົ້າ ແລ້ວອຸ້ມເອົາໄປສູ່ສະເພົາ ທັນທີ, ໃນຂະນະທີ່ອຸ້ມໄປກໍບໍ່ມີໃຜເຫັນນອກຈາກພະຍາຄຸດພະຍານາກທີ່ຄອຍເຝົ້າຕິດຕາມທໍ່ນັ້ນ.

ເມື່ອໄປຮອດສະເພົາແລ້ວ ທ້າວເພັດຊະລາດກໍເອີ້ນອ້າຍທັງ 3 ມາ ຮັບຍ່າງໄວາທັງເວົ້າວ່າ ດຽວນີ້ໄອຍະກາເຖົ້າທັງສອງພໍ່ແມ່ໄດ້ມາຮອດ ເຮົາແລ້ວອ້າຍເອີຍ ຈຶ່ງຟ້າວມາຂາບໄຫວ້ພໍ່ແມ່ຂອງເຮົາດຽວນີ້, ອ້າຍທັງ3 ຈຶ່ງເຫາະເຂົ້າສູ່ສະເພົາຂອງທ້າວເພັດຊະລາດທັນທີແລ້ວທັງສີ່ຈຶ່ງພາກັນ ຂາບໄຫວ້ໄອຍະກາເຖົ້າທັງສອງ ໂດຍຍົກເອົາຕີນຂອງທັງສອງເຖົ້າຂຶ້ນໃສ່ຫົວດ້ວຍຄວາມເຄົາລົບນັບຖື. ຝ່າຍໄອຍະກາທັງສອງກໍຊວງກອດອຸ້ມທ້າວທັງສີ່ດັ່ງ ບົດກອນຂຽນວ່າ:

| | |
|---|---|
| ເມື່ອນັ້ນໄອຍະກາເຖົ້າ | ທັງສອງຟ້າວຟັ່ງ |
| ຊວງກອດອຸ້ມ | ເອົາແກ້ວລູກຕົນ |
| ປາກບໍ່ໄດ້ | ສະຫລົບທ່າວທັງສອງ |
| ກອງກັນຕາຍ | ບໍ່ຕິງຕົວໄດ້ |
| ກຸມມານທ້າວ | ຄັນທີສິ່ງໂສດ |
| ໂພດເອົາສອງຄູ່ເຖົ້າ | ງາມລົ້ນລື່ນຫລັງ |
| ເໝືອນດັ່ງອາຍຸໄດ້ | ສິບສີ່ສອນສາວ |
| ອັນວ່າເກສາຂາວ | ລວດດຳກິນກ້ຽງ |
| ທັງສອງເຖົ້າ | ຜິວເນຍສະເໜີຊຸບ ກັນແລ້ວ |
| ກໍເພື່ອບຸນສີ່ທ້າວ | ມາຄ້ຳຊ່ອຍຊູ ເຈົ້າເຮີຍ |

ເມື່ອຍ່າເຖົ້າກັບຜົວກັບຄືນມາຈຶ່ງຖາມທ້າວທັງ ສີ່ວ່າເປັນແນວໃດ ລາວ

ເມື່ອນາງອັກຄີໃຈບາບຈຳໃຫ້ເຂົາຂຸດເອົາລູກທີ່ເປັນຕົ້ນຈຳປາໄປຖີ້ມລົງ ນ້ຳນັ້ນ ໃຫ້ລູກເລົ່າສູ່ຟັງແມ່ຫລືພວກລູກພາກັນໄປເກີດຢູ່ເມືອງສະຫວັນພຸ້ນ ບໍ? ແລ້ວພາກັນແນມລົງມາໂລກລຸ່ມ ຈຶ່ງໄດ້ລົງມາໂຜດສອງຂ້າເຖົ້າເຈົ້ານົມ ລິດກ້າເໜືອໂລກໂລກາ ລູກໄດ້ນຳເອົາສອງຂ້າເຖົ້າມາສູ່ສະເພົາແລ້ວເຣັດໃຫ້ສອງຂ້າເຖົ້າກາຍເປັນຄົນໜຸ່ມນ້ອຍອີກເທື່ອໜຶ່ງ ລູກຈຶ່ງເລົ່າພໍໃຫ້ພໍ່ແມ່ໄດ້ຮູ້ນຳແມ່ເປັນແນວໃດແທ້ ດັ່ງນັ້ນທ້າວທັງສີ່ຈຶ່ງເລົ່າສູ່ຟັງດັ່ງບົດກອນຂຽນວ່າ:

| | |
|---|---|
| ແຕ່ນັ້ນສີ່ພີ່ນ້ອງ | ເລີຍກ່າວກອນຖະແຫລງ |
| ປິຕາມານດາເອີຍ | ຄ່ອຍຟັງເປີເຈົ້າ |
| ອັນວ່າລາຊາເຈົ້າ | ຈຸນລະນີພະບາດ ເມືອງນັ້ນ |
| ກໍທາກເປັນພໍ່ຂ້າ | ຈິງແທ້ສີຊາຍ ແທ້ດາຍ |
| ອັນວ່າຄຳກອງແກ້ວ | ມານດາເປັນແມ່ ຈິງແລ້ວ |
| ເຂົາກໍຂັບຈາກຫ້ອງ | ໂຮງກ້ວາງວອດທະນາ |
| ມາເປັນຂ້າ | ເກືອໝູທຸກຄ່ຳ |
| ລຳບາກແທ້ | ຍິນຍ້ອຍຊູ່ວັນ ແທ້ດາຍ |
| ຍາມເມື່ອຝູງເພື່ອຂ້າ | ກຸມມານເກີດອອກ ມານັ້ນ |
| ເຂົາເອົາຖີ້ມໃສ່ນ້ຳ | ນະທີກ້ວາງລ່ອງໄຫລ |
| ເຂົາເອົາໄວ້ | ໃນໄຫມັດຜູກ |
| ຈົມຈຸ່ມນ້ຳ | ພະອິນຄ້ຳຊ່ອຍຊູ |
| ກໍຈິງມາເຖິງເທົ້າ | ທັງສອງພໍ່ແມ່ |
| ກໍຈິງເອົາອອກລ້ຽງ | ຈິງແທ້ພໍ່ານານ |
| ອັນວ່າອັກຄີຜູ້ | ກັນດານທີ່ນະໂທດ |
| ເຂົາຈຶ່ງທຳໂທດໃຫ້ | ຝູງນ້ອຍທ້າວຕາຍ |

ແມ່ຈົ່ງມາເຫັນຂ້າ ຕາຍກອງກັນຢູ່

ພໍ່ແມ່ທຸກຍາກແທ້ ນຳຂ້າສີເມີ

ທ້າວທັງສີ່ບອກວ່າ ເທົ່າທີ່ເລົ່າມານີ້ ພຽງແຕ່ຍົກໃຫ້ຮູ້ສ່ວນໃດສ່ວນ ໜຶ່ງເທົ່ານັ້ນ, ຖ້າຈະເລົ່າໃຫ້ລະອຽດນັ້ນຍັງມີອີກມາກມາຍຫລາຍກອງ. ເມື່ອ ເລົ່າສະພາບໂດຍຫຍໍ້ສູ່ຟັງແລ້ວ ທ້າວກໍເອົາເສື້ອຜ້າອາພອນພິມໃໝ່ໃຫ້ສອງເຖົ້າໄດ້ນຸ່ງຫົ່ມ ເຮັດໃຫ້ທັງສອງມີຄວາມປີຕິຊົມຊື່ນດອມທ້າວທັງສີ່ເປັນຢ່າງຍິ່ງ.

## 24. ທ້າວທັງສີ່ໄດ້ພໍ້ພໍ່ແລະແມ່.

ພັກຢູ່ທ່ານໍ້າບ່ອນສອນຢ່າຈົນຕາເວັນມືດ ຈຶ່ງພາກັນເຄື່ອນສະເພົາເຂົ້າ ສູ່
ເມືອງປັນຈາ ໂດຍທີ່ບໍ່ມີຜູ້ໃດເຫັນສະເພົາຂອງທ້າວທັງສີ່ເລີຍ. ເລາະ ຕາມ
ແຄມສອງຝັ່ງແມ່ນໍ້າແມ່ນເຫັນຕົ້ນໝາກຕົ້ນພ້າວແລະໄຮ່ນາຮົ້ວສວນຕະຫລອດ
ເຖິງເຮືອນຊານບ້ານຊ່ອງເດຍລະດາດຢູ່ລຽບສອງຝັ່ງແມ່ນໍ້າ. ທ້າວເພັດ ຊະ
ລາດຜູ້ນ້ອງໄດ້ເວົ້ານຳອ້າຍວ່າຖ້າຫາກສະເພົາພວກເຮົາແລ່ນໄປເຖິງ ທ່າ
ກາງເມືອງກໍຈະເຫັນຍອດຜາສາດລາຊະວັງຂອງພໍ່ເຮົາ; ສະເພົາແລ່ນໄປອີກ
ບໍ່ດົນກໍມາເຖິງກາງເມືອງແລ້ວຈຶ່ງພາກັນຈອດສະເພົາເອົາໄວ້.

ຂະນະທີ່ຈອດສະເພົາຢູ່ນັ້ນ ທັງສີ່ໄດ້ພາກັນນັ່ງຊົມເບິ່ງຄວາມງາມ ຂອງ
ເມືອງປັນຈາ ເບິ່ງໄປທາງໃດກໍຮຸ່ງເຮືອງເຫລືອງເຫລື້ອມໄປໝົດ, ສອງ
ຝັ່ງນໍ້າເຕັມແຕ່ໂຄມໄຟໃຕ້ຢາຍໄປທົ່ວ ທັງພ້ອງໄດ້ຍິນສຽງກອງຍາມຕີ ຜັດ
ປ່ຽນວຽນຍາມກັນດັ່ງທົ່ວເມືອງ. ເມື່ອແສງຈັນຂຶ້ນເຖິງເວລາທ່ຽງຄືນປະ ກົດ
ວ່າທົ່ວເມືອງມິດມີ ເພາະຜູ້ໃດກໍພາກັນຫລັບນອນໝົດແລ້ວ. ດັ່ງນັ້ນທ້າວເພັດ
ຊະລາດຈຶ່ງເວົ້າກັບອ້າຍທັງ 3 ວ່າ ຈັກໄປສັງເກດເບິ່ງພໍ່ແລະນາງ ອັກຄີ
ລອງເບິ່ງ, ໃຫ້ພວກອ້າຍລໍຖ້າຢູ່ສະເພົາພັ້ນ ນ້ອງຈະໄປຈອບເບິ່ງແລ້ວກໍຈະ ກັບ
ມາດອກ ຊຶ່ງອ້າຍທັງ 3 ກໍເຫັນດີເຫັນພ້ອມ.

ບອກອ້າຍແລ້ວທ້າວເພັດຊະລາດກໍຈັບເອົາດາບສິຄົນໄຊອອກຈາກສະເພົາ

ພ້ອມທັງຍິມີລະນຶກເຖິງບຸນຄຸນຂອງພໍ່ພະລືສີຫາໄຟແລ້ວຈຶ່ງເສກມົນສະກົດ ຈິດພະຍາຈຸນລະນີຜູ້ເປັນພໍ່ແລະນາງອັກຄີຕະຫລອດຮອດເສນາອາມາດໃຫ້. ຫລັບສະນິດບໍ່ຮູ້ເນື້ອຫຍັງຫມົດ. ຈາກນັ້ນທ້າວກໍເຫາະໄປສູ່ຫໍຜາສາດຂອງພະຍາຈຸນລະນີຜູ້ເປັນພໍ່, ແຕ່ໄປຮອດປະຕູທ້າວກໍເອົາມືຍູ້ປະຕູອັນຫນັກນັ້ນອອກກະ ແຈທຸກຫນ່ວຍຫລຸດອອກຫມົດແລ້ວ ທ້າວກໍຍ່າງເຂົ້າໄປໃນຫໍຜາສາດໄຕ້ໄຟ ສ່ອງເບິ່ງພ້ອມທັງເປີດຜ້າກັ້ງເຂົ້າໄປຫາຫ້ອງນອນຂອງພະຍາຈຸນລະນີ, ຈຶ່ງ ໄດ້ເຫັນພະອົງນອນຢູ່ເທິງຕຽງຄຳຢ່າງບໍ່ຮູ້ເນື້ອຄິງຫຍັງຫມົດເພາະຖືກມົນສະກົດຂອງທ້າວ. ດັ່ງນັ້ນ ທ້າວຈຶ່ງຂຽນສານໃສ່ຫນ້າຂອງພະຍາຈຸນລະນີເອົາ ໄວ້ເນື້ອໃນຂອງສານດັ່ງບົດກອນຂຽນວ່າ:

ທ້າວຈຶ່ງຂຽນຂີດແຕ້ມ ລົງເລກອັກສອນ
ເປັນໂຄງຄວາມ ຂີດລົງຈຳຫນ້າ
ສານນີ້ຊື່ວ່າດູລາເຈົ້າ ຈຸນລະນີຕີນອາດ ຂ້ອຍເອີຍ
ເຈົ້ານີ້ທົງລາດສ້າງ ເມືອງບ້ານບໍ່ຊອບທຳ ແທ້ນໍ
ອັນວ່າມະນີໂຊແກ້ວ ກາຍເກີດເປັນຫີນ
ອັນວ່າສີລາຫີນ ເກີດແພງປານແກ້ວ
ບັດນີ້ຈຶ່ງໃຫ້ເອົານາງແກ້ວ ປະທຸມມາຖວາຍນອບ
ຄັນວ່າບໍ່ວາງຍອດແກ້ວ ເມືອງບ້ານຊິວອດວາຍ ແທ້ດາຍ

ເມື່ອທ້າວຂຽນເປັນທີ່ຮຽບຮ້ອຍແລ້ວຈຶ່ງລົງຈາກຕຽງຂອງພໍ່ແລ້ວຈຶ່ງເລາະໄປເບິ່ງຊຸມສາວສະຫນົມກົມມະວັງພ້ອມທັງນາງອັກຄີປະກົດວ່ານາງອັກຄີນອນຫລັບພໍປານຕາຍ, ທ້າວໄດ້ແຕ້ມຮູບໂຍນີ (ອະໄວຍະວະທີລັບຂອງຜູ້ຍິງ) ໃສ່ຫນ້າຂອງນາງອັກຄີແລະສະຫນົມເອກທັງແປດທຸກຄົນ, ຈາກນັ້ນກໍເອົາຝຸ່ນຂາວໄປເລາະກ່ານໃສ່ພວກເສນາອາມາດທຸກໆຄົນ.

ຫລັງຈາກນັ້ນທ້າວກໍເຫາະກັບຄືນສູ່ສະເພົາຢ່າງສະບາຍ, ພໍຂອນຊຸ ແຈ້ງ ທ້າວຄະນຶງໃນໃຈວ່າ ບັດນີ້ຈະໄປລັດທາງບ່ອນແມ່ຈະລົງມາຕັກນ້ຳທາບບອນ ເກືອຫມູ. ຄັນແລ້ວທ້າວກໍເຫາະໄປລັດທາງທັນທີ, ບໍ່ດົນນາງປະທຸມມາຫລີ ຄຳ ກອງຜູ້ເປັນແມ່ກໍທາບບອນເກືອຫມູຢ່າງມາ ແມ່ຈຶ່ງແນມເຫັນທ້າວແລະ ທ້າວ ໄດ້ຖາມແມ່ດັ່ງບົດກອນຂຽນວ່າ:

| | |
|---|---|
| ດູລາເຈົ້າ | ນາງງາມຜູ້ປະເສີດ ອ້ອຍເອີຍ |
| ເຈົ້າຈັກໄປທາບແທ້ | ຂອງຄ້າເຍື້ອງໃດ ນີ້ເດ |
| ແຕ່ນັ້ນ ນາງກ່າວຕ້ານ | ຂານຕອບກຸມມານ |
| ວ່າດູລາຫລານຮັກ | ຊ່າງກ່າວຄວາມງາມແທ້ |
| ອັນແຕ່ຕົ້ນຂອງຂ້ອຍ | ພອຍລະກຳລຳບາກ |
| ທຸກຍາກລ້ຳ | ແສນຊົ້ນວອດທະນາ |
| ທຸກຄ່ຳເຊົ້າ | ທາບຈອກທັງບອນ |
| ໄປເກືອຫມູ | ຊູ່ວັນເລີງເລື້ອຍ |
| ຫລານນີ້ມາຈາກຕ້ານ | ງາມຄວາມສວຍສົດດັ່ງນີ້ |
| ຫລານນີ້ມາແຕ່ຫອງ | ເມືອງບ້ານທີ່ໃດ ນີ້ເດ |
| ແຕ່ນັ້ນ ທ້າວກ່າວຕ້ານ | ຂານແມ່ມານດາ |
| ຜາຍວາຈາ | ກ່າວຄວາມຖາມຖ້ອຍ |
| ຄອຍຖະແຫລງຕ້ານ | ຄຳຫວານຍໍຫວ່ານ |
| ອັນວ່າໂສນຮູບເຈົ້າ | ເປັນເຫົ້າງາພະຍອດເມືອງ |
| ທ້າວວ່າໂສນຮູບແທ້ | ຕ້ອງເປັນເອກມະເຫສີ |
| ຄວນຊິເປັນເທວີ | ຢູ່ທຽມພະຍາເຈົ້າ |
| ສັງວ່າມາເປັນຂ້າ | ທາສີທາບແບກ ບອນນຳ |

ຂອງສິ້ນ ບໍ່ຄວນແທ້ທີ່ກະທຳ ດອກນາ

ແຕ່ນັ້ນຄຳກອງເຈົ້າ ຄະນຶງໃຈຄິດຮ່ຳ

ນ້ຳຕາໄຫລຢາດຍ້ອຍ ຮ່ຳຫນ້າທຸ່ມແຖວ ເຈົ້າເອີຍ

ເມື່ອຖືກທ້າວສໍ້ຖາມດັ່ງນັ້ນ ນາງຄຳກອງຈຶ່ງຖາມຄືນໄປວ່າເປັນ ຫຍັງຫລານຈຶ່ງຖາມແນວນັ້ນ, ແລ້ວນາງຈຶ່ງເລົ່າສູ່ທ້າວຟັງວ່າ ແຕ່ກ່ອນໃພງກໍ ຊ່າລືໄປຫມົດວ່າຂ້ອຍນີ້ເປັນມະເຫສີຂອງພະຍາເມືອງປັນຈາ, ທີ່ວ່າມີເວນກຳນຳສະຫນອງຈຶ່ງຖືກພະອົງປົດລົງມາເປັນຂ້ອຍຂ້າທາສາທາບຈອກທາບບອນລ້ຽງຫມູແສນທຸກຍາກລຳບາກ. ຝ່າຍທ້າວເພັດຊະລາດໄດ້ຍິນຄຳແມ່ກ່າວກໍຄິດ ໃນໃຈວ່າອັນແນ່ນອນຕ້ອງແມ່ນຜູ້ເປັນແມ່ຂອງເຮົາແລ້ວ, ດັ່ງນັ້ນທ້າວຈຶ່ງ ນົບນອບໄຫວ້ຈອມໄທ້ແມ່ຕົນ ທັງເວົ້າວ່າຂ້ານີ້ຫາກແມ່ນລູກຂອງເຈົ້າແທ້ ແມ່ເອີຍ. ຝ່າຍນາງຄຳກອງໄດ້ຍິນດັ່ງນັ້ນກໍຄຶດສົງໄສໃນໃຈວ່າທ້າວນີ້ເປັນລູກຕົນແນວໃດກັນແທ້, ນາງຄຳກອງຈຶ່ງຖາມວ່າທ້າວມາແຕ່ບ້ານໃດເມືອງໃດກັນຈຶ່ງບອກວ່າເປັນລູກ. ແຕ່ທ້າວເພັດຊະລາດບອກວ່າແມ່ບໍ່ຕ້ອງເວົ້າຕ້ອງຖາມຫຍັງຫລາຍ ລູກຈະເອົາແມ່ໄປສູ່ສະເພົາດຽວນີ້ແຫລະ, ແລ້ວລູກຈິ່ງບອກ ຄວາມຈິງທຸກາງອັນສູ່ແມ່ຟັງ. ເວົ້າແລ້ວທ້າວກໍຈັບເອົາທາບຈອກທາບບອນນຳແມ່ໂຍນຖິ້ມເສຍ ແລ້ວອຸ້ມເອົາແມ່ພາເຫາະໄປສູ່ສະເພົາ.

ເມື່ອເອົາແມ່ໄປຮອດສະເພົາແລ້ວ ທ້າວຈຶ່ງເອີ້ນເອົາອ້າຍທັງສາມມາພົບກັບແມ່, ສ່ວນອ້າຍທັງສາມໄດ້ຍິນສຽງນ້ອງເອີ້ນກໍຟ້າວມາຫາທັນທີ ຈຶ່ງ ໄດ້ເຫັນນາງຄຳກອງຜູ້ເປັນແມ່ ແລ້ວກໍພາກັນຍົກຕີນຂອງແມ່ຂຶ້ນໃສ່ຫົວດ້ວຍຄວາມເຄົາລົບນັບຖືຕໍ່ຜູ້ໃຫ້ກຳເນີດ. ນາງຄຳກອງຜູ້ເປັນແມ່ເວົ້າຫຍັງກໍບໍ່ໄດ້ມີ ແຕ່ນ້ຳຕາໄຫລອາບສອງພວງແກ້ມ, ທ້າວທັງສີ່ຈຶ່ງໄດ້ເລົ່າເຫດການໃນຄາວຫລັງສູ່ແມ່ຟັງ ນັບແຕ່ນາງອັກຄະຜູ້ໃຈບາບຄິດພິປອງຂ້າຄິດຕອນທ້າວເກີດທຳອິດ ນັ້ນ

ຜູ້ໃດອອກມາເອົາກໍຈັບເຂົ້າໃສ່ໄຫເອົາໄວ້ ແລ້ວນຳໄປໄຫລລ່ອງນ້ຳ, ແຕ່ຍ້ອນບຸນຄຸນຊິດຊ່ອຍ. ດັ່ງນັ້ນໄອຍະກາເຖົ້າພົວເມຍທັງ ຄູ່ເອົາຢູ່ລ້ຽງເປັນແກ້ວລູກຕົນ, ຕໍ່ມານາງອັກຄີໄດ້ເອົາເຂົ້າຕົ້ມເຂົ້າໜົມໃສ່ວ້ອນໄປໃຫ້ກິນພວກ ລູກຈຶ່ງຕາຍແລ້ວ ເກີດເປັນຕົ້ນຈຳປາທັງສີ່ແຕ່ນາງອັກຄີກໍບອກຄົນຮັບໃຊ້ຂອງ ມັນໄປຂຸດກົກຖິ້ມໄຫລນ້ຳລ່ອງໜີ. ພະອິນຈຶ່ງລົງມາຊູຊ່ອຍໃຫ້ໄປຫາພະລືສີ ແລ້ວພະລືສີກໍໄດ້ໂຜດເອົາພວກລູກຄືນມາ, ພວກລູກໄດ້ພາກັນຢູ່ນຳພະລືສີຫລາຍ ປີຈຶ່ງໄດ້ອອກເດີນທາງມາຫາແມ່ຢູ່ເມືອງນັ້ນ. ເຫດການທັງໝົດນັ້ນຫາກແມ່ນພໍ່ພະອິນເປັນຜູ້ບອກກ່າວ ພວກລູກຈຶ່ງຮູ້ໄດ້ກົກປາຍສາຍເຫດ. ຝ່າຍນາງຄຳ ກອງໄດ້ຍິນດັ່ງນັ້ນກໍເຂົ້າອຸ້ມເອົາທ້າວທັງສີ່ແລ້ວກໍສະຫລົບຕາຍໄປດັ່ງບົດກອນຂຽນວ່າ:

| | |
|---|---|
| ແຕ່ນັ້ນພະແມ່ເຈົ້າ | ມີຜ່າພະຫລຽວອີກ |
| ໄດ້ຍິນຄຳບຸດຕາ | ເກືອນກະທາຍທິວໄຫ້ |
| ຈອມນາງໄຫ້ | ນານດາຫິວຫອດ |
| ກອດເອົາສີ່ໜໍ່ໄທ້ | ສະຫລົບເນື້ອທ່າວຕາຍ |
| ແຕ່ນັ້ນເຜົດຊະລາດທ້າວ | ເຈົ້າອ່ອນກຸມມານ |
| ບາກໍເອົາຄົນທີ | ໂສດສົງມິຈາ |
| ກໍເພື່ອເຕຊານຳ | ພະອິນທາວິເສດ |
| ອັນວ່າກັນລະເຍດແກ້ວ | ຄືນໄດ້ດັ່ງໃຈ |
| ອັນວ່າຮູບຮ່າງເນື້ອ | ງາມກ່ວາພາຍຫລັງ |
| ເໝືອນດັ່ງອິນພົມເຫລົາ | ຫລໍ່ຜິວພາງເນື້ອ |
| ນາງຈຶ່ງວາຈາຕານ | ນຳຍາທັງສີ່ |
| ເອົ້າຖຸຖ້ອນ | ດອນແກ້ວລູກຄີງ |

ໂອນໍ ຍາມເມື່ອເຈົ້າອອກນັ້ນ    ພະແມ່ບໍ່ມິເຫັນ
ຍ້ອນແມ່ຟັງຄວາມເຂົາ    ຈຶ່ງເກີດເປັນອັນຮ້າຍ
ເຂົາຫາກເອົາຜືນຜ້າ    ພັນຕາຫຸ້ມຫໍ່
ແມ່ນບໍ່ຫ່ອນຮູ້    ເຂົາລ້ຽວໂລບໃຈ ລູກເອີຍ

ນາງຄຳກອງເລົ່າເຖິງຄວາມເກົ່າ ຄວາມຫລັງສູ່ທ້າວທັງສີຟັງຕໍ່ໄປວ່າເມື່ອເຂົາແກ້ຜ້າມັດຕາອອກແລ້ວ ກໍບໍ່ເຫັນໜ້າລູກເລີຍບໍ່ຮູ້ວ່າເຂົາເອົາພວກ ລູກໄປໄວ້ທາງໃດ. ຕໍ່ມາເຂົາໄດ້ນຳເອົາໝານ້ອຍສີໂຕຂຶ້ນໄປຖວາຍຕໍ່ພະ ຍາເມືອງ ພະອົງໄດ້ເຫັນດັ່ງນັ້ນກໍກ່າວໂກດໂກທາ ແລ້ວກໍປົດແມ່ລົງຈາກເປັນພະມະເຫສີມາເປັນຂ້າທາດຮັບໃຊ້ລ້ຽງໝູຫາບຈອກຫາບບອນ:ແມ່ເອງສຸດແສນທົນທຸກທໍລະມານຫາອັນປຽບບໍ່ໄດ້ລູກເອີຍ.

ນາງຄຳກອງເວົ້າຕໍ່ທ້າວທັງສີວ່າ ບັດນີ້ແມ່ໝົດເວນໝົດກຳແລ້ວ ເພາະວ່າລູກທັງສີໄດ້ມາເຖິງແລະຊ່ອຍເອົາແມ່. ນາງຄຳກອງໄດ້ບອກໃຫ້ທ້າວ ທັງສີພານາງໜີຈາກເມືອງປັນຈາ ເພາະນາງບໍ່ຢາກຢູ່ເມືອງນີ້ອີກບໍ່ຢາກ ເຫັນໜ້າພວກຍິງໃຈຊົ່ວເຫລົ່ານັ້ນແລະເມືອງນີ້ກໍບໍ່ຊອບທຳອີກ ຂໍໃຫ້ພວກລູກ ພາແມ່ໜີໄປຢູ່ບ່ອນອື່ນ. ແຕ່ທ້າວທັງສີໄດ້ບອກແມ່ວ່າແມ່ບໍ່ຕ້ອງຢ້ານຕ້ອງກົວພວກຜູ້ຍິງເຫລົ່ານັ້ນດອກລູກຈະຈັດການກັບພວກເຂົາແທນແມ່. ຕໍ່ມາທ້າວທັງສີ ຈຶ່ງເອົາເຄື່ອງນຸ່ງຂອງຖືອັນສວຍງາມຊຶ່ງພະອິນໄດ້ຕົກແຕ່ງໃຫ້, ປະກົດວ່າ ນາງຄຳກອງມີຮູບໂສມຜິວພັນງາມພິປານນາງສະຫວັນຊຶ່ງບໍ່ມີຜູ້ຍິງຜູ້ໃດໃນພື້ນໂລກນີ້ຈະງາມພໍຮອດເຄິ່ງໜຶ່ງຂອງນາງເລີຍ. ພ້ອມກັນນີ້ທ້າວທັງສີກໍຈັດເອົາ ອາຫານການກິນຊຶ່ງແມ່ນເຄື່ອງທິບທັງມວນໃຫ້ແມ່ກິນຢ່າງອີ່ມໜຳສຳລານ, ນາງຄຳກອງຮູ້ສຶກວ່າຄືດັ່ງນາງເອງພວມນັ່ງຢູ່ເທິງສະຫວັນວິມານຮ່ວມກັບທ້າວທັງສີ.

ພໍແຈ້ງເປັນມື້ໃໝ່ມາ, ທ້າວທັງສີ່ຈຶ່ງເພີກພິນອອກບໍ່ໃຫ້ບັງສະເພົາອີກແລ້ວ ສະເພົາທັງສີ່ລຳຈຶ່ງປະກົດຢູ່ກາງແມ່ນ້ຳແລະມີ   ສີແສງອັນຮຸ່ງເຮືອງເຫລືອງເຫລື້ອມມະນີໂຊກກ້ຳເກືອງພູ້ນແລ້ວ. ຊາວເມືອງປັນຈາໄດ້ເຫັນຕ່າງກໍພາ   ກັນຫ້ວງເປັນແຊວງໄປທົ່ວທັງເມືອງ.

# ,ສາລະບານ,


| | ໜ້າ |
|---|---|
| - ກ່າວເຖິງເມືອງປັນຈາ | 1 |
| - ກ່າວເຖິງຮູງສອງຜົວເມຍ | 6 |
| - ເອົານາງປະທຸມມາເຊື່ອງໄວ້ໃນກອງ | 11 |
| - ກ່າວເຖິງຮູງຜົວເມຍ | 15 |
| - ກ່າວເຖິງພະຍາຈຸນລະນີ | 18 |
| - ພະຍາຈຸນລະນີຫລົງທາງ | 22 |
| - ພະຍາຈຸນລະນີພົບນາງປະທຸມມາ | 26 |
| - ນາງອັກຄີແລະນາງປະທຸມມາປາຖະຫນາເອົາລູກມາເກີດ | 34 |
| - ນາງອັກຄີເອົາຫມາມາປ່ຽນສີ່ກຸມມານ | 39 |
| - ສັ່ງໃຫ້ເອົານາງຄຳກອງໄປລ້ຽງຫມູ | 44 |
| - ກ່າວເຖິງກຸມມານທັງສີ່ | 47 |
| - ນາງອັກຄີເບື່ອກຸມມານທັງສີ່ | 51. |
| - ກຸມມານທັງສີ່ເກີດເປັນຕົ້ນຈຳປາ | 54 |
| - ນາງອັກຄີສັ່ງເອົາຕົ້ນຈຳປາໄປໄຫລນ້ຳ | 59 |
| - ພະລືສີໂຜດເອົາຈຳປາທັງສີ່ໄປລ້ຽງ | 64 |
| - ພະອິນແປງເປັນຕາຜ້າຂາວມາບອກເລື່ອງທ້າວທັງສີ່ | 68 |
| - ທ້າວທັງສີ່ລາຈາກພະລືສີ | 73 |

- ສະເພົານຳເອົາທ້າວທັງສີ່ອອກເດີນທາງຜ່ານເມືອງຍັກ 78
- ພະຍາຍັກສິງຫົນມອບລູກສາວໃຫ້ເປັນເມຍຂອງທ້າວເຊດຖະລາດ 88
- ຍັກໂກຕິຍະລາດມອບລູກສາວໃຫ້ເປັນເມຍທ້າວປີຕະລາດ 94
- ພະຍາຈຳປາມອບລູກສາວໃຫ້ແກ່ທ້າວສຸວັນນະລາດ 103
- ພະອິນ (ພໍ່ຜ້າຂາວ) ລາຈາກກຸມມານທັງສີ່ຄືນສູ່ສະຫວັນ 111
- ສີ່ກຸມມານ ໄດ້ພົບກັບຍ່າຈຳສອນ 114
- ທ້າວທັງສີ່ໄດ້ພໍ້ພໍ່ແລະແມ່ 120

24/VII
ຫ້າມຈຳໜ່າຍ



ພ.ພວງສະບາ

ເຂົາເລີ່ມເຂົ້າສູ່ວົງການນັກຂ່າວ, ນັກໜັງສືພິມ, ນັກປະພັ
ແລະນັກກະວີແຕ່ປີ 1964 . ເຂົາຂຽນທັງບົດຂ່າວ, ບົດຄວາມ, ບົ
ສາລະຄະດີ, ບົດກະວີກາບກອນ, ບົດເລື່ອງສັ້ນ, ບົດເລື່ອງສໍາ ລັ
ເດັກນ້ອຍແລະຮິບໂຮມຮຽບຮຽງປະລິວັດວັນນະຄະດີພື້ນເມືອງມ
ແລ້ວຫລາຍເຫລັ້ມ.

ບົດກະວີແລະບົດເລື່ອງສັ້ນຂອງເຂົາຖືກນໍາໄປແປແລະ ພິ
ຈໍາໜ່າຍເປັນພາສາຕ່າງປະເທດມາແລ້ວເຊັ່ນ: ພາສາລັດ ເຊ
ພາສາຝະລັ່ງ, ພາສາໄທແລະພາສາຫວຽດນາມ. ເຂົາບອກ ວ່າ
" ບົດຂຽນທີ່ດີຂອງເຂົານັ້ນຄືບົດທີ່ຍັງບໍ່ທັນໄດ້ຂຽນ ".